19 72

NEWS

# ລາວວັນນີ້

# LAO TODAY Magazine

ປີທີ່ ໕ ສະບັບທີ່ ໒໐ <> ລາຍສາມເດືອນ

ອ່ານຂ່າວ

◇ ວິຈານການເມືອງ

◇ ປານບ້ານເກີດທີ່ຈາກມາ

◇ ຊີວິດຢູ່ ກັບທະຫານ

◇ ສັມພາດ ຈິນຕະນາ ຣະໄນວົງສ໌

◇ ສັນຕິ ອິນທະວົງສ໌ ຜູ້ຮັກແຜ່ນດິນລາວ







0 199301 1

Issue 5 Volume 20 Quarterly Magazine January, 1997

20

## ງານມອບ ຫຼຽນການສຶກສາຊັ້ນສູງຂັ້ນປອິນຍາ ແລະ ມອບໄຊຍະບັດແກ່ ແມ່ຍິງລາວດີເດັ່ນປະຈຳປີ ໑໙໙໘







Larry Woodson (2292)




**ເຈົ້າຂອງພິມແລະໂຄສະນາ**

ລາວກ້າວໜ້າ

**ບັນນາທິການ**

ທອງສະຫວັນ ພົງສະວັນ

**ຜູ້ຈັດການທົ່ວໄປ**

ຄຳພັນ ບຸນນະກອນ

**ປະຊາສຳພັນ**

ບົວເງິນ ພົນເສນາ

**ນັກຂຽນປະຈຳ**

ທອງສະວັນ ພົງສະວັນ

ສຸຣິເດດ ນະເມືອງຊົວ

ອຳມອນ ວົງແກ້ວ

ຄຳ ກຸມພົນ

ນໍຣະມານ ຕຸນສະວັດ

ລູກນ້ຳກໍ່

ດາຣາເພັດ ສິນບັນດິດ

ສົມພອນ ຄູນລົດຄຳ

ໄກສອນ ພົງສະວັນ

ຫຸມເພັງ ພານຸພົນ

ວິສຸນ ບານຸວົງ

**Publishing & Owner**

Lao Progressive Inc

**EDITOR IN CHIEF**

Thongsavanh Phongsavan

**Managing Director**

Khamphanh Bounnakone

**Public Relation**

BouaNgeune Pholsena

**Staff Writer**

Thongsavanh Phongsavan

Souridetk Na Moungxoa

Amone Vongkeo

Kham Koumphon

Norman Tounsavath

Louk Namko

Daraphet Sinbandith

Samphone Kounlokham

Kaysone Phongsavan

Houmpheng Phanouphol

Visian Bannouvong



**LAOTODAY**

1525 Old Louisquisset Pike
Lincoln, Rhode Island 02865
Phone (401) 728-7152
Fax (401) 728-7237



| ເລື່ອງ ປະຈຳສະບັບ | ໜ້າ |
|---|---|
| ພະທາດຫຼວງ ແລະ ວັດຊຽງທອງ ມູນມໍລະດົກຂອງລາວ | ປົກ |
| ໄຊກຸະການັ້ນຂອງລາວຄອນຂ້າມຂອງ | ໒-໔ |
| ສຸງຊ້າງສານພື້ນ | ໕-໗ |
| ສື່ປັນລາວ | ໘ |
| ຂ່າວລາວຕ້ອງຖຸ້ນ | ໙ |
| ດຣ. ບຸນທອນ | ໑໐ |
| ມານກຳນັນເກົ່າງອງຕັ້ງຄົ້ນສື່ປັນລາວ | ໑໑ |
| ວັນລະລຶກຖືງກອງທັບຫນ່ວຍສິບພິເສດ | ໑໔-໑໕ |
| ສົມພາດ ທ່ານສົມສະຫວາດ ເລັ່ງສະວັດ | ໑໕-໑໖ |
| ສົມພັນແນວໂຮມລາວ-ວຽດ | ໑໖ |
| ມານເປັນຂ່າວຂອງແນວໂຮມກູ້ຊາດລາວ ໑໗ | |
| ເຈົ້າຟ້າຊາຍສຸຣິວົງ ສວ່າງ ປີໃໝ່ປາງລາວກາບາກາ | ໑໘-໒໐ |
| ປາກເຊແຕ່ງຄວາມຫລັງ | ໒໐ |
| ແມ່ຍິງ ອິສະແຂລ | ໒໑ |
| ຊີວິດປູ່ກັບຫະຕານ | ໒໒-໒໓ |
| ທ່ານ ບໍລິສ ເປັນເຊັນແຕ່ງ ອັກເຊັຍ | ໒໔ |
| ກອງປະຊຸມຫລວງ ລາວເສລີຊົນ | ໒໕-໒໗ |
| ຂ່າວຈາກແຂວງ ສະວັນນະເຂດ | ໒໗ |
| ຂ່າວຈາກແຂວງໄຊຍະບູລີ | ໒໘ |
| ສຶກສາຄົ້ນຄວ້າ ອັດຕັນບຸນໃໝ່ | ໒໘ |
| ຕູ້ເຕີມບຸນປີໃໝ່ປາງ ສ.ປ.ປ.ລາວ | ໒໙ |
| ສັນຕິ ອິນທະວົງສ໌ | ໓໐-໓໒ |
| ສຸມມະນາ ລີວສ໌ ຮັກເຕັ້ນກຳລາວ | ໓໓-໓໔ |
| ສົມພາດ ເຈົ້າຟ້າຊາຍ ໄຊຍະວົງ ສວ່າງ | ໓໕-໓໗ |
| ກາຣາ ກໍລຍາ | ໓໙-໔໐ |
| ຫົວອານປາກ | ໔໑ |
| ອຳນາຈລະເດັດການ | ໔໒ |
| ຈົດໝາຍຈາກຜູ້ອ່ານ | ໔໓-໔໖ |
| ນັກສຶກສາລາວໄດ້ຮັບຫລຽນຈຳນຸງ | ໔໗ |
| ຈາກໃຈຈັງຂອງ ລາວລັນນີ້ | ໔໘ |
| ຜົນການເລືອກຕັ້ງ ປະທານາທິບໍດີ ສະຫະລັດ | ໔໙-໕໑ |
| ບົດຄວາມການເລືອກຕັ້ງ ປະທານາທິບໍດີ ສະຫະລັດ | ໕໒ |
| ສົມພາດ ຈິນທະນາ ສະໄໝວົງ | ໕໓-໕໔ |
| ປີໃໝ່ປາງບ້ານເກົ່າ | ໕໕-໕໘ |
| ນັກສຶກສາຍີ່ປຸ່ນ | ໕໙ |
| ປະກາດເລືອກຕັ້ງເຈົ້າປະທານສະມາຄົມລາວ | ໖໐ |
| ໝູ່ວຊຸມນ້ຳດີກ | ໖໑-໖໒ |
| ຫລວງພໍ່ອູ ຜູ້ມີຈຸນທີ່ສາສນາ | ໖໓ |
| ບານິກໄທຍ໌ ດໍບັດ ໃນການເລືອກຕັ້ງ | ໖໔ |
| ສັລເສີນ | ໖໕ |
| ສິ່ງທີ່ເປັນສິ່ງປະໂຫຍດແກ່ຊາດ | ໖໕-໖໖ |
| ປີໃໝ່ປາງບ້ານແມ່ | ໓໖-໓໗ |
| ພະລາຊ ອົງການສາຍສຸດທາ ປີໃໝ່ປາງ ສ.ປ.ປ.ລາວ | ໓໘ |
| Laos on the way | 37-38 |
| Traveller shaken | 38 |
| Arms sale to Taiwan | 38 |
| Grobal Presure | 46 |
| HIV infection | 46 |
| Foreign Minister | 69 |
| U.S. Ambassador | 70 |
| Lao Satellite | 71 |





ບານເນື່ອຄອນມຸນນັ້ນຝີກ ຂອງຄອນເມືອງລາວເກົ່າຄັ້ນນັ້ນ

ປຸ່ນຖົງດວງຕາເວັນທຸມຍອງ ມີດົນວສຸນເສົ້າ

ແຜ່ນດິນລາວ ອານຮ້ອນ ອົ່ນເຕົ້າໄປທົ່ວ

ສຸດຊົ່ວ ມຸນແຕ່ນີ້ ທະລັງໄທນໍ້ບໍ່ກະຈວນ

ເດີມນັ້ນ ຖົ່ງແຕ່ນັ້ນ ຄຸນເຂັ້ນຄົນການ

ຈັດກຸ ໄປກັກອັງ ຍັງອໍ ໂຮມໄວ້

ກຳລັງ ເຈົ້າພຽງພ້ອມ ຊຸນຂະຫານຄົນເກົ່າ

ມັນຈຳງ ຊອມຊຸດຫລື້ອງ ຄຸມແຄັ້ນຂົ່ມເຫັງ

໐ ເຂົ້າໄປກັກແກວກໄວ້ ໃນບ່ອນສົມມະນາ

ສຸດເຂດ ແດນດິນລາວ ຖົ່ງແດ່ໜີອຖົ່ງໃຕ້

ມັນຫາກ ຕານແນວເວົ້າ ວ່າມັນສະໜອງ ເປື້ອຍເບື່ອຍ

ສົມນັ້ນ ໃຊ້ບໍ່ໄດ້ ຈຳຕ້ອງສ່ວາຍສີ ວ່າມາ

໐ ຄົນຄົນນີ້ມະຫາຮ້າຍ ແຮງອ່ອນການປ່າ

ຄົນໃຊ ຫັງເປັນຄົນ ໃຫ້ອ່ອນກັນແປງສ້າງ

ໂຮມຮ່ວມເຮັດເມືອງບ້ານ ລາວເຮົາໃຫ້ເຮືອງຮຸ່ງ

ຕາມແບບ ຂັ້ນມຸ່ງນັ້ນ ຄອນບຸຍນສົ່ນນັ້ນຈົງຄວນ

໐ ຄອນຄົວ ຫັງຢູ່ບ້ານ ລູກຮັກເມັຽແນງ

ເນົ້າມາຍຫລັງ ອ່ອນກັນແປງສ້າງ

ມັນວ່າ ເຮົາມາໂຮມກັນຢູ່ ສັງຄົມເຮົາໃຫ້ກ້າວກະໂດດ

ມັນໂມດ ຖົ່ງແຕ່ເຮົາ ກໍນັບນັ້ນຊຸລາເຂງ ຕັ້ງແລ້ວ

໐ ມັນມາປຸນປຽນນັ້ນ ຣະບອບໃໝ່ສັງຄົມ

ການຕົດໃຫຍ່ງ ແຕ່ຫລັງຈຳນັ້ງ

ພໍ່ແມ່ ບຸດການ້ອມ ວົງສາລະນາຍາດ

ຖັດຍາດ ມັນແນ່ນັ້ນ ເມື່ອໜ້າບໍ່ໃຫ້ດີ ວ່າມາ

ອູ່ໃດ ຮັກຊາດນ້ອມ ລັດທິໃໝ່ ຖຸນັບ

ທຸກດິນຄົນຫລວງ ສຳກັບ ໃນຖ້ານ

ໃຂ ຈູ ກໍ່ເປັນໄດ້ ທະແບນໃກຮັກຊາດ

ນາຍກໍ ເລບິນແມ່ນແຕ້ ລິມະເຈົ້າເຫັງລາວ ວ່າມາ

ທຸກມ ນີ້ ຕ້ອງສຳຣວດ ໃກຂອງ

ມັນໃຊ້ຄົນ ລອຍມຸມ ສອດແນມດີຮ້າຍ

ຕັງໂຕເມືອງ ໃຫ້ບ້ານ ຕ້ອງເດີນຕາມມັນບອກ

ວ່າ ແຕ່ ນັ້ນສົ່ງຊຸ ໃກລ້ວມ ແມ່ນຕ້ອງທຳ ແລ້ວແລ້ວ

໐ ພໍ່ວ່າ ມັນເຮັດໄດ້ ປີໜຶ່ງ ສອງປີ

ຄວາມສັບສົນວຸ່ນວາຍ ກໍເກີດມີຫລາຍຂັ້ນ

ເສດຖະກິດການຄ້າ ການເມືອງໃນປະເທດ

ນັ້ນມ ທະນອງທີ່ນັ້ນເສົ້າ ຊາວບ້ານໜ່າຍແໜງ

໐ ພວກມັນ ຫັງນາຍຊູ່ງ ໃຫ້ອິນຢູ່ດິນລາວ

ຈອງຫອງ ນາຍຫົວສອນ ສຳກັບສຸກຖ້ານ

ອູ່ເຂັນ ເອົາຂອງໃຊ້ ດັນຫາມັນທຸກເບື້ອງ

ເຮັດໃດ ແມ່ນແກ້ລວນ ຖຸແນ່ຊອບ

ມັນຊ້ຳເຕິງປາກຮ້າຍ ມວນໜູ່ຄົນລາວ

ຫາວ່າ ບໍ່ຍົດນັບແຜນການ ກະໂດດກາຍເກີນຂັ້ນ

ມັນເລົ່າ ຂົ່ມເຫັງໃຫ້ ກະທຳການໜັກກັນ

ປະຊາລາວບໍ່ພ້ອມ ຊຸມຖ້າແດ່ຕ່າໜີ

ເລີຍເລົ່າ ລັກລອບລີ້ ໜີຈາກເຮືອນຊານ

ທຳລົດ ສອງສາມຄົນ ດົນນານຮ້ອຍເປັນພັນເຖິງໝື່ນ

ຊຸມນັ້ນ ເລີຍຫາເວົ້າ ປະດົການສົບສີ

ຄົນລາວຈຶ່ງມາກັບແລ່ນເຕັ້ນ ໃກຫ້ານເປັງຂອງ ນັ້ນແລ້ວ

໐ ຄົນລາວ ມາກັບລັກຫລີກລໍ້ ໜີຈາກຄວາມທຸກ

ລາວທີ່ ເນົາໃນລາວ ຖຸກມັນບຸມຂ້າ

ບຸຄ່າງ ຈັບໄປກັດຂ້າງ ເມືອງຂັ້ນການປ່າ

ເຈັບປວຍ ຕາຍນອກນັ້ນ ເຫລືອແລ້ວແລ່ນໜີ

໐ ມັນຊ້ຳແຕ່ງປາກຮ້າຍ ເອົາວຽນນາຄຸມ

ເຂົ້າມາ ປາຍຕາມທາງ ຊອກຊຸມລາວໄວ້

ພໍເມື່ອເຫັນແກວແລ້ວ ຄົນລາວຂົ້ມຂຽກ

ແຮງມາກັນຕ່ານລີ້ ກາຍໜ້າຈຳງມັນ

໐ ພວກພັນຊ້ຳ ຊຸ່ມຮ້ອນ ແຮງເຮົ້ງວາງແຜນ

ກົດເກນ ເອົາຄົນລົງ ປ່າດອງຖົງນັ້ນ

ຈຳກັດ ຕັດຈົນທະບໍ່ ປັນຍາອັນເຮືອງຮຸ່ງ

ເຮັດຄົນ ໃຫ້ເປັນຄວາຍກົກໃນ້ ວົ້ນວົງວຸ່ນແຜນຫາ

ຄົນລາວທຸກຍາກແລ້ວ ຊ້ຳມັກຄົນຕົ້ງທຸກ ແຕ້ນີ້

ຄອນ ມັນ ຫວັງໃຫ້ໜີດທຸກຄົນ ສຳກັບໃນຖ້ານ

ຊອມເຫັນໃຊ້ສູງຂັ້ນ ຄອຍຣານຮອນບັ່ນ

ໃຫ້ເຮົາທັງທຸກແຄ້ນ ລາເລົ້ວຈອງຈຳ

ມັນວາງແຜນ ອຸບາຍຮ້າຍ ແນວໃໝ່ເອກສານ

ມັນຮີບ ເອົາຄົນໜີ ຈາກເມືອງ ມາໜີ້

ເອົາຄົນ ຄາມ ມຸ້ນ ມາເຫັນບ່ອນປູ່

ອັນປູ່ນບ້າງ ສະຖານແຫ້ ແກ່ດິນ

໐ ສົມບັດ ອັນສົບສ້າງ ຖົ່ງແຕ່ເມື່ອລາວຫລັງ

ເຮືອນຊານ ຈຳເປັນປະ ປ່ອຍໜີວາງຖິ້ມ

ມັນຫັງຄົບ ໄປໂຮມສ້າງ ອົບອວາຍ ຕ້ອງຖີ່ມ

ສົງໃລ ບາດນີ້ ເມືອງບ້ານ ແຕ່ງລາວ

໐ ຕົວເມັຽ ຕົງລູກເຕົ້າ ໜ້າທີ່ໃໝ່ມັນ

ແຈກຈ່າຍ ປາຍກັນໄປ ສູ່ທາງການຂ້າມ

ພໍເມື່ອ ເຮັດການແລ້ວ ຄືນເຮືອນຫລັງເກົ່າ

ໄດ້ທີ່ ແນມເບິ່ງໜ້າ ກັບແລ້ວແກວງຫົວ

໐ ແນ້ງໜຶ່ງ ເກັບຍ່າວສາວສ່ຳນ້ອຍ ໄປເຮັດນາເຊງ

ໄລໄປ ໂຄກະລອງ ເປັ່ງຫາງ ໂຫລນ້ຳ

ເກນໄປຊຸກຊຸມພັນ ປະຖະມີບາວບ່ານ

ບັງຄັບ ທຸກທົ່ວໜ້າ ໃຫ້ໂຮມຮ້ອງວ່າມ່ວນຫຼາຍ

໐ ນາເຊງ ປີ້ງລອນກັ້ນ ຊອມແຊກອຸທະກັງ

ເກາະລາລອງຊຸມສາວ ສະເດີດຫລິງໂຫລຮ້ອງ

ລາງເທື່ອ ມີງໆງ ແນວມານຮົບກອດ

ປາປົ້ນປົວທຸກໃຮ້ ຫາໃຊ້ແມ່ນບໍ່ມີ

໐ ຄົນວ່າ ບາມຄ່ຳເຊົ້າ ເຂັ້ນຮຽກໂຮມກັນ

ບັງຄັບ ໄປປິ່ນແຖວ ໂຮ່ຮົ້ວ ໂຮຮ້ອງ

ຄົບມີ ຈົບເຊີດສ້າງ ວັນກະກີ ໃສ່ສ່ອງ

ສາງມີ ແລະແອ່ນຟ້ອນ ບ້າດາຍ້ອຍຍ່າວ ໃນ (ດ່ ໔)

ຕັ້ງທາກອິດເມື່ອຍລ້າ ມາແຕ່ຍາມເວນ ແລ້ວນາ
ບັງເລົ່າ ອາຫານເຂີນ ຂາດເບົາບາງທ້ອງ
ນັ້ນຊ້ຳ ໄຖຖູເຂົ້າ ຮູເຂັນກໍ່ແສນຍາກ ຫັ້ນແລ້ວ
ຄິດກໍຄິດເມື່ອຍລ້າ ໃຈເສົ້າ ໃສກະວີ
ບໍ່ ເມື່ອ ເມື່ອຮອດບ້ານ ອິດອ່ອນໂຮຍແຮງ
ເອົາຜ້າຫົ່ມມາປົກຫົວ ບໍ່ຕຶງໃນມຸ້ງ
ຕົວເມັຽເວົ້າ ດອມກັບຍາກຍິ່ງ
ຢ້ານແຕ່ ຕົວຂອກຂໍ້ ເມັຽຊ້ອນຂອກຄວາມ
ອັນວ່າ ຊິບຊາດເຊື້ອ ຊຸມເຊັ່ນ ຊາວລາວ ນັ້ນນາ
ຕັ້ງວ່າ ບໍ່ໃສ່ງານ ອ່ອນນວນແທ້ການກໍ້
ເລີຍຖືກນັບເມ້າງ ພັງທະລາຍກະຈາຍມຸ່ນ
ປຸ່ນດັ່ງສັດຖືກຄ້ອນ ດຸງຣົ້ວ ໜ່າຕີ
○ ຫລາຍຄົວ ໃສ່ສຸດແລ້ວ ບິນລອດຫລີບຫນີ
ກອງຫລອນ ບັນແນນເທັນ ລົ່ນປິ່ນໄປຊ້າ
ລາງຄົນນັ້ນ ຈັບເປັນສູກ່ຈອງ
ເຮັດໃຫ້ ເບົາເກືອບນ້ວຍ ສາແລ້ວກ່ອນໄປ
○ ຄ້ອນວ່າ ເດີກຂ້ອນງ ຜ່ໄກ່ຈັບກົກ
ສົງສານ ລາງຄົນລູກ ສະເດີດໂຕມັນເຂັ້ນ
ມັນຈັບ ເອົາໄປຈ້ອຍ ຜົດຫຍັງບໍ່ຮູ້ເມື່ອ
ປະໃຫ້ ເມັຽລູກນ້ອຽ ໂຮໃຫ້ ຮ່ຳຫາ
○ ຄົນໃນຊົນນະບົດບ້ານ ຕົກຂະມະກ່ຳຣົມ
ຢ້ານມາເຖິງພາຍໃດ ດັ່ງດຽວກັນນັ້ນ
ຫລາຍຄົນມັ້ຽນ ກາຂອງຕົນແຕ່ງ
ເມື່ອຈະຫນີຕາຍລີ້ ລັດທີຮ້າຍປ່າຄອງ
ຄັນວ່າມັນຂອກມໍ້ ຫາວ່າຂັດຂືນ
ຂັ້ນເທິງ ແນວທາງມັນ ສັ່ງຄຸມຂັງໄວ້
ແລ້ວສົ່ງ ໄປດັດສ້າງ ຖາງດົງ ດ່ອນປ່າ
ມັນວ່າ ເອົາໄປສະສ່າງລ້າງ ສມອງເປື້ອນເບົ່າເໜັນ ວ່ານາ
ລາງຍິງ ຕົວຢູ່ພຸ້ນ ມຽນມ່າສ່ຳມະນາ
ເມັຽຢູ່ ເນົາທາງຫລັງ ຖືກມັນເອົາຊ້ຳ
ຈາກຫ່ອນໄດ້ ປ່າຍປິ້ນມັນຈ້ຳຈີ່
ໄດ້ທໍ່ ກັບຄຽດແຄ້ນ ເຕັ້ນແຫນ້ນອົ່ງຫວງ
○ ຄົນລາວ ທົ່ວປະເທດກວ້າງ ແຕ່ທົ່ວຕົນນອນຕາຍ
ເລີຍເລົ່າ ມາກັບປັບ ແຕກຫນີເມືອງບ້ານ
ໃສບໍ່ຫນີເມືອມັ້ນ ທາງໃດສະລັບແລ່ນ
ປຸ່ນດັ່ງ ປາແຕກຂ້ອງ ລອຍນ້ຳສ່າຍຫນີ
○ ລາງສ່ອງ ໂດດຢັ່ງຟ້າວ ລົງທ່າຕັງແຮງ

ສົ້ນ, ສົ້ງ ໄຫລຫລຸດໄດ ປ່ອຍເປື່ອຍໂຕນນ້ຳ
ມັນເທັນ ປົນມັນຈ້ຳ ຈ່ຳໃຈຫລົບຕ່າວ
ເລີຍເລົ່າ ໄປບໍ່ມົນ ມັນຫົ້ນກສດກຸມ
○ ລາງຄົນ ໂດນນ້ຳແລ້ວ ລວດບໍ່ຄ່ອງເດີບລອຍ
ເພາະເມື່ອຕົກໃຈຫລາຍ ມຸດລົງຫາຍຈ້ອຍ
ເລີຍເລົ່າ ຕາຍຈົມນ້ຳ ຫລາຍວັນ ລາບຈົນເປື່ອຍ
ມໍ່, ແມ່, ນ້ອງອ້າຍມໍ້ ໂຮໄຫ້ອົ່ງຫວງ
ລາງຄົນ ຊວງລູກອຸ້ມ ເຮວຮີບລົງເຮືອ
ສອງຕົວເມັຽດັນດັກ ຖົ່ມາຍທັງຢ້ານ
ມໍດີ ກອງຫລອນມໍ້ ແນປົນຍິງໃສ່
ເຮືອໂງກຂວ້ຳ ກາງແກ້ງແມ່ຂອງ
○ ຕົວເມັຽ ລອຍກະເດີດຟ້າວ ຄວາລູກຫົວດົມ
ລູກນ້ອຍ ທັງສາມຄົນ ຈ່ອມຫາຍ ຈົມປົ້ງ
ສອງຕົວເມັຽຫົວດົມນ້ວຍ ບຸກບົນຂຶ້ນຝັ່ງ
ໄດ້ແຕ່ ດີ້ນດັ່ນໄຫ້ ໂຮຮ້ອງ ຮ່ຳຫາ ລູກນັ້ນ
○ ນ້ຳຕາ ປູນດັ່ງນ້ຳ ເລືອດລົ່ງອົນໄຫລ
ປົນແນນຕາມສາຍຂອງ ບາດຕາຫມຸນດ້ຽວ
ນ້ຳຂອງເປັນຂັບຕ້າວ ຫມຸນຄືພາຫາປົ່ນ
ອັນວ່າ ສາບລູກນ້ອຽ ຈັກຊີ້ຄ້າງບ່ອນໃດ
○ ລາງລົວຜົກຈອບລີ້ ຫນີຫນອບລົງເຮືອ
ນ້ອຍຫນື່ງ ມີຄົນມາ ບອກອາສາ ພາຂ້າມ
ຄ້ອນວ່າ ເຖິງກາງນ້ຳ ແລ້ວເອົາປົນ ຈີ້
ຟຸງໂຈນ ເອົາເຄື່ອງແລ້ວ ໂຕນນ້ຳມຸດຫນີ
○ ລາງສ່ອງ ອ້ານເກືອບມົ້ນ ກາງແມ່ລ້ຳຂອງ
ພວກມັນ ເອົາປົນຍິງ ໃສ່ເຮືອເລີຍຫລົ້ມ
ພາກັນ ກາຍດົກນ້ຳ ມີຫລາຍຫາວ່າໝູ່
ສົບອິດຂົ້ນ ຟູນ້ຳເມື່ອລຸນ
○ ຄົນລາວ ຈົມຈ່ອມນ້ຳ ກາງແກ້ງລ້ຳຂອງ
ດູດັ່ງ ເຫລືອຂະນາບ ແຕ່ຫນືອເຖິງໃຕ້
ລາງສ່ອງ ໄຫລເນື່ອຄ້າງ ນອນເປື່ອຍກາງໂງ່ນຫີນແລ້ວ
ລາງສ່ອງ ເປ່ະຝັ່ງນ້ຳ ຝູງແຮ້ງ ແຫ່ກິນ
○ ລາງສ່ອງ ຖືກມັດຂໍ້ ມີໂຮບດົດກັນ
ເປັນສາວຂອນ ຄູ່ກັນດູຮ້າຍ
ບັງໄດ້ ເຫັນບັງສົ້ນ ຕົນໄຫມນາງນຸ່ງ
ຄັນວ່າ ແນມເບິ່ງແລ້ວ ເປັນຫນ້າອິດູ ແທ້ນາ
○ ລາງສ່ອງ ຫົວກຸດຫົຽນ ເຫລືອແຕ່ເລົ່າດີ່ງ ກົນ
ຝອງນ້ຳ ຍວກຕີນາເປ່ະ ຄາດລາກໄດ້

ບັງມີ ສົບຟູນ້ຳ ເຕັ້ນໄດນປົນບາດ
ຄິແມ່ນ ຈັກຖືກຂ້າ ຕາຍຍ້ອນສົ່ງຄົນ
ໃນແມ່ນ້ຳ ເຕັ້ນແຕ່ສົບລາວ
ມູກາມ ລ່ວແມ່ຂອງ ສາຍລະລາງປາໜ້ອນ
ຫາງບົກສ້ຽວ ມັນຄຸມຫາກຂນາດ
ຊາດແຕນ້ຳງ ລາວນາງລີ້ ນໍເດ !
○ ລາງສ່ອງ ເອົາລູກຂົ່ມ ລາຍຂອດໄດ
ນັ້ນນັ້ນ ຖືກຖ່າງ ເປົ່າລົມລອຍນ້ຳ
ລອຍຈົນນັ້ນ ຖົງຢ່າງເລີຍຮົ່ວ
ມໍ່ສະເດີດເອົາຝັ່ງໄດ້ ເມື່ອມີເກືອບວ່າຕາຍ
○ ເມັ້ງເມື່ອ ນັ້ນຝັ່ງແລ້ວ ກອດລູກແນນຄືນ
ຄິດເຖິງເມັຽແນງຂວັນ ຢູ່ພາຍຫລັງນຸ້ນ
ສົງສານ ທັງແຂນ້ອຍ ເຖິງຍານຮ້ອງຫາແມ່
ນັ້ນຫາກຄິດຮອດຈູ້ ນິນແທ້ແນ່ຕົນ
○ ສ່ວນແມ່ ກັບລູກນ້ອຍ ບັງອົກຫລາຍຕົນ
ໂດນຕາມກັນຕ່ອນທັນ ພາກກາຍຫາຍຫນ້າ
ໄດ້ທໍ່ຂອນສົກລີ້ ຕົກໃຈໃຫ້ສັ່ນ
ທັງຄິດ ເຖິງລູກນ້ອຍ ກັບຕົວອ້ານແມ່ຂອງ
○ ລາງຄົນ ຮອດຝັ່ງແລ້ວ ຊູ້ພັດຕ່າວລອຍຄືນ
ຍ້ອນຂະບົງເມັຽຂ້ວນ ໄຮ່ນາສາສ້າງ
ພວກແກວ ແນວລາວນັ້ນຮູ້ ຊົ້ນເຊີຍເຖິງຂນາດ
ອອກອ່າວ ສຽງໃຫ້ນັ້ນ ວ່າລາວຊູ້ເມືອງ
○ ບາດວ່າ ອອກອ່າວແລ້ວ ບໍ່ດົນງຍາມດຽວ
ວັນຄືນມາ ຖືກເຊີນໄປຈ້ອຍ
ປົ່ງສຽງ ຫລາຍຄົນເວົ້າ ວ່າສ່ຳນະນາສົບທີ່
ແຕ່ວ່າ ຄວາມລັກນັ້ນ ໃສບໍ່ຮູ້ອນໄປ
○ ບັງມີເຮືອງໃສກເສົ້າ ຂະນັ້ນເນກເຫລືອຫລາຍ
ກຽດກັບ ລາວອົນະຍົບ ແຕກຫນີເມືອງບ້ານ
ເທື່ອນ ຈານຽງຍົ້ມ ໂດນຂອງອ້ານທ່າ ເທົ່ານັ້ນ
ພົນແຕ່ນຫນ້າ ຍັງກວ້າງກວ່າຫລັງ
○ ຕົ້ນເຫດລາວຫລົກລີ້ ຫນີຈາກເມືອງລາວ
ບໍ່ແມ່ນ ຊູນຄົນລາວ ຊົ່ວຊາມເຫລືອລົ້ນ
ນັບຍ້ອນ ແກວແນວລາວປ່າ ສົມດານສັດປ່າ
ພວກສ່ຳມະນາ ວ່າເວົ້າ ເຫັນແລ້ວເບື່ອຫວງ ແທ້ເດ !
ແຖມຍັງ ໃຊ້ອ້ານາດບັງບົບ ຂຸມຄົບຂົ່ມເຫັງ ລາວຄືກັນນາ
○ ນ້ຳຕາ ລາວຫລັ່ງລົ້ນ ປົນເລືອດລົບໄຫລ
ສຸດແສນ ດວງໃຈເຈັບ ທົ່ງຫວງແທ້ເຕັ້ນ

ອັບຄືນ ລາວຫວນທໍ້
ແຫນງຕາຍດີກ່ວາ ລາວເອີຍ
ໃນໂລກກ້ວາງ ລີ້ບັງຢູ່ເປັນ
ເສືອພາຍ ອິດສະພາບນັ້ນ
ມັນຢູ່ແຕນໃດ ສິດທິມະນຸດ
ຊົນຊາວລາວ ຢູ່ໃສຈິ່ງແທ້
ລາວຂໍ ວອນວານຮ້ອງ
ຊາວຊຸມມະນຸດໂລກ ກໍ່ດີ
ເຊີນຊ່ອຍ ດັ່ງຈ່ອງໃຫ້
ລາວອົ້ນສ່ຳລັບ ແດ່ທ້ອນ
ຫນີດກອນເວົ້າ ລາວລຸ່ມຊຸມ
ເອົາ ມາກັບບາຫວນຄືດໄດ່
ຕອງ ສະຫນອງດ້ວຽ
○ ຂໍໃຫ້ລາວເຮົາໄດ້
ກົນກຽວຮັກຣ໌ ປ່າໄດ້ລົບສໍ່
ເຕື້ນແນວຮ້າຍ ໃຫ້ກຽດຊັງ
○ ລາວວັນນີ້ ມີດຸກຍ່ອນ
ສອນໃຫ້ຄົນຮັກກັຽວ ແນງໄວ້
ພື້ນຂະກຸນ ວ່ານາ !
ຈົນກອນນັ້ນ ທັນມາກັບຕ່າວ
ຄືນສູ່ທ້ອງ ດຽງກ້ຳຝ່າຍເຮົາ
ຢ່າໃຫ້ລືດຂ່າວໃຮ້ ວ່າໂຫດກ່ງ
ເກີນກະດັດ ບາດເອົາກັດລ໋
ຕາຍ ຊິໜ່າຍເຫນງຫນັງ
ໜ້າ ແທ້ນາ ລາວເອີຍ ໆ ໆ

# ທຸງຊ້າງສາມຫົວ

ໂດຍ: ເຫລົາຄຳ ມະວົງຈັນທ໌

ມີຫລາຍຄົນໄດ້ສົນທະນາກັນກ່ຽວກັບທຸງຊ້າງສາມຫົວ ແລະທຸງກາວົງເດືອນບາງຄົນໄດ້ຂຽນຈົດຫມາຍມາຖາມເພື່ອຢາກຮູ້ກ່ຽວກັບທຸງຂອງຊາດລາວ ຄິດວ່າຄົນລາວວັນນີ້ ຄົງຈະຮູ້ເຣື່ອງດີ ແຕ່ວ່າພວກເຮົາບໍ່ແມ່ນໃສ່ຮ້າຍປ້າຍສີບັນດາຜູ້ແທນແລະເຈົ້ານາຍເກົ່າຜູ້ໃຫ້ຄຳຕອບມານັ້ນວ່າ ລູກກໍບໍ່ຊາບ, ອ້າຍກໍບໍ່ຮູ້, ຜູ້ແທນກໍບໍ່ຮູ້ຄວາມເປັນມາຂອງທຸງຊ້າງສາມຫົວ. ລາງຄົນຂນາດໂຕເອງຍັງເປັນຣັຖມົນຕຣີກຳກະຊວງສຳຄັນຂອງຊາດ ຜູ້ແທນບາງຄົນຖາມທ່ານຣັຖມົນຕຣີວ່າການເມືອງຂອງລາວຈະເປັນໄປໃນຮູບໃດ ? ພ້ອມຍັງຖາມສອດຂຶ້ນມາວ່າ ທຸງກາຊ້າງສາມຫົວນີ້ແມ່ນໃຜເປັນຜູ້ຄົ້ນຄວ້າອອກມາແລະຄວາມຫມາຍເດວ່າແນວໃດ ? ທ່ານຣັຖມົນຕຣີຕອບດ້ວຍຄວາມຮູ້ເທົ້າບໍ່ເຖິງການວ່າ " ໂຍ " ເຮົາບໍ່ແມ່ນນັກການເມືອງ ເຮັດຈັ່ງໃດຈະຕອບໄດ້ "ຜູ້ແທນຖາມແບບຄວາມຊື່ເພາະເປັນຄົນຂ້າສາຣະວັນ ເອົາຈັ່ງຊັ້ນທ່ານມາເປັນຣັຖມົນຕຣີດ້ວຍວິທີໃດ ? ເປັນຫຍັງຈຶ່ງວ່າບໍ່ແມ່ນນັກການເມືອງ > ຕອບງ່າຍໆທ່ານຜູ້ອ່ານອັນວ່າ ການເມືອງ ກັບກວນເມືອງມັນໄປຄົນລະເຣື້ອງແລ້ວ. ເອົາລະເພື່ອບໍ່ເປັນການເສັຽເວລາຄືເຮົາເຈົ້າຂ້ອຍຕ້ອງການຢາກຮູ້ຢາກຮຽນ. ມີຫລາຍຄົນໄດ້ສົນທະນາກັນວ່າທຸງຊ້າງສາມຫົວແລະທຸງກາເດືອນ

ຣັຖບານ ພຍາຄຳມ້າວ ວິໄລຍ໌

໑໘ ຕຸລາ ໑໙໔໕

ຣັຖບານ ເຈົ້າສຸວັນນະຣາຊ

໑໐ ກໍຣະກະດາ ໑໙໔໗

ບັນດາບຸກຄົນທີ່ນິຍົມທຸງຊ້າງສາມຫົວຕ່າງກໍ່ເອກອ້າງວ່າ ເປັນທຸງທີ່ສົມຄວນເປັນທຸງຊາດຂອງລາວ. ແຕ່ບັນດາບຸກຄົລທີ່ນິຍົມທຸງກາເດືອນຕ່າງກໍ່ບອກວ່າ ທຸງຊ້າງສາມຫົວແມ່ນໂຕສັດ ແລະບໍ່ຄວນເຄົາຣົພນັບຖືໂຕສັດ ເພາະສັດເດັຽຣະສານ ແມ່ນສັດປະເພທຕ່ຳ. ການຖົກຖຽງແລະຂັດແຍ້ງກັນຂອງມະນຸສແມ່ນບ່ອນເກີດແຫ່ງຄວາມຈິບຫາຍ ໃຫ້ແກ່ຕົນເອງ ແລະປະເທສຊາດ ບ້ານເມືອງ ແຕ່ແນວໃດກໍ່ຕາມ ເຄື່ອງຫມາຍແມ່ນສັນຍາລັກຂ໌ ທີ່ມະນຸສຈະຍົກຂຶ້ນເອົາເປັນຮູບຕົວແທນຂອງຕົນ. ໃນປະເທສ ອິນເດັຽ ໃຊ້ຮູບສິງຫ໌ ສາມຫົວເປັນເຄື່ອງຫມາຍປະຈຳຊາດ, ປະເທສອິນໂດເນເຊັຽໃຊ້ຄຸດທ໌ ເປັນເຄື່ອງຫມາຍຂອງກາປະທັບ. ສຫະຣັຖອະເມຣິກາ ໃຊ້ໂຕແຫລວເປັນເຄື່ອງຫມາຍຂອງກາປະທັບຂອງປະເທສ. ແລະປະເທສໂປໂລຍກໍ່ໃຊ້ແຫລວນີ້ເປັນເຄື່ອງຫມາຍໃນການໃຊ້ກາປະທັບປະຈຳຊາດຂອງພວກຕົນ. ປະເທສທີ່ກ່າວນາມມານັ້ນ ຕ່າງກໍ່ເປັນບັນດາປະເທສທີ່ກ້າວຫນ້າສີວິໄລຍ໌ ພວກເພິ່ນຄົງບໍ່ໂງ່ເກີນໄປ ທີ່ຈະໄປຍົກເອົາໂຕສັດມາໃຫ້ວນົບບູຊາ. ຖ້າຊາວຕ່າງປະເທສເປັນຄົນໂງ່ກໍ່ຄົງມີແຕ່ປະເທສລາວ ປະເທສດຽວທີ່ເປັນຜູ້ສລາດສ່ອງໃສ. ແລະຂ້າພະເຈົ້າ > ຕ່າງກໍ່ມີຄວາມພາກພູມໃຈທີ່ເກີດໃນຕະກຸລລາວທີ່ເປັນຜູ້ສລາດສ່ອງໃສ ຈົນສາມາຖຫັນປ່ຽນປະວັດສາທຂອງຕົນໃຫ້ເປັນຊົນຊາດທີ່ກ້າວຫນ້າໃນໂລກ.

◇ໃນສມັຍປະເທສລາວຮ້ອງຊື່ຕົນເອງວ່າ " **ປະເທສລ້ານຊ້າງ** ". ທ່ານ ພ.ຕ. ທອມມາສ ທອມສັນຊ໌ ( Thomas Thompson ) ນາຍທະຫານ ສຫະຣັຖ ອະເມຣິກາ ທີ່ເຂົ້າໄປບັນຊາການຮ່ວມຣົບໃນສົງຄາມໂລກເທື່ອທີ ສອງ ໄດ້ຂຽນໄວ້ກ່ຽວກັບລາວໃນປຶ້ມທີ່ໃຫ້ຊື່ວ່າເມືອງລາວ (Muang Lao ) ພິມໂດຍສຳນັກພິມຫນັງສືສາກົລ ນິວຢອກ ( New York International Book ) ພິມເມື່ອປີ ໑໙໖໒. ທ່ານ ພ.ຕ. ທອມສັນ ໄດ້ກ່າວວ່າຕົນໄດ້ໄປຢູ່ໃນເມືອງລາວຫລາຍປີ ແຕ່ຂອນແກ່ນໄປຮອດທ່າແຂກຟາກຊ້າຍຂອງຝັ່ງແມ່ນ້ຳຂອງ. ທຸງລາວໃນສມັຍກ່ອນເປັນຮູບແບບດຽວກັບ**ໃນສີພາ** ແຕ່ມີພົວດອກຄູນຫ້ອຍອ້ອມຢູ່ທາງຫນ້າ. ຂ້າພະເຈົ້າ (ທອມສັນ) ເຂົ້າໃຈວ່າທຸງນີ້ຄົງໃຊ້ກັນໃນສມັຍທີ່ເມືອງລາວໄດ້ຮ້ອງຕົນເອງວ່າ **ປະເທສລ້ານຊ້າງ** ແຕ່ຫລັງຈາກປະເທສລ້ານຊ້າງໄດ້ແຕກແຍກກັນແລ້ວ. ທຸງປະຈຳຊາດຂອງລາວກໍບໍ່ມີເລີຍ. ຕໍ່ຄຳຖາມຫລາຍຄົນມີຢູ່ວ່າ !

> ທຸງຊ້າງສາມຫົວເກີດມາໄດ້ດ້ວຍວິທີໃດ ?

> ແມ່ນໃຜເປັນຜູ້ປະດິສຖ໌ຂຶ້ນ ?

> ເພື່ອວັຕຖຸປະສົງຄ໌ແນວໃດ ? >>



ຈາກປື້ມບັນທຶກ

"ຂ້ອຍແມ່ນລາວເສຣີຊົນ" ພິມເປັນພາສາໄທຍ໌ໃນປີ ໑໙໓໗ ໂດຍນາຍທອງມີດັກແທ້ ແລະຈາກປື້ມນ້ອຍ "ຂ້ອຍເຮັດວຽກລາວອິສຣະ" ພິມເປັນໂຕທັມມ໌ໃສ່ໃບລານແລະບ່ອກຊື່ຂຽນແລະວັນເດືອນປີທີ່ຂຽນໄດ້ມີຢູ່ໃນວັດບ້ານນ້ຳພອງ ແຂວງຂອນແກ່ນ. ດຽວນີ້ໄດ້ເປັນເມືອງ ແລະຢູ່ໃນແຂວງດຽວກັນ.

ໃນໜັງສື ໔ ຫົວທີ່ກ່າວມາ ນັ້ນໄດ້ກ່າວເຖິງທຸງຊ້າງສາມຫົວໄວ້ຢ່າງໜ້າຈັບໃຈດັ່ງນີ້:

◇ ໃນວັນທີ່ ໔ ກັນຍາ ໑໙໗໖ ພວກຂ້າພະເຈົ້າໄດ້ໄປໂຮມກັນຢູ່ເຮືອນຂອງອາຈານຣ໌ ມະຫາຄຳດີ ສາຣະຜົລ ຢູ່ຕຳບົລບ້ານໄຜ່ ອຳເພີ ບ້ານໄຜ່ ຈັງວັດຂອນແກ່ນ. ເພື່ອໃຫ້ສັດຣູເຂົ້າໃຈການເຄື່ອນໄຫວຂອງພວກເຮົາ, ອາຈາຣຍ໌ ມະຫາຄຳດີ ສາຣະຜົລ ໄດ້ຈັດເຮັດບຸນເຂົ້າແຈກຂົ້ວ. ໃນກອງປະຊຸມນັ້ນກໍ່ມີ ພຣະສັງຄະຣາຊ ອ້ວນ ຕິສວັງໂສ ຊົງນັ່ງເປັນປະທານ, ພ.ອ. ສໄວ ສໄວແສນຍາກອຣ ເປັນຮອງປະທານ, ສ່ວນຄນະກັມມະການ ໃນກອງປະຊຸມກໍ່ມີ ຜູ້ສຳຄັນ ຄື: ທ່ານຕຽງ ສິຣິຂັນທ໌,

*ເພື່ອຊາຕລາວ ແລະ ເພື່ອການມີອິສຣະພາບຂອງປະຊາຊົນລາວ ການຕໍ່ສູ້ທີ່ປະວັຕສາຕຣ໌ ໄດ້ບັນທຶກໄວ້ ແລະຮັບຮູ້ວ່າຖືກຕ້ອງນັ້ນ ແມ່ນຄົນລາວຜູ້ກ້າຫານຊານໄຊຍ໌*

ທ່ານ ທອງອິນທ໌ ພູຣິພັດທ໌ ແລະມີແຂກພິເສສທີ່ມາຮ່ວມແມ່ນ ທ່ານເຄືອຂັນໄຊ ນະວຽງຈັນທ໌ (ອຸ່ນ ຊຸນະນິກອຣ) ມະຫາສິລາ ວີຣະວົງສ໌ ທັງສອງຄົນນີ້ແມ່ນຕາງໜ້າລາວຝັ່ງຊ້າຍ. ສ່ວນລາວຝັ່ງຂວານັ້ນບໍ່ນ້ອຍກວ່າ ໕໐ ຄົນ.

ກອງປະຊຸມໄດ້ເຫັນດີວ່າ ຄວຣເອົາຊ້າງສາມຫົວເປັນທຸງປະຈຳຊາຕລາວ ແລະຊ້າງສາມຫົວແມ່ນເປັນຊ້າງທີ່ບໍ່ມີໃນໂລກມະນຸສ໌. ຫລັງຈາກໄດ້ແລກປ່ຽນຄວາມຄິດຄວາມເຫັນກັນເປັນເວລາ ໕ ມື້ ໕ ຄືນ. ຄນະກອງປະຊຸມໄດ້ບັນທຶກໂດຍ ອາຈາຣຍ໌ ມະຫາຄຳດີ ສາຣະຜົລ ເຈົ້າຂອງຮ້ານຂາຍປື້ມເປັນໂຕທັມມ໌ໂດຍໃຊ້ເຫລັກຈາຣນ໌ ຂຽນໃສ່ໃບລານໄວ້ດັ່ງນີ້:

໑. ຊ້າງສາມຫົວ ແມ່ນປຽບເໝືອນ ກ້ອນເສົ້າ ສາມກ້ອນ ໃນການປົກຄອງຕາມຣະບອບ ປະຊາທິປະໄຕຍ໌

ກ້ອນເສົ້າທີ່ (໑) ແມ່ນພແນກນິຕິບັນຍັຕ ອັນໄດ້ແກ່ ສະພາປະຊາຊົນ.

◇ ກ້ອນເສົ້າອັນທີ່ (໔) ໄດ້ແກ່ ແພນກ ບໍຣິຫາຣ ອັນໄດ້ແກ່ ຣັຖບາລ.

◇ ກ້ອນເສົ້າອັນທີ່ (໓) ໄດ້ແກ່ ຕຸລາການ ອັນໄດ້ແກ່ແພນກ ຍຸຕິທັມມ໌. ນີ້ແມ່ນຄວາມໝາຍຂອງສາມຫົວຊ້າງ ທີ່ຮ້ອງກັນວ່າ **"ຊ້າງສາມຫົວ"**.

◇ ເສຕສັຕກຸ ຊັ້ນຢູ່ເທິງຊ້າງນັ້ນອັນໝາຍເຖິງ ອະປະຫາຣິຍະທັມມ໌ ກຸ ປະການ ເຊິ່ງເປັນສັຈຈະທັມມ໌ ທີ່ຈະທຳການປົກປັກຮັກສາ ສາມກ້ອນເສົ້າອັນເປັນເສົາຄ້ຳຂອງປະເທສຊາຕ ໃຫ້ໝັ້ນຄົງ.

໑- ປະຊາຊົນແລະສະພາປະຊາຊົນຕ້ອງໂຮມກັນໂອ້ໂລມການເມືອງເປັນປະຈຳ ເພື່ອທຳການຊ່ອຍເຫຼືອກັນໃນການປົກປ້ອງປະເທສຊາຕ.

(First People should assemble often to discuss political affairs, and to provide for national defense.)

໔- ປະຊາຊົນທຸກຊົນຊັ້ນ ຊົນຊາຕ ຕ້ອງໂຮມກັນປະຊຸມກັນດ້ວຍຄວາມສາມັກຄີເພື່ອປຶກສາຫາຣືກັນກ່ຽວກັບວຽກງານຂອງປະເທສຊາຕ.

*(Second, The people of all social classes should meet together in unity to discuss their national affairs.)*

໓- ປະຊາຊົນຕ້ອງຮັກສາຣີດຄອງ»

ປະເພນີຂອງຕົນ ແລະບໍ່ຈຳເປັນທີ່ຈະ ທຳການປ່ຽນແປງແບບບໍ່ມີເຫດຜົລ. ນອກເໜືອນັ້ນຕ້ອງປົກປັກຮັກສາຮີດເກົ່າ ຄອງຫລັງໄວ້ແລະເທີດທູລຄວາມເປັນ ຊາຕແລະມີຄວາມຍຸຕິທັມ

*( Third, People should respect old customs and not change them unreasonably, and they should also observe the rules of ceremony and maintain justice.)*

໔- ປະຊາຊົນຕ້ອງຮັບຮູ້ສິທທິຂອງ ທຸກເພທໄວ ແລະຮັກສາຄວາມສາ ມັກຄີພາຍໃນຄອບຄົວໃຫ້ແໜ້ນແນ່ນ ກໍຄືພາຍໃນຊຸມຊົນຂອງຕົນເອງໃຫ້ ໝັ້ນຄົງ

*( Forth, they should recognize the differences of sex and seniority, and maintain the purity of families and communities.)*

໕-ປະຊາຊົນຕ້ອງລ້ຽງເກືອພໍ່ແມ່ຂອງ ຕົນ ເຄົາຣົພບູຊາອາຈາຣຍ໌ ແລະເຄົາ ຣົພຜູ້ອາວຸໂສ

*( Fifth, they should be filial to their parents and faithful to their teachers and elders.)*

໖- ປະຊາຊົນຕ້ອງເຄົາຣົພພຣະທາດ, ເຈດີ ແລະຮູບປັ້ນບຸພຊົນກໍຄືພ້ອມກັນ ສລອງທຸກໆປີ. *( Sixth, they should honor the ancesters' shrines and keep up the annual rites.)*

໗-ປະຊາຊົນຕ້ອງເສີມສ້າງແນວຄິດຕົນ ໃຫ້ສູງ ຮູ້ຈັກໃນການບໍຣິຈາກ ເຊື່ອຟັງ ພຣະສົງຄູ່ຜູ້ຊົງສິລແລະໃຫ້ທານແກ່ເພີ່ນ

*( Seventh, they should esteem public morality, honor virtuous conduct, listen to honorable teachers and make offerings to them.)*

ທີ່ກ່າວມານັ້ນແມ່ນ ອະປະຣິຫະນິຍະທັມ ຊຶ່ງກາຍມາເປັນຄວາມໝາຍກ່ຽວເລກ ສັດ ກ ຊັ້ນ ໃນທຸງກາຊ້າງສາມຫົວ.

໑ ແທນ ໕ ຂັ້ນທີ່ຕົນຊ້າງປຽບໄດ້ແກ່ ພື້ນຖານຂອງສວັຣຄໃນໂລກມະນຸສ ອັນ ໄດ້ແກ່ສິລ ໕ ປະການ ເຊິ່ງເປັນສັຈຈະ ທັມ ທີ່ເຮັດໃຫ້ມວລມະນຸສພາຍໃນ ຊາດ ແລະພາຍໃນໂລກມີສັນຕິສຸຂ

໑ ຊ້າງສາມຫົວແມ່ນຊ້າງແກ້ວການະ ສິທຂອງພຣະຍາຄົນທໍ່ ເຊິ່ງຮ້ອງກັນວ່າ **ຊ້າງເອຣາວັນນ໌** ຊ້າງເອຣະວັນນ໌ ຕາມ ທີ່ກ່າວໄວ້ໃນ ມາຄະມານະວະກະສູດວ່າ ໃນສມັຍພຣະຍາຄົນນໍ່ ເກີດເປັນມະນຸສ ໄດ້ຊັກຊວນເອົາສ່ຽວຮັກແພງໄດ້ຈຳນວນ ໜຶ່ງ ມາກັນຕັດຖນົນແລະເຮັດຂົວໃຫ້ ປະຊາຊົນໄດ້ໄປມາສະບາຍ ແລະໄດ້ໃຊ້ ຊ້າງທີ່ໃຊ້ໃນການແກ້ໄມ້ຕາຍໄປກໍໄດ້ໄປ ເກີດເປັນຊ້າງເອຣະວັນນ໌

ທຸງຊ້າງສາມຫົວ ແມ່ນທຸງທີ່ຜູ້ນຳຕ້ອງ ອຸທິສຕົນເອງ ເປັນຄົນຮັບໃຊ້ປະຊາຊົນ ປະຊາຊົນມີຄວາມສຸຂກ່ອນຕົນແລະຮັ່ງ ມີກ່ອນຕົນ. ຈາກຄວາມໝາຍທີ່ກ່າວ ມານັ້ນ ທຸງກາຊ້າງສາມຫົວ ຈຶ່ງກາຍ ມາເປັນສັນຍານາມຂອງບັນດາບຸກ ຄົລທີ່ທຳການຂາຍຊາດ ຂາຍປະຊາ ຊົນ ແລະທຳການຂູດຮີດ ປະຊາຊົນ ເພື່ອຄວາມສຸຂຂອງພັກພວກຂອງຕົນ



ເຈົ້າສຸຣິຍະວົງສ໌
ນ້ອງຊາຍຂອງພຣະເຈົ້າສີສວ່າງວົງສ໌
ທັມມິກຣາຕຣ໌ (ປະສູດ 1889)




<> ໝົດແຕ່ແນະຮ່າງໃຫ້
ເຣື່ອງໃຫຍ່ພົງພັນ
ນອນຢູ່ໃນເມືອງລາວ
ຂາດວິຊາຄວາມຮູ້
ຢາກຈະຊູຄົນໃຫ້
ລາວໄປພົ້ນຝັ່ງ ຂ້າມນ້ຳຂອງ
ລ່ອງໄດ້ ກາຍຂຶ້ນບ່ອນສວັນຣ໌.

# ຂ່າວສິລປິລໃນລາວປັດຈຸບັນ

ໂດຍ: ຄໍາກຸມພົນ




ສິລປິນລາວ ພາຍໃນປະເທສ ແມ່ນ ຂຶ້ນກັບກະຊວງແຖລງຂ່າວ ແລະວັທນະທັມ ໂດຍກົງ ເພາະຕາມທີ່ຂ້າພະເຈົ້າໄດ້ສັງເກດເຫັນການເຄື່ອນໄຫວທາງດ້ານສິລປຕ່າງໆ ຈະຕ້ອງໄດ້ຜ່ານກະຊວງດັ່ງກ່າວ. ຂ້າພະເຈົ້າໄດ້ໄປຢ້ຽມຢາມພີ່ນ້ອງຢູ່ຕ່າງປະເທສຫລາຍບ່ອນ ບັນດານັກສິລປິລຄືບໍ່ໄດ້ຖືກປິດລ້ອມຄວາມເປັນອິສຣະພາພແບບນີ້ດີ ພວກເຂົາເຈົ້າໄດ້ມີອິສຣະເສຣີ ແຕ່ງເພງ ແລະຮ້ອງເພງ ຫາລາຍໄດ້ຜູ້ມີເງິນກໍ່ໄດ້ໄປສ້າງໂຮງຮຽນ, ໂຮງຫມໍ ໃຫ້ປວງຊົນຂອງເຂົາເຈົ້າໄດ້ໃຊ້ເປັນປະໂຍຊຕໍ່ສັງຄົມທົ່ວໄປ. ນອກຈາກນີ້ແລ້ວບັນດາຜູ້ນໍາທາງການເມືອງ ແລະນັກຮຽນນັກສຶກສາ, ພໍ່ຄ້າຊາວຂາຍແມ່ນໃຫ້ຄວາມສໍາຄັນແກ່ ພວກສິລປິນແລະດາຣາພາພຍົນຣ໌ຫລາຍທີ່ສຸດ. ມາປຽບໃສ່ກັບສິລປິນລາວເຮົາແລ້ວຍັງໄກຈາກສັງຄົມສ່ວນຮວມນີ້ຫລາຍ. ເປັນຫຍັງຂ້າພະເຈົ້າຈຶ່ງຫຍິບຍອກມາເວົ້າເພາະວ່າເຂົາເຈົ້າແມ່ນເຮັດເພື່ອປະຊາຊົນແທ້




ຂ້າພະເຈົ້າເຫັນວ່າ ນັກສິລປິລລາວເຮົາແມ່ນເຮັດເພື່ອກຸ່ມການເມືອງໂດຍສະເພາະແລະເປັນບ່ອນເປົ້າຫມາຍຂອງພັກການເມືອງມາໄດ້ຫລາຍສັຕວັດແລ້ວ, ດ້ວຍເຫດນີ້ຈຶ່ງບໍ່ໄປບໍ່ມາ ອີກປະການນຶ່ງຄົນລາວບໍ່ມີຫົວຊາຕນິຍົມຟັງເພງລາວ, ລໍາລາວ, ຣະຄອຣລາວແລະພາພຍົນລາວເປັນຕົ້ນ. ຂ້າພະເຈົ້າໄດ້ເຫັນຄົນລາວໄປສະແດງຟ້ອນນາຕສິລລາວ ຢູ່ໂຮງຣະຄອຣຂອງປະທານາທິບໍດີ ຢູ່ນະຄອຣຫລວງວໍຊິງຕັນ ໂດຍການນໍາພາຂອງ ທ່ານກົ່ງສວັນ ປະຖົມວົງ ໃນເວລານັ້ນທໍາໃຫ້ຂ້າພະເຈົ້າມີຄວາມຊາບຊຶ້ງ ແລະພູມໃຈນໍາການສະແດງຂອງວັທນະທັມລາວສູ່ເວທີສາກົລ. ພວກຕ່າງປະເທສ ບໍ່ຮູ້ແລະເຂົ້າໃຈພາສາລາວ ແຕ່ມີຄວາມພູມໃຈໃນຄວາມເປັນຊາຕ ແລະວັທນາທັມຂອງລາວເຮົາ ທ່ານສຸພາບ ສັຕຣີ ແລະສາມີຂອງນາງເວົ້າໃສ່ຫູຂ້າພະເຈົ້າໄດ້ຟັງ.ເວົ້າເຖິງຫມໍລໍາລາວ ຄົນອະເມຣິກັນ ກໍ່ສົນໃຈເປັນພິເສສແລະຕິດຕາມເອົາຂ່າວເປັນປະຈໍາ ລາງຄົນຍັງລໍາລາວເປັນກໍ່ມີ. ເອົາລະ ເວົ້າເຖິງສິລປິນລາວ ຖ້າຈະໄປມີເມັຽນ້ອຍ ຫ້ອຍເມັຽປາຍ ຫລື ດູຖູກຢຽບຢາມຫູຊາຕຊ້າງສາມຫົວ ກໍ່ແປວ່າຜູ້ນັ້ນບໍ່ແມ່ນສິລປ໌ຂອງຊາຕເສັຽແລ້ວ. ດຽວນີ້ມີສິລປ໌ລາວກໍາລັງສ້າງພາບພົດອັນເສັຽຫາຍໃຫ້ແກ່ຊາຕແກ່ສັງຄົມຍັງມີຫລາຍ ຍັງບໍ່ພໍບາງຄົນໄປເປັນທາຕຮັບໃຊ້ໃຫ້ຊາຕຕ່າງດ້າວເອົາໄປເປັນຄົນຫາເງິນໃຫ້ບໍຣິສັທເຂົາກໍ່ຍັງມີ "ບໍອາຍເຂົາ











ລໍາລາວຢູ່ນະຄອຣວຽງຈັນທ໌ ຍັງຮັກສາໄວ້ດີ ວັທນາທັມອັນດັ້ງເດີມຂອງລາວທຸກພາກສ່ວນ

## ຂ່າວປະຈຳທ້ອງຖິ່ນ

ໄຊຍ໌ ຣັຕຕະນະວົງ

ໃນວັນທີ່ ໒໔ ຕຸລາ ໑໙໙໖ ນີ້ ມີຜູ້ຕາງໜ້າຂອງສະມາຄົມລາວປະຈຳທ້ອງຖິ່ນໃນເຂດເມືອງ ວູນຊອກເກີຕ ໄດ້ພາກັນເຂົ້າພົບກັບເຈົ້າເມືອງແລະບັນດາຜູ້ປົກຄອງໂຮງຮຽນມັທຍົມ, ເຈົ້າໜ້າທີ່ຕຳຣວຈຕັ້ງແຕ່ຂັ້ນເທິງຫາພວກບໍຣິຫາຣງານ ເພື່ອສຶກສາແລກປ່ຽນຄວາມຄິດເຫັນບາງບັນຫາທີ່ມີຄົນຊາດອື່ນທີ່ມາອາສັຍຢູ່ໃນເມືອງດັ່ງກ່າວເກີດມີການຕີກັນພາຍໃນໂຮງຮຽນມັທຍົມແລະຕຽມມັທຍົມ, ນອກຈາກນີ້ແລ້ວຍັງສ້າງບັນຫາໃຫ້ກັບຄົນລາວທີ່ຍ່າງໄປຕາມຖນົນຫົນທາງຕ່າງໆນັ້ນບໍ່ມີຄວາມປອດພັຍໃນການສັນຈອນອີກດ້ວຍ.

ຕໍ່ເຫດການດັ່ງກ່າວຈຶ່ງເປັນເຫດໃຫ້ຄວາມບໍ່ພໍໃຈຂອງບັນດາຜູ້ນຳສະມາຄົມຂອງຄົນລາວໃນເຂດທ້ອງຖິ່ນແລ້ວພາກັນຂໍເຂົ້າພົບເຈົ້າໜ້າທີ່ບ້ານເມືອງເພື່ອແກ້ໄຂເຫດການກ່ອນນັ້ນຈະມີເຫດການອັນຮ້າຍແຮງເກີດຂຶ້ນ ສະມາຄົມລາວຕັ້ງມາເພື່ອເບິ່ງແຍງຄົນລາວດ້ວຍກັນໃນຍາມສຸກເສີນແລະວຽກງານອັນຈຳເປັນ ບຸກຄົນທີ່ໄດ້ເຂົ້າໄປພົບປະເຈົ້າເມືອງແລະເຈົ້າໜ້າທີ່ໃນຄັ້ງນີ້ມີນຳກັນ ໕ ຄົນ ເປັນຕົ້ນທ່ານຄຳບົດ ພົມທະວົງ, ທ່ານສຸຣະພອຣ ແສງຈັນ, ທ່ານຄຳແດງ ຣັຕຕະນະສິງ ຍ.ນ. ແພວພັນ ແສງຈັນ ແລະ ທ່ານທອງສວັນຣ໌ ພົງສວັຣຄ໌ ທາງເຈົ້າໜ້າທີ່ໄດ້ຮັບປາກຄຳວ່າຈະນຳໄປແກ້ໄຂ ທາງເຈົ້າໜ້າທີ່ຕຳຣວຈ ກໍ່ຈະໄປຮັກສາບ່ອນທາງອອກເບື້ອງຫລັງຂອງໂຮງຮຽນໃນເວລາເລີກຕອນບ່າຍແລະຈະນຳເອົາກ້ອງຖ່າຍພາບມາຕິດຕັ້ງເພື່ອປ້ອງກັນແລະຖ່າຍຮູບເອົາຖ້າຫາກເກີດມີລູກສິດຕີກັນໃນແຄມຕຶກຂອງໂຮງຮຽນ ນອກຈາກນີ້ ທາງຫ້ອງການເຈົ້າເມືອງກ່າວວ່າຈະປະຊຸມກັບພວກຫົວໜ້າຂອງກຸ່ມທີ່ມີການຕີກັນກັບຄົນລາວນັ້ນເພື່ອແກ້ໄຂທຳຄວາມເຂົ້າໃຈຕໍ່ທຸກກໍ້າທຸກຝ່າຍ. ທ່ານທອງສວັນຣ໌ ພົງສວັນ ໄດ້ກ່າວຕໍ່ເຈົ້າໜ້າທີ່ວ່າ ຄົນລາວໄດ້ມາອາສັຍຢູ່ເມືອງວູນຊອກເກີຕນີ້ລ້ວນແລ້ວແຕ່ເປັນຄົນອົພຍົພມາຕັ້ງຖິ່ນຖານໂດຍຖືກຕ້ອງຕາມກົດໝາຍ ພວກເຂົາເຈົ້າມີພໍ່ແມ່ຜູ້ປົກຄອງ ສ່ວນຫລາຍພໍ່ແມ່ຂອງເຂົາເຈົ້າໄປທຳງານລ້ຽງຄອບຄົວຫາລາຍໄດ້ເສັຽພາສີໃຫ້ຣັຖບານ ທຸກຄົນຕ້ອງການຄວາມປົກປ້ອງສເມີພາບກັນຄືກັບຊາດອື່ນໆທີ່ອາສັຍຢູ່ໃນເຂດກຳແພງເມືອງນີ້. ຂໍໃຫ້ເຈົ້າໜ້າທີ່ທ້ອງຖິ່ນຈົ່ງເບິ່ງແຍງຕາມຄວາມປະສົງດ້ວຍ. ຖ້າມີເຫດການເກີດຂຶ້ນໃນໂຮງຮຽນກໍ່ໃຫ້ຕິດຕໍ່ໄປຍັງຫ້ອງການຂອງສະມາຄົມຂອງພວກຂ້າພະເຈົ້າ

ຍ.ນ. ແພວພັນ ແສງຈັນ ໃນນາມປະທານສະມາຄົມຍິງລາວປະຈຳຣັຖ ກໍ່ໄດ້ເວົ້າເຖິງການສອນເດັກນ້ອຍໃຫ້ຮູ້ຈັກນັບຖືພໍ່ແມ່ແລະຄຣູຜູ້ເປັນອາຈານສອນຂອງໂຮງຮຽນຢູ່ເມືອງລາວໃຫ້ເຈົ້າໜ້າທີ່ປະຊຸມຊາບແລະມັນແຕກຕ່າງກັນຫລາຍ ເພາະວ່າສັງຄົມ ວັທນະທັມ ແລະຣະບຽບກົດໝາຍມັນບໍ່ຄືກັນ. ເພາະສະນັ້ນເດັກນ້ອຍຢູ່ໃນເມືອງອະເມຣິການີ້ ເສຣີພາບຫລາຍໂພດ ຈົນວ່າເດັກນ້ອຍບໍ່ຮູ້ສຶກມີຄວາມນັບຖືແລະຢ້ານກົວແຕ່ຢ່າງໃດ ແມ້ແຕ່ລູກຂອງຂ້າພະເຈົ້າເອງກໍ່ຍັງຖືກຄົນຊາດອື່ນມາຕີໃນຍາມເລີກຈາກໂຮງຮຽນໄປບ້ານເຮືອນເຫັນວ່າບໍ່ສົມຄວນແລະບໍ່ຍຸຕິທັມແກ່ເດັກນ້ອຍຄົນລາວ.

ທ່ານສຸຣະພອຣ ແສງຈັນ ໃນນາມປະທານຂອງສະມາຄົມພຸທລາວປະຈຳຣັຖ ກໍ່ໄດ້ໃຫ້ຄວາມຄິດເຫັນວ່າ ແຕ່ກ່ອນເຈົ້າໜ້າທີ່ຕຳຣວຈຍັງໃຫ້ມີການພົວພັນກັບສະມາຄົມຂອງພວກຂ້າພະເຈົ້າ ມາບັດນີ້ພວກດັ່ງກ່າວໄດ້ອອກໄປກິນເບັ້ຍບຳນານໝົດແລ້ວ ພວກຜູ້ໃໝ່ມາແທນກໍ່ບໍ່ຄ່ອຍໃຫ້ການຕິດຕໍ່ໃນຍາມມີບັນຫາເກີດຂຶ້ນ ສະນັ້ນໃນຂັ້ນຕໍ່ໄປຖ້າຫາກມີເຫດການອັນຮ້າຍເກີດຂຶ້ນອີກ ຂໍໃຫ້ເຈົ້າໜ້າທີ່ຈົ່ງເອັນດູ ແລະບໍ່ໃຫ້ມີການຕີກັນຣະຫວ່າງຄົນລາວ ກັບຄົນຊາດອື່ນໆ....

ເມື່ອທຸກຄົນໄດ້ແລກປ່ຽນຄວາມຄິດຄວາມເຫັນກັນເປັນທີ່ເຂົ້າໃຈແລ້ວທາງເຈົ້າໜ້າທີ່ຈະນຳເອົາຄຳສເນີຂອງຝ່າຍລາວໄປພິຈາຣະນາແລະຈະຕິດຕໍ່ມາຫາສະມາຄົມຂອງພວກລາວໃນຂັ້ນຕໍ່ໄປພາຍໃນບໍ່ຊ້ານີ້ ຫລັງຈາກນັ້ນກໍ່ໄດ້ເລີກລາກັນໄປດ້ວຍຄວາມຫວັງຢ່າງຍິ່ງວ່າພວກເຈົ້າໜ້າທີ່ຄົງຈະຕ້ອງແກ້ໄຂໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້. ຕໍ່ບັນດາອົພຍົບລາວກໍ່ຄືບັນດາອົພຍົບຈາກຂເມນ ແລະວຽດນາມ ກໍ່ໄດ້ມາຕັ້ງຖິ່ນຖານຢູ່ໃນເມືອງນີ້ໃນຕົ້ນປີ ໑໙໗໕ ມີຄົນລາວສອງຄອບຄົວ ຫລັງຈາກນັ້ນມາ ກໍ່ມີບັນດາອົພຍົບຈາກວຽດນາມ, ລາວ ແລະຂເມນໄດ້ເພີ້ມຂຶ້ນໃນປີ ໑໙໘໐ ຈົນເຖິງປັດຈຸບັນ ບາງສ່ວນແມ່ນຍົກຍ້າຍມາຈາກຣັຖອື່ນໂດຍຖືວ່າມີວຽກງານຫາໄດ້ສະດວກດີກວ່າຣັຖອື່ນ ອຸດສາຫະກັມກໍ່ຫລາຍ ບາງຄົນມີທຸຣະກິຈກຸ່ມຕົນເອງແລ້ວ

## ບຸນທອນ ຈັນທະວີໄຊຍ໌

ໂດຍ ກົ້ງຄ່າ ວິໄລສານ



ດຣ. ບຸນທອນ ຈັນທະວີໄຊຍ໌ ໄດ້ເດີນທາງມາຮ່ວມປະຊຸມແລະໃນງານມອບໄຊຍະບັດໃຫ້ແກ່ນັກສຶກສາລາວທີ່ຈົບຈາກມະຫາວິທະຍາໄລ ສົກປີ ໙໙.

ໂດຍການເຊື້ອເຊີນຂອງທ່ານສຸຣິວົນ ຄຳວົງໄຊຍ໌ ປະທານບໍຣິຫາຣສະພາປະສານງານລາວເສຣີຊົນ ທີ່ມີສູນກາງຕັ້ງຢູ່ເມືອງຫາດເຝີດ ຣັຖ ຄອນເນັກຕິຄັດ ເພື່ອເປັນການຕ້າງຫາຈັດກອງປະຊຸມໃຫຍ່ຂຶ້ນໃນປີ ໑໙໙໗ ທີ່ຈະມາເຖິງນີ້ ທາງຄນະກັມການບໍຣິຫາຣຈຶ່ງຈັດໃຫ້ມີກອງປະຊຸມນ້ອຍຂຶ້ນກ່ອນຈະມີງານກິນລ້ຽງສັງສັນແລະຫາລາຍໄດ້ເຂົ້າສະພາກາງຂອງເສຣີຊົນ ໃນລະຫວ່າງເດືອນພຶສຈິກາ ວັນທີ ໘ ປີ ໑໙໙໗ ນີ້ ທາງຄນະໄດ້ຈັດກອງປະຊຸມຂຶ້ນທີ່ ມະຫາວິທະຍາໄລ ຈອນສັນສ໌ ແອັນ ແວວລ໌ ເມືອງສົກົງ ຣັຖ ມາຊາຈູເຊັດ ໃນການປະຊຸມຄັ້ງນີ້ບໍ່ໄດ້ເປີດໃຫ້ທຸກຄົນເຂົ້າຮ່ວມເພາະວ່າເປັນການປະຊຸມກະກຽມຫາທາງວາງແຜນປະຊຸມໃນປີ ໑໙໙໘ ທີ່ຈະມາເຖິງນັ້ນນັ້ນຈະສົມຄວນຫຼືບໍ່? ແລະຈະຈັດຢູ່ບ່ອນໃດຈະເຫມາະສົມ ບັນດາທີ່ເຂົ້າຮ່ວມປະຊຸມມີທັງຫມົດ ນຶ່ງ ຄົນ. ທ່ານອຸດອຣ ພຸທວົງ ເລຂາທິການໄດ້ສເນີຕໍ່ທີ່ປະຊຸມຊາບວ່າ ທາງສະພາປະສານງານໄດ້ຈັດຕັ້ງຫນ່ວຍພື້ນຖານປະຊາທິປະໄຕຍ໌ໃນເຂດເມືອງບູນ ຊິອກເກັດ ໂດຍມີທ່ານພາຍພຽນສິນ ເປັນຫົວຫນ້າຄນະ. ໃນນັ້ນມີທ່ານເດດຈັນທະຣັງສີ, ທ່ານແທ່ນ ຄົງສຸວັນຄຳ, ທ່ານຍອດແສງສວ່າງວົງ, ທ່ານພິມ ພິມມະຈັນ ເປັນສະມາຊິກຂອງສະພາທ້ອງຖິ່ນ ເພື່ອໃຫ້ວຽກງານຂອງສະພາມີການເປີດກວ້າງແລະຮັບສະມາຊິກເຂົ້າໃນສະພາທີ່ປຶກສາ ແລະສະພາວິທະຍາສາດ ນັ້ນຕ້ອງມີການຈັດຕັ້ງຫນ່ວຍພື້ນຖານໃຫ້ຫນັ້ນຄົງ. ນອກຈາກການຮັບເອົາບັນຫາທຸກຢ່າງໄປພິຈາຣະນາແລ້ວທາງກອງປະຊຸມຈຶ່ງເຫັນດີມອບໃຫ້ຄນະກັມການນຳໄປສຶກສານຳຣອງປະທານສະພາເຂດໃຕ້ ແລະປະເທສ ອອສເຕເລັຍນຳ ເພາະພວກດັ່ງກ່າວບໍ່ສາມາສມາຮ່ວມປະຊຸມນຳໄດ້ ນອກຈາກ ນາງບຸນທອນ ຈັນທະວີໄຊຍ໌ ທີ່ໄດ້ເດີນທາງມາຈາກປະເທສເຢັຍຣະມັນ ແລະຕາງຫນ້າຈາກຢູໂຣປຕາວັນອອກ. ນາງບຸນທອນ ເປັນຍິງລາວທີ່ສູ້ຊົນດ້ວຍຕົນເອງແລະມີແນວຄິດເປັນຫ່ວງນຳຊາຕ ນຳພູຍິງລາວທີ່ຖືກກົດຂີ່ຂົ່ມເຫັງໂດຍບໍ່ໄດ້ຮັບສິດທິເສຣີພາບຢ່າງເຕັມສ່ວນ ນາງມາອະເມຣິກາເທື່ອນີ້ ໄດ້ມີໂອກາສພົບປະຜູ້ນຳໃນການຕໍ່ສູ້ປະຊາທິປະໄຕຣ໌ຂອງລາວອີກຫຼາຍທ່ານ ພ້ອມດຽວກັນນັ້ນ ທ່ານຍັງໄດ້ໄປພົບປະຜູ້ແທນແລະເຈົ້າເມືອງ, ເຈົ້າແຂວງຂອງສຫະຣັຖປະຈຳຣັຖຄອນເນັກຕິຄັດ ອີກໂດຍການນຳພາໄປແນະນຳຈາກທ່ານສຸຣິວົນ ຄຳວົງໄຊຍ໌ ປະທານບໍຣິຫານສະພາປະສານງານລາວເສຣີຊົນ. ໃນຣະຫວ່າງການມາຄັ້ງນີ້ ນາງຍັງໄດ້ໄປພົບ ທ່ານຈັນ ກົມຍາ ທີ່ປຶກສາແລະຜູ້ໃຫ້ການແນະນຳຫຼາຍໆດ້ານທາງແນວຄິດການເມືອງແລະສັງຄົມລາວໃນພູມີພາຄສ່ວນນັ້ນ ທ່ານຈັນ ກົມຍາ ກໍ່ໄດ້ໃຫ້ກຽດມາຮ່ວມປະຊຸມນຳແຕ່ສຸຂພາບຂອງເພິ່ນບໍ່ສະບາຍຈຶ່ງໄດ້ກັບໄປພັກຜ່ອນເພື່ອຈະເດີນທາງກັບທີ່ຣັຖ ນິວຢ໊ອຄ ໂດຽມີຜູ້ຕິດຕາມມາດ້ວຍຄື ທ່ານບຸນທົງ ຜູ້ສຳຄັນໃນອົງຄ໌ການລາວຮ່ວມເສຣີພາບ.

◇ ນາງບຸນທ່ອນ ຈັນທະວີໄຊຍ໌ ໄດ້ມີເວລາມາຢ້ຽມຢາມຫ້ອງການສູນກາງຂອງພັຄລາວກ້າວຫນ້າ ພຽງ ນຶ່ງ ນາທີ ເປັນທີ່ຫນ້າເສັຽດາຍວ່າຖ້າຫາກມີໂອກາສພຽງພໍຈະໄດ້ແລກປ່ຽນຄວາມຄິດຄວາມເຫັນກັນກັບບັນດາພະນັກງານແລະສະມາຊິກຂອງພັຄລາວກ້າວຫນ້າ ແຕ່ວ່າວັນນັ້ນເປັນເວລາກາງຄືນຂອງມື້ຈັດງານ ຈຶ່ງບໍ່ມີໂອກາສໄດ້ພົບພໍ້ຈັກຄົນ, ນອກຈາກນີ້ແລ້ວນາງຍັງບໍ່ໄດ້ມີໂອກາສພົບປະເຈົ້າຫນ້າທີ່ຂັ້ນຣັຖບານກາງແລະຣັຖບານຣັຖ ເປັນຕົ້ນສະພາສູງແລະສະພາຕ່ຳຂອງສຫະຣັຖອີກດ້ວຍ ຫລືເປັນດ້ວຍເຫດວ່າຣັຖໂຣດໄອແລັນອາຈບໍ່ສຳຄັນພໍເທົ່າໃດເພາະວ່າສູນກາງສະພາປະສານງານລາວເສຣີຊົນບໍ່ໄດ້ຕັ້ງຢູ່ພາຍໃນຣັຖນີ້. ເຖິງຢ່າງໃດທາງສູນກາງພັຄລາວກ້າວຫນ້າ ກໍ່ຍິນດີມີການສະນັບສະນູນທຸກອົງຄ໌ການຈັດຕັ້ງຂອງລາວທີ່ມີຢູ່ແລ້ວ, ພັຄລາວກ້າວຫນ້າ ບໍ່ຄິດກັບພັຄຫຼືອົງຄ໌ການອື່ນ ມີເອກຣັຄຂອງລາວເປັນລາວ ໂດຍສະເພາະແລ້ວຊຸກຍູ້ພວກຫນຸ່ມນ້ອຍໃຫ້ມີການສຶກສາດີ, ມີຄວາມຫມັ້ນຄົງຂອງຄວາມເປັນຊາຕບໍ່ໃຫ້ຫາຍສາບສູນໄປໃນອະນາຄົດທີ່ຈະມາເຖິງນີ້. ພວກເຮົາຂໍຂອບໃຈທີ່ມາຢາມຄັ້ງນີ້ ./.

ໄກ່ງາມຍ້ອນຂົນ ຄົນງາມເພາະແຕ່ງ ນັກສະແດງສິລປະຂອງລາວ ກໍ່ກ້າວໄປໄກຫລາຍແລ້ວພວກເຮົາຄວນສນັບສນູນໃຫ້ສິລປະວັທນະທັມຂອງຊາດ ມີຄວາມກ້າວໜ້າ ສີວິໄລ ໄປເຖິງເຊັ່ນລູກຫຼານ ໆ


ຂາວລະ..ການ ຄຳຄົນຂອງລາວ ໄຫລພາບ ດດີ


ນັກຂ່າວລາຍການເພງ ຂອງ ວຽງຈັນ ວັນນີ້ ດດີ





ວຽງຈັນຕ໌ ສວັນບໍ ນັ້ນອີກໄດ້ໄປທ່ຽວຊົມ ທຸກສິ່ງງາມເຫລືອລົ້ນ ຈົນເປັນຂວັນຕາ ພາໃຫ້ຈັບໃຈ ທຸກສິ່ງໃດ ກໍ່ປຽບເໝືອນເມືອງສວັນບໍ ຫາກຊາຍໃດເຫັນ ຄົງຈະບໍ່ລືມ


ພູວຽງ ວາທທະວີສັກດິ໌ ອອກງານຄອນເສີດ ທີ່ສວນຊົມເຜົ່າໃນງານ ສະແດງສິລປິລລາວ ໃຫ້ແຟນໆເພງໄດ້ຊົມ

ພາບ ອັນໄຊຍ໌

ຟ້ອນແບບຜູ້ໄທຍ໌ ນ້ອຍສຽງ ແດນກ່ອນໄປນ່າ ທຸກບາດກ້າວ ແມ່ນຖືກໃຈ ຜູ້ມາຊົມ



ສິລປິລລາວ ກຳລັງກ້າວເດີນຕາມເສັ້ນທາງອັນບໍ່ມີສຸດສຸດ ຜ່ອງ ການຟ້ອນແບບລາວຫລາຍເຜົ່າ ມີຄວາມງາມແຕກຕ່າງກັນ ມີສັນຊີງງາມໄປຄົນລະປ່າງ ເຫັນແລ້ວຊື່ນໃຈມາ ໃຫ້ເຮົາມີຄວາມພາກພູມໃຈ ແລະຮັກແພງກັບແບບອ້າຍນ້ອງຮ່ວມທ້ອງສາຍໂລຫິດດຽວກັນ ອັນນີ້ລະເພິ່ນຈຶ່ງວ່າລາວ



ສາວງາມແຫ່ງເມືອງລ່ອງແຈ້ງແຫ່ງດິນແດນວິໄລຍ໌ ແມ່ນໃສໄດ້ເຫັນກໍ່ເປັນຕາອອ່ນຊອນ ສາວນ້ອຍ ສາວນ້ຳງາມເໝືອນທິງຄ໌ ລົງມາຈາກສວັນບໍ







ເລກສິອອກໃບວັນນີ້ 2019

ໃສຖືກຢ່າລືມໂທຫາທີ່ລາວວັນນີ້

# ວັນຣະລຶກກອງທັບລາວ ຂອງ ກໍາລັງພົລໜ່ວຍຣົບພິເສດ





ລາຍງານຈາກ ສູນກາງ ສະມາຄົມນັກຣົບເກົ່າລາວໃນຂະແໜງການພົລຣົບພິເສດຂອງກອງທັບແຫ່ງຊາຕ ແຈ້ງມາໃຫ້ລາວວັນນີ້ຊາບວ່າ ໃນວັນທີ່ ໑໐,໑໑ ເດືອນພຶສພາ. ໑໙໙໕ ຈະມີການສະເລີມສະລອງໃຫ້ກຽດ ແລະໄວ້ອາລັຍແກ່ເພື່ອນນັກຣົບແຫ່ງຊາຕທີ່ໄດ້ສູນເສັຽໃນປາງສົງຄາມ. ທ່ານ ຣ.ອ. ທອງສາ ຊາຕະກຸນ ຜູ້ຕາງໜ້າສະມາຄົມນັກຣົບເກົ່າໄດ້ແຈ້ງວ່າການພົບປະຣະຫວ່າງນັກຣົບເກົ່າລາວຄັ້ງນີ້ມີຄວາມໝາຍສໍາຄັນເປັນຄັ້ງປະວັດສາຕຣ໌ ນັບຕັ້ງແຕ່ພວກເຮົາໄດ້ສູນເສັຽປະເທດຊາຕ ເອກຣາຊ ຂອງຊາຕມາໄດ້ ໒໐ ກວ່າປີແລ້ວ ທ່ານນາຍພົລ ທົງລິດ ໂຈກເບັ້ງບຸນ ແລະ ທ່ານນາຍພົລ ວັງປາວ ເຊິ່ງພວກເຮົານັບຖືວ່າ ເປັນນາຍພົລລາວຜູ້ສໍາຄັນແລະກ້າຫານ ໃນກອງທັບລາວໃນຍຸກປັດຈຸບັນ ນອກຈາກນີ້ຍັງມີນາຍແລະພົລທະຫານ ຄົນອະເມຣິກັນ ບັນດາບຸກຄົນສໍາຄັນເຊັ່ນວ່າ: ເຈົ້າໂອພາດ ນະຈໍາປາສັກຣ໌, ພ.ອ. ຄໍາພັນ ຫຼວງວິເສດ ພ.ອ ສຸວັນນີ ສີບໍຣິບູນ ພ.ອ ລີຕູ ປາວ ຕລອດທັງເພື່ອນນາຍແລະພົລທະຫານຍິງແລະຊາຍ ເຂົ້າ







ຢ່າງທົ່ວເຖິງ. ໒໗ ປີຜ່ານມາພວກເຮົາໄດ້ຕໍ່ສູ້ເພື່ອຄວາມເປັນອິສຣະພາບຂອງຊາຕລາວ ພວກເຮົາຈະເດີນໄປໜ້າຫລືຖອຍຫລັງນັ້ນ ມັນຂຶ້ນກັບພວກທ່ານທີ່ຍັງໜຸ່ມແໜ້ນ ຖ້າຫາກຍັງຄິດເຖິງຄໍາວ່າລາວ ພວກທ່ານຄວນຈະເຮັດຢ່າງໃດຢ່າງນຶ່ງເພື່ອປະເທສຊາຕແລະເພື່ອປະຊາຊົນ ທ່ານຄວນຈະເຣີ້ມລົງມືແຕ່ດຽວນີ້ ເພາະແກວໄດ້ມາເອົາດິນລາວເປັນແຂວງນຶ່ງຂອງເຂົາໄປແລ້ວ ທ່ານກ່າວບໍ່ຍອມບອກຊື່ໃຫ້. ສ່ວນທ່ານ ພ.ອ. ຜູ້ນຶ່ງກ່າວວ່າຄອບຄົວທະຫານ ໆ ຂອງເຮົາຍັງຮັກກັນເໝືອນເດີມ ຍັງແຕ່ພວກຂີ້ຢ້ານບໍ່ຍອມມາສະແດງບົດບາດຂອງຕົນ ຄອງຖ້າແຕ່ນໍາຫລັງໝູ່ ສຸກແລ້ວມາກິນນໍາ ພວກເຮົາຄິດວ່າສິ້ນເປືອງໄປລ້າ ໆ ສໍາລັບພວກຄົນປະເພດນີ້. ນັກຂ່າວຂອງເຮົາຍັງໄດ້ມີຄໍາຖາມທ່ານນຶ່ງວ່າ ການຈັດຕັ້ງສະມາຄົມນັກຣົບເກົ່າຂອງນາຍພົລບົວທອງ. ສຸດໃຈ ແລະຂອງພວກ





ນາຍພົລ ວັງປາວ, ນາຍພົລທົງລິດ ນັ້ນແຕກຕ່າງກັນແນວໃດ (?) ທ່ານຕອບວ່າ ອັນນີ້ ຂ້າພະເຈົ້າຈະໃຫ້ລັກສະນະສ່ວນຕົວ ຄັນວ່າສະມາຄົມນັກຣົບເກົ່າລາວແລ້ວຄົງມີພຽງແຕ່ອັນດຽວ ພວກເຮົາຖືວ່າການຈັດຕັ້ງຂອງກອງທັບແມ່ນອັນດຽວກັນ ພຽງແຕ່ພວກເຮົາແຍກໜ່ວຍຣົບຄືໜ່ວຍຣົບພິເສດທີ່ທ່ານເຫັນຢູ່ນີ້ແມ່ນສໍາລັບກໍາລັງພົລຣົບພິເສດເທົ່ານັ້ນ ແລະທຸກເຫລົ່າທັບຈະຕ້ອງໃຫ້ຄວາມຈົງຮັກພັກດີຕໍ່ຊາຕ,ສາສນາ ພ ຣ ະ ມ ະ ຫ າ ກ ະ ສ ັ ຕ ຣ ໌ ແລະກົດໝາຍຣັຖທັມນູນ ທັງນັ້ນພວກເຮົາຖືກົດໝາຍເປັນກົດປົກຄອງດ້ວຍຣະບອບມີປະຊາທິປະໄຕຣ໌ ຄືຫລາຍພັກການເມືອງ ມັນຈຶ່ງມີການແຂ່ງດີແຂ່ງເດັ່ນກັນໃນການບໍຣິຫານປະເທສຊາຕ. ທ່ານນາຍພົລ ທົງລິດ ແລະ ທ່ານນາຍພົລ ວັງປາວ ເອງກໍ່ບໍ່ມີແນວຄິດຈະແຍກພວກເພິ່ນຕໍ່ສູ້ກໍ່ແມ່ນໃນນາມກອງທັບແຫ່ງຊາຕລາວພວກເພິ່ນກໍ່ເຮັດເພື່ອຄົນລາວທັງນັ້ນ. ນັກຂ່າວເຮົາຖາມ ທ່ານ ປໍ ວ່າ ! ການມາຮ່ວມຊຸມນຸມໃນຄັ້ງນີ້ ທ່ານມີຄວາມຄິດເຫັນແນວໃດ ຕອບ: ຂ້າພະເຈົ້າຄິດວ່າໂຊກດີ ທີ່ໄດ້ມາຮ່ວມນໍາໝູ່ນາຍແລະພົລທະຫານ ໂດຍສະເພາະແລ້ວນາຍພົລວັງປາວ ແລະນາຍພົລ ທົງລິດ ຂໍໃຫ້ທຸກຄົນເຂົ້າໃຈວ່າ ຄົນລາວທຸກຄົນມີສິດຮັບ >>

ກອງທັບ ຮັບໃຊ້ປະເທສຊາຕນຳກັນ ນອກຈາກນີ້ແລ້ວ ພວກເຮົາຍັງເປັນຫ່ວງນຳພວກຕໍ່ສູ້ຢູ່ທາງເມືອງລາວ ເພາະວ່າພວກນາຍແລະພົລທະຫາຣເຫລົ່ານັ້ນ ຍັງຕ້ອງການສະນັບສະນູນຈາກພວກແນວຫລັງເຊັ່ນພວກເຮົາເປັນຜູ້ໃຫ້ການຊ່ວຍເຫລືອຕລອດມາ. ຢາປົວພະຍາດ ແລະເງິນເດືອນຂອງພວກເຂົາຍັງຂາດເຂີນ ຖ້າລາວບໍ່ຊ່ວຍເຫລືອລາວແລ້ວຈະໃຫ້ຊາຕໃດມາຊ່ວຍເຮົາ ຫລືຈະເປັນຫນີ້ແກວ



ພວກເຮົາຄວນລືມສາ ວ່າພວກຕໍ່ສູ້ກູ້ຊາຕນັ້ນເປັນບ້າ ຂ້າພະເຈົ້າຄິດວ່າພວກເຂົາຍັງມີສະຕິໃນຄວາມເປັນລາວແລະຍັງຮັກຫວງແຫນດິນແດນຂອງລາວຕລອດມາ.

**ລາວວັນນີ້** ຖາມ ທ່ານ ກູ ລາວສູງເປັນນັກຣົບຂອງກອງທັບແຫ່ງຊາຕວ່າ— ທ່ານປະຈຳຢູ່ກອງພັນໃດ ແລະໄດ້ຊັ້ນໃດ ຂໍໃຫ້ບອກໄດ້ບໍ່ນໍ້ (?).

**ກູຕອບ**-ຂ້າພະເຈົ້າບໍ່ຂໍບອກວ່າໄດ້ຊັ້ນໃດນໍ້ ເພາະວ່າທ່ານຄົງຈະຮູ້ແລະເຂົ້າໃຈດີ ອັນຢູ່ບ່າຂອງຂ້າພະເຈົ້ານີ້ ແມ່ນກອງທັບແຫ່ງຊາຕມອບໃຫ້ແລະບໍ່ແມ່ນໄດ້ມາຈາກບ່ອນໃດບ່ອນນຶ່ງ— ຂ້າພະເຈົ້າຢູ່ໃນກອງທັບພາກສອງ ເມືອງລ່ອງແຈ້ງ ແຂວງຊຽງຂວາງ ເຄີຍໄປຮົບຢູ່ ພູຜາທີ ນາຄັງ, ບ້ານບານ, ເມືອງຫມອກ ແລະຜາຂາວ ຈົນໄດ້ອອກຈາກລ່ອງແຈ້ງມາວຽງຈັນທ໌ ໃນປີ ໑໙໗໑ ຮອດສັນຍາສງົບເສິກ ປີ ໑໙໗໓ ໄດ້ມາປະຈຳຢູ່ບ້ານນາໄຮ່ດຽວຈົນຮອດປີ ໑໙໗໕ ຈຶ່ງໄດ້ພາຄອບຄົວຫນີອອກຈາກປະເທດທີ່ເຮົາຮັກແລະເທີດທູນຕລອດການນັ້ນຄືລາວເຮົາ

**ນັກຂ່າວຂອງເຮົາຖາມ** - ທ່ານຍັງຈະມີການຕໍ່ສູ້ຢູ່ບໍ່ (?) **ກູຕອບ**: ການຕໍ່ສູ້ເພື່ອອິສຣະພາບ ເສຣີພາບ ປະຊາທິປະໄຕຍ໌ ຈະຕ້ອງມີຈົນກວ່າຈະໄດ້ຮັບການປົດປ່ອຍ ເອົາສິດທິເສຣີພາບນັ້ນມາສູ່ປວງຊົລທຸກເຜົ່າໃນລາວ ມີສິດເສມີພາບກັນ ແຕ່ວ່າສັງຂານຂອງຂ້າພະເຈົ້າເອງກໍ່ເຖິງຫລັກ ໖໕ ປີແລ້ວ ຄົນລາວຮຸ່ນໃຫມ່ຈະມີອຸດົມການຄືເຮົານັ້ນມັນຂຶ້ນກັບຄວາມສົນໃຈຊາຕທຸກຄົນຈະຕ້ອງໄດ້ຮັບພິຈາຣະນາ ພວກເຮົານີ້ເຖົ້າແກ່ແລ້ວ.





**ນັກຂ່າວຖາມ**- ທ່ານວ່າເສຣີພາບບໍ່ມີນັ້ນ ຂ້າພະເຈົ້າຢາກຖາມວ່າ ຍັງຂາດອັນໃດທີ່ຣັຖບາລລາວຈະຕ້ອງໃຫ້ມີ ແລະພວກທ່ານຕ້ອງການຫຍັງ ?

**ກູຕອບ** - (໑) ຣັຖບາລ ສ.ປ.ປ.ລາວ ຈະຕ້ອງໃຫ້ມີຫລາຍພັກການເມືອງ

(໒) ສະພາ ສ.ປ.ປ.ລາວ ຈະຕ້ອງຮັບຮູ້ສິດທິພື້ນຖານການດຳຣົງຊີວິດແລະສິດທິຈັດຕັ້ງພັກການເມືອງຕາມຣະບອບປະຊາທິປະໄຕຍ໌.

(໓) ຣັຖສະພາ ແລະ ຣັຖບາລ ສ.ປ.ປ. ລາວ ຈະຕ້ອງໃຫ້ພັກການເມືອງອື່ນ ໆ ສາມາຖລົງແຂ່ງຂັນການເລືອກຕັ້ງທົ່ວໄປ ແລະໃຫ້ປະຊາຊົນມີສິທເລືອກເອົາພັກການເມືອງທີ່ຕົນເອງມັກແລະປາຖນາ ແບບມີສິດທິເສຣີພາບ ປະຊາທິປະໄຕຍ໌.









(໔) ໃຫ້ກຳລັງຂອງຕ່າງຊາຕ ຄືວຽດນາມຕ້ອງຖອນຫນີອອກຈາກລາວໃຫ້ຫມົດ.

(໕) ໃຫ້ອົງການສຫະປະຊາຊາຕ ແລະ ອົງການເລືອກຕັ້ງຂອງລາວເປັນຜູ້ຄວບຄຸມແລະໃຫ້ຄວາມຍຸຕິທັມຂອງທຸກພັກຝ່າຍການເມືອງ.

(໖) ຫວງໃຫ້ ຣັຖບາລ ສ.ປ.ປ.ລາວ ຮັບຮູ້ຄົນລາວຢູ່ຕ່າງປະເທສ ມີສິດເທົ່າທຽມກັບຄົນລາວຢູ່ພາຍໃນປະເທສ ແລະໄປມາຫາສູ່ >>

ກັນໄດ້ໂດຍເສລີ.

(ກ) ຣັຖບາລ ສ.ປ.ປ.ລາວ ຈະຕ້ອງຍຸດຕິການເປັນປໍຣະປັກ ແລະເຂົ້າໃຈຜິດຕໍ່ຄົນລາວຢູ່ຕ່າງປະເທສ ແລະພາຍໃນປະເທສ ທີ່ຢາກໃຫ້ມີຫລາຍພັກການເມືອງ.

(ຊ) ພັກປະຊາຊົນ ປະຕິວັດລາວຕ້ອງເປີດປະຕູກວ້າງເອົາພັກການເມືອງອື່ນທີ່ເຫັນວ່າຢາກມີຄວາມປອງດອງຊາດ ແລະຊ່ວຍຊຸກຍູ້ໃນການສ້າງສາປະເທສຊາດນໍາກັນ.

(ຍ) ຕ້ອງຍຸຕິ ຄວາມອາລາດບາດຫມາງກັນ ບໍ່ວ່າທາງກົງແລະທາງອ້ອມທີ່ຜ່ານມາໃນອະດີດ.

(໑໐) ພັກປະຊາຊົນ ປະຕິວັດລາວຕ້ອງຮ່ວມມືກັບທຸກພັກການເມືອງ ເຫັນຜົລປະໂຍຊຂອງຊາດ ຫລາຍກວ່າຂອງພັກ.

ນັກຂ່າວ ຂໍຂອບໃຈນໍາ ທ່ານ ກູ ຫລາຍໆ ທີ່ໄດ້ໃຫ້ຄໍາສເນີ ແລະມີອຸດົມການຊາດສູງ ຄິດວ່າຈະຫາຄົນມີແນວຄິດຊາດຄືທ່ານນີ້ຍາກ ເຖິງວ່າທ່ານເປັນຊົນເຜົ່າລາວສູງ ແຕ່ວ່າທ່ານຍັງມີຫົວຊາດນິຍົມຫລາຍກວ່າຄົນໃດຄົນນຶ່ງອີກ ຂອບໃຈ ລາກ່ອນ ແລະໂຊກດີ: ມອນທົນ ລາຍງານ.

## ຊາຍຊາດເສືອ

ເກີດເປັນຊາຍ ຊາຍຊາດເສືອ
ຕ້ອງໄວ້ລາຍ ຈະເກງຫລື
ສໍ່າຄວາມຕາຍ ວາຍຊີວີ
ເກີດມາສູ້ ສູ້ຢ່າງເສືອ
ເພື່ອສັກສີ ແມ່ນຊີພນີ້
ຈະສລາຍ ບໍ່ຕ່າຍພົລ
ອັນສືບດົນ ຖິ່ນຂອງລາວ
ເຮົາຕ້ອງຮັກ ທຸກຄົນສມັກ
ນອບນ້ອມ ຍອມຖວາຍຕົນ
ຫາກສັດຣູ ລຸ່ຍຮຸບບ້ານ
ຜານປວງຊົນ ລາວທຸກຄົນ
ຂໍຢືນສູ້ ສູ້ບໍ່ໜີ
ຊີພຈະດັບ ຫຍັບຄາຕີນ
ດິນລາວນີ້ ກໍ່ຍັງດີ >>







ກວ່າພັດພີ ເຮົາສືບຊື່
ຕົວເຮົາຕາຍ ຄົນທົ່ວໄປ
ເຮົາຊູລື ລາວສືບຊື່
ໂລກຈະລື ກ່າວປະນາມ
ເຖິງເຮົານ້ອຍ ດ້ວຍກໍາລັງ
ກໍ່ຍັງສູ້ ດີກວ່າຢູ່
ເຮົາບຮູດບຮູບ ແລະຢຽບຫຍາມ
ຫາກເຮົາພາດ ອາດເຮົາແພ້
ຢ່າງວິດຖານ ນາມຂອງລາວ
ຈະຢືນຍົງ ຢູ່ຍືນນານ
ປືນໃນມື ເຮົາຖືໄວ້
ໃຫ້ໜຽວໜັ້ນ ບໍ່ໄຫວຫວັ່ນ
ຕໍ່ສັດຣູ ຜູ້ຊາວີ
ບຸກເຂົ້າໄປ ຍິງລົງໄປ
ໄລ່ໂຈມຕີ ປາບໄພຣີ
ບໍ່ໃຫ້ສີ້ນ ແຜ່ນດິນລາວ

## ເພງ ໒໓ ມີນາ

**ທີ່ ໒໓ ມີນາ** ເປັນວັນດີເລີດ
ເປັນວັນກໍາເນີດ ແຫ່ງກອງທັພລາວ
ເຫລົ່າທະຫານ ພ້ອມພຽງປອງດອງທຸກເຫລົ່າ
ສລອງທັພລາວ ວັນທີ່ ໒໓ ມີນາ
**ເຮົາ ເຫລົ່າທະຫານ** ຂໍນ້ອມສະນານຕໍ່ຊາດ
ທຸກເຫລົ່າອົງອາຈ ເຂັ້ມແຂງກ້າຫານ
ທະຫານເຮືອ ສູ້ໂດຽບໍ່ເລືອກໜ້າ
ປ້ອງກັນອານາ ນ່ານນໍ້າຂອງລາວ
**ທະຫານບົກ** ກໍ່ຈະຍົກກອງພົລເຂົ້າກັ້ນ
ອ້າຟັນສັດຣູ ທີ່ມາຮຸກຣານ
ຂືນເຂົ້າມາ ຜືນແຜ່ນດິນຕ້ອງແຕກລະນາວ
ສູ້ຢ່າງເລືອດລາວ ຫລັ່ງເລືອດອາບດິນລະເລງ
**ເຫລົ່າທະຫານອາກາສ** ກໍບໍ່ຫວາດຫວັ່ນ
ສຽງປືນສະນັ່ນ ບໍ່ໃຫ້ໃຜ..ມາຂົ່ມເຫັງ
ເທິງອາກາສ ຂໍຕໍ່ສູ້ຢ່າງເລືອດນັກເລງ
ບໍ່ຫວັ່ນເກງ ຊີວາຈະມ້ວຍມອດໄປ
ສາມເຫລົ່າທັພ ຈະເອົາຊີວິດ ປະກັນຕໍ່ຊາດ
ສາສນາຖວາຍຣາຊ ບໍ່ໃຫ້ສູນ
ມະຫາກະສັດ ອີກທັງຣັຖທັມມນູນ
ຊ່ວຍກັນເທີດທູນ ຈົ່ງໄພບູນຢູ່ສຖາພອຣໄປ

# ເຈົ້າພົບສົມສວາດ ເລັ່ງສວັດ

ໂດຍ ທີສົມພິຍາ ບຸນມີລັດນີ (ຂ່າວລາວ)






ໃນໂອກາດໄດ້ເຂົ້າພົບ ທ່ານສົມສວາດ ເລັ່ງສວັດ ເປັນການສ່ວນຕົວໃນຄັ້ງນີ້, "ຂ່າວລາວ" ໄດ້ຍົກຄຳຖາມຕໍ່ທ່ານຫລາຍຂໍ້ ຕາມທີ່ເວລາມີໃຫ້ ຊຶ່ງ "ຂ່າວລາວ" ກໍ່ໄດ້ນຳເອົາຄຳຕອບຂອງ ທ່ານມາລົງໃຫ້ຜູ້ອ່ານຊາບນຳກັນ ແລະວິໃຈເອົາຕາມທີ່ຄວນ. ທີ່ສົມພິຍາ ບຸນມີລັດນີ ຮອງ ບ.ກ. "ຂ່າວລາວ" ພວກສຳພາດ ທ່ານ ພັນທອງ ພົມມະຫາໄຊ, ເອກອັກຄະລາຊະທູດລາວ ປະຈຳ ອອສເຕຣເລັຍ ເມື່ອວັນທີ່ ໔ ກໍລະກົດ ໑໙໙໖ ທີ່ຊິດນີ.

**ຖາມ**: ອີງຕາມຄຳເວົ້າຂອງທ່ານນາຍົກລັດຖະມົນຕີ ຄຳໄຕ ສີພັນດອນ ທີ່ໄດ້ກ່າວຮຽກຮ້ອງໃຫ້ຊາວລາວທີ່ຢູ່ຕ່າງປະເທດກັບເມືອມີສ່ວນປະກອບໃນການພັດທະນາປະເທດນັ້ນຢາກຈະຂໍໃຫ້ອະທິບາຍ ວ່າຈະໃຫ້ພວກເຂົາຊ່ວຍປະກອບສ່ວນໃນດ້ານໃດ ?

**ຕອບ**: ກ່ອນອື່ນໝົດນັ້ນ ຢາກຈະຂໍໃຫ້ພີ່ນ້ອງລາວທີ່ຢູ່ຕ່າງປະເທດ ແລະຖືສັນຊາດອື່ນນັ້ນ ໄດ້ສຶກສາເບິ່ງເສດຖະກິດຂອງລາວໃຫ້ຖີ່ຖ້ວນທີ່ເປັນວ່າເຂົ້າໃຈດີແລ້ວ ວ່າພວກເຂົາພໍ່ຈະຊ່ວຍມີສ່ວນປະກອບໃນດ້ານໃດໄດ້ ແລ້ວຈຶ່ງຕັດສິນໃຈ, ໃຫ້ເຂົ້າໃຈນະໂຍບາຍຂອງລັດຖະບານລາວໃຫ້ດີ, ຈຶ່ງຈະບໍ່ເປັນການເສັຽໃຈຕາມພາຍຫຼັງ.

**ຖາມ**: ຖ້າຫາກປັນຍາຊົນລາວຈາກຕ່າງປະເທດ ກັບເມືອຊ່ວຍປະກອບສ່ວນ, ທາງລັດຖະບານລາວມີນະໂຍບາຍແບບໃດ ເພື່ອໃຫ້ພວກເຂົາມີຄວາມສະດວກໃນການໄປ-ມາ ຢູ່-ກິນ ເຊັ່ນຖື ໔ ສັນຊາດ ?

**ຕອບ**: ທາງລັດຖະບານຍັງບໍ່ມີນະໂຍບາຍທີ່ຈະອະນຸຍາດໃຫ້ຖື ໔ ສັນຊາດ ເພາະວ່າຈະເປັນການຫຍຸ້ງຍາກ ແລະມີບັນຫາໃນດ້ານພັນທະ ຜູ້ທີ່ຈະໄປມີສ່ວນປະກອບຢູ່ລາວນັ້ນ ຕ້ອງຕັດສິນໃຈແນ່ນອນ ວ່າຈະໄປແບບໃດ ? ຖ້າໄປແບບອາສາສະມັກ ກໍ່ຖືວ່າເປັນຄົນຕ່າງຊາດ. ຖ້າຈະໄປ ແບບລາວ ກໍ່ຕ້ອງເປັນລາວ.

**ຖາມ**: ຖ້າຫາກວ່າມີກຸ່ມນັກສຶກສາຮຸ່ນໜຸ່ມນ້ອຍທີ່ຮຽນຈົບ ມີຄວາມຮູ້ຈາກນອກ ຈະໄປແບບອາສາສະມັກ ເພື່ອຊ່ວຍລາວ ແລະກໍ່ເພື່ອວ່າ ພວກເຂົາຈະໄດ້ຮຽນຮູ້ວັດທະນະທັມລາວຕື່ມອີກ. ລັດຖະບານຈະມີນະໂຍບາຍຮັບເອົາແບບໃດ ?

**ຕອບ**: ຖ້າໄປແບບອາສາສະມັກ, ເຮົາກໍ່ມີການຕົກລົງກັນລະຫວ່າງ ລາວແລະປະເທດທີ່ຈະສົ່ງຄົນໄປຢູ່ແລ້ວ.

**ຖາມ**: ຖ້າຜູ້ອາວຸໂສລາວຢູ່ຕ່າງປະເທດທີ່ໄດ້ຮັບເບັ້ຍບຳນານຕໍ່ ຈະເປັນໄປໄດ້ບໍ່ ?

**ຕອບ**: ສຳລັບຄຳຖາມນີ້ກໍ່ເຊັ່ນດຽວກັນ, ພວກເພິ່ນຈະຕ້ອງຢູ່ ແບບຄົນຕ່າງດ້າວ, ເສັຍຊ່ວຍແບບ ຕ່າງດ້າວ ປີລະບໍ່ເທົ່າໃດໄປສາກ່ອນ, ແຕ່ນີ້ ເປັນພຽງກົດໝາຍໃນປັດຈຸບັນ, ພາຍໜ້າ ອາດຈະ ມີນະໂຍບາຍປ່ຽນແປງໄປຕາມສະຖານະການ.

**ຖາມ**: ເປັນຫຍັງ ຄ່າໂດຍສານພາຍໃນປະເທດລາວສຳລັບຄົນລາວມາຈາກຕ່າງປະເທດ ຈຶ່ງແພງກວ່າຄົນລາວທົ່ວໄປ ໔ ເທົ່າ ? ປະເທດອື່ນໆ ເຂົາຍັງເສັຽຄ່າໂດຍສານລາຄາດຽວໝົດທຸກຄົນ ບໍ່ວ່າຈະເປັນໃຜ ແລະມາຈາກໃສ ?

ຄຳຖາມ ຂໍ້ນີ້ ທັງທ່ານ ລັດຖະມົນຕີ ແລະທ່ານທູດ ໄດ້ຮ່ວມກັນອະທິບາຍວ່າ: ອັນຄວາມເປັນຈິງແລ້ວ ຄ່າໂດຍສານທີ່ຕັ້ງອັດຕາໄວ້ນັ້ນ ແມ່ນເປັນຄ່າໂດຍສານສຳລັບທຸກ ໆຄົນ, ແຕ່ວ່າ, ເນື່ອງຈາກວ່າເສດຖະກິດຂອງເຮົາຍັງບໍ່ໝັ້ນຄົງ, ປະຊາຊົນມີລາຍໄດ້ຕ່ຳ ທີ່ບໍ່ສາມາດຈະເສັຍຄ່າໂດຍສານທີ່ຕັ້ງໄວ້; ດັ່ງນັ້ນ ທາງລັດຖະບານ ແລະທາງບໍລິສັດຂົນສົ່ງ ຈຶ່ງຮັບເສັຽໃຫ້ເຄິ່ງນຶ່ງ. ແຕ່ສຳລັບຜູ້ທີ່ມາຈາກຕ່າງປະເທດທີ່ມີເສດຖະກິຈດີ, ລາຍໄດ້ສູງ, ທາງລັດຖະບານຈຶ່ງບໍ່ມີຄວາມສາມາດທີ່ຈະຫລຸດລາຄາໃຫ້ ເທົ່າກັບຄົນພາຍໃນບໍ່ໄດ້, ເປັນການເອົາຄ່າໂດຍສານເຕັມ ຈາກທາງນຶ່ງໄປຊົດເຊີຍອີກທາງນຶ່ງ ຊຶ່ງຫລາຍໆ ປະເທດເຂົາກໍ່ເຮັດຄ້າຍໆກັນ !.... >>

**ຖາມ**: ຢາກຈະຂໍຖາມເຣື່ອງອອກວີຊາໃຫ້ເຂົ້າເມືອງລາວວ່າຈະອອກອະນຸຍາດໃຫ້ດົນກ່ວາເທົ່າທີ່ຜ່ານມາໄດ້ບໍ່?

**ຕອບ**: ເຣື່ອງອອກວີຊານີ້ ມີຫລາຍປະເພດ ແລະມີຫລາຍຂໍ້ທີ່ຕ້ອງອະທິບາຍ. ຂໍຍົກໄວ້ພາຍຫຼັງແລ້ວຈະນຳເອົາຣາຍລະອຽດມາໃຫ້ທ່ານໄດ້ເຂົ້າໃຈ. "ຂ່າວລາວ" ມີເວລາພົບທ່ານສົມສວາດ ເລັ່ງສະວັດ ປະມານ ໑໕ ນາທີເທົ່ານັ້ນ ເນື່ອງຈາກວ່າ ທ່ານ ແລະ ຄນະ ຈະຕ້ອງຕຽມຕົວອອກເດີນທາງໄປສະນາມບິນ ເພື່ອຕໍ່ໄປ ຕາສມາເນັຽ Tasmania. "ຂ່າວລາວ" ຈຶ່ງໄດ້ອຳລາ.

## ໂຄງມະຫາສິບທຸມາລີ

ດອກນຶ່ງເປັນສຳດ້າວ ດາຣາ
ດອກບໍ່ເຫັນຫອມມາ ຣ່ວງເຮົ້າ
ດອກນຶ່ງເປັນຈອມຜາ ທັນງ່ອມ
ດອກສິ່ງໃດນັ້ນເຈົ້າ ຣ່ອນຜ້າຍເວຫາ

ດອກນຶ່ງຫອມອ່ອນພັຽງ ໃນຫວງ
ແຕເຕືອດແຕແຕດວງ ເຕື່ອຕັ້ງ
ດອກນຶ່ງຍ່ອມເປັນກວງ ສະນາດ
ໄກອາດລ້ຳລອຍຣ້ຳ ຈຶ່ງໄດ້ເຊີຍຊົມໆ

ດອກນຶ່ງເປັນຊາດເຊື້ອ ໃນຫມອງ
ທັດບໍ່ເປັນລອຍກອງ ກ່ຽວກ້ານ
ດອກນຶ່ງຄືຈັນທອງ ທ້າງເຕົ່າງ
ຫາດດວງມີໃນບ້ານ ສິ່ງນັ້ນລືສາຍໆ

>>> ຈາກຫນ້າສີເຈືອງ <<<

## ແນວໂຮມລາວ - ວຽດ

ອ່ານອອ ວົງແກ້ວ ລາຍງານ



ໃນວັນທີ ໒໔ ກໍຣະກະດາ ໑໙໙໕ ທາງຄນະສູນກາງແນວລາວສ້າງຊາດ ກັບ ແນວໂຮມວຽດ ໄດ້ຕົກລົງເຊັນສັນຍາວ່າດ້ວຍການຮ່ວມມືກັນທຸກດ້ານ. ລາວວັນນີ້ ແພນກຂ່າວໃຫ້ພັກລາວກ້າວຫນ້າ ໄດ້ເຂົ້າສັງເກດການ ໃນການລົງນາມສັນຍາ ທົບທວນຄືນຂໍ້ຄົງຄ້າງຂອງ ພັກແນວລາວສ້າງຊາດ ແລະ ແນວໂຮມວຽດນາມ ໂດຍການນຳພາຂອງ ທ່ານ ອຸດົມ ຂັດຕິຍະ ປະທານສູນກາງ ແລະ ທ່ານ ດາວວັນຕຣີ ທັງສອງໄດ້ຕົກລົງຫຼາຍຂໍ້ມາຕຣາ ທີ່ຈະມີການພົວພັນ ແບບອ້າຍນ້ອງ ລາວ/ວຽດ ຢ່າງບໍ່ຢຸດຢັ້ງ ແນວໂຮມແຕ່ລະປະເທດຈະສ້າງສາຍພົວພັນທາງດ້ານເສຖກິຈ. ການເຄື່ອນໄຫວທຸກຢ່າງຈະລາຽງານແລກປ່ຽນໃຫ້ກັນຊາບຕໍ່ສູນກາງທັງສອງ ມີແຂກທັງລາວແລະວຽດນາມມີສ ເຂົ້າຮ່ວມຢ່າງຫຼວງຫຼາຍ ພ້ອມດຽວກັນນັ້ນຍັງມີການເລົ່າປະວັດສາດການພົວພັນ ສູ້ຮົບກັບພວກຝຣັ່ງ/ອະເມຣິກາ ຕໍ່ມາກໍ່ໄດ້ຖິ້ມປະອ້າຍໃຫຍ່ ໂຊວຽດ ຫັນຄືນມາຫາຝ່າຍໂລກເສຣີ ຕາມຕລາດນາຍທຶນນິຍົມ. ນັກຂ່າວລາວວັນນີ້ ໄດ້ຖາມສະມາຊິກແນວລາວສ້າງຊາດທ່ານນຶ່ງວ່າ **ຖາມ**: ຄວາມຫມາຍຂອງແນວລາວສ້າງຊາດແມ່ນມາຈາກຈິດໃຈຂອງຄົນລາວແທ້ບໍ່?

**ຕອບ**: ແນວລາວຮັກຊາດ, ແນວລາວສ້າງຊາດ, ແນວໂຮມ ແມ່ນແນວຄິດການເມືອງມາຈາກມູນເຊື້ອຂອງລາວຜູ້ອົງອາດກ້າຫານແທ້ ແລະມາຈາກຈິດໃຈຂອງຄົນລາວໂດຍແທ້.

**ຖາມ**: ຂໍຖາມອີກວ່າ ທ່ານວ່າສ້າງຊາດ ເປັນຫຍັງຈຶ່ງໃຫ້ຊາດແຕກແຍກກັນ ເມື່ອພວກທ່ານ ຄນະພັກແນວໂຮມ ຄືແນວລາວສ້າງຊາດ ກັບ ພັກປະຊາຊົນປະຕິວັດລາວ ເຂົ້າມາຮ່ວມຣັຖບານຣາຊອານາຈັກແລ້ວຈັບບັນດາຄົນລາວຜູ້ຮັບໃຊ້ຊາດໄປຂ້າຖິ້ມ ອັນນີ້ແມ່ນຫມາຍຄວາມວ່າຈັ່ງໃດ? **ຕອບ**: ພັກເຮົາ ແລະ ພັກປະຊາຊົນປະຕິວັດລາວ ບໍ່ໄດ້ຂ້າ ແມ່ນຄົນລາວເທິງ ແລະຄົນລາວຜູ້ຮັກສາສູນສັມມະນາ ເອົາບໍຣິເທົ່າເຖິງການຕ່າງຫາກ ຖ້າຫາກພວກເພິ່ນບໍ່ມີແນວຄິດຕ້ານ ພັກ/ຣັຖ ແລ້ວ ແລະອົດທົນຄືພວກເຮົາຢູ່ໃນດົງໃນປ່າ ຣອດຍາມປົດປ່ອຍມາເຖິງຄອບຄົວຄົງຈະບໍ່ຕາຍດອກ.

**ຖາມ**: ພັກລາວກ້າວຫນ້າ ພວກທ່ານຄິດວ່າແນວໃດ ຖ້າເອົາເຈົ້າຢາກມາຕັ້ງສູນກາງໃນນະຄອນວຽງຈັນ ແລ້ວສົ່ງສະມາຊິກສະມັກໃນການແຂ່ງຂັນເປັນຜູ້ແທນ ຫລື ວ່າເປັນສະມາຊິກນຳຄນະຣັຖບານໂດຍເສຣີ ພວກທ່ານຈະມີການຄັດຄ້ານບໍ່? **ຕອບ**: ຕາມແນວຄິດຂອງຂ້າພະເຈົ້າແລ້ວບໍ່ຂັດຂ້ອງ ຖ້າຫາກມີຈິດໃຈຊາດແທ້ ແລະຕ້ອງປະຖິ້ມສັນຊາດອື່ນແລ້ວມາຮ່ວມໃນວົງສາຄະນາຍາດລາວໂດຍແທ້ຈິງ ພວກເຮົາກໍຍິນດີ ຖ້າຈິງໃຈ ແລະເອົາສອດຄ່ອງກັບອຸດົມການຂອງພັກ/ຣັຖ ຂອບໃຈ ./









## ເສັ້ນທາງສູ່ ວັນຣະລຶກ ເຖິງນັກຮົບລາວ

ໂດຍ: ຈິນາຍໂມ້

ຂ້າພະເຈົ້າໄດ້ຍິນສຽງ ໂທຣສັພ ກຣິງ ກຣິງ ກຣິງ ເຖິງສາມບາດນອນ ພໍຫລັບພໍດີ ບໍ່ ແມ່ນໃຜສັ່ງມາໂທຣມາເດິກ ດື່ນທ່ຽງຄືນປານນີ້ ຫລືວ່າ ແມ່ທາງບ້ານບໍ່ສະບາຍ ບໍ່ ! ຄິດສົງສັຍເບີ່ງງົງໆຫາວໆ.. ອາໂລ ໃນປາກ ຊ່ຽວໂຕເຮັດຫຍັງຢູ່ (?) **ຫມູເບົ້າ ຖານ ຈິນາຍໂມ້**

## ຂ່າວກິຈກັມຕ່າງ ໆ ຂອງ






ຊາດ ພິລາດ ອາດຫານ

ຕ້ອງການຜູ້ນຳຄົນເກົ່າ





ເຮົານອນແລ້ວ ດຽວນີ້ມັນກໍ່ ມີ ໂມງເຊົ້າ ໃນຕອບ ເຮົາຂໍໂທສນຳເພາະມີວຽກຢາກຊວນໄປສເລີມສລອງ ວັນນັກຮົບເກົ່າລາວ **ຫມູເບົ້າຖານ** ໄປດີ່ເຮົາກໍ່ດີໃຈ ທີ່ໂທມາຫາເຮົາ **ຈິນາຍໂມ້ຕອບ** ຈັ່ງຊັ້ນເຮົານັດພົບ ກັນຢູ່ທີ່ຊານ ຟຣານຊິສໂກ ເດີ ເວົ້າແລ້ວກໍ່ກັບໄປນອນ ຄືນອີກຈັກ ໔ ຊົ່ວໂມງກໍ່ຈະໄດ້ລຸກໄປທຳງານຕາມເຄີຍ

ພວກເຮົາເປັນນັກຮົບ ແລະທັງເປັນສະມາຊິກ ແນວໂຮມປົດປ່ອຍກູ້ຊາດ ຍາມໃດຊາດຕ້ອງການຍາມນັ້ນຕ້ອງເຮັດຕ້ອງທຳທຸກຢ່າງໂດຍບໍ່ມີຄວາມຈົ່ມວ່າອິດເມື່ອຍແຕ່ຄ່ຳດຽວ.

ພວກເຮົາຕ້ອງທຳທຸກຢ່າງເຮັດໃຫ້ມວນຊົນມີຄວາມສຳນຶກ ແລະເຂົ້າໃຈວ່າ "ນັກຮົບເກົ່າ" ເຮົາແມ່ນຜົລເມືອງດີຂອງຊາດໃນຖັນແຖວກອງທັບແຫ່ງຊາດ ພວກເຮົາເຄີຍ ແລະໄດ້ເສັຽສລະເພື່ອຊາດ ເສັຽຊີວິດໃນການປົກປ້ອງປະເທສຊາດ ມີຄວາມອົດທົນຕໍ່ສູ້ມາໄດ້ຢ່າງອົງອາດກ້າຫານ ເປັນທະຫານໃນກອງທັບມີຣະບຽບວິນັຍດີ ມີການນຳພາອັນຖືກຕ້ອງຂອງວິຊາທີ່ໄດ້ຮຽນມາ ພ້ອມດຽວກັນບັນດາຄຣູບາອາຈານສິດສອນໃຫ້ພວກເຮົານັບຖືແລະເປັນຜົລເມືອງດີຂອງຊາດ ຈຶ່ງນັບໄດ້ວ່າເປັນກຸ່ມຊົນທີ່ມີກຽດ ແລະສັກສີ ທີ່ຈະຕ້ອງທຳທຸກຢ່າງບໍ່ໃຫ້ໂລກເຂົາຫລົງລືມ ແລະບໍ່ໃຫ້ຊາດຫລົງລືມໄດ້, ດັ່ງນັ້ນ, ພວກເຮົາຈະຕ້ອງຮວມກັນ ຮັກກັນ ເຮັດໃຫ້ຄວາມສຳຄັນດີ "ວັນຣະລຶກເຖິງນັກຮົບເກົ່າລາວ" ທີ່ໄດ້ກ່າວມາແລ້ວນີ້ ປະກົດເປັນຈິງແລະຄົງຢູ່ຕລອດໄປໃນສະມາຄົມນັກຮົບເກົ່າລາວເຮົາ, ຄືດ້ວຍການມີຄວາມເບິ່ງແຍງ, ແລະຊ່ວຍເຫລືອຊຶ່ງກັນແລະກັນໃນຍາມສຸກເສີນທີ່ຕົນເອງບໍ່ມີຄວາມສາມາດຊ່ວຍຕົນເອງ: ການປະສົບເຄາະກັມ ຫລືອັນວ່າອັນຕລາຍຕ່າງໆ ໃນຍາມເຖົ້າແກ່ສະລາໄປມາຫາສູ່ກັນບໍ່ໄດ້, ການເຖິງມໍຣະນະກັມ ຫລືເສັຽຊີວິດ ພວກເຮົາຕ້ອງເບິ່ງແຍງກັນ ດັ່ງນັ້ນເສັ້ນທາງສູ່ວັນຣະລຶກເຖິງນັກຮົບລາວ ແມ່ນສຳຄັນ/

# ເຈົ້າຟ້າຊາຍ ສຸຣິວົງ ຢ້ຽມຢາມ ການາດາ

ບົວພັນ ນະຄອນທັນ (ລາຍງານຂ່າວ)

ຝ່າຍກອງບັນນາທິການຂອງເຮົາ ລາວວັນນີ້ ໄດ້ຮັບຂ່າວລາຍງານຈາກ ບົວພັນ ແຈ້ງມາວ່າ ນັບຕັ້ງແຕ່ເດືອນສິງຫາ ວັນທີ່ ໙ ຫາ ໒໕ ໑໙໙໕ ນີ້ ສະເດັດເຈົ້າຟ້າຊາຍ ໂຊຣິຍາວົງ ສວ່າງ ພ້ອມດ້ວຍພຣະຊາຍາ ແລະ ສເດັດເຈົ້າຟ້າຊາຍ ສຸຣິວົງ ສວ່າງ ມີຜູ້ຕິດຕາມຈຳນວນນຶ່ງຈະເດີນທາງ ປາຣີສ ປະເທສຝຣັ່ງເສດ ມາເຖິງ ນະຄອນມົງເຣອາລ ປະເທສການາດາ ເພື່ອຮ່ວມພິທີທຳບຸນ ແລະຖວາຍພຣະຣາຊບາສີ ຮ່ວມກັບປະຊາຊົນລາວໃນຂົງເຂດດັ່ງກ່າວ ໃນຕອນເຊົ້າຂອງວັນເສົາ ທີ່ ໑໐ ສິງຫາ. ໑໙໙໕ ໄດ້ມີການທຳບຸນດັກບາດທານ ຫາບັນດານາຍແລະພົລທະຫານ. ຕຳຣວຈ. ແລະບັນດາຂ້າຣາຊການ ທີ່ໄດ້ລ່ວງລັບໄປໃນຄຸກຄຸມຂັງໃນສູນສັມມະນາພິເສດສຸດແນ່ນເພື່ອຖວາຍກອງບຸນຫາອົງສົມເດັດພຣະປິຍະຫັນນິກຣາດ ສີສວ່າງວົງສ໌, ພຣະບໍຣົມຂັດຕິຍະສຸຣິຍະວົງສາ ສີສວ່າງວັທນາ ພ້ອມດ້ວຍອົງອັກຄະມະເຫສີ ຄຳພຸຍ ຕລອດເຖິງ ອົງຄົນະວົງສານຸວົງສົມເດັດເຈົ້າຟ້າຊາຍວົງສວ່າງ ອົງມົງກຸດຣາຊກຸມບານ ແລະອື່ນ ໆ. ການຈັດງານແລະທຳບຸນຄັ້ງນີ້ໂດຍການນຳພາຂອງທ່ານ ສຸນທະລາ ນົນດຣີວົງ ແລະຄນະສຫະພັນສິດທິມະນຸດຊົນລາວຮ່ວມກັບ ໑໓ ສະມາຄົມແລະຜູ້ຊົງຄຸນນະວຸດທິ, ຊຶ່ງມີທ່ານປັ້ຊາ ຕຣີຈັນ ເປັນຫົວໜ້າຄນະຈັດງານຂຶ້ນທີ່ມົງເຕຼອາລ. ພວກຄນະບໍ່ເຫັນດີນຳນີແຕ່ ສະພາການຄ້າລາວ-ການາດາ ທີ່ມີການພົວພັນທາງດ້ານການຄ້າກັບຣັຖບາລວຽງຈັນ ປັດຈຸບັນ ຢ້ານຈະຂັດຕໍ່ຜົລປະໂຍດຕໍ່ການດຳເນີນງານທັງໆທີ່ຄນະກໍ່ເຄີຍໄດ້ຮັບການສນັບສນູນສົ່ງຊົນໃຫ້ໄດ້ໄປຮຽນຢູ່ຕ່າງປະເທສ











ພາບປະກອບຂ່າວກິຈການໃນງານຕ້ອນຮັບສເດັດທັງສາມ ໃນຄ່ຳຄືນຂອງວັນທີ່ ໑໐ ສິງຫາ ໑໙໙໕ ທີ່ມົງເຕຼອາລ



ໃນສມັຍຣັຖບາລເກົ່າ ແລະບໍ່ຄວນຈະຖືວ່າການໄປຮ່ວມໃນງານສັງສັນກໍ່ຖືວ່າເປັນງານຂອງຄົນລາວຈັດຂຶ້ນ ຂ້າພະເຈົ້າເຂົ້າໃຈວ່າ ສເດັດທັງສາມມາໃນນາມຄົນລາວຖືວ່າທຸກຄົນຄວນຮັກແພງກັນ. ຣາຊວົງລ້ານຊ້າງຮົ່ມຂາວບໍ່ວ່າຍາມໃດກໍ່ຍັງມີຄວາມເປັນຫ່ວງເປັນໃຍນຳຄວາມສຸກທຸກຂອງບ່າວໄພ່ຣາຊດອນ ແລະພຣະອົງຄ໌ຍັງບໍ່ເຄີຍຈະໜີອອກຈາກປະຊາຊົນຈົນໄດ້ສິ້ນພຣະຊົນໃນສູນກັກຂັງທີ່ຊຳເໜືອ ຕາມຂ່າວແຈ້ງໃຫ້ຊາບອີກວ່າຕອນບ່າຍຂອງວັນທີ່ ໙ ສິງຫາ ໑໙໙໕ ສະເດັດແລະຄນະໄດ້ເດີນທາງມາເຖິງ ສນາມບິນ MIRABEL ນະຄອນ ມົງເຕຼອານ ແລະໄດ້ຖືກຮັບຕ້ອນສເດັດຈາກຣັຖບາລກາງແລະຣັຖບາລແຂວງຂອງປະເທດການາດາ ຕລອດເຖິງປະຊາຊົນລາວທີ່ໄດ້ມາຕັ້ງຖິ່ນຖານຢູ່ໃນປະເທສດັ່ງກ່າວຢ່າງອົບອຸ່ນ. ເຮົາຈະສັງເກດເຫັນໄດ້ວ່າຕາມສອງຟາກເສັ້ນທາງຜ່ານຂອງຂະບວນແຫ່ສເດັດໄດ້ມີຊາວລາວແລະຊາວການາດຽນພາກັນຢືນລໍຄອຍເພື່ອໃຫ້ການຕ້ອນຮັບພ້ອມກັນໂບກທຸງຊາຕລາວຊ້າງສາມສຽນ. ທຸງປະຈຳພຣະຣາຊວັງຫຼວງລ້ານຊ້າງ ແລະທຸງຊາດການາດາຢ່າງຄັບຄັ່ງອົ່ງອໍ. ບາງຄົນຈຳນວນຫຼາຍໄດ້ຖືຊໍ່ດອກໄມ້ເຊິ່ງສະແດງເຖິງຄວາມຈົງຮັກພັກດີຕໍ່ພຣະເຈົ້າລ້ານຊ້າງຮົ່ມຂາວຂອງລາວເຮົາຢ່າງບໍ່ມີວັນລືມໄດ້. ຕໍ່ໜ້າສະພາບການດັ່ງກ່າວນັ້ນບັນດາແຂກຜູ້ສຳຄັນທີ່ເປັນເຈົ້າຂອງປະເທດແລະຊາວລາວຫຼາຍພັນຄົນໃນບໍຣິເວນສະຖານທີ່ຕ້ອນຮັບຂອງສະນາມບິນດັ່ງກ່າວນັ້ນ, ເດັດເຈົ້າຟ້າຊາຍ ສຸຣິວົງສວ່າງ ກໍ່ໄດ້ຊົງກ່າວຄວາມປາຣົບສັ້ນ ໆວ່າ

>>

" ພວກຂ້າພະເຈົ້າມີຄວາມປິຕິຍິນດີ ມີຄວາມດີອົກດີໃຈ ທີ່ໄດ້ເຫັນບັນດາທ່ານທັງຫຼາຍມາໃຫ້ການຮັບຕ້ອນ ຢ່າງອົບອຸ່ນ ແລະເຮັດໃຫ້ພວກເຮົາໄດ້ມີໂອກາດມາພົບປະຢ້ຽມຢາມຖາມຂ່າວພໍ່ແມ່ພີ່ນ້ອງປະຊາຊົນທຸກເຜົ່າພັນໃນປະເທດການາດາ ເພື່ອເປັນການສ້າງຄວາມຮັກແພງແລະໄດ້ມີໂອກາດມາທຳບຸນກິນທານ ຮ່ວມກັບພໍ່ແມ່ປະຊາຊົນລາວ ແລະຖືໄດ້ວ່າເປັນການສ້າງຄວາມສາມັກຄີ ຮັກແພງກັນໄດ້ຢ່າງແໜ້ນໜາ ຄືສະແດງເຖິງການເຕົ້າໂຮມລາວໃນຂັ້ນຕໍ່ໄປ "

ຫຼັງຈາກນັ້ນສະເດັດ ແລະຄະນະກໍ່ໄດ້ສະເດັດໄປພັກຢູ່ທີ່ສະຖານທີ່ຕ້ອນຮັບ, ຊຶ່ງຄະນະຈັດທຳໄດ້ຕຽມໄວ້ແລ້ວ ແລະມີລັກເອກກະລັກຂອງຊາດລາວດ້ານຮີດຄອງປະເພນີອັນເກົ່າແກ່ດັ້ງເດີມມານັ້ນ.

ຕອນເຊົ້າວັນທີ ໑໐ ສິງຫາ ໑໙໙໓ ທ້ອງຟ້າສີຄາມງາມແຈ້ງແສງສວ່າງທີ່ດວງຕາເວັນໄດ້ດົນບັນດານໃຫ້ມີອາກາດສົດໃສງາມຕາ ພາບ່າວໄພ່ປະຊາຊົນໄດ້ທຳບຸນຕັກບາດ ແລະມີຄົນເຂົ້າຮ່ວມທັງຍິງຊາຍ ນ້ອຍໃຫຍ່ ເຖົ້າແກ່ສະມາຄົມຈາກອົງການຈັດຕັ້ງໃນປະເທດການາດາມາຮ່ວມຫຼາຍກວ່າ ໒໐໐ ຄົນ ທີ່ມາກັນມາຢືນລໍຮັບຕ້ອນສະເດັດທັງສາມ. ເປັນທີ່ໜ້າສັງເກດເຫັນໄດ້ວ່າ ມີປະຊາຊົນຊາວຈີນ, ຂະເມນ, ວຽດນາມ, ໄທຍ໌ ທີ່ເຄີຍໄດ້ເກີດແລະໄດ້ໄປທຳມາຫາກິນຢູ່ພາຍໃຕ້ໃນທີ່ສົມພານຂອງພຣະບາດສົມເດັດພຣະເຈົ້າສີສວ່າງວັດທະນາໃນຣາຊການຂອງພຣະອົງຄ໌ ກ່ອນບ້ານເມືອງຈະໄດ້ຖືກໂຄ່ນລົ້ມຣາຊບັນລັງຂອງພຣະອົງຄ໌ລົງນັ້ນ ກໍ່ຍັງໄດ້ໄປໃຫ້ຄວາມຈົງຮັກພັກດີຕໍ່ທັງສາມສະເດັດດ້ວຍ. ພວກເຂົາເຈົ້າໄດ້ກ່າວຕໍ່ນັກຂ່າວລາວວັນນີ້ວ່າ ພວກເຮົາມາແມ່ນເພື່ອລຳລຶກເຖິງບຸນຄຸນທີ່ປະເທດຊາດລາວມີຕໍ່ພວກຂ້າພະເຈົ້າຢ່າງສງົບສຸກຕລອດມາ. ນອກຈາກນັ້ນຊາວອະເມຣິກັນ, ການາດຽນ, ແລະຊາວຝຣັ່ງເສດຜູ້ທີ່ເຄີຍໄປປະຈຳການຢູ່ໃນພຣະຣາຊອານາຈັກລາວ ກໍ່ໄດ້ພາກັນມາຮັບຕ້ອນຢ່າງພ້ອມພຽງກັນ.

ນາງເພັງ ແສງເດືອນ ກ່າວຕໍ່ນັກຂ່າວຂອງເຮົາວ່າ ຂນາດຄົນຊາດອື່ນທີ່ເຂົາເຄີຍໄປຢູ່ເມືອງລາວຍັງໃຫ້ຄວາມຈົງຮັກພັກດີຕໍ່ຣາຊວົງສ໌ລາວ, ບາດວ່າຄົນລາວຕາດຳ ໆບາງຄົນນີ້ນາ ເຫັນວ່າໂຕເກັ່ງກໍ່ເລີຍບໍ່ຍອມຮັບຮູ້ຄວາມເປັນມາຂອງຊາດວ່າ ໂຕເອງແມ່ນໃຜ ! ມາຈາກໃສ ! ເຂົາໄປຮຽນເອົາຄວາມຮູ້ມາຍ້ອນເງິນຂອງຣັຖບາລລາວສມັຍນັ້ນ ດຽວນີ້ລືມບຸນຄຸນຂອງຜູ້ນຳ ພວກນີ້ຕາຍໄປ ພັນກວ່າຊາດບໍ່ຂໍປາຖນາເຫັນໜ້າດອກເພາະພວກບໍ່ມີແນວຄິດສະຕິຊາດ.

◇ ໃນຕອນບ່າຍຂອງວັນດຽວກັນຄະນະຈັດທຳຣາຊຍາສິຫຼວງ ໃຫ້ແກ່ອົງຄ໌ປະທານຄອບຄົວຍາດຕິວົງ ບາງຄົນເມື່ອໄດ້ພົບປະແລະເຫັນແລ້ວກໍ່ນ້ຳຕາໄຫລນອງໜ້າພາໃຫ້ຄວາມດີອົກດີໃຈ, ພ້ອງກໍ່ລຳລຶກເຖິງພຣະບາດສົມເດັດເຈົ້າຟ້າສີສວ່າງວັດທະນາຕອນພຣະອົງຄ໌ຍັງມີພຣະຊົນຢູ່. ຄົນແກ່ແລະໜຸ່ມຍັງໃຫ້ຄວາມຈົງຮັກພັກດີ, ໃນຕອນແລງວັນດຽວກັນຄະນະໄດ້ຈັດງານຣາຕຣີສະໂມສອນຂຶ້ນເພື່ອເປັນສິຣິມົງຄຸນຮ່ວມນຳໄພ່ຟ້າປະຊາຊົນລາວແລະທັງແຂກຕ່າງໆຂອງຊາວການາດຽນ. ແຂກທັງໝົດມີຫລາຍກວ່າ ໒໐໐ ຄົນບັນຍາກາດພາຍໃນງານດັ່ງກ່າວໄດ້ດຳເນີນໄປຢ່າງສງ່າງາມຕາມລາຍການທີ່ຄະນະກັມມະການໄດ້ຈັດໄວ້, ເມື່ອເຈົ້ານາຍທ່ານປີຊາ ຕຣີຈັນ ໄດ້ກ່າວຕ້ອນຮັບເປີດເປັນທາງການແລ້ວກໍ່ໄດ້ຫລອງໃຫ້ອົງຄ໌ປະທານຄອບຄົວພຣະຍາດຕິວົງລ້ານຊ້າງຮົ່ມຂາວຂຶ້ນກ່າວ ຖັດຈາກນັ້ນກໍ່ແມ່ນສະເດັດເຈົ້າຟ້າຊາຍ ສຸຣິວົງສວ່າງ ໄດ້ກ່າວຂອບໃຈແລະໃຫ້ໂອວາດແກ່ແຂກທີ່ມາຮ່ວມເປັນພາສາລາວແລະພາສາຝຣັ່ງຢ່າງສຽງແຈ້ງສົດໃສດີ ຫຼາຍຄົນໄດ້ມາຊົບໃສ່ຫູຜູ້ຂຽນວ່າ " ຕາຍແລ້ວເກີດໃໝ່ " ອັນສຸດທີ່ຈະຫລົງລືມໄດ້. ນອກຈາກນັ້ນສະເດັດເຈົ້າຟ້າຊາຍຍັງອອກຈັບມືຖາມຂ່າວສຸກທຸກນຳຄົນລາວໂດຍມີອະຍາສັຍແບບໄມ້ຕຣີຈິດມິດພາຍກັນເອງ. ຕາມໂຕະຕ່າງ ໆ ຄົນແຂກທີ່ມາຮ່ວມກໍ່ສະແດງຄວາມເຄົາຣົບນັບຖືໂດຍບໍ່ມີທາງຈະຈືດຈາງໄດ້. ທ່ານອາວຸໂສຜູ້ນຶ່ງກ່າວວ່າ ການຈັດງານຄັ້ງນີ້ຖືເປັນຄັ້ງປະວັດສາດຂອງຊາວລາວໃນປະເທດການາດາ ເຊິ່ງພວກເຮົາພັດພາກຈາກບ້ານເກີດເມືອງນອນຂ້າມນ້ຳລຸຍຕົມມາອາສັຍປະເທດທີ -໒ ແລະສຸດທ້າຍກໍ່ແມ່ນປະເທດທີ-໓ ຖ້າບຸນບໍ່ຫລາຍສາຍບໍ່ຍາວກໍ່ຈະບໍ່ໄດ້ພົບເຫັນເຊື້ອຣາຊວົງລາວອີກ ເຫັນແລ້ວຕາຍໄປກໍ່ບໍ່ຄິດຈະເສັຽດາຍຊີວິດອີກ ເພາະພໍໃຈແລະດີໃຈຫຼາຍ

**ຜູ້ໃດລົບລ້າງສະຖາບັນລ້ານຊ້າງຮົ່ມຂາວ ຜູ້ນັ້ນຈະໄດ້ຮັບຄວາມຈິບຫາຍວາຍວອດ ຕລອດຊົ່ວກາລະນານຂອງຊີວິດເປັນຄົນ ຜູ້ໃດສ້າງຄວາມດີຈະບໍ່ມີຄວາມຍາກໃນຊາດນີ້ ແລະ ຊາດໜ້າ ພາໃຫ້ຈເຣີນ !**

ເວລາ ດ.ມື້ອ ໃນງານກໍ່ໄດ້ເຫັນແຂກພາກັນລັ່ງໄຫຼເຂົ້າມາ ໃນນັ້ນມີບຸກຄົນສຳຄັນຫຼາຍທ່ານຈາກກຸ່ມການເມືອງ ເຊັ່ນ ທ່ານ ດຣ.ຄຳໄຫລ ນູນິວົງ ປະທານສຫະພັນສະມາຄົມລາວແຫ່ງປະເທດການາດາ, ທ່ານ ພ.ຕ.ອ. ບຸນມີ ຊະນະນິກອນ ທີ່ປຶກສາຄວາມໝັ້ນຄົງຂອງພັກລາວກ້າວໜ້າ ພ້ອມທັງເປັນສະມາຊິກສະພາສູນກາງພັກ ແລະ ທ່ານ ທອງສວັນຣ໌ ພົງສວັນຣ໌ ປະທານພັກລາວກ້າວໜ້າ ແລະຮອງສະພາປະສານງານລາວເສຣີຊົນສາກົນ ພ້ອມດ້ວຍພັລຍາກໍ່ໄດ້ເດີນທາງມາຮ່ວມເປັນພິເສດໃນງານຂອງຄ່ຳຄືນຄັ້ງນີ້, ທ່ານຄຳບາງ ປະທານພັກລາວເປັນກາງກໍ່ໄດ້ເດີນທາງມາຮ່ວມ ທ່ານ ພ.ດ.ອ. ພາຍ ສຸຂສະວົງສ໌ ທີ່ບິນມາຈາກຣັຖເທັນເນຊີກໍ່ໄດ້ຕິດຕາມສະເດັດມາຮ່ວມ ປະກົດວ່າງານໄດ້ຈົບລົງດ້ວຍຄວາມສງົບຮຽບຮ້ອຍດີ ./.

A ROYAL WELCOME

## LAO ROYAL FAMILY HOSTS GALA RECEPTION

By Sean P. Nelson ( The Asian Reporter



HRH.
Prince Dauphin Sourivong Savang

*About 400 or more Laotians and their families were abuzz with excitement as they greeted the Lao Royal Family to a grand reception for Oregon and Washington Laotian Americans Friday night.*

*His Royal Highness Prince Sauryavong Savang the youngest living son of his Royal Highness of late King Sri Savangvathana of Laos, HRH the late Queen Khamphoui and Brother of the late Crown Prince Dauphin HRH Vong Savang entered the room.*

*accompanying him was the Prince who may one day rule over a new Kingdom of Laos, H.R.H. The Dauphin Prince Sourivong Savang.*

*Although both Princes today are living history, the fate of Laos has yet to be seen before the young heir can assume the Royal Lao Throne.*

*The former King, Queen and Dauphin Prince are widely believed to be dead, but in fact their fate is not known as Pathet Lao last took them to an undisclosed location outside of the Royal Capitol of Luangphabang in 1975. Witnesses in concentration camps at the time claim to have seen the Lao Royal Family members executed.*

*But despite the concentration camps and alleged torture, the late King never renounced his title. It was forcibly taken from him. The heirs would reclaim it in defiance. Entering the Hilton Ballroom on this historic Saturday amidst the* *(see page 35)*

## ປາກເຊ ແຫ່ງຄວາມຫລັງ

ໂດຍ: ອິນປັນ ເທບສຸວັນ

ຈຳປາສັກໃນອາດີດ ມີນາມວ່າເຂດແຄວ້ນຂອງນະຄອນກາລະຈຳປາກະບູຣີສີ (ຈຳປາສັກ) ແມ່ນໜຶ່ງໃນຈຳນວນສູນກາງເກົ້າໂຣມທາງສິລປະວັທນະທັມ ການເມືອງແລະເສຖກິຈຂອງລາວພາກໃຕ້ມາແລ້ວແຕ່ງອະດີດ-ຫລາຍ ໆ ຮ້ອຍປີຜ່ານມາ. ມົວ ປີຜ່ານມາຂ້ອຍເຄີຍໄດ້ໄປປະຈຳການຢູ່ທີ່ເມືອງປາກເຊ ຫລັງຈາກຄອມມູນິສຖືກປຸ້ນເອົາການປົກຄອງ ບຸນວາສນາຂອງຂ້ອຍຕ້ອງໄດ້ພັດພາກຈາກມັນໄປ. ໂອ້ ປາກເຊ ທີ່ຮັກ ຂ້ອຍບັງຝັນເຖິງເຈົ້າບາງຄືນຍັງຝັນວ່າໄດ້ໄປທ່ຽວຊົມບ່ອນມະຫັສຈັນຄວາມງາມແຫ່ງເມືອງປາກເຊ. ຂ້ອຍໄດ້ຜູກຄວາມຮັກກັບສາວງາມແຫ່ງເມືອງປາກເຊ ເອົາຜູ້ນັ້ນກໍ່ໄດ້ໄປລີ້ພັຍການເມືອງຢູ່ປະເທດຝຣັ່ງເສດແລ້ວແຕ່ປີ ໑໙໗໕ ພຸ້ນ. ເມືອງປາກເຊໃນອະດີດເປັນດິນແດນຂອງອານາຈັກລ້ານຊ້າງ ທີ່ເຕັມໄປດ້ວຍສິລປະວັທນະທັມທີ່ເກົ່າແກ່ອຸດົມສົມບູນບໍ່ນ້ອຍໜ້າກັບແຂວງອື່ນ ໆ. ບໍ່ວ່າອະດີດຮອດປັດຈຸບັນ ກໍ່ຍັງຮັກສາອະຣິຍະທັມອັນງົດງາມທີ່ເປັນເອກຮັກໄວ້ຢ່າງມາກມູນແລະຮັ່ງມີ. ແຂວງຈຳປາສັກມີເນື້ອທີ່ ໑໕,໔໑໕ ກິໂລແມັດມົນທົນ ມີພົລເມືອງ ໔໖໕, ໐໐໐ ຄົນ ປະກອບດ້ວຍ ໑໐ ເມືອງ ເຊັ່ນ: ເມືອງປາກເຊ, ເມືອງຊະນະສົມບູນ, ເມືອງບາຈຽງຈະເຣີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ, ເມືອງໂພນທອງ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູລະປະໂມກ, ເມືອງໂຂງ, ມີຊາຍແດນຕິດກັບແຂວງສາຣະວັນ, ແຂວງອັດຕະປື, ແລະປະເທດໄທຍ໌. ວັດວາອາຣາມຍັງມີໄວ້ແຕ່ສ່ວນໃຫຍ່ຍັງຂາດຜູ້ອຸປຖັມທາງດ້ານສາສນາພຸທນີ້ /



ອ້າຍຈົວພາກັນຢືນເບິ່ງຝົນກຳລັງຕົກລົບຈາກສາຍຕາ








# ແມ່ຍິງອິສຣະແອລ

ໂດຍ: ເສັມດວງ





ແມ່ຍິງງານຂອງຄົນ "ອິສຣະແອລ" ບໍ່ແມ່ນພຽງແຕ່ໄດ້ຮັບໃຊ້ໃນວຽກຣາຊການເທົ່ານັ້ນ ແຕ່ພວກເຂົາເຈົ້າຈະຕ້ອງສະມັກເຂົ້າຮັບໃຊ້ໃນກອງທັບເພື່ອປົກປ້ອງປະເທດຊາດທຸກ ໆ ຂແໜງການອີກຢ່າງນ້ອຍຜູ້ລະ ໔ ປີເຕັມ. ທີ່ໝາຍເຖິງຄວາມອົງອາດກ້າຫານ, ຄວາມສວຍງາມໃນຕອນຍັງໜຸ່ມເອັ້ມສາວ ຜິວພັນເນື້ອໜັງມີສະງ່າງາມໄປທຸກພາກສ່ວນຂອງແມ່ຍິງອິສຣະແອລ ຂ້າພະເຈົ້າເຫັນວ່າ ງາມແບບທັມຊາດຂອງຄົນຕາເວັນອອກກາງ ປະເພນີ ແລະຈິດໃຈຂອງແມ່ຍິງ ອິສຣະແອລ ຢູ່ໃນສາຍຕາຂອງຜູ້ໄດ້ໄປເຫັນມາແລ້ວ ຖ້າຈະທຽບແມ່ຍິງງາມແຕ່ບໍ່ມີຄຸນຄ່າຂອງຄົນ ມັນກໍ່ໃຊ້ການບໍ່ໄດ້ ຍົກຕົວຢ່າງກ້ຽງແຕ່ນອກ ທາງໃນເປັນໝາກເດື່ອ ງາມແຕ່ຮູບຮ່າງນ້ອງ ໃຈເຈົ້າຫາກບໍ່ດີ ເອົາບໍ່ໄດ້ແລ້ວ! ແຕ່ລະຢ່າງງາມໄປແຕ່ລະປະເພດ ບໍ່ຕໍ່າຕ້ອຍຂອງຍິງທີ່ເກີດມາຮັບໃຊ້ຊາດ ຮັບໃຊ້ປວງຊົນ ນັບໄດ້ວ່າ ແມ່ຍິງ ອິສຣະແອລ ມີຈິດໃຈຮັກຊາດ ຮັບໃຊ້ກອງທັບຂອງຕົນໃຫ້ເປັນຜູ້ປົກປ້ອງປະເທດຊາດ ທີ່ມີສັດຕູມາຮຸກຮານ. ເຣື່ອງຊາດບ້ານເມືອງນັ້ນເປັນສິ່ງທີ່ມີກຽດແລະສໍາຄັນກວ່າ ເພາະເຂົາເຈົ້າຖືວ່າເປັນບ່ອນກໍາເນີດຂອງພໍ່ແມ່ ປູ່ຍ່າ ຕາຍາຍ, ນັ້ນແມ່ນຊາດເຊື້ອວົງຕະກຸນຂອງຄົນອິສຣະແອລ, ຖ້າເຮົາເກີດມາບໍ່ໄດ້ຮັບໃຊ້ຊາດ ເຊື້ອວົງຕະກຸນ ກໍ່ບໍ່ມີຄວາມໝາຍຫຍັງ. ເປັນຫຍັງຜູ້ຍິງເຮົາຈຶ່ງບໍ່ໃຊ້ສ່ວນທີ່ເຫລືອຂອງຊີວິດ ຄືຍັງບໍ່ທັນແຕ່ງງານນີ້ໄປໃຫ້ເປັນປະໂຍດຂອງຊາດສ່ວນລວມ, ເພື່ອຕອບສະໜອງຄຸນງາມຄວາມດີທີ່ຊາດມີຕໍ່ພວກເຮົາ ຄວນຈະເອົາແບບຢ່າງ ແມ່ຍິງອິສຣະແອລ ນີ້. ຄົນທັງໂລກຈະມາເປັນພະຍານແລະຕີຣາຄາວ່າ ແມ່ຍິງລາວຍັງມີຄວາມສາມາດວັດແທກໄດ້ວ່າ ທຸກຢ່າງເຮົາເຮັດໄດ້ຖ້າຫາກຊອກສະແວງຫາບ່ອນທີ່ເຮົາຈະກ້າວເດີນໄປຕາມຈຸດໝາຍ

ທະຫານແມ່ຍິງ ຄົນອິສຣະແອລ ກ່າວຕໍ່ຜູ້ຂຽນວ່າ ຢູ່ໃນດິນແດນຂອງພວກເຮົາຕ້ອງແມ່ນຄົນອິສຣແອລເປັນເຈົ້າຂອງປະເທສຊາດເປັນຜູ້ສ້າງແລະປົກປັກຮັກສາໄວ້ບໍ່ໃຫ້ດັບສູນໄປ ແມ່ຍິງເຮົາໄດ້ຫລິງເຫັນແລ້ວວ່າ ການສະມັກເຂົ້າຮັບໃຊ້ວຽກງານໃນກອງທັບແມ່ນວຽກງານອັນສໍາຄັນຢ່າງໃຫຍ່ຫລວງຂອງການເຕີບໃຫຍ່ຂຍາຍຕົວຕໍ່ອໍານາຈ ມີແສນຍານຸພາບທາງທະຫານທຸກເຫລົ່າທັບ ທັງດ້ານວິທຍາສາດ ພວມແຂ່ງຂັນກັນຣະຫວ່າງປະເທສໃນພາກຕາເວັນອອກກາງ. ພວກເຮົາຊາຍໜຸ່ມຍິງສາວຂອງຄົນອິສຣະແອລທັງໝົດຕ້ອງສຶກສາເອົາວິຊາຕ່າງໆ ເພື່ອລໍຄອຍໃຫ້ການຮັບໃຊ້ຊາດ ຮັບໃຊ້ປວງຊົນ ໃນຍາມຕ້ອງການ. ແມ່ຍິງອິສຣະແອລ ມີຄວາມກ້າວໜ້າເທົ່າທຽມກັນກັບຜູ້ຊາຍ ສິດທິຂອງແມ່ຍິງກໍ່ໄດ້ຮັບຄືຄວາມສເມີພາບຕໍ່ໜ້າກົດໝາຍຂອງຊາດ ພາລະທີ່ພວກເຂົາຈະໄດ້ຮັບອີກຄື ການຄົ້ນຄວ້າຫາວິທີເພື່ອສ້າງເງື່ອນໄຂໃຫ້ແມ່ຍິງ ອິສຣະແອລ ມີຈິດໃຈຮັກຊາດຮັກຄອບຄົວ ແລະຮັກການເອົາໃຈໃສ່ຮັບໃຊ້ຊາດ ສເມີຕົ້ນສເມີປາຍ. ເພື່ອຫລຸດຜ່ອນຄວາມທຸກຍາກໃຫ້ແມ່ຍິງ ອິສຣະແອລ ນັ້ນ ໃນບົດບາດມີການເມືອງຂອງປະເທດ ແມ່ນສິ່ງເສີມຄວາມກ້າວໜ້າໃຫ້ແມ່ຍິງໃນດ້ານສາທາຣະນະສຸກ. ການສຶກສາ ກໍ່ດີການຮັບເປີດຮັບແມ່ຍິງເຂົ້າໃນດ້ານຂະແໜງການບໍຣິຫານຂອງຊາດ.

ຜູ້ຂຽນຮູ້ສຶກເສັຽໃຈທີ່ສັງຄົມແມ່ຍິງລາວຍັງບໍ່ໄດ້ຖືກແກ້ໄຂ ແມ່ຍິງລາວສ່ວນຫລາຍຍັງບໍ່ໄດ້ຮັບສິດທິສເມີພາບເຕັມສ່ວນ ຄືແມ່ຍິງ ອິສຣະແອລ ແມ່ນຕົວຢ່າງທີ່ພວກເຮົາຄວນຕື່ນຕົວແລ້ວ»

## ຊີວິດຢູ່ກັບທະຫານ

ໂດຍ: ເສນິດວົງ





ທະຫານຍິງ ແລະ ທະຫານຊາຍ ໄດ້ພາກັນດຶງເຊືອກຮ່ວມກັນເພື່ອຄວາມເປັນເອກພາບ

ການປ້ອງກັນປະເທສຊາດແມ່ນສິ່ງສຳຄັນຂອງຣັຖບານ ແລະເກັບພາສີລາຍໄດ້ຈາກປະຊາຊົນອິສຣະແອລ ເຖິງ ໒໔% ຖ້າຈະປຽບທຽບໃສ່ການໃຊ້ຈ່າຍງົບປະມານຂອງສຫະຣັຖອະເມຣິກາ ໃນການປ້ອງກັນຊາດ ແລະຊາດອື່ນໆ ຍັງນ້ອຍກ່ວາ. ນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ປະເທດອິສຣະແອລ ໄດ້ກ່າວວ່າ ພໍເມື່ອພວກເຂົາເຈົ້າໄດ້ເຂົ້າມາເຖິງ ສນາມບິນ Ben-Gurion. ພວກເຂົາເຈົ້າໄດ້ເຫັນຝູງຊົນຕາມຫ້ອງຖນົນໃນກຳແພງເມືອງ, ເຫັນຮ້ານກາເຟຕາມແຄມທາງ, ມີຜູ້ຄົນຍ່າງຕາມທາງຂຶ້ນຣົຖຕາມຖນົນສາຍບາງແຫ່ງ, ພວກທະຫານຕ້ອງກວດກະເປົາ ແລະຫີບສິ່ງຂອງໃນທາງເຂົ້າຂອງຕຶກຣັຖບານຕາມຕລາດການຄ້າ ແລະໂຮງພາພຍົນ.

ທະຫານ ທຸກເພດວັຍ ນ້ອຍແລະໃຫຍ່ ຕ່ຳແລະສູງ, ຕາມອາຍຸການຂອງທຸກເພດ. ຄົນມາທ່ອງທ່ຽວຈຳໄດ້ວ່າໃນມື້ວັນເອກຣາຊຂອງອິສຣະແອລ ແມ່ນຢູ່ໃນພາວະສົງຄາມ ເປັນຫຍັງຝູງຊົນຈຶ່ງສາມາດຢູ່ກິນແລະອາສັຍໄດ້ ? ໂອ໋ ! ບໍ່ມີຜູ້ໃດດອກກ້າເວົ້າໄດ້ວ່າມັນເປັນຂອງທີ່ງ່າຍ ໆ, ແນ່ແລ້ວ ນັບຕັ້ງແຕ່ພວກເຂົາບໍ່ຮູ້ວ່າ ສັນຕິພາບ, ອິສຣະແອລ ຍອມຮັບວ່າ ພວກທະຫານປັດຈຸບັນໄດ້ໃຊ້ຊີວິດຢູ່ຢ່າງຫັນຕາໃນບົນຫ້ອງຖນົນ. ປະຊາຊົນບໍ່ໄດ້ມີແນວຄິດວ່າຈະນັ່ງເທິງຣົຖປະຈຳທາງໃກ້ ໆ ກັບທະຫານຜູ້ກຳລັງພາຍປືນ ແອມ ໑໘ ຫລືເບິ່ງຜູ້ທີ່ໃສ່ເຄື່ອງແບບທະຫານທີ່ປະປົນກັບປວງຊົນໃນເວລາເບິ່ງງານຄອນເສີດຣ໌ ຫລືໃກ້ ໆ ກັບພວກສະແດງດົນຕຣີ ເວລາທີ່ເປັນຫວ່າງທີ່ສຸດນັ້ນກໍຄືຕອນພວກເຂົາບໍ່ເຫັນມີ ທະຫານທີ່ຢູ່ໃກ້ຮັກສາຄວາມສງົບ ແລະຈະຄິດວ່າຈະຕ້ອງມີບາງຢ່າງຫລືອັນໃດຈະເກີດຂຶ້ນແກ່ຝູງຊົນຊຸມນຸມ.

ການປ້ອງກັນແມ່ນໜ້າທີ່ອັນສຳຄັນຍິ່ງ ຣັຖບານທີ່ຈະຕ້ອງດຳເນີນກິດຈະການງົບປມານປ້ອງກັນປະເທສຊາດ ເຈົ້າໜ້າທີ່ບາງຄົນໄດ້ເວົ້າສູ່ຂ້າພະເຈົ້າວ່າ ສິ່ງສຳຄັນອັນດັບໜຶ່ງ ຂອງອິສຣະແອລ ແມ່ນການວາງໂຄງການງົບປມານແຫ່ງຊາດ ແລະປ້ອງກັນຊາດຫລາຍກວ່າ ສະນັ້ນພາສີຈາກປະຊາຊົນຈະຕ້ອງເພີ້ມເຖິງ ໒໔% ຕໍ່ຄົນອິສຣະແອລຄົນນຶ່ງແມ່ນເຫັນວ່າສູງທີ່ສຸດໃນໂລກ. ເຫດຜົນຂອງຫົວໜ້າຫ້ອງການແຈ້ງວ່າ ຄ່າສ້ອມແປງເຄື່ອງອຸປະກອນປ້ອງກັນຊາດ ແລະກອງທັບແຫ່ງຊາດຈະຕ້ອງໃຊ້ງົບປະມານເຕັມສ່ວນ ໒໔% ຂອງລາຍໄດ້ງົບປມານແຫ່ງຊາດໃນດ້ານການປ້ອງກັນປະເທດເຂດນ້ຳແດນດິນ. ພົລເມືອງຂອງອິສຣະແອລ ໔ ລ້ານຄົນຈະບໍ່ມີຄວາມກ້າເກິ່ງຂອງປະຊາກອນຊາວອາລັບ ໑໕໐ ລ້ານຄົນທີ່ມີແນວໂນ້ມຈະຕໍ່ຕ້ານຂົ່ມຂູ່ຊາວອິສຣະແອລ ພວກເຂົາເຈົ້າພຽງຫວັງວ່າຢາກໃຫ້ມີສຖຽນຣະພາບກ້ຳເກິ່ງທາງທະຫານໃນຂົງເຂດພູມີພາກສ່ວນນີ້ ອັນໝາຍຄວາມວ່າ ພລັງທາງດ້ານວິທຍາສາຕມີແສນຍານຸພາບເທັກໂນໂລຈີສູງເດັ່ນ. ເຄື່ອງບິນ Robot Drone ໄດ້ລາດຕະເວນຊາຍແດນ ແລະເຄື່ອງຄອມປິວເຕີຣ໌ ທັນສມັຍ ເພື່ອໃຫ້ການສອດແນມ ຖ້າເກີດເຫດການໃດ ໆ ຫລືວ່າບັນຫາດ້ານການຣຸກຮົບ, ແຕ່ວ່າສິ່ງທີ່ກ່າວມານີ້ມັນໄດ້ສະແດງໃຫ້ເຫັນການໃຊ້ຈ່າຍຢ່າງມະຫາສານ ແລະຣາຄາສູງທີ່ສຸດ. ການພັທນາ, ແລະສ້າງແສນຍານຸພາບຂອງ ອິສຣະແອລ ກໍ່ແມ່ນເພື່ອໃສ່ການຕຽມພ້ອມ ໒໔ ຊົ່ວໂມງແລະຮັກສາຄວາມຍິ່ງໃຫຍ່ໃນການປ້ອງກັນຊາດໃຫ້ມີຄຸນພາບ ມີປະສິດທິພາບສູງເດັ່ນ ທາງດ້ານເທັກໂນໂລຈີສມັຍໃໝ່. ທ່ານກ່າວວ່າ ຖ້າຫາກຂາດຫລືປາສຈາກ ມະຫາອຳນາດ, ຕາມຄວາມນິກຄິດຂອງຄົນອິສຣະແອລຜູ້ຍິງ/ຊາຍ ຈະຕ້ອງຮັບໃຊ້ໃນກອງທັບແຫ່ງຊາດ ຊາຍ ມີ ປີ ຍິງ ໒ ປີ. ປະເທດໃກ້ຄຽງມີແຜນການຈະຈູ່ໂຈມ »

ຕີ ,ແລະພວກກໍ່ອນມາສັກັນຍັງມີ ກໍຣະນີວາງລູກ ຣະເບີດໃສ່ບາງແຫ່ງພາຍໃນອິສຣະແອລ. ເທິງ ພູເຂົາໂກລານຫັຍຈະຕ້ອງຄຸ້ມຄອງ, ຫາດຊາຍ ແຄມຝັ່ງທະເລເປັນດິນແດນປະເທດ ຄົນອິສຣະ ແອລ ອາຍຸ ໑໘ ປີ ຈະຕ້ອງໄດ້ຈົດຊື່ເຂົ້າຮັບໃຊ້ໃນ ກອງທັບ, ພວກຜູ້ຊາຍເປັນທະຫານເຮືອ ແລະ ທະຫານ ອາກາສ ຕ້ອງຮັບໃຊ້ຢ່າງນ້ອຍເກີນ ກວ່າ ມີ ປີ ພິເສດອີກ. ຜູ້ຍິງທີ່ແຕ່ງງານມີຜົວໄປ ແລ້ວແມ່ນໃຫ້ຍົກເວັ້ນບໍ່ໃຫ້ເຂົ້າເປັນທະຫານ ສ່ວນຜູ້ຍິງທີ່ມີການພົວພັນທາງດ້ານສາສນາ ນັ້ນກໍ່ຈະມີໂອກາດໃຫ້ອາສາສະມັກຮັບໃຊ້ທາງ ຣາຊການອື່ນທີ່ເຫັນວ່າສົມຄວນເໝາະສົມ ຜູ້ຊາຍຫາກມີໜ້າທີ່ແລະຖືວ່າເປັນຜູ້ຮັບຜິດ ຊອບທາງດ້ານສາສນາເຕັມເວລາໂດຍສະເພາະ ກໍ່ສາມາດຍົກເວັ້ນ ແລະເຂົ້າພົວພັນຮ່ວມກັບໂຄງ ການພິເສດທີ່ເຫັນວ່າສົມຄວນເໝາະສົມທຽບ ເທົ່າກັບຊີວິດທະຫານຜູ້ນຶ່ງ ແລະສຶກສາທາງ ດ້ານສາສນາ.

ສະມາຊິກ ອິສຣະແອລ ທີ່ບໍ່ແມ່ນເຊື້ອຊາຕິຍິວ ຈະບໍ່ໄດ້ເຂົ້າຮ່ວມໃນການຈົດທະບຽນຮັບໃຊ້ກອງ ທັບ. ແຕ່ວ່າຍັງມີຫລາຍຄົນທີ່ຢາກອາສາສມັກ ເປັນນັກສະກຸດ, ຜູ້ກວດກາຕາມພົມແດນ ຄົນ ອິສຣະແອລ ສ່ວນໃຫຍ່ຜູ້ທີ່ຮັບໃຊ້ທະຫານ ແລະ ຍັງມີຊາຍໜຸ່ມຍິງສາວຕ້ອງການອາສາສມັກ ຍື່ນໃບຄຳຮ້ອງຂໍເປັນນັກບິນ, ສ່ວນຫລາຍແລ້ວ ບໍ່ມີຊາຍໜຸ່ມຍິງສາວຄົນໃດດອກຈະປະຕິເສດ ໄດ້ວ່າບໍ່ຢາກຮັບໃຊ້ກອງທັບ ຮັບໃຊ້ຊາຕ ຕາມກົດ ໝາຍຣະບຽບຂອງກະຊວງປ້ອງກັນປະເທດ



ຂ່ວງບ້ວງ ແມ່ນ ກິລາ ແບບນຶ່ງຂອງຄົນ ອິສຣະແອລ ຕາມຫາດຊາຍທະເລ ຈະມີຝູງ ຊົນຫລິ້ນກິລາ ຂ່ວງບ້ວງ ແລະ ປີກໄກ່ ສາວທະຫານຍິງ ( ເບນສີ ໄອສແມນ ) ສອນ ວິທີຫລິ້ນ ກິລາແບບນີ້ໃຫ້ ຜູ້ຂຽນ ກັບສຫະຣັຖ ແລ້ວຍັງບໍ່ໄດ້ໄປທ່ຽວຊົມຫາດຊາຍ ທະເລແຖວ ໆ ກາລາຣິ, ມອຍຈຸດິດ ແລະ ສະກາໂບໂລ ເທື່ອ ເພາະບໍ່ມີເວລາພຽງພໍ.

ແລ້ວ ຫາກຜູ້ໃດມີປະວັດບໍ່ດີ ແລະເຄີຍຖືກຕິດຄຸກ ມາແລ້ວຈະບໍ່ໄດ້ຮັບໃຊ້ກອງທັບ.

ບົດບາດຂອງແມ່ຍິງ ອິສຣະແອລ ແມ່ນ ສຳຄັນຍິ່ງໃນດ້ານກິຈການຕ່າງ ໆ ເປັນຕົ້ນແມ່ຍິງຕໍ່ ສູ້ໃນສະໜາມຮົບຄຽງບ່າຄຽງໄລ່ກັບຜູ້ຊາຍໃນປີ ໑໙໔໘ ສົງຄາມເພື່ອເອກຣາຊ ຜູ້ຍິງສ່ວນໃຫຍ່ໄດ້ ວຽກງານໜ້າທີ່ຮັບຜິດຊອບໃນຫ້ອງການ. ມີພົລ ທະຫານປະຈຳການ ໑໐໐,໐໐໐ ຄົນ ການປ້ອງກັນ ສ່ວນໃຫຍ່ແມ່ນອາສັຍກອງໜູນພິເສດ ຊຶ່ງປະເຊີນ ໜ້າກັບພວກສັດຕູ ທີ່ອ້ອມຂ້າງຊາຍດິນແດນຂອງ ປະເທດ. ຮວມທັງທະຫານກອງໜູນ ມີກຳລັງນ່າ ກັນ ໕໐໐,໐໐໐ ຄົນ. ຜູ້ຍິງສ່ວນຫລາຍຈະບໍ່ເອີ້ນໃຫ້ ເຂົ້າຮັບໃຊ້ໃນກອງໜູນ, ແຕ່ວ່າຈະໄດ້ຮັບໃຊ້ທາງ ດ້ານວິຊາການ, ປົກຄອງ, ຫຼືປ້ອງກັນໃນທາງດ້ານ ຜົລເມືອງເມື່ອມີການສຸກເສີນ, ຜູ້ຊາຍຈະໄດ້ຮັບໃຊ້ ມື້໕ ມື້ ຕໍ່ປີ ເພື່ອປະຈຳກອງໜູນແລະຝຶກວິຊາ » ທະຫານອີກດ້ວຍ. ນອກຈາກນີ້ຍັງຈະໄດ້ຮັບໃຊ້ໃນ ການສຸກເສີນ ພວກດັ່ງກ່າວຈະຕ້ອງໄດ້ໃຫ້ມີການ ຮັບໃຊ້ຢ່າງນ້ອຍເຖິງອາຍຸ ໕໐ ປີ.

ນອກຈາກນີ້ແລ້ວ ຄົນອິສຣະແອລ ຮູ້ ດີວ່າ ຖ້າພວກເຂົາບໍ່ພາກັນເຮັດການປ້ອງກັນ ຊາຕ, ຈະໄປອາສັຍຜູ້ໃດມາປ້ອງກັນໃຫ້ເຂົາເຈົ້າ ? ນີ້ຄືຄວາມເປັນຊາຕຂອງອິສຣະແອລ.

ຄົນຊາຕອື່ນທີ່ຫລັ່ງໄຫລເຂົ້າມາຢູ່ອາສັຍ ປະເທດ ອິສຣະແອລ ໄດ້ພາກັນຮຽນຮູ້ພາສາ ຮີບຣູ ແລະ ພວກເຂົາເຈົ້າໄດ້ມາສ້າງຕັ້ງຊີວິດໃໝ່ ໃນດິນແດນທີ່ເຕັມໄປດ້ວຍ ວັທນະທັມ ແລະ ພາ ສາ ແຕກຕ່າງກັນ. ພວກເຂົາເຈົ້າໄດ້ຮຽນແຕ່ສິ່ງ ໃໝ່ໆ ນຳກັນ ອາດບາງທີ່ຈະມີຫລາຍກວ່າສິ່ງ ທີ່ເຂົາເຈົ້າໄດ້ຄິດໄວ້, ທະຫານ ອິສຣະແອລ ທີ່ມີ ສັດຕູປະເຊີນໜ້າທຸກດ້ານຈະຕ້ອງໄດ້ໃສ່ເຄື່ອງ ແບບຄຽມພ້ອມນັ້ນນຶ່ງໃຈດຽວບໍ່ຍອມຈຳນົນ ./.

# ຂ່າວຕ່າງປະເທດ

ໂດຍ ນາລອນ ແສງຈັນ ລາຍງານຈາກມອສໂກ



ການສູ້ຮົບໃນເຊເຈັນຢາ ທ່ານປະທານາທິບໍດີ ຣັດເຊັຽ ບໍຣິສ ເຢັນຊິນ ອອກຈາກຫ້ອງປະຊຸມ ກັບ ນາຍົກຣັຖມົນຕຣີ ວິກຕໍ່ຣ໌ ເຊີນໂນມີດິນ ແລະທີ່ປຶກສາຄວາມໝັ້ນຄົງ ທ່ານ ອາເລັກຊັນເດີ ເລບິດ ເພື່ອປຶກສາສົນທະນາ ກ່ຽວກັບບັນຫາຫຍຸ້ງຍາກໃນ ເຊເຈັນຢາ ໃນວັນທີ່ ໑໘ ເດືອນສິງຫາ ນີ້. ຂາດແຄນອາຫານ, ນໍ້າໃຊ້ ເຖິງ ຜີ ວັນທີ່ມີການສູ້ຮົບກັນຢ່າງໜັກ. ມີຊາກ ສົບທະຫານຣັດເຊັຽຖືກຂ້າຕາຍຂ້າງຣິງຖັງໃນໃຈ ກາງກຳແພງເມືອງ. ຖນົນຫົນທາງສ່ວນຫລາຍ ຖືກຕັດຂາດປະຊາຊົນອົບພົບ ຫລີລີ້ງລົບລູກປືນ ຢູ່ຕະກ້ອງຕຶກເພື່ອຫລີກລູກລະເບີດ. ເດັກນ້ອຍ ໔-໕ ຄົນ ໄດ້ອອກມານອກເບິ່ງທ້ອງຟ້າເຫັນ ຍົນ ເຮລີຄອບເຕີດອາວຸດ, ພວກທະຫານກອງໂຈນ ເຊເຈັນຢາ ຜູ້ຕໍ່ສູ້ເອົາອິສຣະພາບມາສູ່ປວງຊົນ ໄດ້ ພາກັນຕໍ່ຕ້ານຢ່າງແຂງຂັນອົງອາດ, ພວກນາຍ ທະຫານຣັດເຊັຽບໍ່ສາມາດຈະຕ້ານຄືນໄດ້.

ເປັນຕາໜ້າຫ່ວງທີ່ສຸດນັ້ນຄືອາຫານການສບຽງ ຖືກໝົດໄປເທື່ອລະນ້ອຍຈົນເຮັດໃຫ້ປະຊາຊົນມີ ຄວາມຂາດແຄນຫລາຍ. ອາຫານແລະສບຽງມີ ໄວ້ພຽງແຕ່ນ້ອຍໃນມື້ເລີ້ມໂຈມຕີກັນທັງສອງຝ່າຍ ໄຟຟ້າຖືກຕັດຂາດລົງຍ້ອນການສູ້ຮົບ. ກອງກຳລັງ ຂອງເຊເຈັນຢາ ຕໍ່ຕ້ານທະຫານ ຣັດເຊັຽເພື່ອໃຫ້ ມີເອກຣາຊ ແລະອະທິປະໄຕຕັ້ງແຕ່ຊຸມປີ ໑໙໙໔



ທະຫານຍິງແລະຊາຍ ພາກັນຊຸມກັນທີ່ຮ້ານກາເຟແຫ່ງນຶ່ງ ໃນກຸງເຕັນອາວິຟ ຜູ້ຂຽນມຸ່ງເສື້ອສີຂາວນັ່ງຫັນຂ້າງຕໍ່ໄປ.

ເມື່ອທາງ ມອສໂກ ໄດ້ສົ່ງກຳລັງທະຫານຄັ້ງແລກນັ້ນ ເຫັນສະພາບການຮຸນແຮງຈົນເຮັດໃຫ້ທະຫານຂອງ ຕົນຕ້ອງຖືກສູນເສັຽໃນການຮົບເຖິງ ໒໐,໐໐໐ ຄົນມາ ແລ້ວລວມທັງທະຫານແລະພົລເຮືອນ. ການສົນຍາ ສົງບເສິກຕອນຫາສຽງເລືອກຕັ້ງ ປະທານາທິບໍດີທີ່ ຜ່ານໄປແລ້ວນັ້ນ ມາບັດນີ້ພວກກອງກຳລັງທະຫານ ເຊເຈັນຢາ ໄດ້ບຸກໂຈມຕີອີກຄັ້ງໃໝ່ໃນອາທິດທີ່ແລ້ວ ທ່ານປະທານາທິບໍດີ ບໍຣິສ ເຢັນເຊິນ ຈະສາມາດອົ້ມ ຄອງດຳຣົງຕຳແໜ່ງອີກເທີມທີສອງໄດ້ບໍ່ ? ຕອນ ເຊົ້ານີ້ການສູ້ຮົບເພື່ອຄວບຄຸມ ໂກຣນີ ເຂົ້າເຖິງ ໗ ວັນ ແລ້ວ ບໍ່ເຫັນຝ່າຍທະຫານຣັດເຊັຽ ແລະພວກກອງ ກຳລັງ ເຊເຈັນຢາ ຈະສາມາດປະສົບຜົລສຳເຣັດໄດ້. ນາຍທະຫານ ຣັດເຊັຽ ໄດ້ບອກນັກຂ່າວລາວວັນນີ້ ວ່າ ພວກເຂົາໄດ້ໃຫ້ມີການໄປມາຕາມເສັ້ນທາງໂດຍ ເສຣີ ເພາະມີນັກຂ່າວ ຣັດເຊັຽແລະພົລເຮືອນຫລາຍ ຄົນຖືກປິດລ້ອມຢູ່ໃຈກາງ ໂກຣນີ ແລ້ວຖືກສົ່ງໄປຍັງ ຖານທັບ ຣັດເຊັຽແລ້ວ. ທ່ານ ເຢັນຊິນ ໄດ້ພົບກັບ ທ່ານນາຍົກຣັຖມົນຕຣີ ວິກເຕີ ເຊີໂນມີດິນ ເປັນ ເວລາເຖິງ ໔໑/໔ ໂມງ ໃນວັນອາທິດເພື່ອສຶກສາ ເບິ່ງສະພາບການດ້ານຄວາມໝັ້ນຄົງແລະມີທ່ານ ອາເລັກຊານເດີ ເລບິດ ທີ່ປຶກສາດ້ານຄວາມໝັ້ນ ຄົງແລະຕາງໜ້າເຈຣະຈາກັບພວກ ເຊເຈັນຢາ.

ໜັງສືພິມ ຕາສ ກ່າວວ່າ ທ່ານເລບິດ ເປັນຄົນທີ່ ເຂັ້ມແຂງ ອະດີດເປັນນາຍທະຫານໂທນຈ້ອງ ໄດ້ ຖືກແຕ່ງຕັ້ງໂດຍ ທ່ານ ເຢັນຊິນ ໃຫ້ເປັນຫົວໜ້າ ເຂດພົມແດນດາເກສຕັນໃກ້ກັບດິນແດນ ເຊເຈັນຢາ ເພື່ອສຶກສາສະຖານະການໃນພາກ ເໜືອກົວກະຊາສ. ການປະຊຸມດ່ວນກັບຜູ້ອຳນວຍ ການດ້ານສຸກເສີນໃນກຸງ ມອສໂກ ໃນວັນອາທິດ ນັ້ນ ທ່ານເຊີໂນມີດິນ ຕ້ອງການຢາກໃຫ້ມີສັນຕິ ພາບລົງຢ່າງສົ້ມເຊິງປາສຈາກການປະເຊີນໜ້າ ກັນຢ່າງຮຸນແຮງແຕ່ແລ້ວຍັງບໍ່ມີການຕົກລົງໄດ້/

# ກອງປະຊຸມໃຫຍ່ " ລາວເສຣີຊົນ " ເສັ້ນທາງສູ່ປະຊາທິປະໄຕຣ໌

ໂດຍ : ລາວຍຸກໃໝ່





ຜູ້ຕາງໜ້າຈາກຫລາຍພັກການເມືອງເດີນທາງມາຈາກທົ່ວໂລກ ເພື່ອຕຽມ ເຂົ້າກອງປະຊຸມ ສັມມິບາຕປະຊາທິປະໄຕຍ໌ລາວເສຣີຊົນ ທີ່ນະຄອຣພອັດແລັນ

ຍ.ນ. ມາລີຈັນ ຫານທະເລ ເດີນທາງມາຈາກປະເທສ ສເປລ ເຂົ້າຮ່ວມກອງປະຊຸມ ແລະໄດ້ມີໂອກາດໄດ້ກ່າວສແດງເຖິງຄວາມຮັກຊາຕ ຮັກບ້ານເກີດເມືອງນອນ ຂອງຕົນໃຫ້ທີ່ປະຊຸມຊາບ ຢ່າງໜ້າຈັບໃຈ.



ສະພາປະສານງານລາວເສຣີຊົນ ໄດ້ຖືກຈັດຕັ້ງເອົາຄະນະບໍຣິຫາຣແລ້ວຢ່າງມີ ປະຊາທິປະໄຕຣ໌. ອີງຕາມມະຕິຕົກລົງຂອງກອງປະຊຸມ ສັມມິບາຕປະຊາທິປະໄຕ ລາວເສຣີຊົນ ຊຶ່ງຈັດຂຶ້ນທີ່ນະຄອນພອຕແລັນ ຣັຖ ອໍຣິກອນ, ໃນຄັ້ງວັນທີ ໔,໕ ແລະ ໖ ເດືອນກໍຣະກະດາ ປີ໑໙໙໖. ພາຍໃຕ້ຄົນທຸງ " ຊ້າງສາມຫົວ " ເຊິ່ງ ແມ່ນມໍຣະດົກອັນລ້ຳຄ່າຂອງລາວເສຣີຊົນ ໃນປີ ໑໙໔໕ ຍຸກຕໍ່ສູ້ເອົາເອກຣາຊ ຂອງລາວຍຸກນັ້ນ. ກອງປະຊຸມ ສັມມິບາດ ປະຊາທິປະໄຕຍ໌ ລາວເສຣີຊົນ ແມ່ນ ການອຸປຖັມຂອງ ອົງການ ລາວຮ່ວມເສຣີພາພ ແລະຄະນະກັມການ ຈັດກອງປະ ຊຸມ ປະຈຳຣັຖອໍຣິກອນ. ໃນກອງປະຊຸມໄດ້ມີມະຕິເຫັນດີເປັນເອກສັນ ໃຫ້ຕັ້ງ ຄະນະປະສານງານຂຶ້ນ ແລະກໍເລືອກເອົາຊື່ຂອງການຈັດຕັ້ງນັ້ນວ່າ " ສະພາ ປະສານງານ ລາວເສຣີຊົນ ". ຫລັງຈາກໄດ້ຊື່ຂອງການຈັດຕັ້ງແລ້ວກອງປະຊຸມ ກໍຊອກຫາການນຳພາ, ຈຶ່ງໄດ້ຕັ້ງຄະນະກັມມະການຂຶ້ນຄະນະນຶ່ງ ເພື່ອເລືອກເອົາ ຜູ້ນຳກໍຄືຜູ້ເປັນປະທານຂອງ ສະພາ ປະສານງານ ລາວເສຣີຊົນ ໂດຍມີດັ່ງນີ້ :

| | |
|---|---|
| ທ່ານ ວັນລັງ ຄຳສຸກ | ເປັນປະທານ |
| ທ່ານ ຄຳພຸຍ ຫລວງພາສີ | ເປັນກັມມະການ |
| ທ່ານ ສີສົມພອຣ ກົມຈຳປາ | ເປັນກັມມະການ |
| ຍ.ນ. ດຣ.ບຸນທອນ ຈັນທະວິໄຊຍ໌ | ເປັນເລຂານຸການ |

ເມື່ອຄະນະຜູ້ຖືກແຕ່ງຕັ້ງເຂົ້າປະຈຳໜ້າທີ່ແລ້ວ ທ່ານປະທານກອງປະຊຸມໄດ້ ປ່າວປະກາສ ຫາຜູ້ສມັກຈະມາເລືອກຕັ້ງເປັນປະທານ. ໕ ນາທີຕໍ່ມາ, ເມື່ອບໍ່ມີ ຜູ້ໃດສມັກແລ້ວ ທ່ານປະທານໄດ້ສເນີໃຫ້ກອງປະຊຸມ ສເນີຕົວບຸກຄົນທີ່ຕົນເຫັນ ວ່າ ສົມຄວນທີ່ຈະເປັນປະທານໄດ້, ເພື່ອໃຫ້ຄຳສເນີເປັນທີ່ໃຊ້ໄດ້ ຈະຕ້ອງໃຫ້ສະ ມາຊິກໃນທີ່ປະຊຸມເຫັນດີນຳຢ່າງນ້ອຍ ໒ ທ່ານຂຶ້ນໄປໃຫ້ການສນັບສນູນ.

◇ ພວກທີ່ຖືກສເນີຕົວ ໃຫ້ມາເປັນປະທານນັ້ນມີ ໗ ທ່ານຄື :

໑. ທ່ານ ຈັນ ກັນຍາ ຈາກອົງຄ໌ການ ລາວຮ່ວມເສຣີພາພ

໒. ທ່ານ ອຸດອຣ ພຸທວັນ ຈາກອົງຄ໌ການ ລາວຮ່ວມເສຣີພາພ

໓. ທ່ານ ກາດ ດິຫວົງສ໌ ຈາກຄະນະກັມມະການ ປະສານງານ ໑໔ ທັນວາ

໔. ທ່ານ ພຍາ ວັນ ຕາໂນວັນ ຈາກ ຟ.ຣ.ວ.ຈ. (ປະທານກອງປະຊຸມ)

໕. ທ່ານ ພຍາ ຜາຍ ເມືອງຈັນ ຈາກ ຟ.ຣ.ວ.ຈ.

໖. ທ່ານ ສຸຣິວັນ ຄຳວົງໄຊຍ໌ ຈາກສະມາຄົມລາວ ຄອນແນັກຕິກັດ

໗. ທ່ານ ທອງສວັນ ພົງສວັນ ຈາກ ພັກລາວກ້າວໜ້າ

ເມື່ອການສເນີຕົວສິ້ນສຸດລົງ ທ່ານ ຈັນ ກັນຍາ ໄດ້ໃຫ້ທັສນະຄຳເຫັນໂດຍສັງເຂບວ່າ : ການຈັດຕັ້ງ ແລະການເວົ້າ ແມ່ນສິ່ງທີ່ເຮັດໄດ້ງ່າຍ ແຕ່ການທີ່ເຮັດແທ້ທ່າຈິງນັ້ນມັນຍາກ, ສນັ້ນ ເມື່ອຕົກລົງກັນວ່າຈະເຮັດຫຍັງແລ້ວ ຕ້ອງເອົາໃຈໃສ່ເຮັດແທ້ທ່າຈິງ ຈິ່ງເກີດດອກອອກຜົລ ຕາມຄວາມມຸ່ງມາດປາຖນາ. ຕໍ່ຈາກນັ້ນ ແມ່ນການອອກຄຳຄິດເຫັນຂອງຜູ້ທີ່ຖືກສເນີຕົວໃຫ້ສມັກ ຮັບເລືອກຕັ້ງເປັນປະທານ. ທັງ ໔ ຄົນ : ທ່ານ ຈັນ ກັນຍາ, ພຍາ ວັນຕາໂນວົງ, ທ່ານ ອຸດອຣ ພຸທວົງ ແລະ ທ່ານ ທອງສວັນ ພົງສວັນ ຂໍຖອນໂຕ ໂດຍອ້າງເຫດຜົລຕ່າງໆ ທີ່ທາງກອງປະຊຸມເຫັນວ່າໃຊ້ໄດ້ ຈິ່ງບໍ່ມີຄວາມຂັດຂ້ອງ ແຕ່ເຖິງຢ່າງໃດກໍ່ຕາມ, ພວກທ່ານທັງ ໔ ຂໍຮັບໃຊ້ການຈັດຕັ້ງນີ້ໃນຂແໜງອື່ນ ໆ ທີ່ທາງຄນະບໍຣິຫານຈະເຫັນສົມຄວນແຕ່ງຕັ້ງ ແລະມອບໝາຍໃຫ້ໃນຄວາມໄວ້ວາງໃຈຈາກທຸກທ່ານ.

ແລະຍັງມີ ໓ ທ່ານທີ່ບໍ່ຖອນໂຕຄື :

ທ່ານ ພຍາ ຄຳຜາຍ ເມືອງຈັນ

ທ່ານ ກາດ ດິດທະວົງສ໌ ແລະ

ທ່ານ ສຸຣິວັນ ຄຳວົງໄຊຍ໌

ພວກທ່ານທັງສາມຕ່າງກໍ່ຮັບວ່າ ຖ້າຖືກເລືອກຕັ້ງໃນຕຳແໜ່ງ ອັນເປັນກຽດແກ່ຊາຕສ່ວນລວມນີ້ ພວກຂ້າພະເຈົ້າ ຈະພຍາຍາມຮັບໃຊ້ຜົລປະໂຍຊນ໌ສ່ວນໃຫຍ່ ຂອງປະເທສຊາຕບ້ານເມືອງ ໃຫ້ເກີດດອກອອກຜົລ ໂດຍສຸດຂີດຄວາມສາມາຖ. ໃນທີ່ປະຊຸມຕ່າງກໍ່ຕົບມືສແດງຄວາມພໍໃຈ ທີ່ທັງ ໓ ທ່ານຍອມຮັບໃຊ້ຜົລປະໂຍຊນ໌ສ່ວນຮວມເປັນຢ່າງດີ. ຕໍ່ຈາກນັ້ນກໍ່ແມ່ນການແຈກຢາຍບັດຂາວໃຫ້ພວກທ່ານທີ່ມີສິດປ່ອນບັດໃນຈຳນວນ ໗໓ ທ່ານ ເພື່ອຈະໄດ້ລົງຄແນນສຽງເປັນທາງລັບ. ເມື່ອທຸກຄົນໄດ້ປ່ອນບັຕຂອງຕົນແລ້ວ, ຄນະກັມມະການກຳກັບການເລືອກຕັ້ງ ກໍ່ຖອກບັຕອອກຈາກຫີບມານັບ ໃຫ້ຄົບຕາມຈຳນວນ ໗໓ ບັຕແລ້ວ, ທາງຄນະກໍ່ເປີດອ່ານເທື່ອລະໃບ ໂດຍຊ້ອງໜ້າປະທານ ເລຂານຸການ ການເລືອກຕັ້ງ ແລະທຸກ ໆ ທ່ານໃນທີ່ປະຊຸມຊາບດ້ວຍ.

**ຜົລຂອງການປ່ອນບັດ ລົງຄແນນສຽງມີດັ່ງນີ້ :**

| | |
|---|---|
| ທ່ານ ສຸຣິວັນ ຄຳວົງໄຊຍ໌ ໄດ້ | ໕໒ ສຽງ |
| ທ່ານ ກາດ ດິດທະວົງສ໌ ໄດ້ | ໑໑ ສຽງ |
| ທ່ານ ຄຳຜາຍ ເມືອງຈັນ ໄດ້ | ໖ ສຽງ |
| ບໍ່ອອກສຽງ ( ຫຼືບັດຕາຍ ) | ໔ ບັດ |

» ຫລັງຈາກຜົລການລົງຄແນນສຽງ ອອກມາເປັນທີ່ກະຈ່າງແຈ້ງແລ້ວ, ປະທານໃນຄນະກັມມະການກຳກັບການເລືອກຕັ້ງ ໄດ້ປະກາສຕໍ່ທີ່ປະຊຸມຊາບວ່າ ທ່ານ ສຸຣິວັນ ຄຳວົງໄຊຍ໌ ເປັນຜູ້ທີ່ຖືກເລືອກໃຫ້ມາເປັນປະທານຂອງ ສະພາ ປະສານງານ ລາວເສຣີຊົນ ນັບແຕ່ບັດນີ້ເປັນຕົ້ນໄປ. ທ່ານຈະໄດ້ຢູ່ໃນຕຳແໜ່ງນີ້ຕາມໄລຍະທີ່ຈະຖືກຈັດໄວ້ ໃນທັມມະນູນຂອງການຈັດຕັ້ງນີ້.

ຫລັງຈາກນັ້ນແລ້ວ ທ່ານ ສຸຣິວັນ ຄຳວົງໄຊຍ໌ ໄດ້ອອກມາກ່າວຂອບໃຈທີ່ປະຊຸມ ໃນການທີ່ໃຫ້ກຽຕ ແລະຄວາມໄວ້ວາງໃຈແກ່ທ່ານ, ທ່ານຍັງໄດ້ກ່າວເພີ້ມອີກວ່າ ຂ້າພະເຈົ້າພ້ອມແລ້ວທີ່ຈະທຸ້ມເທ ສະຕິປັນຍາ ຕາມຄວາມສາມາຖທຸກຢ່າງທີ່ມີໃສ່ໜ້າທີ່ວຽກງານອັນນີ້ ທີ່ເຕັມໄປດ້ວຍຄວາມໝາຍສຳຄັນ ຫລັກຊນະຊາຕ ຢ່າງເອົາຈິງເອົາຈັງ ພາຍໃຕ້ຄວາມຫວັງວ່າ: ໃນການຊອກຫາຄວາມຖືກຕ້ອງປອງດອງ ແລະແກ້ໄຂບັນຫາຂອງຊາຕນີ້ ກໍ່ຄົງຈະໄດ້ຮັບຄວາມຮ່ວມໄມ້ຮ່ວມມື ສນັບສນູນຈາກທຸກ ໆ ຊົນເຜົ່າ ທຸກອົງຄ໌ການຈັດຕັ້ງ ພັກການເມືອງ ທີ່ເຂົ້າຮ່ວມປະຊຸມ ໃນຄັ້ງນີ້ ແລະພວກທີ່ບໍ່ໄດ້ມາຮ່ວມກໍດີ, ພ້ອມດ້ວຍບັນດາເພື່ອນຮ່ວມຊາຕຢູ່ພາຍໃນແລະນອກປະເທສດ້ວຍ.

ຕໍ່ຈາກນັ້ນ ທ່ານ ສຸຣິວັນ ຄຳວົງໄຊຍ໌ ກໍ່ໄດ້ສເນີຜູ້ທີ່ຈະມາປະກອບ ເປັນຄນະບໍຣິຫານຂອງ ສະພາ ປະສານງານ ລາວເສຣີຊົນ ຊຶ່ງມີຊຸດດັ່ງຕໍ່ລົງໄປນີ້ :

ຮອງປະທານປະກອບດ້ວຍ ໕ ທ່ານ ຄື :

໑. ທ່ານ ກາດ ດິດທະວົງສ໌ ປະຈຳທະວີບ ໂອເຊອານີ ( ຄນະປະສານງານ ໑໔ ທັນວາ ໂອສເຕເລັຽ )

໒. ທ່ານ ດຣ. ຫຼ້າ ໂງ່ນດາຣາ ປະຈຳທະວີບ ຢູໂຣປຕາເວັນຕົກ ( ຈາກຝຣັ່ງເສດ )

໓. ຍ.ນ. ດຣ. ບຸນທອນ ຈັນທະວີໄຊຍ໌ ປະຈຳທະວີບ ຢູໂຣປຕາເວັນອອກ ( ຈາກ ສ.ສ. ເຢັຍຣະມັນ )

໔. ທ່ານ ທອງສວັນ ພົງສວັນ ປະຈຳຢູ່ທະວີບ ອະເມຣິກາ ຕາເວັນອອກ ( ຈາກພັຄລາວກ້າວໜ້າ )

໕. ທ່ານ ບຸນເລີງ ໂງ່ນວໍຣະຣາຊ ປະຈຳຢູ່ທະວີບ ອະເມຣິກາ ຕາເວັນຕົກ ( ຈາກ ຝ.ຣ.ວ.ຈ. ທີ່ ນະຄອຣ ຊິອະເຕິລ ຣັຖ ວໍຊິງຕັນ )

ຫົວໜ້າ ພແນກເສຖກິຈ ແລະການເງິນ ໄດ້ແກ່:

໖. ທ່ານ ວັນລັງ ຄຳສຸຂ ( ຈາກ ສະມາຄົມຈັດຕັ້ງລາວອົພຍົບ ເມືອງ ພອຕແລັນ )

ແພນກເລຂານຸການ ໄດ້ແກ່ :

ທ່ານ ອຸດອຣ ພຸທວົງ ( ຈາກ ລ.ສ.ພ. ບອສຕັນ )

ທ່ານ ເດວິສ ຄຳພຸຍ (ຈາກ ອົງການຊ່ອຍອົພຍົບ )

ນອກຈາກນີ້ແລ້ວ ຍັງຈະໄດ້ສເນີແຕ່ງຕັ້ງ »»

ຄນະທີ່ປຶກສາ ແລະຄນະບໍລິຫານ ພແນກຕ່າງ ໆ ເພີ້ມເຕີມອີກ ທີຫລັງ, ທີ່ປະຊຸມໄດ້ສແດງ ຄວາມຍິນດີ ແລະເຫັນພ້ອມ ໂດຍການຕົບມື ສນັບສນູນຢ່າງສນັ່ນ.

ຕໍ່ຈາກນັ້ນ ທ່ານປະທານກອງປະຊຸມ ກໍ່ໄດ້ອາຣາທນາພຣະສົງ ສູດຊັຍຍັນໂຕ ແລະ ຫົດນ້ຳມົນແກ່ຄນະ ບໍລິຫານ ພ້ອມບັນດາ ສະມາຊິກໃນກອງປະຊຸມ ເພື່ອເປັນສິຣິມົງຄຸລ ຕາມປະເພນີຂອງລາວເຮົາ.

ທີ່ນະຄອຣພອຕແລນດ໌ ຣັຖ ອໍຣິກອນ

ວັນທີ ໖ ເດືອນ ກໍຣະກະດາ, ປີ ໑໙໙໖.

ຄນະກັມມະການ ກຳກັບການເລືອກຕັ້ງ

ເຫັນດີ ຕາມມະຕິກອງປະຊຸມ

ປະທານ ກອງປະຊຸມ

— — — — —

ພຍາ ວັນ ຕາໂນວັນ

**ປະທານ: ຄນະກັມມະການເລືອກຕັ້ງ**

ວັນລັງ ຄຳສຸກ

**ກັມການ:** ຄຳພຸຍ ຫຼວງມາສີ

**ກັມການ:** ສີສົມພອຣ ກົມຈຳປາ

**ເລຂານຸການ:** ດຣ. ບຸນທອນ ຈັນທະວິໄຊຍ໌

## ຂ່າວຈາກສວັນເຂດ



ການດຳນາປີນີ້ ເຫັນວ່າຕາມທ້ອງຖິ່ນໃນແຂວງ ສວັນນະເຂດກຳລັງແຫ້ງແລ້ງຢ່າງໜັກ ເພາະ ວ່າປີນີ້ ມີຝົນເທື່ອດຽວ, ຕົກກ້າແນວເຂົ້າໄດ້ພຽງ ມັກ,ມັຜ ກິໂລ ໗໔% ຕົ້ນເຂົ້າໄດ້ຕາຍໄປຫລາຍແຫ່ງ ໃນເຂດບ້ານທາຕອງຮັງດຳໄດ້ພຽງ ໕໐% ປະຊາຊົນ ໃນບ້ານອ້ອມແອ້ມພາກັນຈົ່ມອຸກໃຈເພາະວ່າບໍ່ຮູ້ສາ ເຫດນັ້ນເຂັດຂວາງຫຍັງ ຈຶ່ງເປັນເຫດໃຫ້ບໍ່ມີຝົນຕົກ ດັ່ງທີ່ໄດ້ຄາດໝາຍໄວ້. ຕາມທັມດາທຸກປີ ພໍ່ນາ ມີ ໃບໜ້າເບີກບານມ່ວນຊື່ນໃນຣະບອບເກົ່າ ເພາະວ່າ ພວກເຂົາເຈົ້າເຮັດຫລາຍໄດ້ຫລາຍ ເຮັດນ້ອຍກໍ່ໄດ້ສົມ ຕາມອັຕຣາ ທີ່ເຮັດມາໄດ້. ອີກປະການນຶ່ງຟ້າຝົນກໍ່ອຳ ນວຍໃຫ້ຈົນນ້ຳລົ້ນຝາຍ, ປາເຕັມທົ່ງນາ, ກົບຂຽດກໍ່ ຮ້ອງເຕັມໜອງບຶງ ດຽວນີ້ໃຫ້ຫາກົບຂຽດຕາມທົ່ງ ນາແມ່ນບໍ່ຄ່ອຍມີແລ້ວ. ພໍ່ນາຜູ້ນຶ່ງກ່າວວ່າ ແຕ່ກ່ອນ ປີ ໑໙໗໕ ພວກເຮົາພາກັນເຮັດນາ ປີນຶ່ງສອງເທື່ອ ແລະມີກຳລັງໃຈຫາເງິນກໍ່ງ່າຍ. ດຽວນີ້ສັງຂານນັ້ນ ໄດ້ກາຍໄປຫລາຍແລ້ວເຮັດວຽກວັນນຶ່ງຈະບໍ່ເກີນເຖິງ ໕ ຊົ່ວໂມງ ກໍ່ເມື່ອຍແລ້ວ. ລູກສາມຄົນຢູ່ອະເມຣິກາ ເຂົາບອກໃຫ້ຂາຍເອົາເງິນໃສ່ກະເປົາ, ແຕ່ວ່າມູນມັງ ຂອງພໍ່ແມ່ຕ່ອນສຸດທ້າຍ ຖ້າຂາຍໄປແລ້ວຈະເອົາຫຍັງ ມາກິນ ? ລູກບອກໃຫ້ໄປຫາຢູ່ ອະເມຣິກາ ຄິດ ເບິ່ງແລ້ວໂຕເອງກໍ່ເຖົ້າແກ່ແລ້ວຄິດຢາກຫາ ຄວາມສຸກໃສ່ໂຕເອງແດ່ ຖ້າຂາຍນາໝົດໄປ ແລ້ວຄົງຈະບໍ່ມີການທໍຣະມານທຸກຍາກປານ ນີ້ດອກ. ສມັຍແຕ່ກີ້ຂາຍເຂົ້າໄດ້ເງິນເຂົ້າກະ ເປົາໂຕເອງ ຍັງໄດ້ສົ່ງລູກໄປຮຽນຢູ່ຕ່າງປະເທສ ດຽວນີ້ຫາຍາກ ພໍ່ນາຈົ່ມສູ່ນັກຂ່າວຂອງເຮົາ.



ບົ້ງກິນໃບເຂົ້ານາ ຟ້າຝົນແຫ້ງແລ້ງ



ທົ່ງນາເມືອງປະທຸມພອນ ແຂວງສວັນເຂດ



ບ້ານເຊບັ້ງໄຊ, ແຂວງສາລະວັນ ຊາວລາວທຸກຄົນໄປທຳບຸນກິນທານຕາມປະເພນີເດີມ ຂອງເຂົາເຈົ້າ ຮີດບໍ່ໃຫ້ຫ່ມຂອງ ຄອງບໍ່ໃຫ້ເສົ້າ ນັກຂ່າວຂອງ ເຮົາລາຍງານ (ຊູ່ນ)

## ແຂວງໄຊຍະບຸລີຟື້ນຟູພາສາຝຣັ່ງ

ຄົນ ບົວສາເກົ້ວ ລາຍງານ

ຂ່າວຈາກເມືອງປາກລາຍແຈ້ງມາໃຫ້ກອງບັນນາທິການ ລາວວັນນີ້ຊາບວ່າ ໃນວັນທີ່ ໗ ກໍລະກະດາ ປີ ໑໙໙໕ ນີ້ ທາງຫ້ອງການສຶກສາໄດ້ມີການປະຊຸມທົ່ວແຂວງ ໂດຍມາຈາກເມືອງຕ່າງໆເຊັ່ນ: ເມືອງແກ່ນທ້າວ, ເມືອງປາກລາຍ, ເມືອງບໍ່ແຕນ, ເມືອງເງິນ ມີທ່ານບຸນມີ ວິໄລສັກ, ຕາງໜ້າພັກແຂວງ, ອາຈານ ຄ່ອຍ ພູບົວວົງ ອຳນວຍການ ວິທະຍາໄລຍ໌ ທັງໝົດມີ ມ໌໘ ຄົນ ເຂົ້າຮ່ວມການປະຊຸມເພື່ອຟື້ນຟູພາສາຝຣັ່ງເສສ ຄືນນີ້ ທາງກອງປະຊຸມເຫັນວ່າມີຄວາມຈຳເປັນແລະຢາກໃຫ້ການສຶກສາມີຄວາມກ້າວໜ້າສືບໄປຕາມສະພາບແວດລ້ອມຂອງການສຶກສາ. ຕາມທັສນະຂອງຜູ້ຊົງນລາຍງານວ່າ ຄົນເຂດນີ້ສ່ວນຫຼາຍມີພີ່ນ້ອງລູກຫລານໄດ້ອົພຍົບໄປຢູ່ປະເທສສຫະຣັຖອະເມຣິກາ ແລະພວກດັ່ງກ່າວແມ່ນຮຽນແຕ່ພາສາອັງກິດ ໃນອະນາຄົດອາດຈະຫຍຸ້ງຍາກເພາະວ່າພາສາຝຣັ່ງຄົນລາວສ່ວນໃຫຍ່ແມ່ນຢາກລືມໄປໝົດແລ້ວ ແລະພວກທີ່ໄປຢູ່ອະເມຣິກາແມ່ນຕ້ອງການຢາກໃຫ້ພາກັນຮຽນພາສາອັງກິດໝົດ. ຂ່າວຍັງໄດ້ແຈ້ງອີກວ່າ ຫລັງຈາກກອງປະຊຸມອອກມາແລ້ວ ພວກມີລູກຫລານຮຽນພາສາອັງກິດກໍບໍ່ຄ່ອຍດີໃຈ ເພາະວ່າເຂົາເຈົ້າຮູ້ດີວ່າ ຈະຮຽນພາສາຫຍັງມາໄດ້ ກໍບໍ່ເຫັນວ່າຈະມີມເຣັດການກິນເງິນດອນລາ ຄືເກົ່າ ພາສາອັງກິດແມ່ນພາສາເຂົາໃຊ້ທົ່ວໂລກແລ້ວ ຍັງມີອີດທິພົນທັງພາສາຕາຍຕົວຢູ່ແລ້ວ. ພໍ່ຕູ້ ວັນດີ ແຖມຂຶ້ນມາວ່າ ຂ້ອຍໄດ້ກິນເງິນເດືອນນຳລູກຊາຍ ທີ່ເຮັດວຽກການຢູ່ ຣັຖໄອດາໂຮ ລູກຊາຍບອກວ່າໃຫ້ຮຽນພາສານຳ

## ສຶກສາຄົ້ນຄວ້າ ຣັຖທັມນູນ

ລາຍງານໂດຍ ຄຳ ກຸນພົນ

ຄຳໄບ່ ສົມດໄຊຍ໌ ຮອງ ສະມາຊິກສະພາແຫ່ງຊາດ ໄດ້ໂອໂລມ ອະທິບາຍໃຫ້ເຈົ້າໜ້າທີ່ກະຊວງທະບວງກົມຕ່າງ ໆ ໄດ້ສຶກສາຄົ້ນຄວ້າຮ່າຮຽນເອົາກົດໝາຍ







ຣັຖທັມມະນູນໃໝ່ ຂອງ ສ.ປ.ປ.ລາວ. ຍ.ນ. ປະທານສຫະພັນສະມາຄົມແມ່ຍິງລາວກໍ່ໄດ້ມາຮ່ວມສຶກສານຳຫລາຍກະຊວງອ້ອມຂ້າງ. ວັນທີ່ ໘໔ ກໍຣະກະດາ ໑໙໙໕ ນີ້ ທາງສູນກາງ ພັກລາວກ້າວໜ້າ ຍັງໄດ້ໃຫ້ທັສນະວ່າ ກົດໝາຍຫລາຍມາຕຣາ ບໍ່ສອດຄ້ອງກັບແນວຄິດຈິດໃຈຂອງຄົນລາວເລີຍ ເພາະພັກ/ຣັຖຢາກຄອງອຳນາດໃນລາວຕໍ່ໄປ ພວກອື່ນບໍ່ຕ້ອງສົນນຳ.

## ສົມສວາດຮ່ວມປະຊຸມ ກຸ່ມເອຊຽນ

ໂດຍ : ອ່ານອຣ ວົງແກ້ວ



ວັນທີ່ ໘໙ ກໍຣະກະດາ ໑໙໙໕ ນີ້ ອອກສົ່ງສນາມບິນວັດໄຕ ມີທ່ານພຸຍ ບຸບຜາ ອະທິບໍດີ ກະຊວງວ່າການຕ່າງປະເທສ. ພ້ອມດ້ວຍລູກນ້ອງຊັ້ນຈ່າຂອງກະຊວງໄດ້ອອກສົ່ງ ທ່ານ ສົມສວາດ ເລັ່ງສວັດ ຣັຖມົນຕຣີ ວ່າການຕ່າງປະເທສ ເພື່ອເດີນທາງໄປສັງເກດການໃນກອງປະຊຸມໃຫຍ່ ຂອງບັນດາກຸ່ມປະເທສພັນທະມິຕເອເຊັຍ ທີ່ຈະຈັດຂຶ້ນໃນກຸງປາກາຕາ ນະຄອຣຫລວງຂອງ ປະເທສອິນໂດນີເຊ ປະເທສລາວຄິດວ່າຢາກຈະເຂົ້າເປັນສະມາຊິກໃນສະມາຄົມເອເຊັຽດັ່ງກ່າວໃນປີ ໑໙໙໗ ທ່ານກ່າວວ່າ. ນັກຂ່າວ ລາວວັນນີ້ ໄດ້ສອບຖາມ ເຈົ້າໜ້າທີ່ຊັ້ນສູງຂອງກະຊວງຕ່າງປະເທສວ່າ

**ຖາມ**: ເປັນດ້ວຍເຫດໃດລາວທັງຍັງເປັນຄອມມູນິສ ແລະພັກໂທນກຳອຳນາດຢູ່ ຍັງບໍ່ມີເສຣີເທື່ອ ຈຶ່ງຢາກເຂົ້າເປັນສະມາຊິກເອຊຽນ ?

**ຕອບ**: ເພາະມັນເປັນການຈຳເປັນທີ່ສຸດເພື່ອຊ່ວຍກັນສ້າງເສຖກິດໃນຂົງເຂດແຫ່ງນີ້ ອີກປະການນຶ່ງລາວກຳລັງມີເສຣີພາບຫລາຍຂຶ້ນແລະຄຳວ່າຄອມມູນິສມັນຈະຕາຍໄປເອງດອກ ແມ່ນບໍ່ລະ ?

**ຖາມ**: ມີບາງຄົນເວົ້າສູ່ຟັງວ່າລາວເອົານະໂຍບາຍເປັນກາງກັບມາໃຊ້ແມ່ນຄວາມຈິງພຽງໃດ ?

**ຕອບ**: ບໍ່ດອກ ເພາະລາວຈະເປັນເສຣີທຶນນິຍົມ

# ຜູ້ແທນສະຫະພັນເສຖກິດ ແຫ່ງປະເທສຍີ່ປຸ່ນຢ້ຽມຢາມລາວ





ຄຳພອນ ວົງແກ້ວ ລາຍງານຈາກວຽງຈັນທ໌ ລາວ.
ໃນ ວັນທີ່ 16 ກໍຣະກະດາ ປີ 1996

ຂ່າວຈາກວຽງຈັນທ໌ ແຈ້ງມາໃຫ້ສູນກາງກອງບັນນາທິການລາວວັນນີ້ ຊາບວ່າ ທ່ານ ຣີໂຣມິ ຕາກາອິ ພ້ອມດ້ວຍຄນະຜູ້ແທນ ສະຫະພັນເສຖກິດ ແຫ່ງຍີ່ປຸ່ນ ໄດ້ເຂົ້າພົບ ທ່ານ ບຸນຍັງ ວໍຣະຈິດ ຮອງນາຍົກຣັຖມົນຕຣີ ໂດຍການມາຢ້ຽມຢາມລາວຄັ້ງນີ້ ແມ່ນໄດ້ຖືກຕ້ອນຮັບຢ່າງດີ. ທ່ານບຸນຍັງ ວໍຣະຈິດ ຍັງໄດ້ກ່າວຍ້ອງຍໍຕໍ່ທ່ານຜູ້ແທນວ່າປະເທສຍີ່ປຸ່ນໄດ້ໃຫ້ການຊ່ວຍເຫລືອແກ່ລາວໃນທາງດ້ານປັດໃຈ, ເສຖກິດ ຫລາຍດ້ານພວມກ້າວຂຍາຍຕົວຄືການພັທນາເສຖກິດ. ນອກຈາກນັ້ນແລ້ວ ພວກຄນະໄດ້ເຂົ້າພົບປະຢ້ຽມຢາມສະຖານີໂທຣທັດແຫ່ງຊາຕ ແລະກະຊວງຕ່າງໆ ເປັນຕົ້ນກະຊວງເສຖກິດ ສະພາການຄ້າ ແລະບຸກຄົນສຳຄັນຫລາຍ ໆ ທ່ານ. ປະເທດຍີ່ປຸ່ນທີ່ເປັນປະເທສມະຫາອຳນາດທາງດ້ານເສຖກິຈ ແລະມີຣະບອບປະຊາທິປະໄຕຍ໌ ຫລາຍພັກການເມືອງມາໄດ້ຫລາຍປີແລ້ວຫລັງຈາກສົງຄາມໂລກຄັ້ງທີ່ - ໒ ໄດ້ສິ້ນສຸດລົງ ອຳນາຈທາງເສຖກິດແມ່ນໄດ້ຂຍາຍຕົວເປັນທີ່ທຸກປະເທສຮັບຮູ້. ຣະບອບປະຊາທິປະໄຕຍ໌ ໂດຍມີ ອົງຄ໌ພຣະເຈົ້າຈັກພັດ ເປັນປະມຸກນານມາເຖິງປັດຈຸບັນ.

◇ ສ່ວນປະເທສລາວນັ້ນ ແມ່ນຢາກເຮັດຄືຫມູ່ ແຕ່ບໍ່ປະຕິບັດຄືຫມູ່ ພວກເຮົາຈະເຫັນໄດ້ວ່າ ຣະບອບພັກໂທນຂອງ ສ.ປ.ປ.ລາວ ແມ່ນຖອນຮາກຖອນໂຄນ ໂດຍຈັບເອົາເຈົ້າຊີວິດ ແລະອົງຄ໌ຄມະເຫສີ ພ້ອມດ້ວຍ ອົງຄ໌ມົງກຸດຣາຊກຸມານ ຕລອດທັງ ວົງສານຸວົງໄປຂ້າຖິ້ມຢ່າງໄຮ້ມະນຸສຍະທັມ ເຖິງປັດຈຸບັນຍັງບໍ່ໄດ້ຊາບຂ່າວວ່າ ສົພຂອງພຣະອົງຄ໌ ທັງຫມົດໄປຖິ້ມໄວ້ບ່ອນໃດ ? ພັກ/ຣັຖບໍ່ໄດ້ຫົວຊາເລີຍ. ພຣະອາຈານ ອາກາໂນ ອິສຸດາ ເຄີຍເຂົ້າໄປຢ້ຽມຢາມລາວໃນປີ 1974 ໄດ້ເຂົ້າພົບສ່ວນພຣະອົງຄ໌ ວ່າ ເຈົ້າມະຫາຊີວິດສີສວ່າງວັທນາ ເປັນກະສັດລາວທີ່ນັບຖືໃນດ້ານສາສນາພຸທ ແລະຮັກຄົນລາວທຸກເຜົ່າ./



ຕາດນ້ຳໄຫລຈາກຮ່ອມພູ ຫລຽວເຫັນຈາກປ່ອງຢ້ຽມໂຮງແຮມບ່ອນນັກຂ່າວລາວວັນນີ້ ໄດ້ມາພັກຢູ່ແຂວງສາຣວັ



ເຜົ່າລາວສ່ວນນຶ່ງ ເດັກຍິງກຳລັງຕຳຫູກ ພວກຊາວບ້ານພາກັນຫຼັ່ງໄຫລມາເບິ່ງ ນັກຂ່າວຂອງເຮົາ

# ສົມຕິ ອິນທະວົງສ໌

ເມື່ອປະເທສລາວຖືກການປ່ຽນແປງລະບອບການປົກຄອງໃນປີ 1975 ປະຊາຊົນລາວຫລາຍແສນຄົນໄດ້ພາກັນອົພຍົບໄປຢູ່ໃນຕ່າງປະເທສໂດຍສະເພາະປະເທສທີ່ -2 ແລະ ທີ່ -3 ເປັນຕົ້ນໃນສຫະຣັຖອະເມຣິກາ,ການາດາ ແລະປະເທສຝຣັ່ງເສດ. ສ່ວນທີ່ຜູ້ມີພົ້ນອງຢູ່ນຳເຊື້ອສາຍລາວຝັ່ງຊ້າຍຍັງດຳເນີນການຂໍອາສັຍດຳຣົງຊີວິຕຕໍ່ໄປ, ແລະພາກສ່ວນນຶ່ງໄດ້ໂຕນເຂົ້າປ່າຈັບອາວຸດຕໍ່ສູ້ກັບລັດທິຄອມມຸຍນິສແລະບໍ່ຍອມໄປຕັ້ງຖິ່ນຖານປະເທສໃດ ໆ ທັງສິ້ນ. ສົມຕິ ອິນທະວົງສ໌ ໄດ້ມີແນວຄິດຮັກພິຕຸພູມຂອງພໍ່ແມ່ ຜູ້ໃຫ້ກຳເນີດ ຈຶ່ງໄດ້ຫວນກັບຄືນສູ່ດິນແດນຂອງເຂົາທີ່ຍັງຮັກແລະມີຄວາມຢາກຈະພັທນາປະເທສຊາຕໃຫ້ໄດ້ຮັບຄວາມຈເຣີນກ້າວຫນ້າໄປເລື້ອຍ ໆ.

ເຂົາເກີດແລະໃຫຍ່ຂຶ້ນທີ່ປະເທສນອກ ແລະກັບຄືນລາວກ່ອນຫນ້າຈະມີການປ່ຽນແປງພຽງ ໔ ປີ ແຕ່ທຸກຄົນໃນຄອບຄົວຂອງເຂົາບໍ່ມີແນວຄິດຈະອົພຍົບອອກຈາກປະເທສຊາຕໄປເລີຍ ທັ້ງ ໆ ທີ່ຖານະແລະມີບ້ານເຮືອນຢູ່ປະເທສຝຣັ່ງເສດ ພໍ່ຂອງເຂົາກັບເລືອກບ່ອນຢູ່ຖິ່ນກຳເນີດ ເພື່ອທຳງານຮັບໃຊ້ປະເທສຊາຕທີ່ເຂົາຈາກໄປນານແສນນານ.

ມັນບໍ່ແມ່ນຂອງງ່າຍທີ່ຄົນຫນຸ່ມຄືສົມຕິ ອິນທະວົງສ໌ ຈະປັບຕົວໃຫ້ເຂົ້າກັບໂລກໃຫມ່ ລະບອບການປົກຄອງແບບໃຫມ່ ຄືລັດທິຄອມມຸຍນິສ ມາກຊິສ ເລນິນ ເຊິ່ງກຳລັງແຜ່ພາຍທົ່ວປະເທສໃນຂນະນັ້ນຄື 1975. ພາຍໃຕ້ການປົກຄອງສັງຄົມນິຍົມ ໂຊກຊະຕາວາສນາ ຂອງ ສົມຕິ ອິນທະວົງສ໌ ໄດ້ໃຫ້ເຂົາພົບຮັກກັບ ຍິງສາວໃນຣາຊກຸລ ຂອງລູກສາວຂອງສົມເດັດອົງມົງກຸດຣາຊກຸມານ ຂອງລາວ



ຕຶກຄວາມນີ້ ບາງຕອນຄັດມາຈາກ ນ.ພ ຕ່າງປະເທດ ໂດຍ ຄຳມີ



ສົມຕິ ອິນທະວົງສ໌ ຈຶ່ງໄດ້ກາຍມາເປັນຫລານເຂີຍຮັກ ກະສັດ ອົງຄ໌ ສຸດທ້າຍຂອງລາວ ເຊິ່ງໂດຍການໂຄ່ນລົ້ມຈາກບັນລັງຂອງ ພັກປະຕິວັດ ປະຊາຊົນລາວ ແລະ ພັກແນວລາວຮັກຊາຕ. ປັດຈຸບັນ ສົມຕິ ອິນທະວົງສ໌ ໄດ້ເປັນນັກທຸຣະກິຈ ແລະເປັນຄົນກຳເນີດແຫ່ງວຽງຈັນທ໌ ໂດຍແທ້ ສົມຕິ ອິນທະວົງສ໌ ເປັນຄົນທຳອິດທີ່ໄດ້ມາສ້າງບຸກເບີກ ກິຈການໂຮງແຮມທີ່ນະຄອຣຫລວງພຣະບາງ ໂດຍໄດ້ດັດແປງບ້ານຫລັງເກົ່າຂອງແມ່ເຖົ້າໃຫ້ເປັນໂຮງແຮມນ້ອຍ ໆ ຂນາດ ໑໑ ຫ້ອງນອນ. ໂຮງແຮມນີ້ເຫມືອນເດີມ ພາບຝັນສ່ວນປະກອບຂອງເຂົາຄິດຢາກຈະເຮັດທຸຣະກິຈນີ້ມາຕັ້ງນານແລ້ວ. ສົມຕິ ອິນທະວົງສ໌ ເປັນຄົນທີ່ຫນຸ່ມແລະເຂົ້າໃຈພາສາອັງກິດ ແລະຝຣັ່ງເສດຫລາຍກວ່າ ພາສາລາວ ເພາະເຂົາໄປໃຫຍ່ຢູ່ໃນຕ່າງປະເທສ ເຂົາມີ ອ້າຍເອື້ອຍນ້ອງນຳກັນ ໔ ຄົນ ເອື້ອຍ ສາວນຶ່ງຄົນ,ແລະນ້ອງຊາຍ ໔ ຄົນ ນ້ອງຜູ້ນ້ອຍຮຽນຢູ່ ເອແບຄ ກຸງເທພ !

ສົມຕິ ອິນທະວົງສ໌ ເກີດທີ່ປະເທສ ສວິສເຊີແລັນ ແຕ່ໄປໃຫຍ່ຢູ່ທີ່ ປະເທສຝຣັ່ງເສດ ປູ່ຂອງເຂົາໄປຊື້ບ້ານໄວ້ຢູ່ທີ່ນັ້ນ ນານໄດ້ເຖິງ ໘໐ ປີແລ້ວ ຢູ່ທາງພາກໃຕ້ຂອງຝຣັ່ງເສດໃກ້ກັບມັກໄຊຍ໌.

ໃນຊີວິດຂອງ ສົມຕິ ອິນທະວົງສ໌ ໄດ້ຢູ່ທີ່ຝຣັ່ງເສດ ໑໑ ປີ ມາຢູ່ ກຸງເທພ ນຳພໍ່ໃນຕອນນັ້ນ ເພິ່ນທຳງານຢູ່ທີ່ອົງການ ແມ່ນ້ຳຂອງ. ຕອນຢູ່ກຸງເທພ ສົມຕິ ອິນທະວົງສ໌ ຮຽນຢູ່ ສະມາຄົມຝຣັ່ງເສດ ທີ່ສາທອຣໃຕ້ ດຽວນີ້ເຂົາກັບໄປຈຳບໍ່ໄດ້ແລ້ວ. ເຂົາຍັງໄດ້ຮຽນ ຢູໂດ ນຳອາຈາຣ ຄົນຍີ່ປຸ່ນສອນໃຫ້ ຫລັງຈາກເຂົາຢູ່ທີ່ ກຸງເທພ ໔ ປີ ແລ້ວກໍ່ກັບຄືນສູ່ວຽງຈັນທ໌ ໃນປີ ໑໙໗໑. ພໍ່ເຂົາກັບມາກໍ່ປ່ຽນເປັນສັນຊາຕ ແລະຮຽນຮູ້ພາສາລາວ ເພາະຕອນ ສົມຕິ ອິນທະວົງສ໌ ກັບມາປາກພາສາລາວບໍ່ໄດ້ ຂຽນກໍ່ບໍ່ເປັນ ເຫັນແມ່ເຖົ້າຄ້ຽວຫມາກກໍ່ຢ້ານ ເຫັນຟັນດຳກໍ່ຟ້າວແລ່ນຫນີ.

ແຕ່ອາຍຸ ໑໓ ປີ ເຂົາກໍ່ປັບຕົວເຂົ້າສະພາບແວດລ້ອມໄດ້ແລ້ວ ແລະຮຽນພາສາລາວກໍ່ໄດ້ດີ ເຂົາກັບມາຢູ່ລາວໄດ້ແຕ່ພຽງ ໔ ປີ ໃນປີ ໑໙໗໕ ປະເທສລາວກໍ່ເກີດມີການປ່ຽນແປງການປົກຄອງ ຈາກລະບອບກະສັດ ມາເປັນລະບອບສັງຄົມນິຍົມ ຄອມມຸຍນິສ ແຕ່ເຂົາກໍ່ພໍປ່ຽນແປງໄປໄດ້. "ຕອນນັ້ນ ໃນຖານະເຂົາຍັງຫນຸ່ມອາຍຸພຽງ ໑໕ ປີ ເຂົາກໍ່ຕ້ອງຮຽນຮູ້ວ່າຄວນຈະຜລິຕກິນເອງ ບໍ່ແມ່ນວ່າອັນໃດກໍ່ຕ້ອງຊື້ມາຈາກປະເທສນອກ ມີຄວາມຄິດຢ່າງນຶ່ງຄືການປູກສ້າງໃຫ້ແກ່ເດັກໃນໂຮງຮຽນສມັຍນັ້ນ. ຈຳໄດ້ວ່າເຂົາມີສວນຂອງໂຮງຮຽນເຂົາຕ້ອງໄປເຮັດສວນທຸກວັນເສົາ

>>





ແຕ່ຊົ່ວໂມງດຽວຜົນຂອງການເຮັດສວນຂອງເຂົາ ພວກຜັກກາດ ກໍ່ເອົາມາຄົວກິນໃນງານລ້ຽງເວລາປິດເທີມຂອງໂຮງຮຽນ ຫຼືເອົາໄປຂາຍ

...ຕໍ່ມາເຂົາກໍ່ຄິດວ່າ ໂອ! ເປັນຢ່າງນີ້ເອງທີ່ພັກແລະຣັຖສອນໃຫ້ເຮົາຜລິຕເອົາເອງ ແລະເຫັນຜົນຂອງການຜລິຕວ່າເປັນຢ່າງນີ້ ເຂົາຄິດວ່າມັນເປັນເຣື່ອງຂອງການປັບຕົວໃຫ້ເຂົ້າກັບສະພາບໃຫມ່ໃນຣະບອບໃຫມ່ ກໍ່ມີຄົນທີ່ປັບຕົວບໍ່ໄດ້ ຕ້ອງຫນີໄປ ມີບາງຄົນກໍ່ເປັນເຫຕການທາງການເມືອງ ບາງຄົນເພາະເຫຕຜົນທາງທຸຣກິຈ ແລະບາງຄົນເຫັນຫມູ່ເພື່ອນພັກພວກໄປກໍ່ໄປນຳ

" ແຕ່ຄອບຄົວຂອງ ສັນຕິ ອິນທະວົງສ໌ ກັບຕົງກັນຂ້າມ ພໍ່ຂອງເຂົາບໍ່ເຄີຍຈະຄິດຫນີອອກຈາກປະເທສທີ່ເສນຮັກແລະຖນອມຂອງເຂົາ ພໍ່ຂອງ ສັນຕິ ອິນທະວົງສ໌ ເປັນຄົນຢູ່ທີ່ຕ່າງປະເທສເວລາດົນນານ ເວລາກັບມາກໍ່ຢາກຈະຮັບໃຊ້ປະເທສຊາຕ ຈະເປັນຣະບອບໃດກໍ່ແລ້ວແຕ່ເທົ່ານັ້ນເອງ

..... ພວກເຮົາກໍ່ເຄີຍໄປຢູ່ຕ່າງປະເທສມາເລ້ວຄືຝຣັ່ງເສດມາແລ້ວ ຢູ່ໃສກໍ່ຫາຢູ່ຫາກິນມີວຽກເຮັດງານທຳ ເປັນຫຍັງເຮົາບໍ່ຫາບ່ອນມີຣາກຖານຢູ່ແລ້ວ ຄືເປັນການປຸກສ້າງຈິດໃຈທີ່ພໍ່ຜູ້ປຸກສ້າງໄວ້ໃຫ້ ເຂົາກ່າວວ່າ ແຕ່ກ່ອນພໍ່ເພິ່ນເປັນສະມາຊິກໃນສະພາປະຊາຊົນສູງສຸດ ຕັ້ງແຕ່ປີຮຽນແປງການປົກຄອງມາກໍ່ຢູ່ໃນຄນະຣັຖບານມາຕລອດ ພຽງແຕ່ປີຮຽນກະຊວງ" ເມື່ອສັນຕິ ອິນທະວົງສ໌ ຮຽນຈົບຊັ້ນມັທຍົມຕອນປາຍ ເຂົາໄດ້ເຂົ້າໄປຮຽນຕໍ່ຄນະສຶກສາສາຕຣ໌ທີ່ມະຫາວິທຍາລັຍໃນວຽງຈັນທ໌ ເພື່ອອອກມາເປັນຄຣູສອຣ ແຕ່ປະກົດວ່າເຂົາບໍ່ເຄີຍໄດ້ຮັບຣາຊການເປັນຄຣູຕາມທີ່ໄດ້ຮຽນມາເລີຍ.

"ຈົບມາເຂົາໄປເປັນນັກຂ່າວກ່ອນ ຢູ່ສຖານີວິທະຍຸແຫ່ງຊາຕ ເຂົາຈະໄປຢູ່ໃນເຂດພາສາຝຣັ່ງເສດໂດຍສະເພາະເຮັດວຽກຢູ່ ໘ປີ

...ຕໍ່ມາກໍ່ໄປຢູ່ສັງຄົມສົງເຄາະ ແລະຕໍ່ມາກໍ່ຢາກຈະເຣີ່ມເຮັດທຸຣກິຈ ກໍ່ເຣີ່ມຈາກໃນການຈັດຕັ້ງບໍຣິສັທ ຫຸ້ນກັບອອສເຕເລັຽ ຄົນອະເມຣິກັນແດ່ ເຮັດຫລາຍຢ່າງ ແຕ່ບໍ່ມີຫຍັງເກີດຂຶ້ນຈັກຢ່າງ ຖ້າໂຄງການສຳເຣັຈກໍ່ຄົງໄປໄດ້ດີ ແຕ່ມັນເປັນໂຄງການຍາກ ໆ ເຊັ່ນສາຍການບິນ ໂຮງງານເບັຽ ຕອນນັ້ນກໍ່ມີຄູ່ແຂ່ງ ກໍ່ດຳເນີນໄປຊ້າງ ໆ ແຕ່ດຽວນີ້ເຂົາກໍ່ເປັນນັກທຸຣກິຈຜູ້ນຶ່ງທີ່ແມ່ກຳເນີດມາຈາກຄົນວຽງຈັນທ໌ ແລະໄດ້ມາບຸກເບີກພັທນາຫຼວງພຣະບາງເຊິ່ງອະດີດເຄີຍເປັນນະຄອຣຫຼວງປະທັບຂອງພຣະເຈົ້າມະຫາຊີວິຕຣ໌ຂອງລາວ.

... ທາງດ້ານວັດວາອາຮາມພຸທສາສນາໃນນະຄອຣຫຼວງພຣະບາງກໍ່ມີຫລາຍສິ່ງຫລາຍຢ່າງສະຖາປັຕຍະກັມກໍ່ຕ່າງໄປຈາກແຫ່ງອື່ນແລະການນັບຖືທາງດ້ານສາສນາທາງຫຼວງພຣະບາງຈະຮູ້ສຶກວ່າຊາບຊຶ້ງຫລາຍ. ຄວາມຝັນຂອງ ສັນຕິ ກັບກາຍມາເປັນຄວາມຈິງ ເມື່ອແຕ່ງງານກັບລູກສາວຂອງອົງມົງກຸດຣາຊກຸມາຣອົງຄ໌ສຸດທ້າຍຂອງລາວ ຊຶ່ງມີອາຍຸລື່ນກັນ ໑໐ ປີ ວັນທີ່ສັນຕິ ອິນທະວົງສ໌ ຈະໄດ້ພົບ ພັລຍາວ່າ ໃນຕອນນັ້ນເຂົາລົງມາຮຽນທີ່ວຽງຈັນທ໌ ສັນຕິກຳລັງຮຽນມະຫາວິທະຍາລັຍປີສຸດທ້າຍແລ້ວ ຕ້ອງໄປຝຶກສອນ ສອນສອງຫ້ອງດ້ວຍກັນ ແຕ່ເຂົາບໍ່ໄດ້ສອນຫ້ອງທີ່ເຈົ້າຍິງຮຽນຢູ່ນັ້ນ ເພື່ອນຂອງສັນຕິ ບອກວ່າ ມີລູກສາວຂອງອົງມົງກຸດຣາຊກຸມາຣ ຮຽນຢູ່ ເຂົາຍັງຖາມອີກວ່າ ແມ່ນແທ້ບໍ່? ເທົ່ານັ້ນແຫລະ ແລ້ວ

>>

ເວລາທີ່ ສົມຕິ ຮູ້ຈັກ ເຈົ້າຍິງຜູ້ເປັນພັລຍາກໍ່ຖາມວ່າ ປີນັ້ນຢູ່ໂຮງຮຽນນັ້ນຫລືບໍ່ ? ບອກວ່າແມ່ນແລ້ວ. ເຂົາບໍ່ນຶກວ່າຈະມາພົບ ແຕ່ແລ້ວໄດ້ມາພົບທີ່ວຽງຈັນທ໌ໂດຍບັງເອີນ ຕອນທຳອິດ ສົມຕິ ໄດ້ເຫັນເຈົ້າຍິງຍ່າງຂ້າມທາງທີ່ວຽງຈັນທ໌ ກໍ່ເລີຍຕິດຕາມຕື້ເອົາ ເພາະວ່າເຫັນເຈົ້າຍິງຖືກຕາດີ ແລ້ວກໍ່ຄິດວ່າ ມັນໄວເກີນໄປ ແລ້ວກໍ່ບໍ່ຄິດຈະວ່າຈະໄວເຖິງຂນາດນີ້ ຍັງງົງຢູ່ ! ... ຕອນພົບທີແຣກເຂົາກໍ່ບໍ່ໄດ້ຄິດເລີຍວ່າ ຍິງຄົນນີ້ແມ່ນລູກໃຜ ວັນທີ່ ມີຈົ່ງຊາບ ແຕ່ຊາບແລ້ວກໍ່ບໍ່ໄດ້ຄິດຫຍັງ..

...ອົງມົງກຸດຣາຊກຸມາຣ ມີລູກສາວ ມີ ຄົນ ພັລຍາຂອງເຂົາເປັນຄົນທີ່ ໔ ຄົນນຶ່ງ ຢູ່ທີ່ອອສເຕເລັຽ. ເມື່ອເກີດເຫດການປະຕິວັດປ່ຽນແປງການປົກຄອງຂຶ້ນນັ້ນ ຣັຖບາລຊຸດໃຫມ່ໄດ້ເຊີນສົມເດັດເຈົ້າສີສວ່າງວັທນາ ເຈົ້າມະຫາຊີວິດ ຊຶ່ງປະທັບຢູ່ທີ່ຫຼວງພຣະບາງ ໃຫ້ທຣົງເປັນທີ່ປຶກສາຣັຖບາລທີ່ວຽງຈັນທ໌ ແລະອົງຄ໌ມົງກຸດຣາຊກຸມາຣ (ເຈົ້າຟ້າຊາຍວົງສວ່າງ) ໄດ້ຮັບເຊີນໃຫ້ເປັນທີ່ສະມາຊິກປະຈຳສະພາສູງສຸດ ແຕ່ທັ້ງສອງພຣະອົງຄ໌ ບໍ່ທຣົງຍິນດີທີ່ຮ່ວມດ້ວຍ

ໃນປີ ໑໙໗໖ ຣັຖບາລຈຶ່ງເຊີນສເດັດທັງສອງພຣະອົງຄ໌ໄປທີ່ຊຳເຫນືອ ແລະຕັ້ງແຕ່ນັ້ນມາ ກໍ່ບໍ່ມີໃຜໄດ້ຂ່າວຄາວຂອງສອງພຣະອົງຄ໌ ອົງຄ໌ອັກຄມະເຫສີ ແລະຕລອດເຖິງວົງສານຸວົງສ໌ອື່ນ ໆ ອີກເລີຍ ຕັ້ງແຕ່ນັ້ນເປັນຕົ້ນມາ ເຈົ້າຍິງມະນີລັຍ (ແມ່ເຖົ້າ) ກໍ່ໄດ້ລ້ຽງລູກ ໆມາຕາມລຳພັງ ແມ່ເຖົ້າເປັນຄົນທີ່ກ້າຫານ ສລາດ ແລະນິດສັຍດີຫຼາຍ ຖ້າເປັນຄອບຄົວທັມດາກໍ່ເຣື່ອງນຶ່ງ. ແມ່ເຖົ້າເພິ່ນຢູ່ໃນພຣະຣາຊວັງມາແລ້ວວັນຫນຶ່ງເມື່ອເກີດການປ່ຽນແປງຂຶ້ນເຂົາສາມາຖປັບຕົວໄດ້ ກໍ່ສແດງວ່າເກັ່ງແລະມີຄວາມສາມາດທີ່ສຸດ !

> ຫລວງພຣະບາງເປັນເມືອງຊຶ່ງຄວຣຈະຢູ່ຢ່າງນ້ອຍຫນຶ່ງອາທິດຍ໌ ແລ້ວໃຊ້ເວລາເບິ່ງບ້ານເມືອງຮອບ ໆ ໃນເຂດນອກ, ເບິ່ງວັດວາ ຈະຮູ້ສຶກຈັບໃຈກວ່າແຫ່ງອື່ນ ໆ ອີກດ້ວຍ.

ສົມຕິ ອິນທະວົງສ໌ ແລະ ເຈົ້າຍິງ ພັລຍາ ໄດ້ເຂົ້າພິທີແຕ່ງງານກັນທີ່ ຫລວງພຣະບາງ ໃນປີ ໑໙໘໙ ຫລັງຈາກແຕ່ງງານໄດ້ປະມານ ໔ ປີ ກໍ່ໄດ້ເຣີ້ມທຳກິຈການສ້ອມແປງບ້ານຫລັງເກົ່າທີ່ທາງຣັຖບາລໄດ້ຍຶດໄປໃນປີ ໑໙໗໖ ນັ້ນຄືນໃຫ້ ແລ້ວກໍ່ຕຶກໄດ້ຖືກເກົ່າຊຸດໂຊມລົງຫລາຍກ່ວາຈະມາດັດແປງໃຫມ່ນັ້ນຕ້ອງໃຊ້ເວລາຫລາຍທີ່ສຸດ. ໄດ້ປັບປຸງບ້ານເກົ່ານີ້ໃນເດືອນສິງຫາ ປີ ໑໙໙໑ ແລ້ວກໍ່ສຳເຣັດລົງໃນປີ ໑໙໙໔ . ເປັນຕຶກເກົ່າແບບໂຄໂລນຽນ ມີປະວັດວ່າກໍ່ສ້າງມາຍາວນານແລ້ວ.

.. ຖ້າສົນໃຈດ້ານສາສນາ ຄົນຫລວງພູະບາງເປັນຄົນເຄັ່ງສາສນາ ຈຶ່ງມີວັດເກົ່າແກ່ແລະສວຍສົດງົດງາມໃຫ້ຊົມທ່ອງທ່ຽວ ໔໐ ວັດ ແລະມີປະເພນີທາງສາສນາໃຫ້ເບິ່ງກັນທັງປີ. ທາງດ້ານສາສນາມີຫລາຍຢ່າງ ແລະຮູ້ສຶກປະທັບໃຈ.. ວັນມາຄະບູຊາ ຊາວສວນຈະຢຸດເຮັດສວນແລ້ວເຂົ້າມາໃນເມືອງ ມີສິ່ງຂອງແນວໃດກໍ່ຕ້ອງນຳມາຂາຍເປັນພິເສດ ຕອນກາງຄືນຈະມີການແຫ່ເຂົ້າຕົ້ນ ກໍ່ເປັນການໄປມາຫາສູ່ກັນ ຜູ້ຍິງແລະຜູ້ຊາຍກໍ່ມີໂອກາດໄປໂອ້ໂລມກັນຕາມພາສາປະເພນີຂອງຊາວຫຼວງພຣະບາງແລະຍັງເຮັດໃຫ້ຜູ້ມາທ່ອງທ່ຽວມີຄວາມອົບອຸ່ນ ການຊ່ວຍເຫລືອເກື້ອກູນຊຶ່ງຊາວຫຼວງພຣະບາງເຄີຍປະຕິບັດມາຕັ້ງນານໆ ນັ້ນຍັງຝັງເລິກໃນບົນຈິດໃຈອັນຂາວສອາດສເມີ ຄົນຊາວຫລວງພູະບາງມີນິສັຍເອື້ອອາຣີ ມີອາຫານແນວໃດດີ ໆ ກໍ່ຈະມາສແດງໃຫ້ຄົນແປກຫນ້າໄດ້ຊີມແລະໄດ້ຮັບ ເປັນຕົ້ນເຂົ້ານົມບ່າຍບົ່ນ, ໄຄຫີນ ແລະເຂົ້າປາອາ-ຫານອື່ນ ໆ ຢ່າງມາກມາຍ.

ເຣື່ອງຄວາມປອດພັຍໃນເມືອງນີ້ ຖ້ານີ້ຫຍັງກໍ່ຈະເຖິງຫູຂອງຄົນທີ່ມາຢ້ຽມຢາມສົມຕິ ອິນທະວົງສ໌ ຍັງເວົ້າວ່າ ບ້ານບໍ່ໄດ້ລອກປະຕູ ປະຣົຖຖີບໄວ້ນອກບ້ານຍັງບໍ່ເສັຽຫາຍໄປໃສ ຄົນປຸ້ນຂີ້ລັກນັກຈົກບໍ່ມີໃນນຄອຣຫຼວງພຣະບາງເຖິງເວລານີ້ຍັງເປັນຢ່າງນີ້ຢູ່ ທຸກຄົນຮູ້ຈັກສົດທິຂອງກັນດີທາງຖນົນຮູ້ສຶກວ່າຍັງບໍ່ປອດພັຍ ແຕ່ລະປີຈະມີເຫດການເກີດຂຶ້ນສອງຄັ້ງຄືມາຈາກວຽງຈັນທ໌ ຫາ ຫຼວງພຣະບາງ ເປັນພວກກໍ່ກວນຄືຈະແມ່ນພວກຕໍ່ຕ້ານຝ່າຍເສຣີ ຫລວງພຣະບາງເປັນເມືອງທີ່ລີ້ຊ່ອນຢູ່ຣະຫວ່າງພູເຂົາ ຖນົນຫົນທາງຍັງບໍ່ໄດ້ຮັບບູຣະນະໃຫ້ສະດວກ.

ເມື່ອວັນທີ່ ໘ ທັນວາ ປີທີ່ແລ້ວ ຍູເນສໂກຈັດໃຫ້ຫລວງພຣະບາງເປັນເມືອງຫລວງໂລກ ເປັນເມືອງອະນຸຮັກຊ໌. ຫຼວງພຣະບາງໄດ້ປ່ຽນແປງໄປແດ່ແລ້ວ ນັກທ່ອງທ່ຽວກໍ່ຫນ້າຢາກຈະມາທ່ຽວຊົມຄວາມສວຍງາມທາງດ້ານວັທນະທັມແລະວັດວາສາສນາຂອງລາວອັນເກົ່າແກ່ ພວກເຮົາໄດ້ເຫັນພຣະຣາຊວັງເກົ່າແລ້ວ ອົດຄວາມຄິດເຖິງພຣະເຈົ້າມະຫາຊີວິດບໍ່ໄດ້ ເພາະພຣະອົງຄ໌ບໍ່ໄດ້ມີອຸດົມການວ່າຈະຄິດກຽດຊັງປະຊາຊົນຄົນລາວທຸກເຜົ່າແລະຮັກຫອມທຸກຄົນ ມີໃຜແດ່ຄິດຈະກັບສ້າງສາຊາຕຊ່ອຍກັນ !

# ສຸມານາ ລິວຣ໌ ເຂົາຮັກພື້ນແຜ່ນດິນລາວ ຈະຕ້ອງຫວນຄືນ





ໂດຍ : ຄຳນີ

ກ່ອນຈະເອົາບົດຄວາມກ່ຽວກັບ ສຸມານາ ແລະ ແພັດຕຣິກ ມາລົງ ຂ້າພະເຈົ້າຜູ້ຂຽນຢາກຈະໃຫ້ເພື່ອນສະມາຊິກແລະທ່ານຜູ້ອ່ານໄດ້ຊາບເຖິງຊີວິດ ແລະທີ່ມາຂອງທັງສອງຄົນນີ້ ພວກເຮົາແລະຜູ້ອ່ານຄວນຈະຍົກເອົາຕອນໃດນຶ່ງມາເປັນຕົວຢ່າງດີ " ຄວາມຮັກພື້ນແຜ່ນດິນຂອງລາວ " ແລະເຮົາຄວນເຮັດຫຍັງໃຫ້ຊາດຂອງເຮົາໄດ້ຮັບຄວາມອົບອຸ່ນໃນການດຳຣົງຊີວິດຂອງພົລເມືອງໄດ້. ຊີວິດຂອງ ສຸມານາ ລິວ ແຕກຕ່າງກັບຄົນລາວອື່ນ ໆ ດ້ວຍກັບວ່າ ນິຍາຍນຳອີກ ແລະເປັນເພາະເຊື້ອຊາດລາວທີ່ມີຢູ່ໃນສາຍເລືອດຂອງເຂົາທັງສອງນັ້ນເອງ ທີ່ເສື່ອມໂຍງໃຫ້ເປັນເຣື່ອງຣາວຕ່າງ ໆ.

ນາງສຸມານາ ເຣີ່ມເລົ່າຊີວິດທີ່ຫນ້າສົນໃຈຂອງນາງໃຫ້ຟັງວ່າ

" ສຸດເກີດທີ່ກຸງເທພ ເພາະວ່າແມ່ເຊິ່ງເປັນເຊື້ອເຈົ້າຂອງຊຽງຂວາງ ທີ່ຢູ່ທາງເຫນືອຂອງລາວ ແຕ່ກ່ອນແມ່ຮຽນຫນັງສືຢູ່ທີ່ຝຣັ່ງເສສ ເມື່ອຮຽນຈົບແລ້ວຕ້ອງກັບມາລາວ ພໍດີແມ່ຖືພາມີທ້ອງກັບຄົນຝຣັ່ງເສສ

ພໍຖືພາມີທ້ອງກໍ່ຖືກແຍກ ເພາະພໍ່ຕາເອົາ ແມ່ກັບຄືນມາ ໂດຍບໍ່ໃຫ້ຢູ່ທີ່ປະເທສຝຣັ່ງເສສ ຫລັງຈາກນັ້ນ ພໍ່ ແລະແມ່ ກໍ່ບໍ່ໄດ້ພົບກັນອີກເລີຍ

ທຸຕາ ຄືເຈົ້າສາຍຄຳ ກໍ່ບໍ່ໄດ້ພໍໃຈເທົ່າໃດ ເພາະແມ່ຍັງບໍ່ໄດ້ແຕ່ງງານ ເມື່ອແມ່ຖືພາ ກໍ່ຕ້ອງໄປຢູ່ທີ່ກຸງເທພ ຊົ່ວຄາວ ແລ້ວສຸດກໍ່ໄດ້ເກີດຢູ່ນັ້ນ

.... ສຸດຢູ່ກັບເພື່ອນຂອງທຸຕາ ທີ່ເຂົາເບິ່ງແຍງຈົນມາເຖິງອາຍຸໄດ້ ໕ ປີ ເປັນຊາວຝຣັ່ງເສສ ສຸດເອີ້ນເຂົາວ່າ ພໍ່ບຸນທັນ

... ຕອນນີ້ເຂົາກໍ່ຍັງຢູ່ທີ່ກຸງເທພ ເຂົາເປັນຫມໍ ເມື່ອກ່ອນເຂົາເປັນຄົນຕິດຕາມ ທຸຕາມາຕລອດ ເຊັ່ນວ່າເວລາໄປຕ່າງປະເທສ

... ຕອນຢູ່ກຸງເທພ ສຸດກໍ່ໄດ້ຮຽນຫນັງສືທີ່ສະມາຄົມຝຣັ່ງເສສ ພໍອາຍຸ ໕ ປີ ແມ່ກໍ່ມາຮັບໃຫ້ກັບໄປຢູ່ທີ່ລາວ ໄປຢູ່ກັບທຸຕາ

... ຫລັງຈາກນັ້ນ ແມ່ກໍ່ແຕ່ງງານໃຫມ່ກັບຄົນຝຣັ່ງເສສທີ່ເຂົາມີນິສັຍດີຫລາຍ ເຂົາຖືສຸດເຫມືອນກັບລູກຄີງ ໆ ແລະສຸດກໍ່ຄິດວ່າເຂົາເປັນພໍ່ຈິງໆ ແລະບໍ່ເຄີຍຄິດຈະຖາມວ່າເປັນພໍ່ຈິງຫລືວ່າບໍ່ແມ່ນ "

ເມື່ອລາວເກີດການປ່ຽນແປງຣະບົບການປົກຄອງ ມີຜົລໃຫ້ຊີວິດຂອງຄົນລາວທຸກ ໆ ຄົນປ່ຽນຕາມໄປດ້ວຍ ແລະມີການຍົກຍ້າຍຖິ່ນຖານທີ່ຢູ່ ພັດພາກຈາກຄອບຄົວແລະບ້ານເກີດເປັນຈຳນວນຫລາຍແສນຄົນ

" ຕອນນັ້ນ ສຸດບໍ່ໄດ້ຢູ່ທີ່ລາວ ທຸຕາສົ່ງໄປຢູ່ທີ່ຝຣັ່ງເສສໃນປີ ໑໙໗໕ ແລະທຸຕາກໍ່ບໍ່ໄດ້ອະທິບາຍໃຫ້ຟັງວ່າ ເປັນຫຍັງເຮົາຈຶ່ງໄປຢູ່ທີ່ຝຣັ່ງເສສ ເປັນຫຍັງເຮົາຢູ່ລາວບໍ່ໄດ້ ? ເພິ່ນມີແຕ່ບອກວ່າ ເຮົາໄປທ່ຽວຝຣັ່ງເສສກັນ

... ສ່ວນແມ່ຍັງຢູ່ທີ່ລາວ ເຂົາຖືເປັນຄົນທັມດາ ເພາະເຂົາແຕ່ງງານກັບຄົນຝຣັ່ງເສສແລ້ວ ມີແຕ່ທຸຕາ ແລະນ້ອງ ໆ ຂອງແມ່ ກໍ່ພາກັນໄປປະເທສຝຣັ່ງເສສ ໄປຢູ່ທີ່ນັ້ນຈັກຊົ່ວຄາວ

...ຕອນນັ້ນ ສຸດ ຈຳບໍ່ຄ່ອຍໄດ້ ແຕ່ພໍ່ ແລະແມ່ ກໍ່ບໍ່ໄດ້ລຳບາກຫຍັງ ສະບາຍດີກັນກັບທຸກ ໆຄົນທີ່ຢູ່ລາວ ບ້ານເຮືອນກໍ່ຍັງຢູ່ເຫມືອນເດີມ ກິຈການຂອງເຮົາກໍ່ຍັງມີຢູ່ເຫມືອນເດີມ

...ຕອນນັ້ນເຮົາກໍ່ໃຊ້ຊີວິດເຫມືອນເຈົ້າແຕ່ກ່ອນບໍ່ໄດ້ແລ້ວ

...ແຕ່ພໍ່ກໍ່ຊ່ອຍ ເຊັ່ນ ຖ້າມີການແຂ່ງກິລາ ພໍ່ກໍ່ຈະເອົາເສື້ອກິລາມາແຈກ ເອົາລູກບອລມາໃຫ້ເຂົາເຫລັ້ນ ແລະເຂົາທຳງານກັບຄົນທີ່ເຂົາຮັກແພງ ເຊັ່ນໄປປູກເຂົ້າ ພໍ່ກໍ່ໄປດ້ວຍ ເພາະພໍ່ເພິ່ນມັກທາງນີ້"

ນາງເອີ້ນພົວໃຫມ່ຂອງແມ່ວ່າ ພໍ່ ຢ່າງເຕັມອົກເຕັມໃຈ ແລະພໍ່ຄົນນີ້ໄດ້ມີສ່ວນປູກຝັງທັ້ງຊີວິດການສຶກສາ ແລະອະນາຄົດທີ່ດີໃຫ້ແກ່ນາງຢ່າງເຕັມທີ່

"ຕອນຍັງນ້ອຍ ພໍ່ກໍ່ໃຫ້ຮຽນແກະຜົລໄມ້ ໄດ້ຮຽນລຳລາວດ້ວຍ ໄດ້ຮຽນຕີຣະນາດ ແລະຮຽນປີອາໂນເຖິງເກຣດ ໗ ຈາກທຣິນິຕີ ຄອຣເລດຈ໌ ສຸດໄດ້ຮຽນທັງວັທທັມ

>>

ຕາວັນອອກແລະຕາວັນຕົກ ພໍ່ເພີ່ນໃຫ້ຮຽນສຸດ ຮັກພໍ່ທີ່ສຸດ

... ພໍ່ອາຍຸ ໑໐ ປີ ພໍ່ກໍ່ສົ່ງສຸດໄປຮຽນທີ່ ອິນເດັຽ

...ຕອນນັ້ນ ພໍ່ມີເພື່ອນທີ່ເປັນເຊື້ອເຈົ້າຂອງເນປານ ແລະເຂົາເອົາລູກຂອງເຂົາໄປຮຽນຢູ່ທີ່ກາຣະຈີລິງ ເປັນໂຮງຮຽນອັງກິດ ສຸດໄປຢູ່ທີ່ນັ້ນ ໑໘ ປີ ແຕ່ລະປີກໍ່ກັບມາຢາມລາວຕອນປິດເທີມ ມາຢູ່ເທື່ອລະ ໓ ເດືອນ

...ຕອນໄປເຖິງກາຣະຈີ ຄັ້ງແຮກ ສຸດເວົ້າພາສາອັງກິດບໍ່ໄດ້ເລີຍ ເພາະເວົ້າເປັນແຕ່ພາສາຝຣັ່ງເສດ ແລະພາສາລາວ ໝູ່ເພື່ອນເຂົາປາກພາສາອັງກິດໝົດ ເຮົາກໍ່ຕ້ອງຕັ້ງໃຈ ແຕ່ກໍ່ຮຽນໄດ້

...ເດັກນ້ອຍສ່ວນໃຫຍ່ໃນໂຮງຮຽນນີ້ຈະມີຫລາຍຊາດ ມີຄົນໄທຍ໌ ປະມານ ໓໐ ກ່ວາຄົນ ແລະມີອອສເຕເລັຽ ອັງກິດ ເນປານ ເປັນຕ້າຍ ໆ ໂຮງຮຽນອິນເຕີນາຊັອນນານ ແຕ່ເປັນໂຮງຮຽນທີ່ແພງ ໃຜທີ່ຈະສາມາດສົ່ງລູກໄປຮຽນໄດ້ກໍ່ຍິ່ງດີ ເພາະວ່າເຂົາມີມາດຖານ ( ສແຕນດາດ) ທີ່ເໝືອນອັງກິດດຽວນີ້ ກໍ່ຍັງເປັນຢູ່

...ເຂົາເຄັ່ງຄັດຣະບຽບທີ່ສຸດ ຕ້ອງໃສ່ເຄື່ອງແບບ ແລະເຂົາສອນວິທີນັ່ງໂຕະກິນເຂົ້າ ບອກວິທີເຮົາຈະຕ້ອງອອກສັງຄົມຕໍ່ໄປ ເປັນໂຮງຮຽນຜູ້ຍິງກັບຜູ້ຊາຍ ແຕ່ເຮົາມີຫໍພັກແຍກກັນແລະຕ້ອງຢູ່ປະຈໍາເລີຍ

...ທີ່ກາຣະຈີລິງ ນີ້ສວຍງາມທີ່ສຸດ ຄົນສ່ວນໃຫຍ່ເປັນເນປານ ທິເບດ ແລະກໍ່ນິສັຍດີຫຼາຍເໝືອນຄົນເອຊຽນເຮົາເລີຍ ໄປກໍ່ບໍ່ຄ່ອຍຄິດຢ້ານເທົ່າໃດ

...ທີ່ເປັນຕາຢ້ານທີ່ສຸດກໍ່ຕອນນັ່ງເຮືອບິນຈາກກຸງເທພໄປກາລກັດຕາ ຄົນບໍ່ເໝືອນຄົນທາງເໜືອ ທຸກຍາກຫຼາຍ ອໍຫານຫຼາຍ ສຸດຢ້ານແຕ່ແທ້ ແລ້ວກໍ່ເປື້ອນເປິະຫຼາຍ ທີ່ບໍ່ສາມາດໄປມາໄດ້

...ຕອນໄປຢູ່ທີ່ນັ້ນພວມອິດ ຄິດເຖິງບ້ານຫຼາຍ ແລະບໍ່ເຂົ້າໃຈວ່າເປັນຫຍັງແມ່ຈິ່ງໃຫ້ໄປໄກປານນີ້ ຕອນນັ້ນຢູ່ທີ່ລາວກໍ່ບໍ່ມີໂຮງຮຽນ ແລະພໍ່ຄິດວ່າ ຖ້າຈະຢູ່ທີ່ເມືອງລາວ ຮຽນຈົບແລ້ວບໍ່ຮູ້ວ່າຈະເຮັດວຽກຫຍັງໄດ້ແດ່ ແລະອະນາຄົດຈະໄປເຖິງໃສແທ້

...ເຂົາບອກວ່າທາງທີ່ດີໄປຢູ່ທີ່ນັ້ນດີກ່ວາ ແຕ່ທຸກ ໆ ເດືອນ ພໍ່ຫຼື ແມ່ກໍ່ຈະໄປຢ້ຽມຢາມ ເພາະວ່າເປັນລູກສາວຄົນດຽວ ແລະບໍ່ເຄີຍອອກຈາກບ້ານໄປໄກເຖິງຂນາດນີ້

...ແມ່ມີລູກກັບພໍ່ທີ່ ໔ ອີກ ໓ ຄົນເປັນຜູ້ຊາຍໝົດ ສຸມານາ ເປັນລູກສາວຄົນດຽວໃນບ້ານ ເຮົາຈະເວົ້າໄດ້ວ່າ ນາງເປັນຍິງທີ່ໄປໃຫຍ່ທີ່ຕ່າງແດນ ແຕ່ເຖິງຢ່າງໃດກໍ່ບໍ່ໄດ້ຫ່າງເຫີນຈາກວັທນະທັມລາວໄປແມ້ແຕ່ນ້ອຍດຽວ.

ເວລາ ສຸມານາ ຮຽນຢູ່ຕ່າງປະເທດ ແມ້ອາຍຸຈະເປັນສາວແລ້ວ ກໍ່ບໍ່ໄດ້ຄິດວ່າ ເພາະເຂົາເປັນຄົນສຶກສາເກັ່ງ ແລະເວລາຮຽນມະຫາວິທະຍາລັຍຕໍ່ອີກ ແລະຫຼິ້ນກິລາ ລອຍນໍ້າ ຕີເທັນນິສ ແລະຂີ່ມ້າ. ຊີວິດຂອງເຂົາ ເມື່ອກັບມາລາວ ພໍ່ສອນໃຫ້ຕັ້ງແຕ່ຍັງນ້ອຍແລ້ວວ່າ ໃຫ້ຮູ້ຈັກປັບຕົວເວລານາງຢູ່ທີ່ລາວ ເຮົາຕ້ອງເຮັດແບບຄົນຢູ່ທີ່ນີ້ ເຮົາຈະເຮັດຢ່າງຝຣັ່ງເສດບໍ່ໄດ້ ແລະພໍ່ເອງກໍ່ເປັນຄົນຫົວໂບຮານ ເຂົາຢູ່ລາວມາໄດ້ ໓໐-໔໐ ປີ ແລ້ວເປັນຄົນລາວໄປແລ້ວ ພໍ່ເພີ່ນສອນໃຫ້ວ່າອັນໃດຄວນປັບປຸງແຕ່ງຢູ່ໃນລາວໄດ້ກໍ່ຄວນເຮັດແລະນໍາເອົາມາໃຊ້ໃຫ້ເປັນປະໂຍດຄືວັດຖຸສິ່ງຂອງມາຈາກລາວ ເຣື່ອງທີ່ບໍ່ຄວນເຮັດ ເຊັ່ນບໍ່ໃຫ້ນຸ່ງກະໂປ່ງສັ້ນໆໃຫ້ໃສ່ຍາວໆ ແລະຕ້ອງຮຽນໃສ່ສິ້ນລາວ ດຽວນີ້ ສຸມານາ ກໍ່ມັກນຸ່ງແຕ່ສິ້ນໄໝ ບໍ່ວ່າຈະໄປໃສ ຫຼືໄປການກໍ່ຕ້ອງນຸ່ງແຕ່ສິ້ນໄໝລາວ ເຫັນແລ້ວງາມສະດຸດຕາ ເພາະວ່າສິ້ນໄໝເປັນສິ້ນທີ່ຄົນລາວທຸກຄົນພາກັນນຸ່ງຖື ໂດຽສະເພາະຍາມບຸນແລະງານຕ່າງ ໆ ແມ່ນສິ້ນໄໝຄໍາລາວ ຜູ້ຂຽນຄິດ.

ສຸມານາ ໄດ້ກໍາເນີດເປັນຄົນລາວ ລູກຊອດ ແຕ່ຄວາມຮັກແລະນັບຖື ຮີດຄອງປະເພນີ ວັທນະທັມຂອງລາວ ແມ່ນເປັນນຶ່ງໃນດວງຈິດສໍານຶກຂອງນາງ. ນອກຈາກນີ້ນາງຍັງມັກອາຫານລາວ ອ່ານພາສາລາວ ໂດຍບໍ່ໃຫ້ຫລົງລືມ ສົມວ່າເປັນຕະກຸນຜູ້ມີວາສນາວ່າເປັນລາວໂດຽກໍາເນີດ ຖ້າຈະປຽບໃສ່ຄົນລາວບາງຄົນຍັງໄປນິຍົມອ່ານ ແລະເວົ້າພາສາຕ່າງຊາດອີກ. ຂ້າພະເຈົ້າຄິດວ່າ ສຸມານາ ທີ່ເປັນກຸນລະສັດຖີລາວຄວນຈະເປັນຜູ້ນໍາໄດ້ແລ້ວ. ຖ້າຈະໃຫ້ແຕ່ຜູ້ຊາຽເປັນຜູ້ບໍຣິຫາຣປະເທສແຕ່ຝ່າຍດຽວຍັງອີກດົນຈະມີການເອົາລັດເອົາປຽບກັບຝ່າຍຍິງອີກ ຖ້າສະ.ມັກເປັນຜູ້ແທນລາວ ຂ້າພະເຈົ້າຜູ້ນຶ່ງຂໍສະນັບສະນູນເດີ ! ສຸມານາ ແລະແພັດຕຣິກ ຄູ່ຜົວເມັຽຮັກດັ່ງບໍ່ປະຕິເສດ ຖ້າມີຄົນສະນັບສະນູນໃຫ້ເປັນຕົວແທນລາວໃນສະພາແຫ່ງຊາດໃນຮູດຕໍ່ໄປ.

ສຸມານາ ເວົ້າວ່າ !

ເ ວ ລ າ ເ ຮົ າ ໄ ປ ພ າ ກ ໃ ຕ້ ຈະມີອາຫານພິເສດ ທີ່ຄົນຝຣັ່ງເຂົາມັກ ຄືເຮົາເລືອກໂຕງູມາແລ້ວເອົາໄປແກງກິນ " ຫວັງວ່າບໍ່ແມ່ນງູເຫົ່າຈົງອາງ.

*cheers of their countrymen and women were their last remaining offspring who are now living in exile in France.*

*But their culture did not die with their king. For over a 1,000 years the historic Laotian Lane Xang Kingdom of a Million Elephants provided the protection, clarity and morality of the symbolic White Parasol to the Laotian people.*

For 1,000 years the historic Laotian Lane Xang Kingdom of a Million Elephants provided the protection, clarity and morality of the symbolic White Parasol to the Laotian people. It may yet do so again.

*It may yet do so again.*

*As the Princes entered they held their folded hands in the traditional attitude of prayer which is the hallmark of their sect of Buddhism. Around them were women in every conceivable form of traditional Lao, Mien, Hmong, and Tai dress.*

*An earlier diplomatic reception was held by Metro Executive officers Mike Burton honorary chair of the visit's organizing committee. other key organizers were Hongsa Chanthavong, Donald Yongch and Vanlang Khamsouk, The visit is the culmination of a long time effort by the Lao, Hmong Mien and Tai communities in Oregon and Washington.*

### ***Traditional costumes providecolorful spectacle***

*The Grand Reception was most interesting because of the colorful spectacle between the costumes of the ladies and the Princes in their dashing uniforms as well as the fine cuisine, traditional entertainment and dancing. HRH Prince SauryavongSavang recalled the difficult time his countrymen are having in refugee camps around the world.*

*He said many Laotians had come to the Royal Family requesting it to help reunite them and to develop a plan to promote peace in Laos.*

*" During my trip to Oregon and Washington, I saw that the Laotians here are still very sincere toward the Royal Family, and I want to congratulate each and every one of you and also want to express my sincere thanks to all of you, " HRH Prince Savang said in Laos.*

*"I'm so glad that all the Lao tian ethnic groups are caring for each other and have come together to welcome us. I wish every one of you good health, long life and prosperity,"*

*The Prince said he was deeply concerned for freedom and democracy in his country, which is rich in natural resources, but one of the poorest in the world. "I urged the current Laotians gov ernment and all Laotians to pay attention to the interests of the general population of the country we want freedom and democracy Unity is the key to success in a democratic country. The Lao Royal Family was asked to enforce unity and it accepted."*

*The plan is to bring all Laotians abroad together by creating Non Govenmental Organization, NGO's to take part in the effort," All Laotians living abroad must be ready to participate in national unity and reconcilliation HRH Prince Savang said.*

### ***Younger Prince also speaks***

*HRH The Dauphin Prince eachoed his father's sentiments."I know that every body would like to take an opportunity to go back to develop Laos' education system, economic development and general welfare.*

***I'm so glad that all the Laotian ethnic groups are caring for each other and have come to gether to welcome us"***
***HRH. Prince Savang***

*He urged all Laotians to come together and stand side by side to build a new foundation for the country.*

*Another interesting sideline was provided by the Prince's American host, Metro Executive officer Mike Burton, a former Air Force Public Relations office stationed in all place a secret commando Base in Laos, but officially listed as in Northen Thailand during the war*

*He once called HRH The Prince Dauphin Sourivong Savang a pilot in one of the briefings, apparently confusing him with the then Prince Dauphin, who was a paratrooper in the Royal Laotian Air Force.*

*"If I'd really though about it I'd have realized he'd have been only three or four at the time," Mr. Burton joked. He was pleased to meet someone again 30 years later and over 1,000 miles away with whom he'd shared the experience.*

### ***Time Magazine reporter asks wrong question***

*Another amusing war story had to do with acting* >>

as a press officers for secret base. After entering the Ready room, the officer in charge asked him "Aren't you the press officer for this base?"

"Yes," he replied. "There was a reporter for Time Magazine on base, which was secret at the time. The officer told me I was supposed to take him out on the flight line and show him only the Rescue Helicopters, not the other combat operations,"

The helicopters were camo us flaged in green and gray. The problem was that the black one which took off in front of the reporter wasn't.

The reporter asked why. Bur ton conveniently made up the story that it was in mouning for a fallen ship. The reporter quoted him, Time wrote it, Washington called and Mr. Burton was caught. At least national security was safe.

**LAOTIANS PEACEFUL PEOPLE CAUGHT UP IN WAR**

On a more somber note, Mr. Burton called Laotians a basically peaceful people who didn't officially exist during the Vietnam war even though they provided some of its brav est soldiers.

He saw it as a land of elep hants, straight hills, deep valleys, and very thicks trees-a very beautiful country. " Laos is a land of gentle people who really didn't want to get into any body's war, but didn't want to take sides."

He lamented the fact that Americans took Coca Cola, Raquuel Welsh and America with them to the war, then could go back. Laotians coul d not because they were forced to free

"In Laos I could always find somebody who spoke English. Who in America could speak Hmong?

LAOTIANS IN OREGON AND WASHINGTON TODAY

Mr. Burton also praised the success of Laotian refugees coming from a land of rice paddies and water buffalo to the concrete jungle and aut omobiles-many without funds. "They had to find their own way and they have done well."

About 17,000 Laotians reside in Oregon and Washington. Of these, 85 to 90 percent are not using public assistance and are self sufficient-direc tly countering the stereotype, he said. About 75 percent own their own homes and 30 percent of those paid for them in cash-something American can not often do, Mr. Burton said to loud app lause. Also 85 percent graduate from high school and in general have high SAT scores because parents help - with homework.

He was presented with an example of the famous Laotian weaving, which he interpreted as a sign of deversity and encouraged Laotians not to forget their heritage. A Buddhist ceremony held Sunday in mem ory of the former King and the late members of the family will ensure that they do not.

**Peace, democracy a vision for all Laotians**

HRH Prince Sauryavong Savang:" of course, yes. The importance of returning to the throne as King is not just tradition for His Royal Highness (The Dauphin) himself and the Royal White Parasol family, but for Laotians people as a whole.

The Royal family has provided leadership, helped protect democracy and freedom of choice over the past few years as have the Lao people."

## Interview: HRH Prince Sauryavong Savang

By Aan P. Nelson, The Asian Reporter

*Editor's note: It has been more than 20 years after the fall of Laos in 1975. His Royal Highness Sauryavong Savang, the youngest son of the form er King, fled to France with his family after the war. In this exclusive interview with The Asian Reporter, HRH Prince Sauryavong Savang acted at times as the spokesperson as he is the head of the Royal Lao White Parasol Family. Also in attendance was Prince Souriyavong Savang, who bears the title Dauphin Crown Prince. Joan of Arc once greeted the future French King who then had the same title. Both were so relaxed and calm that at times we forgot we were speaking to Royal Princes.*

*We were ushered into the Royal Apartments at the Hilton Hotel, where the two Princes waited magn ificently attired in back Uniforms with gold braid buttons.accompanying*

them were special Advisor Tiao. Bouavong Kattygnarath and Priskit Sunthone. Here fellows the transcript, translated from Lao and French by Mr. Donald Yongchu during this first ever interview with the Princes of the more than 1,000 year old Kingdom of a Million Eleph ants.

Asian Reporter: " Your Royal Highness, your itinerary mentions something you call "the national reconcillation of Laos", could you elaborate on that ?"

HRH Prince Sauryavong Savang:" Since the fall of the Royal Government in 1975, many Laotians have been refugees and are scattered around the world including the Royal Lao Family.

The Royal Lao Family is continuing to pursue democracy.

"The situation in Laos is very concerning not just to the Royal Lao Family itself but to the refugees as well as the Laotian people as a whole.

"The advocacy for peace and democracy in Laos is not just a vision for the Royal family but is in response to the request of Laotians around the world and the response to the request of Laotian refu gees around the world even through the Royal Laotian family and the world including Laotians in Laos."

AR: " Your Royal Highness have both had a chance to visit the Laotian communities in Oregon and Washington. What are your impressions?

**HRH:** Sauryavong Savang:

The visits were at the invitation of the Lao tian communities in Oregon and Washington state. As in the past, Laotians are doing well in terms of jobs, business and edcation. They have become self sufficient in society. We are proud of seeing that kind of si tuation.

"The most pleasing is that the Royal family has been received by the Governor of Oregon, Metro Executive officers Mike Burton and mayor Vera Katz. We received a warm welcome because of the effect of Laotian refugees who have established good relationships with the state and cities This is why the government officials welcomed us so well."

**HRH:** Prince DauphinSourivong Savang: "In the past three days visit I have met many young people and students in Univer sities, which is something I am most proud of: the success of the education of Lao students, the fact they are getting good jobs and so on."

**HRH:** Prince Sauryavong Savang:

"However, His Royal Highness the Prince Dauphin is here to promote and strengthen the solidarity of Laotian refugees, to preserve Laotian parents culture, tradition

>>

and the heritage of the Laotian people including the younger Laotians who came here and those who were born here."

**AR:** to the Prince Dauphin:
"I understand you are a student yourself and that you speak French. What do you study and where?"
**HRH:** The Prince Dauphin:
"I am studying at clermont Ferrand University, where I am in my third year in Law and Public Administration. I am working on my License (Degree) in Droit (Law). " The program is a six year Program and the town is in the Massif Centrale region of France. It is called by the same name: Clermont Ferand.
**AR:** "What do yo like to do for fun?"
**HRH:** The Prince Dauphin
"I like to play music and go fishing"
**AR:** "What do you like to fish for?"
**HRH:** The Prince Dauphin:
"Carp,"
**AR:** "You fish for carp in the Seine?"
**HRH** and others: "No, there are many lakes in the area."
**AR:** "The term Dauphin would imply that you one day plan to succeed to the Royal Lao Throne?
Do you have aspirations in that regard ?"
**HRH** Prince Sauryavong Savang:
"The Dauphin Prince is the Prince who succeeded the Thorne under the Constitutional Mornarchy of the Royal Lao Family."
**AR:** "What is the significance of the Royal White Parasol in your family name?"
**HRH** Prince Sauryavong Savang
(in French) Its signifies the protection of the mornachy for the people and the defense of the mornachy by the people."
**AR:** "The West has an idea of Royalty through the media mostly centered on the English Royalty, Charles, Diana and so forth. However, Eastern Royalty is very different.(To the Dauphin) How are you like Prince Charles or how are you different?"
**HRH** Prince Sauryavong Savang answer in French:
"Each monarchy is different,it's not comparable. Even the Lao White Parasol monarchy is unique in its own way. It's not comparable to others. Laos is a small country." (About the size of Oregon.)
**AR:** "Do you wish for the Dauphin to reclaim the throne?"
**HRH** Prince Sauryavong Savang:
"Of course, yes. The importance of returning to the throne as King is not just tradition for his Royal Highness (The Dauphin) himself and the Royal White Parasol family, but for Laotian people as a whole. The Royal Family has provided leadership, helped protect democracy and freedom of choice over the past few years as have the Lao people.

# Laos on the way from simplicity to complexity

Southida Samontry
Jakarta office

*What ASEAN ministers hear tomorrow will be unsensational, but it could help in the transformation of the region. September 13,1996*

Joining ASEAN is often seen as a political. But new members now find the economic challenge more daunting.
Ministers from the latest candidates, Laos and Cambodia, are to meet their economic counterparts from ASEAN in jakarta tomorrow. They will eventually integrate in to ASEAN's economic cooperation schemes, but it remains to be seen how fast they want to make the adjustments, and whether ASEAN can accept their proposed pace.

Laotian students in uniforms



Laos and Cambodia are due to join ASEAN next year, two years after Vietnam tomorrow, Cambodian Commerce Minister Chan Prasith and Laotian Trade Minister Sompradith Vorasane are expected to say when their countries will be ready to implement the ASEAN Free Trade Area (AFTA) scheme.

"We will listen to them to hear how they want us to help, rather than telling them what they have to do," said a senior ASEAN official.

ASEAN Secretary-General Ajit Singh said that Laos and Cambodia are likely to be granted similar conditions to Vietnam for their entry into AFTA.

The main timetable for reducing import duties to 0-5 percent under ASEAN free trade is 1o years from January 1,1993 to January 1,2003. Vietnam, which joined ASEAN in July 1995, was allowed a three -year postponement, 1996 to 2006.

One of the proposed timetables for Laos and Cambodia is 1998 to 2008,again starting immediately after the two new member join ASEAN in July, 1997.

A source said both countries could be asked to demonstrate their ability to enter the AFTA program-for example, submitting schedules for tariff cuts-before a decision is taken on the grace period given to these two countries.

Observers say tariff reductions are actually a minor issue for Laos and Cambodia, like Vietnam. Most imported products are already charged below the 20 percent starting point for the AFT programme.

The real problem is all the other non-tariff obstacles existing in these countries. They form more serious obstacles to trade liberlization in the region, say observers.

"What is important is the rules and regulations, as well as agreements, that need transparency," said Krirt Krai Jirapact, Director General of the Commerce Ministry's Business Economic Development.

Laos, like Vietnam, has certain invisible non-tariff barriers. Domestic production is sometimes protected by empowering state agencies to influence decisions on when competing imports will be allowed. This leads to lengthy procedures,wasting time and money.

Any liberalising schemes will eventually require changes to the law and ultimately challenge people controlling Laos's centralised power, note an observer.

Unlike Laos, Cambodia seems to be more liberal in terms of rules and regulations. Yet foreign investors still complain they have to pay brides in order to do business in the country.

An ASEAN official involved in the preparation for receiving Laos and Cambodia says the basic problem of these two countries is the economic structures which are "too simple".

For example, there are no standard >>

Laos on the way from page 37

procedures for customs valuation and clearance in Laos and Cambodia, and technical problems of that nature need to be tackled, he said.

However, joining ASEAN will greatly benefit them by helping them to build up more complex economies emulating ASEAN members' development, the official added.

Laos's fiercely independent attitude could also make integration difficult, noted ASEAN officials. Laos, always vulnerable to its more powerful neighbours, makes it known it wants to be free from outside influence and intervention.

Some observers consider this week's problem with Vietnam to be a sign of what might happen with Laos and Cambodia.

ASEAN economic ministers, now holding their annual meeting in jakarta, had wanted to sign an important agreement on how to settle economic and trade disputes.

Vietnamese officials said aerlier this week that they have not been given a mandate from their government, but an ASEAN official expressed concern that deep down the Vietnamese government might be reluctant to be bound by rules. Hanoi's request for more time to study the doccument could be a delaying tactic, the official said.

However, on the plus side, Mr. Krirt-Krai praised Vietnam for granting Most-Favoured-Nation status to ASEAN members. This means that ASEAN countries already automatically receive the most favourable trading terms that Vietnam grants to anyone else, seen as a willingness to use rules and fomulas instead of arbitrary decisions.

From the points of view of Laos and Cambodia, their biggest concerns are how to prepare their officials to keep up with ASEAN's busy schedule of activities. This includes speaking English, knowing how ASEAN works, and attending up to 200 ASEAN meetings a year, said an official who was in the ASEAN working group which visited the two countries few months ago.

Nevertheless, having Laos and Cambodia in the group is beneficial for both sides. The AFTA Council- a ministerial body that administers AFTA's implementation-noted when it met on Wednesday that by joining, the new members would increase their trade and investment ties with ASEAN and expand the ASEAN market, making it more attractive to foreign investment.

The newcomers are likely to gain from more direct investment, accelerating their economic transformation into a more industrial stage. ASEAN members running out of some natural resources could also gain from the ample reserves of the new members. All this in addition to the fact that each side directly offers the others expanded markets.

At the same time, ASEAN is a good training ground for Laos and Cambodia to join larger groups, including adopting the rules and regulations of international bodies such as the World Trade Organization, noted observers.

Efforts to make the adjustments easier are already underway. Intensive training on ASEAN matters as well as English langauge and diplomacy and international relations have been provided for Lao and Cambodian officials from time to time, both by the ASEAN Secretarial and individual ASEAN members states.

Tomorrow's talks might not make dramatic headlines, but they are an important if quiet step towards transforming the region.

## Travellers shaken by Lao Killing

Agence France Press
Via Fax

Hanoi- The death of a top French executive in an ambush in northern Laos has put the spotlight on the dangers of travelling in the country that is just starting to open up to the rest of the world.

Laotians and foreigners were shaken by the killing on Wednesday of Claude Vincent, 56, a long- time French resident known throughout the country.

The founder and director of Sodetour, the largest tourism agency in the country, was killed when his minibus carrying Laotian employees was ambushed on the road from Vientiane to the northern city of Luang Prabang, a major tourist site, French officials said

Five of the seven people on board were killed by 20 assailants armed with riffles. A sixth is in critical condition and the seventh was shielded from the gunfire by a seat.

The attack occurred 30 kilometers north of Kasi, an area populated by the minority Hmong tribe, which has long opposed the Marxist-Leninist Laotian regime.

Banditry is also being considered as a motive for the attack as the minibus was looted in the exact spot where last November two French tourists were woulded.

According to sources, the minibus was to have tagged along with a military convoy from Kasi, but for some reason the convoy left without it.

Attacks on the road to Luang Prabang are common, though never officially confirmed. Nevertheless, one Western observer said that with the death of Vicent, "the government can no longer keep quit"

Sodetour organizes tours to hotels across Laos, a country that is gradually opening its doors to foreign tourists, and the minibus was taking the team to Luang Prabang ahead of the boat festival.

"It was really unlucky He well knew the risks and would warn people to avoid the road to Luang Prabang," said one French resident of Vientiane.

Vincent had made Laos his home since the 1970s and had married a member of the Lao Royal Family.

"The news shocked everyone. He was one of the most well known foreigners in Laos," said another French national in the Vientiane.

Vincent had extensive connections with Laotian leaders and access that apparently extended to the highest levels of govenment, one Laotian sources said that he had " a de facto monopoly on transport for a long time after the (1975) revolution when the country was closed to the outside world"

"It's because of him that French investors were able to get a foothold in Laos," said one French resident.

Vincent, the son of teachers, and was originally from Le Havre in northern France.

## Arms sale to Taiwan on track

Press-Telegram
By Donna Abu-Nasr

Washington (AP)<> The Pentagon has notified Congress that Taiwan plans to buy $420 million worth of American weapons, including 1,299 Stinger missiles, to upgrade its air defense capability.

The sale will not undermine the military balance in the region and there willbe no adverse impact on US military readiness, the Pentagon asserted in a statement.

Notifying Congress of Taipei's request is a routine part of the sale, which was approved in 1993. A Pentagon spokesman, speaking on codition of anonimity, said Saturday that Taiwan has not yet taken delivery of the weapons.

In addition to 1,299 vehiclemounted Stinger missiles, the system Taiwan requested includes 74 standard vehicle mounted guided missiles launchers, 96 High Mobility Multi-Purpose wheeled Vehicles, 74 captive flight trainer Stinger missiles-simulators to teach people how to use the real missile and 500 rounds of 50 caliber ammunition.

"Taiwan.. will have no difficultty absorbing this weapon system into its armed forces," the Pentagon statement said. Implementation will not require the assignment of any additional US govemment personnel or contractor representatives" in Taiwan.

It said the principle contractors are the Hughes Missile Systems Co. of Tuscon, Ariz, Boeng Missile and Space Systems Co. of Huntsville, Ala, and AM General of Mishawaka, Ind.





# ຍາບາງ ດາຣາ ກັລຍາ ນັກຂຽນ ແລະ ແມ່ຍິງລາວ ຜູ້ຮັກຊາດ ຮັກວັທນະທັມລາວແທ້

ອ່ານອນ ວົງແກ້ວ ລາຍງານ:

ໃນຄວາມພາກພູມໃຈຂອງລາວທັງຊາດນັ້ນ ບໍ່ແມ່ນແຕ່ຄວາມສງົບສຸຂ ຫຼືມີສັນຕິພາບແຕ່ຢ່າງດຽວ ມັນຈະຕ້ອງມີທັງເອກຣາຊທາງດ້ານເສຖກິຈ, ການສຶກສາສັງຄົມ, ການເມືອງ ແລະມີອິສພາບ ປະຊາທິປະໄຕຮ໌ມາສູ່ປວງຊົນຊາວລາວທຸກທົ່ວໜ້າ ແຕ່ວ່າອີກປະການນຶ່ງທີ່ເດັ່ນກວ່ານັ້ນອີກຄື: ຄວາມພາກພູມໃຈຂອງແມ່ຍິງລາວຜູ້ທີ່ໄດ້ຮັກ ຖະໜຸຖະໜອມທາງດ້ານພາສາ ແລະວັທນະທັມລາວ ຈົນໄດ້ໂດ່ງດັງໄປຮອດທົ່ວໂລກ. ວ່າງມໍ່ໆ ມານີ້ ຍ.ນ. ດາຣາ ກັລຍາ ເປັນແມ່ຍິງຄົນເກັ່ງໄດ້ອະນຸຮັກຮັກສາວັທນະທັມຂອງຊາດຄືເຈົ້າຂອງກຽຕິສັກຮ໌ສຳຄັນອັນນຳຄວາມພາກພູມໃຈດັ່ງນີ້ມາສູ່ສັງຄົມລາວສືບເນື່ອງມາຈາກການບູຣະນະຮັກສາໜັງສືຜູກໃບລານຂອງລາວອັນເກົ່າແກ່ທີ່ມາຂອງຄວາມຮູ້ ພູມປັນຍາ ວັທນະທັມປະເພນີຢ່າງໃຫຍ່ຫຼວງໃນຄັ້ງປວັດສາດ. ໃນໂອກາດສລອງ ໑໔໐ ປີຂອງໜັງສືພິມຍັກໃຫຍ່ຂອງຍີ່ປຸ່ນຄື ນິກເຄອິ (Nikei) ໄດ້ຄັດເລືອກຜູ້ມີຜົນງານດີເດັ່ນເປັນປະໂຍຊນ໌ຕໍ່ຊາດບ້ານເມືອງໃຫ້ໄດ້ຮັບລາງວັລ Nikei Asia Prizes ໂດຍບຸຄຄົນທີ່ໄດ້ຮັບລາງວັລໃນຄັ້ງນີ້ປະກອບດ້ວຍ Widjojo Nitsastro ທີ່ປຶກສາດ້ານເສຖກິຈຂອງຣັຖບາລ ອິນໂດເນເຊັຍ Yuan Longping ຜູ້ຄິດຄົ້ນພັທນາພັນເຂົ້າຂອງສາທາຣະນະລັດ ປ.ຊ. ຈີນ ແລະສຸພາບ ສັຕຣີຄົນນຶ່ງ ຄື ຍ.ນ. ດາຣາ ກັລຍາ ຂອງລາວເຮົາ ນັກຂຽນອະນຸຮັກສ໌ ຈາກປະເທສ ລາວ.

ຍ.ນ. ດາຣາ ກັລຍາ ເປັນແມ່ຍິງລາວ ນິ່ມນວນ ອ່ອນໂຍນ ບົ່ງບອກຄວາມເຍືອກເຍັນຕາມແບບສະບັບ



ພາບຖ່າຍຕອນໄດ້ຮັບລາງວັນ ແລະ ຕອນໄປຄົ້ນຄວ້າເອົາໃບລານຕາມບ້ານຕ່າງໆໃນເຂດເໜືອຂອງລາວໂດຍຍາເອື້ອຍດາຣາ



ຂອງແມ່ຍິງລາວໂດຍແທ້ ຍ.ນ. ດາຣາ ກັລຍາ ໄດ້ເກີດທີ່ວຽງຈັນທ໌ ເຊິ່ງເປັນລູກສາວຂອງ ຍາທ່ານອາຈາຣ ມະຫາສີລາ ວີຣະວົງສ໌ ເປັນຂ້າຣາຊການ ທຳງານກ່ຽວກັບການຄົ້ນຄວ້າຕຳນານສິ່ງທີ່ເກົ່າແກ່ໃນໃບລານຂອງລາວ ຊຶ່ງທຳອອກມາເປັນເຫຼັ້ມ ສິ່ງທີ່ພົບໃນໃບລານເປັນພວກວັນນະຄະດີສາສນາພຸທເປັນສ່ວນໃຫຍ່ ຄືຍາທ່ານອາຈານ ມະຫາສີລາ ວີຣະວົງສ໌ ເປັນຄົນຂຽນຮຽງໄວຍະກອຣລາວ ປະວັຕສາສຕຮ໌ ໃຫ້ຄົນລາວໄດ້ອ່ານແລະຮຽນຮູ້ຄວາມເປັນມາຂອງລາວ ພວກເຮົາແລະພວກເຮົາຈະໄປຕັດສິນສິ່ງທີ່ປະຊາຊົນເຂົານັບຖືມາຕັ້ງດົນນານແສນນານວ່າເປັນເຣື່ອງລ້າສມັຍມາປຽບທຽບກັບສິ່ງທີ່ເຮົານັບຖືສມັຍນີ້ບໍ່ໄດ້ ວັທນະທັມທີ່ເຂົານັບຖືມານັ້ນ ເຂົາສືບທອດກັນມາໄດ້ຫລາຍຮ້ອຍປີ ມັນຈະຕ້ອງມີສິ່ງໃດດີ ແມ່ຍິງລາວຄືຍາເອື້ອຍດາຣາ ກັລຍາຕອນອາຍຸບໍ່ເຖິງປີ ເພິ່ນພ້ອມດ້ວຍຄອບຄົວຄືຍາພໍ່ຍາແມ່ໄດ້ໄປຢູ່ກຸງເທພ ປະເທດໄທຍ໌ ແລ້ວຍ້າຍມາຢູ່ໜອງຄາຍ ພໍບ້ານເມືອງສງົບເພິ່ນກໍໄດ້ກັບຄືນສູ່ພູມລຳເນົາທີ່ວຽງຈັນທ໌. ຄົນລາວຜູ້ຮັກແລະຄິດເປັນຫ່ວງບ້ານຊາດຈຶ່ງໄດ້ເອົາຊີວິດກັບມາສ້າງສາຊ່ອຍບ້ານເມືອງ. ຍາເອື້ອຍດາຣາ ກັລຍາ ແວວຂົມຂື່ນໃນດວງຕາ ກ່ອນຈະຄ່ອຍໆຈາງເມື່ອໄດ້ລະບາຍຄວາມໃນໃຈອອກມາວ່າ ຂ້ອຍຄິດຢູ່ສເມີ ດ້ວຍຄວາມນ້ອຍໃຈ ເຮົາເປັນຄົນລາວ ແຕ່ກັບບໍ່ໄດ້ຮຽນພາສາລາວ ເມື່ອໄປຢູ່ເມືອງໄທຍ໌ ກໍຕ້ອງຮຽນພາສາໄທຍ໌ ເພາະເປັນປະເທສໄທຍ໌ ພໍກັບໄປລາວ ແທນທີ່ຈະໄດ້ຮຽນພາສາລາວເຮົາເອງກັບຕ້ອງໄປຮຽນພາສາຝຣັ່ງເສດ ຍັງໂຊກດີທີ່ສຸດ ຍາພໍ່ເພິ່ນສອນພາສາລາວໃຫ້ທີ່ບ້ານ ພາສາລາວເປັນພາສາເກົ່າແກ່ຈາກໃບລານດ້ວຍ>>>

ຍາເອື້ອຍ ດາຣາ ກັລຍາ ກ່າວວ່າຍາພໍ່ເພິ່ນເປັນຜູ້ປະດິສໃບລານອອກມາເປັນຕົວໜັງສືລາວດັ່ງນັ້ນເພິ່ນຈຶ່ງມອງເຫັນພາບຂອງຍາພໍ່ນັ່ງອ່ານ ຂຽນໜັງສື ແລ້ວເພິ່ນກໍ່ຈະອ່ານໃບລານກັບພໍ່ ຜູກພັນກັນມາ ຍາເອື້ອຍເພິ່ນຮູ້ວັນນະຄະດີຫລາຍໆເລື່ອງຈາກໃບລານ ທຳໃຫ້ຊາບຊຶ້ງໃນຄຸນຄ່າຂອງພູມີປັນຍາ ວັທນະທັມປະເພນີຂອງເຮົາເອງ ເພິ່ນວ່າຢາກໃຫ້ຊາວບ້ານຮັກສາວັທນະທັມຂອງລາວໄວ້ໃຫ້ດີ ໃຫ້ເອົາມາໃຊ້ໃນຊີວິດປະຈຳວັນ ເອົາມາເທສນາສອນກໍ່ໄດ້ ຫາຄົນປະດິດອອກມາ ງານດ້ານນີ້ທຳໃຫ້ເຫັນຄຸນຄ່າພູມີປັນຍາຊາຕສູງ"

ເມື່ອຮຽນຈົບຊັ້ນມັທຍົມທີ່ລາວແລ້ວ ເອື້ອຍດາຣາ ກັລຍາ ເຂົ້າຮັບຣາຊການເປັນຄຣູສອນຢູ່ ໓ ປີ ກໍ່ໄດ້ຮັບທຶນໄປຮຽນຕໍ່ດ້ານການສຶກສາ ທີ່ສຫະຣັຖອະເມຣິກາ ແລ້ວກັບມາເປັນຄຣູສອນອີກຈົນກະທັ້ງເຖິງການແຕ່ງງານກັບ ທ່ານອ້າຍບຸນນະວົງສ໌ ກັລຍາ ຊຶ່ງເປັນນັກການທູດ ສ້າງສັຣຄ໌ຜົລງານດ້ວຍໃຈຮັກຂຽນແລະດ້ວຍຄວາມປາຖນາດີເພື່ອນຍິງດ້ວຍກັນ ປັດຈຸບັນຜູ້ຍິງລາວສ່ວນຫລາຍໄດ້ມີການສຶກສາສູງຂຶ້ນແລະມີການຮັບຮູ້ຕໍ່ສັງຄົມພາຍນອກແລະວັທນະທັມລາວ ເວົ້າສະເພາະແລ້ວ ຍາເອື້ອຍດາຣາ ກັລຍາ ຕອນເຣີ່ມທຳງານເປັນຄຣູກໍ່ເຣີ້ມຂຽນໜັງສືແລ້ວສ່ວນຫລາຍຂຽນເລື່ອງສັ້ນ ຂ້າພະເຈົ້າຜູ້ຂຽນຍັງໄດ້ສົ່ງບົດຂຽນບາງສະບັບໄປລົງວາຣສາຣ ໄຜ່ໜາມ ເພິ່ນຍັງໄດ້ກວດແກ້ແລະດັດແປງໃຫ້ເຂົ້າກັບສະພາບຂອງສັງຄົມລາວໃນເວລານັ້ນ. ຍາເອື້ອຍດາຣາ ກັລຍາ ບໍ່ພຽງແຕ່ແຕ່ງນິວະນິຍາຍ, ກາບກອນ, ແລະແປໜັງສືທີ່ນັ້ນ ເຊິ່ງໃຊ້ນາມປາກກາວ່າ ສີຣິ ດາວວຽງ. ກັລຍານີ


ໃຈອົດທົນຄົ້ນຄົ້ວ ທົ່ວໃບລານຂອງລາວ
ໃຈສູ້ຊົ້ນທົນທຸກບໍ່ວາຍ ຫາຍຈິດຈາງໄດ້

ດວງຈຳປາ ເພາະຢ້ານຄົນຈັບຈຸດໄດ້ ຜົລສຸດທ້າຍມາກໍ່ມາເຖິງ ດວງຈຳປາ, ເພາະຍາເອື້ອຍເພິ່ນມັກສຶກສາຊີວິດຂອງຄົນ. ການຂຽນໜັງສືທຳໃຫ້ມີການພັກຜ່ອນສມອງ, ເຮັດໃຫ້ມ່ວນໃຈແລະເພີນໄປກັບເລື່ອງຂອງການແຕ່ງແລະບໍ່ຮູ້ສຶກການເມື່ອຍ ເພິ່ນກ່າວວ່າມັນຄືເຮົາຢູ່ອີກໂລກນຶ່ງຂອງສ່ວນຕົວເຮົາ'

ຍາເອື້ອຍດາຣາ ກັລຍາ ຂຽນເລື່ອງສັ້ນເຖິງ ໔໐ ເລື່ອງ ນິວນິຍາຍ ເຖິງ ຫລາຍເລື່ອງ ເພາະເພິ່ນເອງກໍ່ຍັງມີພາລະຕໍ່ສັງຄົມຫລາຍດ້ານນຳອີກຕໍ່ຢ່າງມາກມາຍກ່າຍກອງ. ຕອນພິມໜັງສືໄຜ່ໜາມ ກັບຄອບຄົວ ຄືຍາພໍ່ແລະຍາແມ່ນ້ອງໆ ທີ່ຊ່ອຍກັນເຖິງ ໓ ປີກໍ່ປິດ ກິຈການ ສພາບເສຖກິຈການເມືອງໃນປະເທສບໍ່ອຳນວຍໃຫ້, ແຕ່ໃຈຮັກໃຫ້ແມ່ຍິງລາວໄດ້ຮັບການປ່ຽນຊີວິດ'

ຂຽນໃຫ້ແມ່ຍິງລາວໄດ້ຮັບການປ່ຽນແປງໃນຊີວິດ... ຄືຜູ້ຍິງລາວຕ້ອງພັທນາຕົນເອງດ້ວຍການຂຽນແລະການຮຽນ ແລ້ວກໍ່ຕ້ອງມີວຽກເຮັດງານທຳຫລາຍຂຶ້ນ ພັງໃຈຂອງຍາເອື້ອຍບໍ່ໄດ້ຢຸດຢັ້ງ ເມື່ອກັບຈາກຕ່າງປະເທສກໍ່ເຂົ້າມາຮັບຣາຊການໃນຖານະນັກຂຽນ, ນັກແປພາສາ, ທຳໜັງສືວັນນະສິລປ໌ ເມື່ອປີ ຄ.ສ. ໑໙໘໙ ປີກໍ່ຕັ້ງໜັງສືຕັ້ງແຕ່ເປັນຄນະບັນນາທິການ ຈົນເປັນຮອງຫົວໜ້າຄນະບັນນາທິການ ແລະຂຶ້ນເປັນຫົວໜ້າຄນະບັນນາທິການ ເມື່ອປີ ຄ.ສ. ໑໙໙໐ ມ່ວນຊື່ນກັບການເຮັດວຽກ ໂດຍສະເພາະຊ່ວງມີອົງຄ໌ການຕ່າງຊາຕເຂົ້າມາຊ່ວຍສນັບສນູນກິຈການ ໜັງສືພິມວັນນະສິລປ໌ຊຶ່ງຍາເອື້ອຍດາຣາ ກັລຍາເອງຮັບຜິດຊອບໃນຖານະ ຮອງອະທິບໍດີກົມວັນນະຄະດີແລະວັທນະທັມມະຫາຊົນ ກະຊວງຖແລງຂ່າວແລະວັທນະທັມ ໄດ້ຕັ້ງໂຄງການອະນຸຮັກຮັກສາໃບລານຂຶ້ນດ້ວຍການສຳຣວຈເຮັດບັນຊີແລະພະຍາຍາມທີ່ຈະປະວິວັດໃບລານຂໍ້ມູນຕ່າງໆເຫຼົ່ານັ້ນອອກມາເປັນໜັງສືເພື່ອໃຫ້ຄົນຮຸ່ນໃໝ່ມີການສຶກສາຕໍ່ໄປ ຍາເອື້ອຍກ່າວ ...


ຟ້ອນແບບລາວ ສາວງາມ


ມ.ສ. ກ. ສົງນາມວົງ


ສາວລາວວັນນີ້




ມາເດີ້ອ້າຍ ມາເດີ ມາເດີ້ ຢ່າໄປຢືນເຊີເລີ ຕົນໜ້າຜູ້ໃດ


ອ້າຍຈາກໄປ ແດນໄກ ບ້ານເພີ່ນ ນານແລ້ວ

## ສົງຄາມປາກ ລະຫວ່າງ
### 2 ນາຍົກຂອງຣັຖບານ ກັມພູເຈັຽ

ຕາມແຫຼ່ງຂ່າວຈາກ ຟາອີສເທີນ ອີໂຄໂນມິກ ຣີວິວ ລາຍງານວ່າ ນາຍົກຣັຖມົນຕຣີ ກັມປູເຈັຽ ທັງ ໒ ທ່ານໄດ້ຜ່ອນເບົາການສ້າງສົງຄາມປາກຕໍ່ກັນແລ້ວ. ພາບພົດທີ່ປະຊາຊົນຂະເມນ ບໍ່ໄດ້ເຫັນດົນນານນັ້ນກໍຄື ນາຍົກຣັຖມົນຕຣີທັງສອງ ທ່ານໃນເຄື່ອງນຸ່ງແບບບູຮານຂະເມນ ທີ່ໄດ້ອອກມາຮັບຕ້ອນກັນດ້ວຍການໂອບກອດຢູ່ທີ່ວັດສຳຄັນແຫ່ງນຶ່ງໃນກາງກຸງພົນມເປັນຫລັງຈາກທີ່ໄດ້ເກີດ ກໍຣະນີສ້າງສົງຄາມປາກຕໍ່ກັນມາເປັນເວລາເຖິງແຮມປີໃນຂນະທີ່ພູະສົງກຳລັງສວດມົນຫລັ່ງນ້ຳພຸທມົນ. ເຈົ້ານໍໂຣດົມຣົນນະຣິດ ນາຍົກຄົນທີ-໑ ໄດ້ກ່າວວ່າ " ຂອບໃຈພູະເຈົ້າທີ່ເຮັດໃຫ້ທ່ານທັງສາມຝ່າຍຫັນໜ້າມາຮ່ວມຈັບມືຖືແຂນກັນໃນວັນນີ້ "... ສ່ວນທ່ານຮຸນເຊັນ ຄືນາຍົກຣັຖມົນຕຣີ ຜູ້ທີ-໒ ແລະຣັຖມົນຕຣີຕ່າງປະເທດ ທ່ານເຊັຽສົມ. ການພົບປະກັນໃນເດືອນມິຖຸນາ ຖືເປັນເປົ້າໝາຍສຳຄັນຄັ້ງທຳອິດ ລະຫວ່າງບັນດາຜູ້ນຳທັງສອງ ຝ່າຍນັບແຕ່ຫລັງສົງຄາມປາກທີ່ເລີ່ມຂຶ້ນແຕ່ເດືອນ-ມີ ໃນຂໍ້ຂັດແຍ້ງດັ່ງກ່າວໄດ້ສ້າງໃຫ້ຄວາມກັງວົນໃຈ ຕໍ່ສຽງມະຫາຊົນຂະເມນເປັນທີ່ສຸດ ໂດຍສະເພາະແມ່ນສຫະປະຊາຊາຕຜູ້ຊຶ່ງເປັນຜູ້ຈັດການໃຫ້ມີການເລືອກຕັ້ງທົ່ວໄປໃນກັມພູເຈັຽເມື່ອປີ ໑໙໙໓.

ວິກິຈການໄດ້ເກີດຂຶ້ນມາຍ້ອນວ່າການຫາສຽງສຳລັບການເລືອກຕັ້ງຊຸດທີ່ຈະມາເຖິງນີ້ໃນປີໜ້າ. ຄວາມຕຶງຄຽດອັນນີ້ເອງ ທີ່ເປັນຜົນສະທ້ອນອັນນຶ່ງຂອງການກ່ວມາສກັນຕ່າງໆເກີດຂຶ້ນກັບຊາວຕ່າງຊາດ ໃນກຸງພົນມເປັນ. ໃນນັ້ນກໍ່ລວມໄປກັບການນາບຂູ່ຂອງຜູ້ສນັບສນູນທ່ານ ຮຸນເຊລ ທີ່ມີຕໍ່ຝ່າຍຕົງກັນຂ້າມ ແລະນັກໜັງສືພິມທີ່ຖືກຮົບກວນບໍ່ເລີກບໍ່ແລ້ວ.

ເຖິງແມ່ນວ່າຈະເວົ້າອ່ອນປານໃດໃນຄໍລັມນົດວິຈານ ແຕ່ເຈົ້າຣົນນະຣິດ ກໍ່ບອກຢ່າງແຈ່ມແຈ້ງວ່າ ຄວາມລະແວງສົງໃສຍ໌ ຕໍ່ອີກຝ່າຍນຶ່ງກໍ່ຍັງຈະຝັງເລິກຢູ່ໃນຈິດໃຈຕໍ່ໄປ ແລະຄວາມແຕກຕ່າງລະຫວ່າງ ໒ ນາຍົກຣັຖມົນຕຣີ ກໍ່ຍັງຖືກອະທິບາຍໄດ້ຍາກ. ສເດັດເຈົ້າຣົນນະຣິດໄດ້ກ່າວຢ່າງໂຈ່ງແຈ້ງມາຄ່ຳນຶ່ງວ່າ " ພາກັນເບິ່ງດູ " ໜ່ວຍກ້າຕາຍຂອງພວກນັ້ນ " ທັງເວົ້າທັງເອົາມືຊີ້ໄປໃສ່ບັນດາທະຫານທີ່ສັງເກດການຢູ່ເທິງຫລັງຄາວັດໃຫ້ກັບນັກຂ່າວເບິ່ງ. ພວກເຂົາບໍ່ແມ່ນຄົນຂ້ອຍ" ຊຶ່ງໝາຍຄວາມວ່າທະຫານພວກນັ້ນແມ່ນຂອງອີກຝ່າຍນຶ່ງ. ຫຼັງຈາກນັ້ນມາໄລຍະນຶ່ງເຈົ້າຣົນນະຣິດ ກໍ່ບອກກັບນັກຂ່າວຊາວຂເມລອີກວ່າ " ໃນໄລຍະຜ່ານມາທ່ານໄປປົວໂຕຢູ່ຕ່າງປະເທດ ແຕ່ນັກຂ່າວຈະປອດໄພຍໄປໃນຊ່ວງນຶ່ງອາທິດ" ໃນຄວາມໝາຍນີ້ ເຈົ້າຣົນນະຣິດ ນາຍົກຣັຖມົນຕຣີ ຜູ້ທີ-໑ ໄດ້ສະທ້ອນພາບໃຫ້ເຫັນເຖິງການຄາດກັມຂອງບັນນາທິການຂອງໜັງສືພິມທີ່ມີຊື່ສຽງຂອງຝ່າຍຄ້ານ ເມື່ອສອງອາທິດຜ່ານມາກ່ອນໆ ທີ່ບັນນາທິການຜູ້ກ່ຽວມີຊື່ວ່າ"ທົມບຸນລືທີ່ຖືກຍິງເຜົາຂົນໂດຍຜູ້ຮ້າຍຂີ່ຣົດຈັກຊ້ອນກັນ ໒ ຄົນໃນກາງເວັນບັນທ້ອງຖົນທີ່ມີການຈາຣະຈອນຢູ່ເຕັມທ້ອງຖົນໃນກາງກຸງພົນມເປັນ. ມັນໜ້າທີ່ເສັຽດາຍຈົນກະທັ້ງດຽວນີ້ກໍ່ຍັງຈັບໂຕ(ຕໍ່ໜ້າ໔໒)

>> ຜູ້ຮ້າຍບັງບໍ່ທັນໄດ້

ໃນຄວາມຮຸນແຮງຂອງການລະແວງສົງໄສຢູ່ຕໍ່ກັນນີ້ ໄດ້ລະເບີດຂຶ້ນມາເມື່ອ ເຈົ້າຣິນນະຣິດ ຂູ່ວ່າຈະຖອນພັກຝຸນຊິນເປັກຂອງຕົນອອກຈາກຣັຖບານປະສົມ ທີ່ກຳລັງປົກຄອງປະເທສຂນະນີ້. ໃນສມັຍເລືອກຕັ້ງທົ່ວໄປຄັ້ງຜ່ານມາ ພັກຝຸນຊິນເປັກ ໄດ້ຊນະຄະແນນ ທົ່ວປະເທສໃນປີ ໑໙໙໓. ແຕ່ບໍ່ຂາດລອຍ ຈຶ່ງຈຳເປັນໄດ້ຕັ້ງຣັຖບານປະສົມຂຶ້ນ. ຫລັງຈາກນັ້ນມາກໍ່ຖືກແບ່ງປັນຕຳແໜ່ງອຳນາດກັນກັບພັກ ທີ່ກຳອຳນາດຂອງຣັຖບານຢູ່ກ່ອນນັ້ນ ກໍ່ຄືພັກຂອງທ່ານຮຸນເຊນ ທີ່ມີວຽດນາມໜູນຫລັງຢູ່ຢ່າງເຕັມປະຕູ.

ເຈົ້າຣິນນະຣິດ ກ່າວຫາວ່າ ທ່ານຮຸນເຊນ ປະຕິເສດການປະຕິຮູບກົດໝາຍການແບ່ງປັນອຳນາດ ທີ່ຈະເຮັດໃຫ້ພັກຜົນບໍ່ໃຊ້ຮອດຂັ້ນ ຕາແສງ. ທ່ານຮຸນເຊນ ຕອບໂຕ້ ໂດຍການຂູ່ວ່າຈະໃຊ້ກຳລັງທະຫານໃນເດືອນເມສາ.

ຫລັງຈາກນັ້ນມາສອງສາມວັນ ຮຸນເຊນ ກໍ່ຕິຕຽນວ່າກອງທະຫານພົມມິນເປັນບໍ່ມີຄວາມສາມາດຈະປາບປາມຂະເມນແດງທີ່ໃຈກາງໄພຣິນໄດ້ ສົງຄາມປາກອັນນີ້ເອງທີ່ສົ່ງສຽງສະທ້ອນໄປຮອດນັກລົງທຶນຕ່າງປະເທດ ໃນຂະເມນ. "ເຈົ້າໜ້າທີ່ສຫະປະຊາຊາດ ທ່ານນຶ່ງກ່າວວ່າ " ປະເທດຕ່າງໆທີ່ຊ່ອຍເຫລືອຂະເມລ ກໍ່ໄດ້ເຄີຍເຕືອນທ່ານຮຸນເຊນ ແລ້ວວ່າ" ພຽງແຕ່ສຽງປືນນັດນຶ່ງດັງຂຶ້ນເທົ່ານັ້ນ ທຸກສິ່ງຢ່າງຈະຢຸດສງັກລົງທັນທີ" ຣັຖບານຕ່າງປະເທສເຂົ້າໄປລົງທຶນໃນກັມພູເຈັຍ ມີເຖິງ ໑໗ ພັນລ້ານດອນລາ. ໃນການເລືອກຕັ້ງປີ ໑໙໙໓ ມີເຖິງ ໑໙ ພັນລ້ານໂດລາລວມທັງໂຄງການພັທນາປະເທດນຳດ້ວຍ. ∞

## ອຳນາດຜເດັດການ ຂອງຜູ້ປົກຄອງເໜືອກວ່າ

ອຳນາດອະທິປະໄຕທັງໝົດມາຈາກປວງຊົນ ດັ່ງມີປະກົດຢູ່ໃນຣັຖທັມມະນູນຂອງ ອິນໂດເນເຊັຽ !

2. Constructive engagement ເພື່ອຕົນ ຊ່ວຍແລະກຸ່ມໂຈນການເມືອງ.

ໃນຂນະທີ່ອິນໂດເນເຊັຽກຳລັງກວດລ້າງ



ຕັກບາດຢາດນ້ຳກິນທານຮ່ວມກັນເພາະໄດ້ສົມຕົນພາບໃໝ່ໆ ໑໙໙໗



ພຍາພູມີ ວົງວິຈິດ ແລະ ພຍາເພັງ ພົງສວັນ ສອງຄູ່ສົມຍາໄປຕັກບາດທີ່ວັດອົງຕື້ຮ່ວມກັນ ພ້ອມທັງສາບານຕົວຕໍ່ໜ້າພຣະອົງຕື້ ວ່າ ຖ້າໃຜຄິດຄົດລ້ຽວຕໍ່ຊາດ, ຕໍ່ສາສນາ, ຕໍ່ພຣະມະຫາກະສັດ ແລະ ຕໍ່ປະຊາຊົນແລ້ວ ໃຫ້ມັນສົງອັນເປັນໄປ ຄື: ພັດພາກຈາກຄອບຄົວ, ປະເທດຊາດເກີດທົ່ງນົນຈົມ ວ່າຊັ້ນ... ດຽວນີ້ໃສ່ໄປເຖິງຂຸມໜົ່ນະຮົກກ່ອນກັນແລ້ວ !>>>

ການເຄື່ອນໄຫວຂອງຂບວນການປະຊາທິປະໄຕ ເຮົາຈະພົບເຫັນວ່າຜເດັດການທະຫານພະມ້າຊຶ່ງຄວບຄຸມພລັງປະຊາທິປະໄຕ ແບບໃນຕົວກຳລັງໄດ້ຮັບລາງວັນຕອບແທນຈາກບັນດາປະເທສເພື່ອນບ້ານໃນກຸ່ມເອຊຽນຜູ້ນຳ ຣສຊ. ຂອງພະມ້າ.

ນາຍພົລຕັນສ່ວຍໄປຢ້ຽມຢາມມາເລເຊັຽເປັນຄັ້ງແລກແລະໄດ້ຮັບການຕ້ອນຮັບຢ່າງສົມກຽດຈາກນາຍົກຣັຖມົນຕຣີ ມາຫາເທີ, ນາຍພົລສ່ວຍມີຄວາມດີໃຈຢ່າງຍິ່ງທີ່ໄດ້ຍິນນາຍົກຣັຖມົນຕຣີມາຫາເທີກ່າວວ່າໃນປີໜ້າ ພະມ້າຄວນຈະໄດ້ເຂົ້າມາເປັນສະມາຊິກຖາວອນຂອງກຸ່ມສະມາຄົມເອຊຽນ ທ່ານມາຫາທີ່ຂໍຮັບຮອງວ່າສະມາຊິກອື່ນໆຂອງເອຊຽນຄົງຈະບໍ່ຂັດຂວາງພະມ້າເທົ່າໃດ.

ກຸ່ມຂັດຂວາງພະມ້າຄົງຈະເປັນສຫະຣັຖແລະບັນດາໂລກຕາເວັນຕົກຫລາຍກວ່າ. ຣັຖບານສຫະຣັຖແລະສະພາຢູໂຣປ ໄດ້ທຳການວິພາກວິຈານຜເດັດການພະມ້າໂຫດຮ້າຍວ່າ ລະເມີດສິດທິມະນຸດຊົນແລະບໍ່ຄິດທຳການຢ່າງໃດທີ່ຈະປະຕິຮູບການເມືອງ

ນາຍົກຣັຖມົນຕຣີມາຫາເທີ ກ່າວວ່າເອຊຽນ ແລະພະມ້າບໍ່ຈຳເປັນທີ່ຈະຕ້ອງໄປຢ້ານການກົດດັນຂອງສຫະຣັຖ ແລະໂລກຕາເວັນຕົກ. ປະເທດເຫລົ່ານັ້ນມີຜົລປະໂຍດທາງການຄ້າແລະການລົງທຶນໃນເອເຊັຽ ຕາເວັນອອກຢ່າງມະຫາສານ. ພວກເຂົາບໍ່ກ້າຈະໄປທຳລາຍ ໂອກາດອັນດີຂອງເຂົາດອກ.

ເມື່ອພວກເຂົາເຫັນນ້ຳມັນ ພວກເຂົາຈະແຫ່ກັນມາໃນເອເຊັຽ..ນີ້ຄືຄຳກ່າວອຳລາຂອງນາຍົກຣັຖມົນຕຣີ ມາຫາເທີ ທີ່ມີຕໍ່ຜູ້ນຳຜເດັດການທາງທະຫານ ພະມ້າກ່ອນ ທີ່ຈະໄປຈາກກຸງກົວລາລັມເປີ.

ໃນການຢ້ຽມມາເລເຊັຽຄັ້ງທຳອິດນີ້ ນາຍພົລຕັນສ່ວຍໄດ້ຮັບການປະທ້ວງຢ່າງຫລວງຫລາຍຈາກກຸ່ມແຮງງານ, ກຸ່ມປະຊາທິປະໄຕ, ກຸ່ມສິ່ງແວດລ້ອມ ລວມແລ້ວ ໑໖ ສະຖາບັນຂອງມາເລເຊັຽ. ຊຶ່ງໄດ້ສະແດງຄວາມວິຕົກກັງວົນກັບເຣື່ອງການລະເມີດສິດທິມະນຸດຊົນໃນພະມ້າ. ກຸ່ມເຫລົ່ານີ້ຍັງກ່າວຫາວ່າຣັຖບານທະຫານພະມ້າໃຊ້ວິທີການບີບບັງຄັບແຮງງານໃຫ້ທຳງານໃນໂຄງການພັທນາແລະຍັງທຳການກົດຂີ່ຂົ່ມເຫັງຊົນເຜົ່ານ້ອຍຊາວອິສລາມ ທີ່ຊາຍແດນບັງກລາເດດ້ວຍ. ປະຊາຊົນຊາວມາເລເຊັຽບໍ່ຕ້ອງການກົດກັນປະຊາຊົນຊາວພະມ້າ ທີ່ຕ້ອງການເຂົ້າມາໃນເອຊຽນ ຫາກແຕ່ບໍ່ເຫັນດ້ວຍກັບການເຂົ້າມາຂອງຜເດັດການພະມ້າ, ຊຶ່ງບໍ່ໄດ້ເປັນຕົວແທນອັນຊອບທັມເຂົາວ່າ ./.

## ຈົດໝາຍຈາກຜູ້ອ່ານ

ລາວອັນນີ້ ທີ່ຮັກແພງ ແລະນັບຖືຍິ່ງ ຫວັງຢ່າງຍິ່ງວ່າ ການຂຽນຈົດໝາຍມາຫາທ່ານຄົງບໍ່ເປັນການລົບກວນໃນກິດຈະການຂອງຄນະຈັດທຳ ແລະໂດຍສະເພາະແລ້ວທ່ານບັນນາທິການຂອງລາວອັນນີ້. ເອົາລະເພື່ອບໍ່ເປັນການເສັຽເວລາອັນມີຄຸນຄ່າຂອງທ່ານ ຂ້າພະເຈົ້າຂໍຖາມມາດັ່ງຕໍ່ໄປນີ້:

໑. ທ່ານຄຳເພີຍ ສີບຸນມາ ຜູ້ບັນນາທິການຄົນທຳອິດນັ້ນເພິ່ນລາອອກໄປນັ້ນດ້ວຍເຫດຜົນອັນໃດຄືບໍ່ແຈ້ງໃຫ້ສະມາຊິກຮັບຊາບນຳເພາະເພິ່ນຜູ້ນີ້ຮູ້ຈັກກັນມາແຕ່ຄາວຢູ່ວຽງຈັນໂພສນຳກັນຕອບແດ່

໒. ລາວອັນນີ້ ມີສະມາຊິກນຳກັນຈັກຄົນ

໓. ພວກທ່ານເອົາເງິນມາແຕ່ໃສຄືວ່າພິມແຕ່ເຈັ້ຽງາມໆແທ້ ?

໔. ໄດ້ຍິນວ່າລາວຮ່ວມເສຣີພາບ ຈັດກອງປະຊຸມໃຫຍ່ຢູ່ຣັຖອໍຣິກອນ ນັ້ນມີແທ້ບໍ່ ຄນະຂອງພວກທ່ານໄດ້ໄປຮ່ວມປະຊຸມນຳບໍ່ ແລະໄປນຳກັນຈັກຄົນ ?

໕. ໄດ້ຍິນຄົນບາງກຸ່ມວ່າພວກທ່ານເປັນທາດຣັບໃຊ້ໃຫ້ພັກການເມືອງອື່ນໆໂດຍສະເພາະແມ່ນຣັຖບານ ສ.ປ.ປ.ລາວ ມີຄວາມຈິງພຽງໃດ ຕອບໃຫ້ຊາບນຳແດ່ ຖ້າເປັນຈິງຈະຢຸດເຊົາເປັນສະມາຊິກທັນທີໂລດເພາະເບື່ອໜ້າງໜ້າລາວແດງມາໄດ້໑໕ ປີແລ້ວຕັ້ງແຕ່ຢູ່ຊຳເໜືອ.

໖. ສິ່ງທີ່ຂ້າພະເຈົ້າຊັງທີ່ສຸດແມ່ນເອົາຄົນລາວດ້ວຍກັນໄປຂ້າຖິ້ມ ທ່ານເປັນຄົນຮັບໃຊ້ລາວແດງຈະຄິດວ່າແນວໃດ ?

໗. ໄດ້ເຫັນທ່ານຜູ້ນຳບາງຄົນໄປຖ່າຍຮູບກັບຄຳພຸຍແກ້ວບົວຣະພາ ລາວແດງ ບໍ່ໜຳຍັງເອົາລົງໜ້າປົກນິຕຍະສາຣ ລາວຫວັງໃໝ່ ພວກນີ້ແມ່ນຄນະດຽວກັນກັບພວກທ່ານແມ່ນບໍ່ ?

໘. ນິຕຍະສາຣ ລາວອັນນີ້ ສະບັບທີ່-໕ ຍັງບໍ່ທັນໄດ້ຮັບ ຖ້າບໍ່ລືມສະມາຊິກກໍ່ຂໍໃຫ້ສົ່ງໃຫ້ດ້ວຍເພາະມັກຄໍລັມຜູ້ຂຽນແລະອຸດົມການຂອງຄນະດີ ຖ້າໄປເປັນທາດຣັບໃຊ້ລາວແດງແລ້ວເຖິງຈະດີເອົາກໍ່ເຊົາເປັນເພື່ອນກັນໄດ້..ຢ່າລືມ.

໙. ປັດຈຸບັນສັງຄົມຢູ່ເມືອງລາວຄືວ່າກິນແຕ່ເຫຼົ້າ ເຂົ້າແຕ່ບາຣ໌ ບໍ່ວ່າຊາຍຫຼືຍິງພໍໆກັນ ທ່ານມີຄວາມຄິດເຫັນແນວໃດຕໍ່ບັນຫາເຣື່ອງນີ້. ? ຂໍຖາມພຽງເທົ່ານີ້ເທື່ອໜ້າອາດຖາມມາຫຼາຍກວ່ານີ້... ບົວບານ ວົງສາ

**ຕອບ** ທ່ານບົວບານ ວົງສາ ຂໍຂອບໃຈທີ່ໄດ້ຂຽນຈົດໝາຍມາຖາມລາວອັນນີ້ເພື່ອບໍ່ເປັນການລ້າຊ້າໃນການຕອບເປັນຂໍ້ໆໄປ>>

໑. ທ່ານຄຳເພີຍ ສີບຸນມາ ເພິ່ນໄດ້ຂໍພັກຊົ່ວຄາວເພາະມີກິຈທຸຣະສ່ວນຕົວທາງດ້ານວຽກງານ. ຂໍໂທດນຳທີ່ບໍ່ໄດ້ແຈ້ງໃຫ້ທ່ານຊາບ ເພາະຄິດວ່າສະມາຊິກທຸກຄົນໄດ້ຮັບຊາບໄດ້ນານແລ້ວ. ຖ້າຕ້ອງການຢາກຈະສົ່ງຈົດໝາຍສ່ວນຕົວກໍ່ຂໍເຊີນສົ່ງຜ່ານທາງລາວອັນນີ້ ພວກເຮົາຈະສົ່ງຕໍ່ໄປໃຫ້ເຖິງທ່ານຄຳເພີຍ ສີບຸນມາ ດີໃຈນຳທີ່ຮູ້ຈັກ !!

໒. ສະມາຊິກຂອງລາວອັນນີ້ ມີປະມານ ໙,໖໐໑ ຄົນ ສະມາຊິກບາງສ່ວນບໍ່ໄດ້ເສັຽຄ່າບຳຣຸງ ເພາະສະພາບການເສດກິຈຂອງແຕ່ລະຄົນບໍ່ຄືກັນ.

໓. ພວກເຮົາຄນະລາວອັນນີ້ກໍ່ໄດ້ເງິນມາຈາກສະມາຊິກຂອງຜູ້ທີ່ໄດ້ຈອງນິຕຍະສາຣນັ້ນແລ້ວ.ນອກຈາກລາຍໄດ້ດັ່ງກ່າວນັ້ນແລ້ວກໍ່ຈະແມ່ນມາຈາກວຽກງານທີ່ທຳສັນຍາຈ້າງຝ່າຍອື່ນທ່ານຈະໄດ້ເຫັນຣາຍລະອຽດທີ່ໄດ້ແຈ້ງມາໃນນິຕຍະສາຣສະບັບທີ່ ໕ ນັ້ນ ຫວັງວ່າທ່ານຄົງຈະເຂົ້າໃຈດີນໍ້!

໔. ກອງປະຊຸມໃຫຍ່ລາວຮ່ວມເສຣີພາບນັ້ນມີແທ້ ທາງນິຕຍະສາຣ ລາວອັນນີ້ກໍ່ໄດ້ສົ່ງຜູ້ຕາງໜ້າທີ່ມີອຳນາດເຕັມໄປຮ່ວມກັບປະທານພັກລາວກ້າວໜ້າ ແລະໄດ້ໄປສົມທົບກັບຄນະຜູ້ຕາງໜ້າພັກຢູ່ຣັຖອໍຣິກອນພຸ້ນ ໖ ຄົນ ລວມເປັນ ໘ ຄົນນຳກັນ.ການປະຊຸມເຫັນວ່າໄດ້ຜົລດີສົມຄວນ.

໕. ຕອບຂໍ້ນີ້ເຫັນວ່າໜັກແລະສຳຄັນຍິ່ງ ທ່ານວ່າກຸ່ມ ແມ່ນກຸ່ມໃດແລະພັກພວກໃດ ຂ້າພະເຈົ້າຄິດວ່າຖ້າໃຜຢູ່ວົງນອກບໍ່ໄປເຫັນສະພາບການຕົວຈິງແລ້ວເຫັນວ່າບໍ່ສົມຄວນຈະໃສ່ຮ້າຍຄົນອື່ນເພາະພວກເຮົາບໍ່ແມ່ນທາດຣັບໃຊ້ໃຫ້ພັກການເມືອງໃດນອກຈາກຈະຂໍເປັນທາດຣັບໃຊ້ປວງຊົນກໍ່ພໍ ຫຼືວ່າຊາດທີ່ໃຫ້ກຳເນີດເຮົາຄວນເປັນຄົນຮັບໃຊ້ຊາດ ຮັບໃຊ້ປະຊາຊົນດີກວ່າຈະໄປເປັນທາດຣັບໃຊ້ຕ່າງຊາດນັ້ນບໍ່ຖືກຕ້ອງ ຢ່າຝ້າວໃຈຮ້ອນຟັງໜ້າຟັງຫລັງກ່ອນດູ ຖ້າທ່ານເຊົາເປັນສະມາຊິກເຮົາແລ້ວຈະມີໃຜຄົນຄິດຄືທ່ານຂຽນຈົດໝາຍ >>

## ຈົດໝາຍຈາກຜູ້ອ່ານ

(ຕໍ່ຈາກໜ້າ ໔໓)

ມາຕິຊົມຜູ້ໃຫ້ກຳລັງໃຈ. ເຣື່ອງທີ່ທ່ານສົ່ງໃສ່ວ່າ ລາວວັນນີ້ ເປັນທາງຮັບໃຊ້ຣັຖບານ ສ.ປ.ປ.ລາວ ນັ້ນບໍ່ມີຄວາມຈິງ ເປັນຕາໜ້າເສັຽໃຈນຳທີ່ທ່ານໄປເຮັດວຽກສົມທຸກໃນຄ້າຍກັກຂັງຢູ່ຊຳເໜືອ ທັ້ງໆວ່າທ່ານເປັນຄົນຮັບໃຊ້ຣາຊການບໍຣິຫານປະເທດຊາດດ້ວຍຄວາມສຸດຈິດແລະຊື່ສັດຕໍ່ປະຊາຊົນຕໍ່ຊາດແທ້ໆ. ແນ່ນອນແລ້ວໃຜຫຼືພັກການເມືອງໃດທີ່ເອົາຄົນລາວດ້ວຍກັນໄປຂັງຖິ້ມໂດຍບໍ່ສືບຫາວຫາເຫດຜົນມີຄວາມຜິດຫຼືວ່າບໍ່ມີຄວາມຜິດກໍ່ຄວນພິຈາຣນາດ້ວຍກົດໝາຍທີ່ມີກົດໝາຍຣັຖທັມມະນູນປົກຄອງແຜ່ນດິນຢູ່ແລ້ວ. ຢ່າສົງໃສອີກເລີຍວ່າ ລາວວັນນີ້ເປັນຄົນຮັບໃຊ້ລາວແດງ ຫຼື ລາວໃດກໍ່ແລ້ວແຕ່ ພວກເຮົາເປັນພຽງກະບອກສຽງໃຫ້ເພື່ອຄົນລາວໂດຍກ້າເວົ້າອອກມາດ້ວຍຄວາມຮັກປະຊາຊົນລາວແທ້ຈິງ ຖ້າໃຜຫາກດູໝິ່ນປຽບປາມລາວຄົນນັ້ນຈະຖືກປະນາມໂດຍບໍ່ອັ້ນກົວແຕ່ປະການໃດ.

ກ. ທ່ານຖາມກ່ຽວກັບນິຄົມລາວບາງຄົນໄປຖ່າຍຮູບກັບ ທ່ານພຸຍ ແກ້ວບົວລະພາ ນັ້ນຂ້າພະເຈົ້າບໍ່ຮູ້ນຳເພາະທ່ານບໍ່ບົ່ງບອກຊື່ມາ ເຫັນແຕ່ວາຣສານໜ້າສີພິມ ລາວຫວ້າງໃໝ່ ເອົາລົງນັ້ນຂ້າພະເຈົ້າຄິດວ່າຄົງຈະບໍ່ມີບັນຫາຫຍັງ ເພາະເຮົາຢູ່ປະເທດເສຣີ ກໍ່ສາມາດພົບປະກັນໄດ້ໃນສະຖານວ່າຄົນລາວນຳກັນ ແລະຂໍບອກໃຫ້ທ່ານເຂົ້າໃຈອີກວ່າ ພວກນີ້ບໍ່ແມ່ນພວກດຽວກັນກັບພວກເຮົາເພາະອຸດົມການໆເມືອງບໍ່ຄືກັນ ເຖິງຢ່າງໃດພວກເພິ່ນກໍ່ແມ່ນຄົນລາວເຮົາຄືກັນ ຂໍໃຫ້ຮັກແພງກັນໄວ້ດີກວ່າຈະຊັງກັນ ຄົນລາວສ່ວນຫຼາຍອາດຄິດຄືຂ້າພະເຈົ້າຕີ ຫຼືວ່າແນວໃດ ?

ຂ. ນິຕຍະສານ ລາວວັນນີ້ ສະບັບທີ່ ໕ ກໍ່ແມ່ນທ່ານກຳລັງຖືອ່ານຢູ່ນີ້ເອງ ຂໍໂທດນຳທີ່ອອກຊ້ານ້ອຍເຫດການອັນຈຳເປັນຕິດຂັດ. ຂໍຂອບໃຈທີ່ຂຽນມາຫາວ ແລະນັກອຸດົມການຂອງ ລາວວັນນີ້ ຫວັງວ່າທ່ານຄົງຈະໃຫ້ຄວາມສນັບສນູນຕໍ່ໄປຈົນກວ່າຈະປິດທ້າຍການລາວວັນນີ້ ພວກເຮົາຄິດເຫັນວ່າຈະຂໍເປັນປາກເປັນສຽງໃຫ້ທ່ານຜູ້ອ່ານຕລອດໄປນານອັນແສນນານ.

ຄ. ທ່ານຖາມວ່າປັດຈຸບັນສັງຄົມລາວຢູ່ເມືອງລາວກິນແຕ່ເຫຼົ້າເຂົ້າແຕ່ບາຣ໌ ແລ້ວກໍ່ຖາມວ່າຄວາມຄິດເຫັນຂອງເຮົາວ່າເປັນແນວໃດ ໃຜໆກໍ່ຄົງຮັບຮູ້ນຳກັນແລ້ວນີ້ສັງຄົມລາວກຳລັງເປີດປະຕູສູ່ໂລກກວ້າງ ຜູ້ກະໂດດຂັ້ນຫຼືວ່າຜູ້ໃດລວຍບໍ່ຮູ້ສຶກຈະເຮັດແນວໃດຕ້ອງມີແຕ່ເມົາກັບເມົາໃຫ້ເບິ່ງວິດີໂອໃຜໄປປານບ້ານກັບມາກໍ່ເຫັນແຕ່ກິນເຫຼົ້າເມົາອັນນີ້ນັບມ່ວນເກີນຂອບເຂດເພາະເຫັນເງິນໂດນລາຍະເມຣິກັນ (ຫຼືເພິ່ນເອີ້ນວ່າຈັກກະພັດນິຍົມ)ໃນຕອນປຸ້ນບ້ານເພເຮືອນຂອງເຮົາໃນຍຸກສົງຄາມເປື່ອຍເບື່ອຍເພິ່ນວ່າ ບັດດຽວນີ້ເຕສັງຄົມເປັນແນວໃດ ໄປໃສມີແຕ່ບາຣ໌ທາກໍ່ຮູ້ນີ້ວ່າ ຂ້າພະເຈົ້າໄປປາມລາວໃນຊຸມປີ ໑໙໙໐ ຍັງບໍ່ມີບາຣ໌ ຫຼາຍປານນີ້ ແຕ່ດຽວນີ້ປັດໂທບໍ່ຕ້ອງກ່າວເຖິງ ມີບາງຄົນຍັງວ່າບ້ານເມືອງມີແສງໄຟຮຸ່ງບາຣ໌ ຮ້ານກິນດື່ມ ແມ່ນຈເຣີນ ວ່າຊັ້ນ. ຂໍຕອບໃຫ້ທ່ານ ບົວບານ ວົງສາ ພຽງເທົ່ານີ້ຫວັງວ່າຄົງຈະເຂົ້າໃຈດີນີ້ ຖ້າບໍ່ດັ່ງນັ້ນກະຣຸນາຂຽນຈົດໝາຍມາຖາມຕື່ມ..

ວຽງຈັນ ວັນທີ່ ໑໔ ພຶສຈິກາ ປີ ໑໙໙໗

ຮຽນທ່ານ ບ.ກ. ລາວວັນນີ້ ທີ່ນັບຖືຍິ່ງ ຂ້າພະເຈົ້າໄດ້ອ່ານ ນິຕຍະສານຂອງທ່ານ ພ້ອມທັງດີໃຈແລະໄດ້ເຫັນຮູບພາບອັນໜ້າສົນເສີນໂດຍສະເພາະແລ້ວຄນະໜຸ່ມຄືພວກທ່ານມີຄວາມສາມາດສ້າງນິຕຍະສານມາໃຫ້ຄົນລາວໄດ້ອ່ານເພື່ອເບົາສມອງ ແລະປະດັບຄວາມຮູ້ທົ່ວໄປ ໂດຍມີຂ່າວ ແລະກິຈກັມຕ່າງໆຂອງສັງຄົມ ການສຶກສາ ແລະການເມືອງຄຽງຄູ່ກັນໄປ. ພ້ອມດຽວກັນນີ້ຂໍຈອງເປັນສະມາຊິກໄປເລີຍ ຂໍໃຫ້ສົ່ງໄປເຖິງທຸກສະບັບ. ກ່ອນອື່ນໝົດໃນນາມເປັນສະມາຊິກໃໝ່ ຂໍຖາມທ່ານມາໃນສາມບັນຫາ ບັນຫານັ້ນກໍ່ບໍ່ໃຫຍ່ ແລະກໍ່ບໍ່ຖາມໄປໃຫ້ຍາວເພາະຢ້ານທ່ານລ້າກຽດຫຼືບໍ່ຢາກຕອບຈະເສັຽເວລາອັນມີຄຸນຄ່າຂອງທ່ານແລະຄນະຈັດທຳອີກ ເອົາລະຂໍຖາມໄປດັ່ງນີ້ຄື :

໑. ຄົນລາວຢູ່ຕ່າງປະເທສຄືມີຫຼາຍພັກການເມືອງຫຼາຍແທ້ ເຮັດແນວໃດຈະດີ?

໒. ຢູ່ເມືອງລາວດຽວນີ້ມີແຕ່ພັກໂທນເໜົາເອົາໝົດຄື ພັກປະຊາຊົນປະຕິວັດລາວເປັນດ້ວຍເຫດໃດຕອບແດ່ >>

## ຈົດໝາຍຈາກຜູ້ອ່ານ

ຈາກໜ້າ ໔໔

**ຖ.** ໄດ້ຍິນຂ່າວເປົ່າປີວໃສ່ຫູຂ້າພະເຈົ້າວ່າໃນປີ ຄ.ສ. ໒໐໐໐ ຄົນລາວຢູ່ຕ່າງປະເທສຈະໃຫ້ກັບເມືອຢາມບ້ານໂດຍບໍ່ຕ້ອງຂໍວີຊາ ຫຼືຈະໄປຢູ່ລາວເລີຍກໍ່ໄດ້ເຣື່ອງນີ້ມີຄວາມຈິງປານໃດລາວວັນນີ້ອາຈຮູ້ແລະຕິດຕາມສະພາບການດີ ຂໍໃຫ້ຕອບຄຳຖາມສາມຢ່າງນີ້ແດ່ຂອບໃຈ.

ຈາກ ອິນປັນ ຫຼວງເທພ ທີ່ວຽງຈັນ

**ຕອບ** ທ່ານອິນປັນ ຫຼວງເທພ ຂໍຂອບໃຈທ່ານທີ່ໄດ້ເຂົ້າມາເປັນສະມາຊິກໃໝ່ເຖິງໃໝ່ຫຼືເກົ່າກໍ່ບໍ່ເຄີຍລັງກຽດເລີຍວ່າທ່ານຈະຖາມມາໃນລັກສນະໃດເພາະເຮົາເປັນຄົນລາວທີ່ໄດ້ເດີນຕາມບົນເສັ້ນທາງອັນດຽວກັນ ເຖິງວ່າຈະຢູ່ໃນລາວຫຼືນອກປະເທດກໍ່ລ້ວນແລ້ວແຕ່ໄດ້ຣັບຄວາມເຫັນແລກປ່ຽນແນວຄິດຈິດໃຈນຳກັນປ່າເຂົ້າໃຈວ່າພວກເຮົາຢູ່ນອກແມ່ນຍິ່ງມີຫາພວກທ່ານໃຫ້ອອກຈາກຄວາມທຸກຍາກ ຄວາມອຸກອັ່ງໃນໃຈ ຫຼືຢາກຈະສະແດງອອກຄວາມຄິດເຫັນມາພ້ອມແລ້ວຈະຕອບໃຫ້ ຈະຖືກຫຼືຜິດກໍ່ຂໍອະພັຍນຳໃນການຕອບບໍ່ສອດຄ່ອງກັບບົນເນື້ອໃນຈິດໃຈຂອງທ່ານ ເອົາລະເພື່ອບໍ່ເປັນການລໍ້ຊ້າ ເພາະສະນັ້ນຂໍຕອບໃຫ້ທ່ານໃນສາມບັນຫາທີ່ທ່ານຖາມມາດ້ວຍຄວາມເຕັມໃຈ..

໑. ຄົນລາວຢູ່ຕ່າງປະເທດທຸກຄົນມີສິດທິເສຣີພາບໃນການປາກເວົ້າ, ຂີດຂຽນການຈັດຕັ້ງອົງການ, ສະມາຄົມ ຫຼືວ່າກຸ່ມການເມືອງຕ່າງໆທີ່ແຕກຕ່າງກັນໄປໂດຍອາສັຍກົດໝາຍຂອງປະເທດທີ່ເຂົາເຈົ້າອາສັຍຢູ່ໂດຍສະເພາະໃນສຫະຣັຖອະເມຣິກາ, ການທີ່ເຂົາເຈົ້າມີຫຼາຍພັກການເມືອງບໍ່ໄດ້ໝາຍຄວາມວ່າເຂົາເຈົ້າມີການແຕກແຍກກັນດອກ ເຖິງຍາມບຸນຍາມສົມປະເພນີແຕ່ລະທ້ອງຖິ່ນກໍ່ມີການສລອງມ່ວນຊື່ນກັນຕາມເດີມ ບໍ່ປະຣິດໃຫ້ໝອງປະຄອງໃຫ້ເສົ້າ, ຖ້າປ່ຽນແປງກໍ່ມີບາງເລັກນ້ອຍ ແລະເຮັດແນວນີ້ກໍ່ດີຢູ່.

໒. ຢູ່ເມືອງລາວມີພັກດຽວກໍ່ເພາະວ່າເຂົາເຈົ້າມີນະໂຍບາຍການເມືອງແບບສາກົນກັນຊົບບໍ່ມັກມີຫຼາຍພັກນັບຫຍັງສມອງມີແຕ່ຮົບລ້າຂ້າຟັນກັນບໍ່ແລ້ວດຽວນີ້ພັກດຽວເຈົ້າກໍ່ແລ້ວ ຄືນັ້ງບໍ່ມີສອງແຕ່ນະໂຍບາຍແບບນີ້ຂັດກັບສິດທິມະນຸສຊົນບໍ່ຢາກໃຫ້ຜູ້ອື່ນຫຼືພັກອື່ນມາມີອຳນາດນຳນະໂຍບາຍການເມືອງແບບນີ້ຄືອຳນາດຜະເດັດການມັນບໍ່ຄືຢູ່ໂລກນາຍທຶນນິຍົມສາກົນ ທຸກຄົນຕ້ອງແຂ່ງດີແຂ່ງເດັ່ນມີຄວາມຮູ້ຄວາມສາມາດແມ່ນຜູ້ນັ້ນພາໝູ່ເຮັດໝູ່ສ້າງຈັ່ງຊັ້ນປະເທດຊາຕຈຶ່ງຈະເຣີນກ້າວໄປໄກ. ດ້ວຍເຫດຜົລສອງຢ່າງນີ້ທ່ານຈົ່ງເລືອກເອົາອັນໃດດີເສັ້ນທາງໃດມັນງ່າຍກໍ່ຮັບເອົາ

**໓.** ຕອບຂໍ້ທີ ສາມນີ້ ລາວວັນນີ້ບໍ່ມີຕາທິບຈະສ່ອງເຫັນໃນປີ ໒໐໐໐ ເພາະມັນເປັນສັຕວັດທີ ໒໑ ແລ້ວເຫດການໆເມືອງຢູ່ແຖບເອເຊັ້ຽຫຼືປະເທດຕ່າງໆຈະຕ້ອງໄດ້ສັ່ງຊາເບິ່ງວ່າການແຂ່ງແຍ້ງທາງດ້ານອາວຸດ ຫຼືເສຖກິຈ ການເມືອງນັ້ນມັນຕ້ອງປ່ຽນແປງຫຼາຍດ້ານ ປະເທດໃດມີຜູ້ນຳທີ່ໂງ່ຈ້າບໍ່ສລາດ ປະເທດນັ້ນຈະຕ້ອງຕົກເປັນຂ້ອຍຂ້າຂອງປະເທດທີ່ຮັ່ງມີແລະຈະນຳຫຼັງປະເທດອື່ນ ໂດຍບົກຕົວຢ່າງວ່າປະເທດໃດມີເສິກ ຄົນພາຍໃນປະເທດບໍ່ມີການສຶກສາສູງ ມີແນວຄິດການເມືອງຄັບແຄບ ໃຊ້ອຳນາດຜູກຂາດ ເສຖກິຈຕົກຕ່ຳ ພວກເຮົາຈະໂທດໃຜ ພວກເຮົາຈະຕ້ອງໂທດຜູ້ນຳບໍ່ເບິ່ງໄປໃນທາງການເມືອງອະນາຄົດ ທ່ານວ່ານີ້ຄົນເວົ້າໃສ່ຫູ ຢ່າໄປເຊື່ອຄົນເວົ້າລົມໆແລ້ງພໍແຕ່ຕົວະກັນຊື່ໆ. ແຜນການປ່ຽນແປງບໍ່ມີຫຍັງໃຫຍ່ຫຼວງຕາບໃດການປົກຄອງຍັງມີພັກດຽວປົກຄອງອີກ ໕໐໐ ຊາຕຍັງບໍ່ມີການປ່ຽນແປງ ພວກທ່ານຕ້ອງສຶກສາຄັກໆ ທ່ານຍັງໜຸ່ມທົ່ວກ້າວໜ້າ ເຮັດແນວໃດຈະພາຊາຕຫລຸດພົ້ນອອກຈາກຄວາມທຸກຍາກການອຶດຫິວ ເປັນຂ້ອຍຂ້າຂອງຕ່າງຊາຕ ພວກທ່ານຄວນຈະປ່ຽນແປງແຕ່ດຽວນີ້ຈະລໍຖ້າແຕ່ພວກເຮົາແມ່ນບໍ່ເປັນຕີ ! ທ່ານວ່າຄົນລາວຢູ່ຕ່າງປະເທດຈະຕ້ອງໃຫ້ຄືນເມືອຢາມບ້ານໂດຍບໍ່ຕ້ອງໃຫ້ເສັຽຄ່າວີຊານັ້ນ ບໍ່ມີຄວາມຈິງດອກ ຖ້າຄົນຕ່າງປະເທດບໍ່ເສັຽຄ່າວີຊາເຂົ້າເມືອງລາວແລ້ວ ຣັຖບານຈະເອົາເງິນໃສ່ມາລ້ຽງພະນັກງານ ດຽວນີ້ຣັຖບານລາວຍັງຕິດໜີ້ຕ່າງປະເທດຢູ່ເຈົ້າແນວບໍ່ມີຫຼາຍ. ບໍ່ໜານຄ່າວີຊາຍັງແພງກວ່າປະເທດອື່ນອີກຫຼາຍເທົ່າຖ້າເຮົາບໍ່ຮູ້ເຈົ້າໜ້າທີ່ສະຖານທູດແຕ່ງໄດ້ເສັຽຫຼາຍກວ່າອັຕຣາຫຼວງຊ້ຳ >>

ຈາກຊ້າຍຫາຂວາ ດຣ.ບຸນທອນ ຈັນທະວິໄຊ, ທ່ານສຸຣິວັນ ຄຳວົງໄຊ, ນ.ສ.ອໍຣະດີ ພັນທະວົງ ທ້າວ ວັນນະນີ ພັນທະວົງ, ນ.ສ. ຣັສມີ ພົມສຸວັນດາຣາ

ນ.ສ. ມະນີວອນ ຍາຕິວົງ ແລະ ທ່ານຫຸມແພງ ເພັງສົມພອຣ ຖ່າຍຮູບຮ່ວມກັນໃນງານກິນລ້ຽງມອບທຶນ ຈາກ ລາວເສຣີຊົນ ໑໙໙໗






## ຈາກໃຈຈິງຂອງລາວວັນນີ້

ລາວວັນນີ້ບໍ່ວ່າຍາມໃດ ຈະຢູ່ພາຍໃນຫຼືນອກປະເທສ ມີຄວາມພູມໃຈເປັນຄົນລາວ, ມີຄວາມປາຖນາດີທີ່ຕ້ອງການຢາກໃຫ້ປວງຊົນມີອິສຣະເສຣີພາບ ມີປະຊາທິປະໄຕຣ໌, ມີສັນຕິພາບອັນຍາວນານ ໃນປິຕຸພູມດິນແດນລ້ານຊ້າງຂອງລາວທີ່ສືບທອດມາຈາກບັນດາຜູ້ນຳທີ່ເກັ່ງກ້າສາມາຖ ຄືບັນພະບູຣຸດຂອງຊາຕໄດ້ຍາດຊິງເອົາໄວ້ໃຫ້ຕົກມາເຖິງເຊັ່ນລູກເຊັ່ນຫລານຂອງພວກເຮົາປັດຈຸບັນ. ພວກເຮົາບໍ່ເຄີຍມີອຸດົມການແນວຄິດແບ່ງແຍກດິນແດນລາວ, ພວກເຮົາຢາກໃຫ້ທຸກຄົນໃນຊາຕມີແຕ່ຄວາມອຸດົມສົມບູນປາສຈາກການຄິດແກ້ແຄ້ນກັນອີກ, ເພື່ອຄວາມສຸຂຄວາມຈເຣີນໃນດ້ານການສຶກສາໃຫ້ກ້າວໜ້າ ຄວນຈະຮັກສາໄວ້ເຊິ່ງມູນເຊື້ອຂອງຊາຕລາວ, ບໍ່ມີຊາຕໃດຈະມາຮັກແລະມີຄວາມອົດທົນຊາຕຄົນພາຍໃນຊາຕຈະຮັກແພງກັນ. ພວກເຮົາຈະໄດ້ເອົາແນວຄິດຮັກວັທນະທັມຂອງລາວທີ່ຕົກທອດມາຮອດສມັຍພວກເຮົາແຕກບ້ານແຕກເມືອງມາອາສັຍຢູ່ຕ່າງປະເທສນີ້ກໍຕາມ ແຕ່ຜູ້ຫຍິງຮັກແລະຖນຸຖນອມຄວາມເປັນວັທນະທັມລາວນັ້ນຈະໄດ້ບົ່ງບອກເຖິງທີ່ການສະແດງອອກການນຸ່ງຖືແລະແຕ່ງກາຍແບບລາວງເຮົາຕາມພາກສ່ວນຕ່າງໆໃນລາວ. ຍ.ນ. ດຽງຄຳ ຍາຕິວົງສ໌ ຜູ້ນຶ່ງໃນຈຳນວນຄົນລາວອົພຍົບມາຕັ້ງຖິ່ນຖານໃນສຫະຣັຖອະເມຣິການາງໄດ້ພະຍາຍາມສິດສອນການຟ້ອນໃຫ້ລູກຫຼານຍິງລາວໄດ້ຮູ້ວິທີການຟ້ອນທຸກແບບເຊິ່ງແມ່ນເອກະຣັດຂອງຊາຕ. ການຟ້ອນແຕ່ລະຮຸ້ນກໍ່ມີຄວາມສາມາຖບໍາຣຸງດັດແປງແກ້ໄຂໃຫ້ເຂົ້າສະພາບການຂອງຍຸກປັດຈຸບັນແລະອະດີດຜ່ານມາ. ໔ ນາງສາວທີ່ໄດ້ມາສະແດງໃນງານກິນລ້ຽງສະລອງດຽນກອງປະຊຸມໃຫຍ່ຂອງສະພາປະສານງານລາວເສຣີຊົນໃນປີ ຕກ

ພວກເພິ່ນໄດ້ຝາກຄວາມຮັກແພງຄວາມລົ້ງແກ່ນບ່າແຂກທີ່ມາຊົມຈົນສາມາຖເວົ້າໄດ້ວ່າ ອັນນີ້ແມ່ນຟ້ອນແບບລາວຂອງເຮົາແທ້ໆ ໃນງານຄືນນັ້ນ ມີນັກສຶກສາຕ່າງປະເທສທີ່ໄດ້ໄປເຫັນກໍ່ວ່າ ຟ້ອນງາມ, ດົນຕຣີກໍມ່ວນ, ສາວໆກໍ່ງາມຄືງບາງຮ່າງກົມນ້ອຍປານຫຼໍ່ເຫຼົ່າວ່າຊັ້ນ.

ເປັນຫຍັງຈຶ່ງຟ້ອນແບບລາວ? ກໍ່ເພາະວ່າພວກເຂົາເຈົ້າບໍ່ມີຫຍັງອີກແລ້ວ ນອກຈາກການຮັກສາໄວ້ວັທນະທັມຂອງຕົນທີ່ຕິດຕາມມາດ້ວຍຄວາມລຳບາກຈາກດິນແດນຂອງປະເທສທີ່ເຂົາເຈົ້າປະຖິ້ມໃຫ້ໄວ້ເປັນອະດີດຄິດເຖິງຍາມໃດກໍ່ຕ້ອງເປີດເພັງຟັງສຽງອອນຊອນຈາກບ້ານເຮົາ. ທ່ານພົມມະ ພົມມະສອນ ນັກຮ້ອງ, ນັກແຕ່ງ, ນັກປະພັນ, ນາງວຽງໄຊ ພະນະຄອນ ນັກຮ້ອງສຽງຫວານ ພ້ອມດ້ວຍ ທ່ານພຽນດົນ ສຸທັມ ຜູ້ເສັນເຄື່ອງປີອາໂນທັງສາມກໍ່ໄດ້ເດີນທາງມາຮ່ວມສ້າງສັນບັນຍາກາສອັນອົບອຸ່ນໃນຍາມຄິດເຖິງເມືອງລາວຄາວແຄ້ນ ພາໃຫ້ຄວາມໂສກເສົ້າໂສການັ້ນຫາຍຈາກຫົວໃຈຂອງຜູ້ຊົມ. ນາງມະນີວອນ ຍາຕິວົງສ໌ ໄດ້ຟັງສຽງເພງຂອງຍາອ້າຍພົມມະ ພົມມະສອນ ແລະສຽງເພງຂອງ ຍາເອື້ອຍວຽງໄຊ ພະນະຄອນ ກໍ່ຂໍເຊີນໃຫ້ມາຮ້ອງໃຫ້ຟັງອີກໃນງານກິນດອງຂອງເພິ່ນເອງວ່າຊັ້ນ.





# ຜົລການເລືອກຕັ້ງປະທານາທິບໍດີ ສະຫະຣັຖ ອະເມຣິກາ

## Presidential Election 11/5/96

by K. Phongsavan



ວຸທິສະມາຊິກສະພາສູງ ບອັບໂດລ ຜູ້ລົງແຂ່ງ ພັກປະຊາຊົນ

ການເລືອກຕັ້ງເພື່ອຊິງຕຳແໜ່ງປະທານາທິບໍດີ ສະຫະຣັຖອະເມຣິກາ ໃນສມັຍທີ່ສອງຂອງທ່ານບິວລ໌ ຄລິນຕັນ ກໍ່ໄດ້ຮັບໄຊຊະນະຢ່າງຖ້ວມທົ້ນອີກຄັ້ງໜຶ່ງ ອັນເປັນປະວັດສາດຂອງພັກ ດີໂມແຄຼັດທີ່ສາມາຖດຳຣົງຕຳແໜ່ງເປັນຄັ້ງທີ່ສອງ ໃນຮອບ໕໘ ປີນັບແຕ່ ປະທານາທິບໍດີ ແຟຣັງກລິນ ດ. ຣຸສເວວທ໌ໄດ້ຮັບມາ ເມື່ອປີ ໑໙໓໖ ແລະ ໑໙໔໔ ທ່ານຄລິນຕັນ ນັບເປັນຄົນທີ່ເຈັດຂອງພັກ ດີໂມແຄຣຕ ທີ່ໄດ້ສ້າງປະວັດສາດໃຫ້ກັບວົງການຂອງພັກນີ້ ດ້ວຍຄະແນນສຽງທ່ວມທົ້ນເຖິງ ໕໐% ໃນຂະນະທີ່ທ່ານ ບອັບໂດລ ໄດ້ຮັບຄະແນນສຽງພຽງ ໔໘%. ການຊິງຊັຍທີ່ສຳຄັນໆອັນຍິ່ງໃຫຍ່ໃນຮອບທີ່ສວັດນີ້ ທີ່ຈະທຳໃຫ້ຊາວອະເມຣິກັນ ມີຄວາມຫວັງໃນການດຳຣົງຊີວິດທີ່ດີຂຶ້ນ ໃນຂະນະທີ່ເສຖກິຈ ການຄອງຊີພ ການຄ້າແລະຄ່າຂອງເງິນໂດລາທີ່ຕົກລົງໄປໃນຮອບປະວັດສາດ ເມື່ອທຽບຄ່າກັບເງິນເຢນ ຂອງຍີ່ປຸ່ນໃນປີ ໑໙໙໔ ທີ່ຜ່ານມາ. ຫລັງຈາກການລົງຄະແນນສຽງຜ່ານໄປພຽງ ມີ ຊົ່ວໂມງກວ່າງ ກໍ່ເປັນທີ່ຊາບດີວ່າ ທ່ານບິວລ໌ ຄຣິນຕັນ ຈະໄດ້ກັບມາຄອງຕຳແໜ່ງຢ່າງແນ່ນອນ ນັບວ່າເປັນຊັຍຊະນະຂອງປະທານາທິບໍດີ ທີ່ບໍ່ເຄີຍໄດ້ຮັບໃຊ້ໃນຣາຊການທະຫານມາກ່ອນນັ້ນດ້ວຍ.

ຜົລການລົງຄະແນນສຽງຂອງປະຊາຊົນຜູ້ມີສິດອອກສຽງກວ່າ ໑໙໐ ລ້ານຄົນນັ້ນ ປະທານາທິບໍດີ ຄຣິນຕັນ ຍັງສາມາຖກຳຄະແນນສຽງຣະຫວ່າງຣັຖຕໍ່ຣັຖ ໃນການໂຫວດຂອງໜ່ວຍເລືອກຕັ້ງ ໕໓໘ ໜ່ວຍ ໂດຍໄດ້ຮັບຄະແນນ ໓໗໙ ສຽງຕໍ່ ໑໕໙ ສຽງຂອງທ່ານ ບອັບ ໂດລ. ການໄດ້ຊັຍຊະນະໃນສມັຍທີ່ສອງຂອງພັກ ດີໂມແຄຣຕຄັ້ງນີ້ນັບວ່າເປັນການສ້າງບັນຍາກາສທາງການເມືອງຂອງຊາວອະເມຣິກັນໄປສູ່ສະຕະວັດທີ-໒໑ ດັ່ງຄຳປະກາສຂອງທ່ານບິວລ ຄຣິນຕັນວ່າ ໃນ ໔ປີຂ້າງໜ້ານີ້ນັບແຕ່ດຽວນີ້ໄປພວກເຮົາໄດ້ກ້າວເຂົ້າສູ່ສະຕະວັດໃໝ່ອັນເປັນການທ້າທາຍທີ່ຍິ່ງໃຫຍ່ແລະບໍ່ຈຳກັດໃນຄວາມເປັນໄປໄດ້,ໃນເວລານີ້ພວກເຮົາ ຈະຕ້ອງສ້າງສະພານທອດໄປ ແລະຂ້າພະເຈົ້າກໍ່ພ້ອມແລ້ວຫາກເມື່ອພວກທ່ານປະຊາຊົນອະເມຣິກັນມີຄວາມພ້ອມເຊັ່ນກັນ!

ໃນສມັຍແຣກໆທີ່ ປະທານາທິບໍດີ ບິວລ໌ ຄຣິນຕັນ ຂຶ້ນມາຄອງຕຳແໜ່ງປະທານາທິບໍດີ ນັ້ນ ຈາກຊັຍຊະນະຢ່າງທ່ວມທົ້ນຈາກການຊິງຊັຍກັບທ່ານປະທານາທິບໍດີ ຈອຈສ໌ ບຸສ ເມື່ອປີ ໑໙໙໒ ນັ້ນເຖິງ ໕໗% ເມື່ອສເນີໃຫ້ມີພວກລັກເພສໃນກອງທັພໃນເວລາທີ່ຮັບໜ້າທີ່ເປັນຜູ້ນຳປະເທສພຽງ ໑໐໐ ວັນຜົລການສຳຣວຈຄະແນນນິຍົມໃນເດືອນມິຖຸນາ ໑໙໙໓ ມີຄະແນນນິຍົມພຽງ ໓໗% ແຕ່ໃນເດືອນກັນຍາ ປີດຽວກັນນັ້ນ ພັລຍາປະທານາທິບໍດີ ນາງ ຮິລລາຣີ ຄຣິນຕັນ ໄດ້ສເນີແຜນປັບປຸງສວັສດີການສັງຄົມສາທາຣະນະສຸຂທີ່ຄ້າຍຄືກັບ ເມດິແຄຣ໌ ຂອງອອສເຕຣເລັຽ ຄະແນນນິຍົມກໍ່ເພີ່ມຂຶ້ນເຖິງ ໕໙% ແຕ່ມາເຖິງປີ ໑໙໙໔ ເດືອນ



ປະທານາທິບໍດີ ບິວລ໌ ຄຣິນຕັນ ພັກປະຊາທິປະໄຕຍ໌

ສິງຫາ ນັ້ນຝ່າຍຣີປັບຣິກັນ ກໍ່ໂຈມຕີການບໍຣິຫານງານຂອງທ່ານໃນດ້ານເສັຽພາສີຣາຍໄດ້ແພງ ທີ່ຝ່າຍຣັຖບານບໍ່ຮັກສາຄຳໝັ້ນສັນຍາຕາມທີ່ໄດ້ໃຫ້ໄວ້ໃນຄາວຫາສຽງເລືອກຕັ້ງນັ້ນ ຄະແນນນິຍົມກໍ່ຕົກລົງເຫຼືອພຽງ ໓໙% ໃນປີ ໑໙໙໕ ປະຊາຊົນອະເມຣິກັນມີຄວາມເຫັນອົກເຫັນໃຈໃນໂສກຣະນາຕກັມ ການວາງຣະເບີດທີ່ເມືອງອົກຄຣາໂຮມາ ທີ່ສະຖານທີ່ລ້ຽງເດັກຂອງທາງທີ່ທຳງານຂອງຣັຖບານໜ່າໃຫ້ຫາເກືອບທັ້ງຫຼັງພັງທະລາຍລົງ ເປັນເຫດໃຫ້ມີຜູ້ເສັຽຊີວິດເຖິງ ໑໖໘ ຄົນ ຄະແນນນິຍົມໄດ້ເພີ່ມຂຶ້ນໃນເດືອນເມສາເຖິງ ໕໑% ແລະແລ້ວໃນເດືອນກໍຣະກະດາ ປີດຽວນັ້ນ ພັກຣີປັບຣິກັນ ໄດ້ທຳການຂັດຂວາງການໃຊ້ຈ່າຍງົບປະມານຂອງຣັຖບານກາງໃນດ້ານສວັສດີການທາງສັງຄົມ ກ່ຽວກັບອາຫານກາງເວັນຂອງເດັກນັກຮຽນ ແລະການປ້ອງກັນສຸຂພາບຂອງຄົນແກ່ຊະຣາຄະແນນສຽງກໍ່ຕົກລົງໄປເປັນ ໔໗% ໃນເວລາທີ່ ແພັດຕຣິຄ ບູຄານັນ ແລະ ສະຕີບຟອບສ໌ ກ່າວໂຈມຕີ ບອັບ ໂດລ ໃນຂໍ້ສະເນີຂອງທ່ານ ຄຣິນຕັນ ທີ່ໃຫ້ມີຄວາມກ້າເກິ່ງໃນງົບປະມານເປັນເວລາ ໗ປີ ທ່ານບິວລ໌ ຄຣິນຕັນ ກໍ່ໄດ້ກ່າວໂຈມຕີ ທ່ານບອັບ ໂດລ ດ້ວຍ ພາໃຫ້ຄະແນນ

>>

ນິຍົມເພີ່ມຂຶ້ນມາ ໕໓% ແລະໃນເດືອນກັນຍາປີນີ້ ໑໙໙໖ ອັນເປັນປີແຫ່ງຊິງຊັຍຕໍາແໜ່ງປະທານາທິບໍດີ ທ່ານຄຣິນຕັນ ກໍ່ໄດ້ກ່າວໂຈມຕີທ່ານ ບົອບ ໂດລ ພາຍຫລັງທີ່ໄດ້ຮັບການຄັດເລືອກຈາກທາງພັຄຣີປັບລີກັນ ໃຫ້ເປັນຕົວແທນລົງສະມັຄຊິງຕໍາແໜ່ງປະທານາທິບໍດີອະເມຣິກາ ໃນຫລາຍໆບັນຫາ ແມ້ວ່າທ່ານ ບິວລ໌ ຄຣິນຕັນ ຈະຖືກທ່ານ ດິຄ ມໍຣິສ ນັກວາງແຜນໂຄສນາຂອງທ່ານ ບົອບ ໂດລ ທີ່ວ່າທ່ານ ຄຣິນຕັນ ມີສັມພັນສາວທ໌ ກັບໂສເພນີ ນາງເຊີຣີ ໂຣແລນດ໌ ກໍ່ຕາມ ປະຊາຊົນທີ່ສໍາຣວຈຄະແນນສຽງກໍ່ຍັງໃຫ້ຄວາມນິຍົມເຖິງ ໕໐%.

ການຊິງຊັຍຂອງສອງພັຄໃຫຍ່ອະເມຣິກາ ຄືພັຄຣີປັບລີກັນ ເຊິ່ງມີທ່ານບົອບໂດລ ເປັນຕົວແທນລົງຊິງຕໍາແໜ່ງນັ້ນ ຖ້າມາເບິ່ງຄວາມແຕກຕ່າງຂອງທັງສອງແລ້ວ ຈະເຫັນວ່າທ່ານ ບົອບ ໂດລ ນັ້ນຜ່ານເວທີການເມືອງມາຍາວນານກວ່າ ໓໕ ປີ ຊຶ່ງອະດີດເຄີຍເປັນທະຫານຜ່ານເສິກສມັຍສົງຄາມໂລກຄັ້ງທີ່ສອງ ຈົນໄດ້ຮັບບາດເຈັບທີ່ມືຂ້າງຂວາ ຈົນບໍ່ສາມາຖຈະຈັບມືໄດ້ແໜ້ນ ມີບັນຫາດ້ານ ຕາບອດສີ ໗໐% ໃຊ້ມືຂ້າງຊ້າຍເຄີຍຜ່າຕັດ ມະເຮັງໃນປີ ໑໙໙໑ ແລະມີອາຍຸເຖິງ ໗໓ ປີແລ້ວ, ໃນເວລາອອກຕະເວັນຫາສຽງກໍ່ໄດ້ເຊີນຕຶກເວທີໄປໃນຣະຫວ່າງທີ່ຣົນນະຣົງຫາສຽງນັ້ນກໍ່ໄດ້ເຂົ້າໄປພັກທີ່ໂຮງແຮມວໍເຕີເກດທີ່ງ ເຄີຍມີການລົ້ວງຄວາມລັບແຜນການຫາສຽງຂອງຝ່າຍກົງກັນຂ້າມມາແລ້ວຈົນພາໃຫ້ທ່ານລິຊາດນິສັນ ອະດີດປະທານາທິບໍດີລາອອກ ທ່ານໂດລເອງກໍ່ມີຄວາມຊົມຊື່ນໃນຕົວທ່ານ ນິກສັນ ທັ້ງທີ່ເຄີຍໂຈມຕີທ່ານໃນປີ ໑໙໗໓ ໃນແຜນການສັນຕິພາບແລະນະໂຍບາຍການຕ່າງປະເທສຕໍ່ເອເຊັຍ , ສ່ວນວ່າທ່ານ ບິວລ໌ ຄຣິນຕັນ ເປັນຄົນກໍາພ້າພໍ່ມາແຕ່ບໍ່ທັນເກີດ ເພາະບິດາໄດ້ຮັບອຸບັດຕິເຫດທາງຣົຖຍົນ ກ່ອນທີ່ທ່ານຈະລືມຕາອອກມາເບິ່ງໂລກ ໓ ເດືອນ ມານດາຂອງທ່ານຈຶ່ງແຕ່ງງານໃຫມ່ກັບ ພະນັກງານຂາຍຣົຖ ທ່ານ ໂຣເຈີ ຄຣິນຕັນ ຈາກການທີ່ໄດ້ພົບເຫັນພໍ່ລ້ຽງຄົນນີ້ ໃຊ້ປືນຈີ້ຫົວມານດາ ເມື່ອມີປາກມີສຽງກັນ ທ່ານໃນຕອນນັ້ນອາຍຸພຽງ ໑໕ ປີ ໄດ້ເຂົ້າຂັດຂວາງແລະສາມາຖຕົກລົງກັນໄດ້ກັບພໍ່ລ້ຽງ ຈຶ່ງໄດ້ໃຊ້ນາມສະກຸລ ຄລິນຕັນ ແຕ່ນັ້ນມາ ທ່ານຄລິນຕັນ ມີຄວາມນິຍົມຊົມຊື່ນຕໍ່ທ່ານໂທມາສ ແຈັຟເຟີຊັນສ໌ ປະທານາທິບໍດີ ອະເມຣິກາຄົນທີ ໓ ແລະແອລດຣູ ແຈັກສັນ ອີກຄົນນຶ່ງ ທ່ານຄລິນຕັນ ມັກອອກກໍາລັງກາຍດ້ວຍການແລ່ນເປັນປະຈໍາ ມັກເບິ່ງໜັງ ມັກກິນບາບີຄິວ ແບບອະເມຣິກັນ ໆ.

ທາງດ້ານການເມືອງໃນຕ່າງປະເທສແລະນະໂຍບາຍຂອງທ່ານທີ່ມີຕໍ່ໂລກນີ້ ກໍ່ແມ່ນເປັນສາເຫດໜຶ່ງທີ່ທ່ານ ບິວລ໌ ຄລິນຕັນ ໄດ້ຮັບຄວາມນິຍົມໃນຣະຍະເວລາພຽງປີກວ່າງທີ່ຜ່ານມາ ທັ້ງທີ່ສມັຍທີ່ບໍຣິຫານຣັຖບານມານັ້ນ ເສຖກິຈກໍ່ຍັງຊຸດໂຊມ ຈົນເຖິງກັບສັ່ງພັກງານຂອງຣັຖທົ່ວປະເທສຮ່ວມລ້ານຄົນ ເພາະທາງພັຄຣີປັບລີກັນ ທີ່ຄຸມສຽງຂ້າງຫຼາຍໃນສະພາສູງ ບໍ່ອະນຸມັດງົບປະມານໃຫ້ ແຕ່ທາງດ້ານການຕ່າງປະເທສກໍ່ແມ່ນໄດ້ໃຊ້ທ່າທີທີ່ເໝາະສົມໃນການຄືຄາຍສຖານະການຂັດແຍ້ງໃນ ບອສເນັຍ ທີ່ທໍາສົງຄາມຣະຫວ່າງເຊື້ອຊາດສາສນາ ກວ່າ ໓ປີ ໃຫ້ເກີດມີສັນຕິພາບກັບຄືນມາ ສາມາຖຊ່ວຍກູ້ສະຖານະຄວາມລົ້ມຈົມທາງເສຖກິຈຂອງຣັສເຊັຍ ໃຫ້ພຍຸງໄປໄດ້ດ້ວຍການສນັບສນູນ ປະທານາທິບໍດີ ເຍລຊິລທ໌ ໃຫ້ໄດ້ຮັບການເລືອກຕັ້ງຢູ່ໃນຕໍາແໜ່ງອີກສມັຍໜຶ່ງ ພາຍຫລັງທີ່ສຫະພາບໂຊວຽດລົ້ມສລາຍຄອມມູນິສ ພັງທລາຍລົງໃນປີ ໑໙໙໑. ຄວາມບໍ່ໝັ້ນຄົງໃນຢູໂຣປຕະເວັນອອກກໍ່ຄືກຸ່ມສົນທິສັນຍາ ວໍຊໍເກົ່າ ອາຈຈະມີຜົລກະທົບຕໍ່ສັນຕິພາບຂອງໂລກໄດ້ ຫາກວ່າເກີດຄວາມບໍ່ໝັ້ນຄົງທາງການເມືອງແລະເສຖກິຈໃນພູມິພາຄນັ້ນ !

ປັດຈຸບັນ ບັນຫາພາຍໃນຂອງອະເມຣິກາ ຍັງມີຢູ່ໜັກໜ່ວງ ທີ່ມີອັຕຣາການກໍ່ອາຊະຍາກັມ ຕາມເມືອງໃຫຍ່ໆເຖິງ ໑໓% ກ່ຽວກັບຢາເສພຕິດຂອງພົລເມືອງ ໘% ດ້ານການສຶກສາອີກ ໘% ດ້ານເສຖກິຈ ການຄອງຊີພ ໒% ກ່ຽວກັບການເກັບເງິນພາສີລາຍໄດ້ ໖% ແລະມີພຽງ ໕% ເທົ່ານັ້ນທີ່ເປັນຫ່ວງໃນດ້ານການວ່າງງານ! ເປົ້າໝາຍນະໂຍບາຍຂອງທ່ານ ບິວລ໌ ຄລິນຕັນ ທີ່ຈະໄດ້ປະຕິບັດກໍ່ແມ່ນລຶດບັນຫາຄົນວ່າງງານທີ່ມີຄົນດໍາ-ອະເມຣິກັນມີອັຕຣາສູງກວ່າເພີ່ນ ພວກຮັສແປນນິຄ ຫຼືພວກເມັກຊິເກັນ ທີ່ຫລົບໜີເຂົ້າມາຢູ່ອາສັຍແລະຫາງານທໍາໃນອະເມຣິກາ ບັນຫາພວກອົພຍົບຈາກເອເຊັຍແລະອິນໂດຈີນ ທີ່ທາງອະເມຣິກາ ຈໍາຕ້ອງຮັບເພີ່ມຕື່ມ ຫລັງຈາກການພ່າຍແພ້ສົງຄາມບໍ່ປະກາສໃນອິນໂດຈີນເມື່ອ ໒໐ປີຜ່ານມາ ການກັບໄປມີສັມພັນເປັນມິຕກັບປົກກະຕິກັບກຸ່ມ ໓ ຊາດ ອິນໂດຈີນກໍ່ດີ. ການປະຈັນໜ້າຂອງ ຄິວບາທີ່ມີປະທານາທິບໍດີ ຟີດາລ ແຄສໂຕ ຍັງຄອງອໍານາສຢູ່ກໍ່ດີ. ບັນຫາການຂະຍາຍສະມາຊິກກຸ່ມນາໂຕ ໄປຍັງຊາດທີ່ເຄີຍເປັນຄອມມູນິສຕ໌ ໃນຢູໂຣປຕະເວັນອອກກໍ່ດີ. ການຂາດດຸລການຄ້າກັບຈີນ ຫຼືຍີ່ປຸ່ນກໍ່ດີ ໃນສະຖານະການໃນ ແຊຣ໌ ແລະ ຣວນດາ ໃນອັຟຣິຄກາກາງ.

ຕລອດສັນຕິພາບໃນຕະເວັນອອກກາງຣະຫວ່າງອິສແຣລ ກັບປາເລສໄຕນ໌ ແລະກຸ່ມອາຫຼັບ ໂດຍສະເພາະຊີເຣັຍ, ເລບານອນ ແລະຈໍຣ໌ແດນ ທີ່ຍັງຄ້າງຄາຢູ່ນັ້ນ. ການຕໍ່ຮອງກັບເກົາຫລີເໜືອ ເພື່ອຄັດຄ້ານການພັທນາອາວຸທນິວເຄຼັຍ ແລະການຍົວຍຸທາງດ້ານກໍາລັງໃນເກົາຫລີໃຕ້, ເຣື່ອງທີ່ຈະຕ້ອງສະສາງໃນອົງການສະຫະປະຊາຊາດແລະຕົວເລຂາທິການອົງການສະຫະປະຊາຊາດຄົນປັດຈຸບັນ !! ໃນປາຍເດືອນ ພຶສຈິກາ ນີ້ ພາຍຫລັງທີ່ໄດ້ຮັບຊັຍຊະນະໃນການເລືອກຕັ້ງ ດ້ວຍການກັບ »

ມາຄອງຕຳແໜ່ງເປັນຄັ້ງທີ່ສອງນີ້ ທ່ານບິວລ໌ ຄລິນຕັນ ຈະຕ້ອງມາຢ້ຽມຢາມອອສເຕຣ໌ເລັຍແລະເອເຊັຍ ຮ່ວມປະຊຸມທີ່ຟິລິປປິນສ໌ແລະໄປຢາມເມືອງໄທຍ໌ພາຍຫລັງຈາກການປັບປຸງຄນະຣັຖບາລ ພາຍຫລັງການເລືອກຕັ້ງຄັ້ງນີ້, ກ່ອນທີ່ຈະອອກເດີນທາງໄປຍັງເອເຊັຍແລະອອສເຕຣ໌ເລັຍ. ການທີ່ໄດ້ຮັບເລືອກຕັ້ງໃຫ້ດຳຣົງຕຳແໜ່ງເປັນເທື່ອທີ່ສອງທັງທີ່ ທ່ານບິວລ໌ ຄລິນຕັນ ຍັງມີປັນຫາກ່ຽວກັບຄະດີໄວທ໌ ວໍເຕີຣ໌ ຢູ່ກໍ່ເປັນຂອງແປກ, ເພາະຊາວອະເມຣິກັນ ບໍ່ມີທາງເລືອກດີໄປກວ່າການເອົາ ບິວລ໌ ຄລິນຕັນ ຜູ້ສົມຍາຣະຫວ່າງການຫາສຽງ ທັ້ງສມັຍກ່ອນແລະສມັຍນີ້ ທີ່ຈະທຳໃຫ້ຊາວອະເມຣິກັນ ຢູ່ດີກິນດີ ປັບປຸງຣະບົບເສຖກິຈ ການສັງຄົມແລະສາທາຣະນະສຸຂ ໃຫ້ດີຂຶ້ນ ໃນຂະນະດຽວກັນກໍ່ສ້າງສັນຕິພາບແລະຄວາມຮ່ວມມືກັບຊາດຕ່າງໆໃຫ້ແໜ້ນແຟ້ນ ລົບຄວາມຂົມຂື່ນແລະຄວາມສູນເສັຍຊີວິດແລະສົພສົນອີກທັງຮັບເອົາອົພຍົບ ຈາກອິນໂດຈີນຈຳນວນລ້ານໄປຕັ້ງຖິ່ນຖານໃນອະເມຣິກາ. ທາງດ້ານການຄ້າກັບອະດີດສັດຕຣູຝ່າຍກົງກັນຂ້າມກໍ່ຍົກເລີກກົດໝາຍຫ້າມ ເອກຊົນ ໄປລົງທຶນໃນກຸ່ມປະເທສນັ້ນ ຫລືແມ້ແຕ່ໃນຄິວບາຣ໌ເອງ! ການສນັບສນູນໃຫ້ມີການຄ້າເສຣີ ແກດ, ການສນັບສນູນເອເປັຄຫຼືວ່າການສນັບສນູນໃຫ້ມີການຕົກລົງ ນາຟຕາ ຫລືກຸ່ມປະເທສໃນອະເມຣິກາເໜືອ ອັນມີ ການາດາ, ອະເມຣິກາ, ແລະແມັຄຊິໂກ ທີ່ກຳລັງເຈຣະຈາກັນເພື່ອໃຫ້ບັນລຸຂໍ້ຕົກລົງກັນນັ້ນ, ຍ່ອມເປັນຫລັກປະກັນຄວາມໝັ້ນໃຈໃຫ້ກັບຜູ້ໄປໃຊ້ສິດທີ່ອອກສຽງໃນການເລືອກຕັ້ງຄັ້ງປະວັດສາດນີ້ ທີ່ທ່ານ ບິວລ໌ ຄລິນຕັນ ທີ່ມີຄົນໜຸ່ມຮ່ວມກັບຮອງປະທານາທິບໍດີ ອັລ ກໍຣ໌ ທີ່ໄດ້ຄະແນນສຽງເຖິງ ໕໐% ໄດ້ບໍຣິຫາຣປະເທສຕໍ່ໄປອີກ ໔ ປີ! ການເລືອກຕັ້ງຄັ້ງນີ້ ເຖິງຈະເປັນການຜ່າຍແພ້ຂອງທ່ານ ບອັບ ໂດລ ແລະພັຄຣີປັບຣີກັນກໍ່ຕາມ ແຕ່ກໍ່ຍັງຄົງສຽງຂ້າງມາກໃນສະພາສູງແລະຍັງຄົງຈຳນວນສມາຊິກໃນສະພາຕ່ຳໄວ້ຢ່າງພໍໆກັນ ການຕໍ່ສູ້ທາງການເມືອງຍັງຈະມີຢູ່ຕໍ່ໄປ ຕາບທີ່ຝ່າຍຣີປັບຣີກັນ ຍັງມີສຽງຂ້າງມາກໃນສະພາສູງ ຈຶ່ງບໍ່ແມ່ນຂອງງ່າຍໆ ທີ່ປະທານາທິບໍດີ ບິວລ໌ ຄລິນຕັນ ຈະດຳເນີນງານບໍຣິຫາຣໄດ້ສະດວກ. ການເລືອກຕັ້ງຄັ້ງນີ້ ຍ່ອມສະແດງໃຫ້ເຫັນວ່າ ປະຊາຊົນອະເມຣິກັນ ຍອມຮັບໃນເຣື່ອງຄວາມເນົ່າເໜັນຕ່າງໆ ທີ່ພວກໜັງສືພິມແລະຂ່າວສາຣຕ່າງກໍ່ນຳອອກມາໂຈມຕີການກະທຳຂອງຝ່າຍປົກຄອງ ການໃຊ້ທຶນມະຫາສາຣກັບການຣົນນະຣົງຫາສຽງ ການທີ່ມີນັກທຸຣະກິຈຂອງເອເຊັຍເຂົ້າໄປຊ່ອຍທາງການເງິນຫຼືເຣື່ອງເນົ່າເໜັນ ໃນຄະດີຄຣີປຊັນ ໄວທ໌ ວໍເຕີຣ໌ ຈົນເຖິງກັບເພື່ອນສນິທທີ່ເປັນທີ່ປຶກສາໃກ້ສິດ ເຖິງກັບຍິງຕົວຕາຍນັ້ນ ! ອະເມຣິກາກຳລັງກ້າວໄປສູ່ຍຸຄໃໝ່ ຍຸຄແຫ່ງການປານີປານອມ ຍຸຄແຫ່ງການຄ້າໂລກາພິວັຕ ຍຸຄແຫ່ງການຊ່ອຍເຫລືອແລະອູ້ມຊູໂລກໃຫ້ຢູ່ຣອດປອດພັຍ ຍຸຄແຫ່ງຄວາມຮ່ວມມືກັບທຸກຝ່າຍ ເພື່ອບຸກເບີກໂລກໃຫ້ກ້າວເຂົ້າສູ່ ໄຮເທັຄ(ວິທຍາສາດຊັ້ນສູງ) ໃນສະຕະວັດທີ່ ໒໑ ຈະມາເຖິງນີ້! ໂລກຈະມີສັນຕິພາບຄວາມຮ່ວມມືແລະການຄ້າທີ່ເສຣີ ປາສຈາກການເອົາປຽບຊາດເລັກຊາດນ້ອຍແລະປະເທສທີ່ບໍ່ມີທາງອອກໄປສູ່ທະເລ ຄວາມຮ່ວມມືທາງດ້ານອະວະກາສເພື່ອຄົ້ນຫາໂລກໃໝ່ແລະການທີ່ຈະທຳໃຫ້ໂລກມີຄວາມປອດພັຍຕໍ່ໆໄປ. !!! ∞ ຈົບບົທ ວິຈັຍ ຂອງຂ້າພະເຈົ້າ ທີ່ມີຕໍ່ອະເມຣິກາ ເມື່ອສຖານະການທີ່ຄາດຫວັງ ໄດ້ປ່ຽນໄປຕາມກາລເວລາ ຕາມເຫດແລະຜົລ ທີ່ໄດ້ກ້າວມາຂ້າງເທິງນີ້ນັ້ນກໍ່ດີ ການກັບມາຄອງອຳນາຈຂອງ ບິວລ໌ ຄລິນຕັນ ກັບຄວາມມຸ້ງໝັ້ນຂອງເຂົາ ທີ່ຈະສ້າງຄວາມຜາສຸຂໃຫ້ກັບປະຊາຊົນອະເມຣິກັນແລະຈະໂລ່ງໂລກໃຫ້ມີສັນຕິສຸຂ !

ການກັບມາອີກເທື່ອນຶ່ງ ກໍ່ລອງເບິ່ງທ່າທີຂອງ ຊັດດາມ ຮຸສເຊັນ ແລະກາດາຟີ ທີ່ຈະມີຕໍ່ພູມີພາກສ່ວນນັ້ນ...


ສົມເດັດເຈົ້າຟ້າງຸ່ມ ມະຫາຣາຊ
ຜູ້ທ້ອນໂຮມລ້ານຊ້າງ

ສົມເດັດເຈົ້າໄຊຍເສຖາທິຣາຊ
ອົງຄ໌ເກັ່ງກ້າສາມາຖ



ສົມເດັດເຈົ້າອານຸວົງສ໌
ອົງຄ໌ຮັກຄວາມເປັນລາວ



# ບົດຄວາມການເລືອກຕັ້ງ

ໂດຍ: ໄກສອຣ ພົງສວັຣດ໌

ວັນນີ້ໄດ້ມີເວລາຫວ່າງ ກໍຈຶ່ງໄດ້ພົບຄິດມາຫາສູນກາງກອງບັນນາທິການຕາມປະສາຄົນມັກອ່ານ ແລະສົນໃນເຣື່ອງສ່ວນຣວມກ່ຽວກັບບົດຄວາມໃນການເລືອກຕັ້ງປະທານາທິບໍດີຂອງສຫະຣັຖອະເມຣິກາ. ເອົາລະເພື່ອເປັນການແຈ້ງຂ່າວການເຄື່ອນໄຫວທາງດ້ານການເມືອງພາຍໃນປະເທສນີ້ ຂ້າພະເຈົ້າຂໍໃຫ້ຄວາມຄິດເຫັນໃນບາງບັນຫາດັ່ງນີ້:

ຜົລຂອງການເລືອກຕັ້ງ ຊິງຕໍາແໜ່ງປະທານາທິບໍດີອະເມຣິກັນ ກໍຜ່ານພົ້ນໄປແລ້ວ ແລະຜູ້ໄດ້ຮັບໄຊຊະນະການເລືອກຕັ້ງກໍແມ່ນທ່ານປະທານາທິບໍດີ ບິວລ໌ ຄລິນຕັນ ອີກສມັຍນຶ່ງຕາມການຄາດໝາຍຂອງການຊາວສຽງ ຫຼືຢັ່ງຄແນນຄວາມນິຍົມຂອງປະຊາຊົນ ການໄດ້ກັບມາດໍາຣົງຕໍາແໜ່ງອີກຄັ້ງນຶ່ງໃນ ໔ ປີຂ້າງໜ້ານີ້ ກໍແມ່ນບັນດາແມ່ຍິງອະເມຣິກັນ ພາກັນໄປລົງຄະແນນໃຫ້ຫລາຍກວ່າຜູ້ຊາຍ ທີ່ຫວັງຈະໃຫ້ພັຄຣີປັບບລິກັນໄດ້ກັບມາອີກຄັ້ງນຶ່ງ ແຕ່ຈາກການຢັ່ງສຽງຄັ້ງສຸດທ້າຍກ່ອນວັນປ່ອນບັດນັ້ນ ສະແດງໃຫ້ເຫັນວ່າທ່ານ ບິວລ໌ ຄລິນຕັນ ມີຄະແນນນໍາຕັ້ງ ໔໐-໔໕ ຈຸດ! ຈຶ່ງບໍ່ເປັນທີ່ຫນ້າແປກໃຈ ທີ່ທ່ານ ບິວລ໌ ຄຼິນຕັນ ໄດ້ກັບມາເປັນປະທານາທິບໍດີຕໍ່ໄປອີກ! ເພາະວ່າທາງພັຄ ເດໂມແຄຼັຕ ສ້າງພາບພົຈນ໌ ແລະມີຜົລງານດີກວ່າ ກ່ຽວກັບດ້ານສວັສດີການສັງຄົມຖານະທາງດ້ານເສຖກິຈກໍດີຂຶ້ນຕາມລໍາດັບ ການຕ່າງປະເທສກໍນັບວ່າດີ ແລະທີ່ທ່ານ ບິວລ໌ ຄຼິນຕັນ ໄດ້ສຽງສນັບສນູນເພີ້ມກໍແມ່ນຕອນ ທີ່ສົ່ງທະຫານຖີ້ມດ້ວຍຈຣວດ ຄຣູສ ມິສຊາຍສ໌ ໃສ່ກອງກໍາລັງອີຣັຄອີກ ເພື່ອສກັດກັ້ນການເຂັ່ນຂ້າ ພວກ ເຄີດຣ໌ ທີ່ແບ່ງແຍກດິນແດນໃນອີຣັຄ ຫຼືບາງສ່ວນໃນຕຸຣກີພາກໃຕ້ ນອກນັ້ນພັຄເດໂມແຄຼັຕ ກໍມີນະໂຍບາຍຕ່າງປະເທສທີ່ຊັດເຈນ ເປັນຮູປທັມ ໂດຍການປະກາສໃນການສ້າງສາຍສັມພັນແບບພົວພັນອັນດີກັບບັນດາປະເທສໃນກຸ່ມເອເຊັຍ ການປະຊຸມກ່ຽວແກ່ທາງດ້ານເສຖກິຈ ທີ່ຈະມີຂຶ້ນທີ່ປະເທສ ຟີລິປິນສ໌, ການໄປຢ້ຽມຢາມອອສເຕເລັຍ ເພື່ອກະຊັບສາຍສັມພັນທີ່ກັບຣັຖບາລພັຄເສຣີ ແລະພັຄແຫ່ງຊາຕ ທີ່ຫາກໍໄດ້ຮັບການເລືອກຕັ້ງເມື່ອວັນທີ ໔ ມີນາ ທີ່ຜ່ານມານີ້. ການໄປຢ້ຽມຢາມຣາຊອານາຈັກໄທຍ໌ ກໍເພື່ອເຊື່ອມສາຍສັມພັນທະໄມຕຣີມິຕພາບແລະຜົລປະໂຍຊນ໌ ທີ່ສຫະຣັຖພວມໄດ້, ບັນຫາຂອງພະມ້າທີ່ກໍາຈັດສິດທິມະນຸສຊົນ ແລະໃຊ້ການຜະເດັດການທາງທະຫານຕລອດການວາງແຜນມາຕຣາການປາບປາມຢາເສພຕິດ ບັນຫາຂອງຣາຊາຢາເສພຕິດ ຂຸນສາ ທີ່ໄດ້ສະລາຍກໍາລັງຕໍ່ຕ້ານຝ່າຍຣັຖບາລກາງພະມ້າ ແລະທາງພະມ້າໃຫ້ການປົກປ້ອງຄຸ້ມຄອງແກ່ເຂົາຢູ່ໃນຂນະນີ້! ນອກນັ້ນກໍແມ່ນການເຈຣະຈາກ່ຽວກັບການລະເມີດລິຂະສິດທາງປັນຍາ ຫຼືການລະເມີດຊັບສິນທາງປັນຍາ ທີ່ທາງປະເທສຈີນໄດ້ກະທໍາມາເປັນເວລານານ ຈີນພາໃຫ້ສິນຄ້າຫຼືຜລິຕພັນທ໌ຂອງອະເມຣິກາຂາຍບໍ່ອອກ ເພາະຣາຄາຕົ້ນທຶນສູງກວ່າຂອງທໍາທຽມແລະລຽນແບບ ພາໃຫ້ອະເມຣິກາຂາດດຸນການຄ້າໃຫ້ກັບຈີນ ແລະປະເທສເອເຊັຍຫລາຍໆຊາຕ!

ກ່ຽວກັບການເລືອກຕັ້ງທີ່ຜ່ານມາ ພັຄຣີປັບບລິກັນ ກັບໄດ້ທີ່ນັ່ງສະພາສູງເພີ່ມອີກ ໔ ທີ່ນັ່ງຈຶ່ງເປັນສິ່ງທີ່ຍາກໃຫ້ກັບຝ່າຍບໍຣິຫາຣ ທີ່ຈະຜ່ານງົບປະມານສໍາຄັນ ໆໄດ້ງ່າຍ ອີກທັງການທີ່ທ່ານບິວລ໌ ຄລິນຕັນ ພົວພັນກັບການຄໍຣັປຊັນສ໌ສມັຍທີ່ເຄີຍເປັນຜູ້ວ່າການຣັຖ ແຄນຊັສ ຫລືຄະດີໄວທ໌ ວໍເຕີຣ໌ ກັບພວກ ນັກທຸຣກິຈເອເຊັຍ ນອກນັ້ນການມີເພື່ອນທີ່ຖືກກ່າວຫາຢາເສພຕິດແລະອື່ນໆອີກ ທີ່ທາງຝ່າຍຄ້ານຈະໄດ້ສາບຕໍ່ໄປໃຫ້ເຖິງທີ່ສຸດ! ການໄດ້ຊັຍຊະນະອີກຄັ້ງນຶ່ງຂອງທ່ານບິວລ໌ ຄລິນຕັນ ທີ່ມີສ່ວນໃນການເລືອກຕັ້ງສໍາຄັນກໍແມ່ນການປັບປຸງຖານະແລະສວັສດີການທາງສັງຄົມ ຫລືໃຫ້ການເອົາໃຈໃສ່ໃນດ້ານຄອບຄົວໃຫ້ໄດ້ຮັບຄວາມອົບອຸ່ນຈາກທາງການບ້ານເມືອງ ຈຶ່ງເປັນທີ່ແນ່ນອນທີ່ໄດ້ຮັບສຽງສນັບສນູນນິຍົມກວ່າເຄິ່ງຂອງພວກສັຕຣີຊາວອະເມຣິກັນທົ່ວຫນ້າ....

ເຖິງຢ່າງໃດກໍຕາມສອງພັຄການເມືອງໃຫຍ່ໆທີ່ປະຊາຊົນອະເມຣິກັນໄດ້ພາກັນພ້ອມຈິດໃຈໃສ່ໃນການປ່ອນບັດເລືອກຜູ້ນໍາຂອງຕົນນັ້ນເຫັນວ່າມີມາໄດ້ນານແລ້ວ ນອກຈາກນີ້ຍັງມີອີກຫຼາຍພັຄທີ່ບໍ່ຄ່ອຍມີຄົນນິຍົມເລືອກເອົາກໍຫາເລີ່ມມີການລົງຄະແນນສຽງເອົາຜູ້ແທນຂອງຕົນເຂົ້າໄປນັ່ງໃນສະພານັ້ນຄື ພັຄເອກຣາຊ ສ່ວນພັກຣີຟອມ ຂອງທ່ານ ຣອດ ເພໂຣ ກໍມີຄວາມນິຍົມສູງພໍປະມານ, ການເມືອງຂອງປະເທສທີ່ມີອິສພາພ ເສຣີພາບ ປະຊາທິປະໄຕຣ໌ ນີ້ ເຫັນວ່າດີກັດ ເປັນຫນ້າຢາກຈະລົງແຂ່ງນໍາເຂົາ ນັ້ນບໍ່ຄືການແຂ່ງຜູ້ນໍາຢູ່ລາວ ໃຜບໍ່ມີອໍານາຈຜູ້ນັ້ນຈະບໍ່ມີສິດເຖິງຈະມີຄວາມຮູ້ກໍບໍ່ສົນດອກ..

# ສຳພາດ ຈິນຕະນາ

ໂດຍ: ສີທົນ ທູນໃຈ




ກ່ອນອື່ນໝົດ ລາວວັນນີ້ຂໍຂອບໃຈນຳຈິນຕະນາ ອະໄພວົງ ທີ່ໄດ້ມີໂອກາສ ໃຫ້ສັມພາດຈາກນັກຂ່າວຂອງເຮົາ ໂດຍຜ່ານທາງຜູ້ຕາງໜ້ານັບເປັນເວລາເຖິງ ມື້ ນາທີ ທີ່ໄດ້ຮູ້ຈັກ ກັບຍິງລາວວັນນີ້ ທີ່ໄດ້ເປັນຜູ້ໃຊ້ຊີວິດຢູ່ກັບປະເທສໄທຍ໌ ໃນຕອນຈາກລາວຕັ້ງແຕ່ ນາງຍັງອາຍຸໄດ້ ໑໐ ປີ ຫລັງຈາກມີການປ່ຽນແປງ ແລ້ວຕົກໄປຢູ່ແຫ່ງຫົນອື່ນ ຂ້າພະເຈົ້າໄດ້ຍິນສຽງຄວາມເວົ້າຂອງຄົນລາວທີ່ເຕັມໄປດ້ວຍນິສັຍໃຈດີ ແລະໜ້າຍິ້ມແຍ້ມແຈ່ມໃສທີ່ບົ່ງລັກສະນະຄວາມງາມຂອງຍິງລາວໃນປັດຈຸບັນ. ຈິນຕະນາ ອະໄພວົງສ໌ ໄດ້ໃຫ້ໂອກາສສັມພາສ ທີ່ບ້ານພັກຂອງນາງ ດີໃຈເປີດອົກດ້ວຍຄວາມຈິງໃຈຕໍ່ຄຳຖາມຂອງນິຕຍະສາຣ ລາວວັນນີ້ ! ເພື່ອບໍ່ເປັນການເສັຍເວລາອັນມີຄຸນຄ່າຂອງທຸກຄົນທີ່ຍັງລໍຄອຍຈາກຄວາມເວົ້າ ແລະແນວຄິດອຸດົມການຂອງນາງຈຶ່ງຂໍໃຫ້ທ່ານຜູ້ອ່ານໄດ້ຮູ້ຈັກກັບຍິງລາວແສນງາມຄົນນີ້ໄດ້ເລີຍ...

**ລາວວັນນີ້**: ຈິນຕະນາ ເປັນຄົນບ້ານໃດ ຂໍໂທສນຳ

**ຈິນຕະນາ**: ເປັນຄົນບ້ານໂພນເຄັງ ເມືອງໄຊເສດຖາ

**ລາວວັນນີ້**: ຈິນຕະນາ ໄດ້ມາຮັບໃຊ້ເປັນພະນັກງານທ່ານຜູ້ດີ ມີດົນປານໃດແລ້ວ ແລະເປັນຫຍັງຈຶ່ງມາຕົກຢູ່ໃນສະພາບຄວາມເປົ່າປ່ຽວເຊັ່ນນີ້ !

**ຈິນຕະນາ**: ນ້ອງໄດ້ມາຮັບໃຊ້ຕັ້ງແຕ່ອາຍຸ ໑໕ ປີ

**ລາວວັນນີ້**: ຈິນຕະນາຮຽນຈົບຈາກມະຫາວິທະຍາລັຍໃດນໍ້ ? ຂໍຄວາມລາຍລະອຽດນຳຈະໄດ້ບໍ່ ?

**ຈິນຕະນາ**: ບໍ່ເປັນຫຍັງ ນ້ອງເອງບໍ່ຢາກເວົ້າສູ່ຟັງແຕ່ມັນຈະຕ້ອງເວົ້າອອກມາ ຄືວ່າບໍ່ໄດ້ຮຽນຈົບມັທຍົມ

**ລາວວັນນີ້**: ຊີວິດໃນສ່ວນຕົວເດປັດຈຸບັນມີຄອບຄົວແລ້ວຫຼືຍັງ ໝາຍຄວາມວ່າໄດ້ແຕ່ງງານແລ້ວບໍ່?

**ຈິນຕະນາ**: ຄົນຈະເວົ້າຊີວິດຂອງນ້ອງປັດຈຸບັນຍັງບໍ່ມີໃຜມາຈອງເປັນເຈົ້າຂອງເທື່ອ ຄຶດວ່າຊາຕນີ້ເພິ່ນຄົງຈະບໍ່ແຕ່ງໃຫ້ມາເປັນໂສດຕລອດຕົ້ນ ມັນອາດຈະມາຊ້າກວ່າໄດ້ ແຮ ແຮ...ໆ ແຕ່ວ່າຢູ່ກັບທ່ານກໍດີແລ້ວ

**ລາວວັນນີ້**: ຈິນຕະນາຄິດບໍ່ວ່າຢາກຈະໄປທ່ຽວຕ່າງປະເທສໂດຍສະເພາະສຫະຣັຖອະເມຣິກາ ? .....

**ຈິນຕະນາ**: ຄິດຢາກໄປແຕ່ບໍ່ມີໂອກາສເພາະວຽກທາງບ້ານແນ່ນບໍ່ມີເວລາເລີຍໂດຍສະເພາະແລ້ວທາງໃນດ້ານໂຕ ງ່ ຍັງບໍ່ມີຄວາມສາມາຖ ຄິດໄປແລ້ວຢູ່ບ້ານເຮົາດີກວ່າ ເພາະໄປໃສກໍບໍ່ຕ້ອງຫ່ວງນຳການໃຊ້ຈ່າຍ ເຖິງຈະຈ່າຍກໍບໍ່ໃຊ້ເງິນຫລວງຫຼາຍ ທີ່ເວົ້າມານີ້ຖືກບໍ່ລະ? ຖ້າໄປໄດ້ຈະໄປໃສນັ້ນຈະດີ ໄປໂຮລີໂອແລັນເດ ເຂົາວ່າເປັນຣັດນ້ອຍແຕ່ມີບ່ອນທ່ຽວທະເລຫຼາຍບໍ່?

**ລາວວັນນີ້**: ຄວາມຈິງແລ້ວບໍ່ກ້າບອກເພາະຄິດວ່າຖ້າຢາກໃຫ້ຈິນຕະນາໄປທ່ຽວຣັດໂຮລີໂອແລັນ ຢ້ານຈະຫາວ່າໂຄສະນາ ເວົ້າຄວາມຈິງແທ້ ຣັດນີ້ມີບ່ອນທ່ຽວທາງທະເລໂດຍສະເພາະແຕ່ຍາມຮ້ອນອາຫານທະເລແມ່ນບໍ່ອຶດ ແລະຣາຄາກໍຖືກກວ່າຫຼາຍບ່ອນ.

**ຈິນຕະນາ**: ຄົນຊຸ້ນເປັນສະປ໊ອນເຊີຣ໌ ແດເດ ແຮງໆ

**ລາວວັນນີ້**: ຢາກໄປແທ້ເບາະ? ເວົ້າແທ້ໃດ ຄົນຊິປີເຣືອບິນຝາກມາໃຫ້ແລ້ວບໍ່ໄປລະວັງຈະໃຫມນະຄົນງາມ?

**ຈິນຕະນາ**: ໄປອີຫຼີບໍ່ຕົວະດອກ ຖ້າຕົວະໃຫ້ໃຫມໄກ່ໜຶ່ງໂຕ ເຫລົ້າຂາວແກ້ວໜຶ່ງເອົາບໍ່ລະ ....?

**ລາວວັນນີ້**: ໂອະບໍ່ເອົາດອກໄກ່ກັບເຫຼົ້າຂາວເພາະຢ້ານມັນຈະໄປໃຫມ້ຕົນແຂງຄົນລາວຫລາຍຄົນພາກັນຕາຍຍ້ອນກິນເຫລົ້າຂາວນີ້ຫລາຍລາຍແລ້ວອີກຢ່າງໜຶ່ງເຫຼົ້າແຮງຈັ່ງຊີ້ຢູ່ຕ່າງປະເທສເຂົາຫ້າມດື່ມມັນອັນຕລາຍ ຖ້າບໍ່ມີຫຍັງອີຫຼີກໍຂໍເອົານ້ອງນີ້ແລ້ວ.. ເພາະນ້ອງຄົນງາມຮູບຮ່າງໜ້າຕາສວຍງາມປານແຕ້ມແຕ່ງເອົາຊາຕແລ້ວນ້ອງຄົງຈະທຳແຕ່ຄວາມດີ ກິນອາຫານ ກໍມີອະນາມັຍນໍ້

**ຈິນຕະນາ**: ຢ່າສູ່ຕິຖແລງເວົ້າ ເອົາເລົ້າມາປູກ ບໍ່ແມ່ນເຊື້ອລາກອ້ອຍກິນແລ້ວກໍບໍ່ຫວານດອກນ້າ.

**ລາວວັນນີ້**: ບໍ່ແມ່ນຕັ້ງແຕ່ງເວົ້າ ເອົາຄວາມບໍ່ຈິງມາວ່າດອກນ້ອງເອີຍ ນ້ອງຫາກເກີດມາງາມດັ່ງແຕ້ມພະອິນທ໌ເຈົ້າແຕ່ງມາແທ້ໄດ.. ສົນໃຈເດ ນໍ້ !

**ຈິນຕະນາ**: ຄົນມາແຕ່ອະເມຣິກາ ນີ້ຕັ້ງເວົ້າເກັ່ງຍ້ອງເກັ່ງ ປາກກໍຫວານເວົ້າແລ້ວມີກໍເດໄປເດ່ນາ

**ລາວວັນນີ້**: ການໂລມກັບຈິນຕະນາ ວັນນີ້ບໍ່ໄປບໍ່ມາ ຄຳຖາມຫຼາຍຂໍ້ທີ່ຕັ້ງໃຈມາຖາມກໍເລີຍລືມໄປ ມາສົນໃຈນຳແຕ່ເຣື່ອງຈຸກໆຈິກໆ ຂໍໂທດເນີ້ ທີ່ບໍ່ມີມາຣະຍາດປານໃດ ຖ້າຜິດພາດຂໍອະພັຍນຳດ້ວຍໂອເຄ

**ຈິນຕະນາ**: ນ້ອງບໍ່ເປັນຄົນເວົ້າຍາກ ມັກແບບງ່າຍສົນໃຈນຳແຕ່ວຽກບ້ານການເຮືອນ ແລະວຽກງານຮັບໃຊ້ທ່ານຜູ້ດີ ເຮັດໄປທຳໄປມື້ສືບມື້ສືບວັນໄປ ຄິດໄປຄິດມາ ເປັນຄົນຮັບໃຊ້ ເຂົາຈຶ່ງວ່າບໍ່ມີອະນາຄົດຊາຕນີ້ເກີດມາແມ່ນທຸກແຕ່ແທ້ ຖ້າມີຊາຍໃດ...

**ລາວວັນນີ້**: ເອົາລະການສົນທະນາຂອງພວກເຮົາກໍຍຶດຍາວມານານແລ້ວ ຂໍໄປຖາມເຖິງຊີວິດ—»



ຂອງສ່ວນຕົວອີກວ່າ ຍາພໍ່ ແລະຍາແມ່ເພິ່ນຍັງມີຊີວິດຢູ່ບໍ່ປະຈຸບັນ ? ຫລືເພິ່ນດຳຣົງຊີວິດຢູ່ໃນຕ່າງແດນ ?

**ຈິນຕະນາ** : ພໍ່ເພິ່ນຖືກຈັບໄປດັດສ້າງຢູ່ສິບຮາວໃນປີ ຄ.ສ. ໑໙໗໗ ໄດ້ຮັບຂ່າວວ່າເພິ່ນໄດ້ເສັຽຊີວິດແລ້ວໃນຕົ້ນປີ ໑໙໘໔ ສ່ວນແມ່ນັ້ນເພິ່ນໄດ້ຮູ້ຂ່າວວ່າພໍ່ເພິ່ນເສັຽກໍມີຄວາມກັງວົນໃຈ ຄິດອຸກໃຈຫລາຍ ເພາະວ່າພວກລູກກໍບໍ່ໄດ້ຢູ່ນຳເພິ່ນ ຕໍ່ມາໄດ້ປະມານ ໔ ປີ ເພິ່ນກໍເສັຽອີກ ໃນເວລານັ້ນພວກນ້ອງແມ່ນບໍ່ມີຄວາມສາມາດຈະຂ້າມໄປເພື່ອປົງສົບຂອງເພິ່ນມີພຽງພີ່ນ້ອງນ້າສາວເປັນຜູ້ຈັດການ ໃນເວລານັ້ນນ້ອງຍັງບໍ່ຮູ້ຫຍັງຫລາຍ ເກີດມາເປັນຄົນອາພັບທຸກຢ່າງ ເວົ້າແລ້ວນ້ຳຕາຂອງຈິນຕະນາ ກໍໄຫລອອກຈາກເບົ້າຕາຢ່າງບໍ່ຂາດສາຍເລີຍ ເປັນຕາສົງສານແທ້ ໆ ..

**ລາວວັນນີ້** : ນ້ອງຄິດບໍ່ວ່າຢາກຈະກັບໄປຢູ່ນຳພີ່ນ້ອງໃນປະເທສລາວຂອງເຮົາ ຫລືວ່າຈະຢູ່ໃນປະເທສໄທຍ໌ ນີ້ຕໍ່ໄປຈົນກວ່າຈະສ້າງຄອບຄົວ ?

**ຈິນຕະນາ** : ແນວຄິດສ່ວນຕົວແລ້ວ ເຖິງຈະຢູ່ປະຈຸບັນ ຫລືກັບໄປຢູ່ວຽງຈັນບ້ານເກີດ ກໍບໍ່ມີການແຕກຕ່າງຫຍັງ ເພາະວ່າຢູ່ແຂວງບໍຣິລັມ ນີ້ກໍລ້ວນແລ້ວແຕ່ປາກລາວວຽງຈັນ ນ້າບ່າວເພິ່ນເຄີຍໄປທຳງານຢູ່ທະນາຄານອອມສິນໃນອະດີດຜ່ານມາ ເມື່ອບ້ານເມືອງແຕກ ເພິ່ນກໍກັບມາຢູ່ບໍຣິລັມຄືເກົ່າ ເພິ່ນເຄີຍສະມັກເປັນຜູ້ແທນເທື່ອໜຶ່ງ ແຕ່ບໍ່ຊະນະໃນການເລືອກຕັ້ງ. ຄອບຄົວຂອງພວກນ້ອງແມ່ນມາຈາກຄົນລາວວຽງຈັນແທ້ ໃຜຈະບໍ່ຮັກໃນຄວາມເປັນລາວ ເຖິງຈະຕົກໃສ່ວັທນະທັມຂອງລາວຍັງບໍ່ໄດ້ສູນເສັຽ. ມື້ໃດໜຶ່ງໂອກາດມີດີ ຖ້າໝົດພາລະເປັນຄົນຮັບໃຊ້ທ່ານຜູ້ດີແລ້ວກໍຈະມີໂອກາສໄປຢ້ຽມຢາມລາວ ຖ້າມີບຸນວາສນາ ຈະທ່ຽວອະເມຣິກາ ກ່ອນ ແຮ ໆ..

**ລາວວັນນີ້** : ນ້ອງຄິດມີຄວາມຄຽດແຄ້ນບໍ່ວ່າ ພໍ່ໄດ້ຖືກຂ້າຕາຍຍ້ອນພວກທະຫານຍາມໃນຄ້າຍຄຸມຂັງຍ້ອນລະບອບການປົກຄອງອັນປ່າເຖື່ອນນີ້ ?

**ຈິນຕະນາ** : ຄວາມຈິງແລ້ວຕອນນ້ອງອອກມາ ກໍ່ອາຍຸຍັງນ້ອຍ ດ້ວຍຄວາມຮູ້ເທົ່າບໍ່ເຖິງການ ເປັນຫຍັງພວກເພິ່ນຈິ່ງຂ້າພໍ່ຂອງນ້ອງ ຖ້ານ້ອງຮູ້ຂ່າວຕອນອາຍຸໃຫຍ່ປານນີ້ ນີ້ຫວັງຕ້ອງເຂົ້າເຖິງຜູ້ນຳວ່າມັນເປັນເຫດອັນໃດ ຈິ່ງມາຂ້າຄົນລາວດ້ວຍກັນ ເປັນຫຍັງບໍ່ຮັກແພງກັນ ຄົນລາວມີນ້ອຍແຫ່ງຈັບໄປຂ້າຖິ້ມຄືໂຕສັດນີ້ ມັນຜິດສິນທັມຂອງສາສນາ.

ລາວວັນນີ້ : ນ້ອງແມ່ນເປັນເຄືອຍາດທາງໃດກັບທ່ານຜູ້ດີ ຈິ່ງໄດ້ມາເປັນຄົນຮັບໃຊ້ໃຫ້ເພິ່ນ ?

**ຈິນຕະນາ** : ນ້ອງບໍ່ແມ່ນເຄືອຍາດກັບທ່ານດອກ ນ້າບ່າວເອົາໄປຝາກໃຫ້ເປັນຄົນຮັບໃຊ້ທ່ານຕອນນ້ອງອາຍຸໄດ້ ໑໔ ປີ ເພິ່ນລ້ຽງເກືອເອົາເຂົ້າໃຫ້ກິນ ເງິນເດືອນໃຫ້ ວຽກງານໃນເຮືອນຄົວແລະບົວລະບັດທຸກຢ່າງ ຈົນມີຄວາມສຳນານທາງດ້ານຄົວກິນ ອາຫານແບບໄທຍ໌ ໆ ສ່ວນມາກມັກກິນອາຫານລາວ ເປັນຕົ້ນວ່າລາພ, ແກງໜໍ່ໄມ້, ປີ້ນປາດຸກ, ແລະອາຫານລາວທີ່ກັບເຂົ້າໜຽວ ກິນກໍແຊບ

**ລາວວັນນີ້** : ອາວ... ເຮັດຈັ່ງໃດເພິ່ນຈິ່ງກິນອາຫານລາວໄດ້ ແລະນ້ອງເອງກໍຈາກລາວມາແຕ່ຍັງນ້ອຍ ເປັນຫຍັງຈຶ່ງເຮັດກັບເຂົ້າລາວໄດ້ ແປກນໍ້ ....

**ຈິນຕະນາ** : ນ້າບ່າວເພິ່ນສອນໃຫ້ ອີກປະການໜຶ່ງ ທ່ານຜູ້ດີ ກໍມີເຊື້ອມາຈາກຊຽງຂວາງ ສ່ວນແມ່ຂອງເພິ່ນກໍມາຈາກເມືອງຫລວງ ເພິ່ນກໍເວົ້າແຕ່ຄວາມລາວນຳຄົນພາຍໃນຄອບຄົວ ຖ້າໄປທຳງານຣາຊການ ຈິ່ງເວົ້າພາສາໄທຍ໌ ກຸງເທພ ເພາະມັນເປັນພາສາກາງທາງຣາຊການຂອງເພິ່ນ...

ລາວວັນນີ້ : ນ້ອງອ່ານແລະຂຽນພາສາລາວໄດ້ບໍ່ ?

**ຈິນຕະນາ** : ເຣື່ອງອ່ານພາສາລາວແລະຂຽນແຫ່ງຍາກ ຖ້າຕັ້ງໃຈຂຽນກໍ່ໄດ້ ແຕ່ມາຖນັດຂຽນພາສາໄທຍ໌ຫລາຍກວ່າ ມັນກໍເລີຍລົງໄປເອົາຊື່ ໆ ..

**ລາວວັນນີ້** : ຖ້າຫາກວ່າລາວວັນນີ້ ສົ່ງ ນິຕຍະສາຣມາໃຫ້ອ່ານຈະຍິນດີຮັບບໍ່ ຫລືວ່າຈະເອົາໄປຖິ້ມ ?

**ຈິນຕະນາ** : ໃຜວ່າ ? ເຊີນສົ່ງມາດີ ແຫ່ງຢາກອ່ານ ເຮົາຄົນລາວຕ້ອງອ່ານພາສາລາວແລະພັທນາພາສາຂອງຕົນໃຫ້ມັນມີຄວາມກ້າວໜ້າລະດີ ການທີ່ນ້ອງບໍ່ເຂົ້າໃຈໄວຍະກອນລາວກໍເພາະວ່າຍັງບໍ່ມີໃຜສອນໃຫ້ ແລະບໍ່ມີໜັງສືພິມພາສາລາວມາຕົກໃນເຂດນີ້ເລີຍ ຢ່າເຂົ້າໃຈວ່ານ້ອງລັງກຽດພາສາລາວເດີ ບໍ່ຄືບາງຄົນນັ້ນດອກ ນີ້ແຕ່ວ່າ ພາສາລາວເປັນພາສາບ້ານນອກ ມັນບໍ່ມີຄວາມຈະເຣີນວ່າຊັ້ນ ຄັນຄົນມີຄວາມຮູ້ສຶກຄວນນິຍົມໃຊ້ພາສາລາວຂອງເຮົາ ແມ່ນບໍ່ລະ ?

**ລາວວັນນີ້** : ຂອບໃຈນຳນ້ອງຈິນຕະນາ ຫລາຍໆ...

# ສັລະເສີນເຍີນຍໍ

ໂດຍ: ລູກນ້ຳ (ກ)

ມະນຸສເປັນສັດປະເສີດທີ່ມີສັງຄົມ ດຳຣົງຊີວິດຢູ່ຮ່ວມກັນເປັນຊຸມຊົນ ແລະຈຳເປັນຕ້ອງເພິ່ງພາອາສັຍຊຶ່ງກັນແລະກັນ ບໍ່ມີຜູ້ໃດຈະສາມາດຫຼີກຕົນຢູ່ໄດ້ຕາມລຳພັງ ໂດຍບໍ່ເພິ່ງພາຜູ້ອື່ນ, ໃນເມື່ອເປັນເຊັ່ນນີ້, ມະນຸສຈຶ່ງມີກິຈກັມຮ່ວມກັນຢ່າງມາກມາຍ. ຂນະດຽວກັນນີ້, ມະນຸສກໍ່ແສວງຫາຫົນທາງຫຼືວິທີການ ທີ່ຈະທຳໃຫ້ພວກຕົນຢູ່ຮ່ວມກັນຢ່າງມີຄວາມສຸຂ.

ການສະແດງຄວາມເຄົາຣົບ ແລະຍົກຍ້ອງກັນເປັນວິທີການຢ່າງໜຶ່ງທີ່ມະນຸສເຮົາໃຊ້ກັນ ເພື່ອເປັນການສະແດງເຖິງຄວາມຍອມຮັບນັບຖືໃຫ້ກຽດຊຶ່ງກັນແລະກັນ ເມື່ອໃດທີ່ຄົນໃນຊຸມຊົນຈະທຳຄວາມດີເປັນທີ່ປາກົດ ຜູ້ຄົນທີ່ຊຸມຊົນນັ້ນກໍ່ຈະສະແດງຄວາມເຄົາຣົບນັບຖືຍົກຍ້ອງບຸກຄົນນັ້ນໆສະເໝີ!

ຄຳຍົກຍ້ອງສັລະເສີນ ຈຶ່ງປຽບເໝືອນລາງວັນກຽດຕິຍົສທີ່ໃຜໆກໍ່ປາຖນາຢາກຈະໄດ້ຮັບ. ເພາະສະນັ້ນຄົນເຮົາຈຶ່ງຂົນຂວາຍແສວງຫາຊື່ສຽງກຽດຕິຍົສ ເພື່ອຢາກໃຫ້ຕົນເອງໄດ້ຮັບຄຳຍົກຍ້ອງສັລະເສີນ ບາງຄົນຕັ້ງໃຈຈະທຳຄວາມດີຢ່າງແທ້ຈິງ ໃນຂນະທີ່ບາງຄົນແຂ່ງທຳຄວາມດີພຽງ ເພາະຈະຄາດຫວັງລາງວັນກຽດຕິຍົສເທົ່ານັ້ນ.

ຫາກວ່າສັພະສິ່ງໃດກໍ່ຕາມ ຍ່ອມມີທັງດ້ານບວກ ແລະດ້ານລົບຢູ່ດ້ວຍກັນປຽບສເໝືອນດາບສອງຄົມ ຜູ້ທີ່ຕັ້ງໃຈທຳຄວາມດີຢ່າງແທ້ຈິງ ໂດຍບໍ່ຄາດຫວັງຣາງວັນໃດໆຍ່ອມໄດ້ຮັບປະໂຍຊນ໌ຈາກຜົລຂອງການກະທຳທີ່ຕົນໄດ້ທຳໄປແລ້ວ ແຕ່ວ່າສຳຫຼັບຜູ້ທີ່ມີເຈຕນາແອບແຝງ ມຸ້ງຫວັງແຕ່ຄວາມຍົກຍ້ອງສັລເສີນ ໃນພາຍຫຼັງມັກປະສົບກັບຄວາມເຊື່ອມເສັຍ, ເປັນກຽດຕິຍົສຈອມປອມທີ່ຕົນໄດ້ຮັບ ດັ່ງຄຳກ່າວຂອງນັກປາດ ທອມມາສ ຟູນເລີ໌ ( Thomas Fuller ) ວ່າ: ສຽງຕົບມືທຳໃຫ້ຄົນດີ, ດີຍິ່ງຂຶ້ນ ແລະທຳໃຫ້ຄົນເລວຍິ່ງເລວກວ່າເດີມ. Applause: "That which makes good man better and bad men worse." ບາງຄົນເມື່ອໄດ້ຮັບຊື່ສຽງກຽດຕິຍົສຢ່າງມາກມາຍ ແຕ່ວ່າບໍ່ອາດຮັກສາໄວ້ໄດ້ ມີຄົນຈຳນວນບໍ່ນ້ອຍທີ່ດຽວທີ່ຫວັງຣຳເລີງກັບຄວາມຍົກຍ້ອງສັລະເສີນ ແລະລືມຕົນ ລືມຮອດກັນພິດຕົນເອງຈົນເສັຽຜູ້ເສັຽຄົນ. ກໍຣະນີຢ່າງນີ້ນັກປາດໂຣເບີດ ມົງໂກເມີຣ໌ ( Robert Montgomery ) ກ່າວເຕືອນສະຕິໄວ້ວ່າ: "ຖ້າຫາກທ່ານປະສົບຄວາມສຳເຣັຈ ທ່ານຈະໄດ້ຮັບສຽງຕົບມື ຈົ່ງຍິນດີກັບມັນແຕ່ຢ່າໄປຫຼົງເຊື່ອມັນເກີນໄປ." *If you achieve success, You will get applause. "Enjoy it, but never quite believe"* ໃນທາງພຸທສາສນາ ຄຳສັລະເສີນ ຈັດວ່າເປັນໜຶ່ງໃນໂລກ ທັມມະແປດປະການ ຄູ່ກັບຄຳນິນທາ ອັນໄດ້ແກ່ ລາບເຊື່ອມລາບ ຍົສເຊື່ອມຍົສ ສຸຂທຸກ ສັລະເສີນ ແລະນິນທາ. ດັ່ງນັ້ນ, ຜູ້ທີ່ກະທຳຄວາມດີໂດຍເຈຕະນາບໍ່ຫວັ່ນໄຫວໄປຕາມຄຳສັລະເສີນ ແລະ ນິນທາ.

## ທຸກຂັງ

ກອງເອີຍກອງທຸກຂ໌ ເໝືອນໄຟ
ລຸກແຕ່ວ່າບໍ່ມີໃຜເຫັນ ທັງເຂັນໃຈ
ໄຟ່ສູ້ດີບໍ່ມີເວັ້ນ ບັງເອີນເປັນທຸກຂ໌
ຂຶ້ນແຕ່ທຸກຂ໌ ພຣະພຸທອົງຄ໌ຊົງສອນສັ່ງ
ມາກ່ອນເກົ່າ ເປັນຂໍ້ເຄົ້າເຣື່ອງໂລກີ
ບໍ່ມີສຸຂ ມີຊາຕເກີດແລ້ວ ຕ້ອງມີ
ກອງທຸກຂ໌ ຍຸກຄວາມແກ່ທຸກແທ້
ຫຼຽວມໍຣະນະເຖິງເຂົ້າ ກໍ່ເສົ້າໂສກ
ຊົ່ນທັງໂລກ ແສນອານາຖ ໜ້າ
ວາດສຽວ ຫົວໃຈຫ່ຽວໂສມອຶດອັດ
ຄວາມພລັດພາກຈາກສັຕວ໌ ແລະ
ສັງຂານທີ່ຮັກ ທີ່ຊົງຕັ້ງລຳຄານ
ການທຸກຂ໌ໃຫຍ່ ໃຜໝາຍມາດ
ປາຖນາສິ່ງໃດ ໆ ຖ້າແມ່ນບໍ່ສົມ
ຫວັງຕັ້ງແຕ່ທຸກຂ໌ ພຣະພຸທອົງຄ໌ ສັ່ງ
ສອນມາແຕ່ກ່ອນເກົ່າ ເປັນຂໍ້ເຄົ້າ
ເຣື່ອງໂລກີຣ໌ ບໍ່ມີສຸຂ ກິເລດຮ້ອນ
ໃຫຍ່ເໝືອນໄຟລຸກ ເອົາຝອຍຊຸກ
ເຊື້ອໃສ່ໄຟຍິ່ງແຮງ ເອົາຈະຣະງັບ
ດັບໃຈໃຫ້ສງົບ ຄຶດວງຈິຕຣ໌ຕັ້ງສັທາ
ໃຫ້ກ້າແຂງ ຄຸນພຣະຣັຕນະໄຕຣ໌ໄດ້
ສຳແດງ ບໍ່ປ່ຽນແປງຍຶດໃຫ້ໝັ້ນ
ຈົນວັນຕາຍ ຈົ່ງອົດສາສ້າງກຸສົລ
ຜົລປະເສີດ ຢ່າໄດ້ເກີດມາເປົ່າ ເອົາ
ທັງຫຼາຍອັນໂລກໂລກາ ຍ່ອມມີອັນ
ຕລາຍ ດັບໃຫ້ຫາຍຢ່າໃຫ້ມີດີ ບໍ່ລຳ
ບາກຍາກເຂັນ ເຊັ່ນຊາຍແລະຍິງ ຖື
ເປັນນິຈຈິຕໃຈບໍ່ພະວົງ ຈະສຸຂຍິ່ງໃຈ
ເຢັນເພາະເຫັນພຣະທັມ.
ອນັຕຕາບ່າສັງເວຊເຫັນເຫຕຊັດສັຣ
ພະສັຕວ໌ສຸດສິ້ນທົ່ວຖິ່ນຖານ ເກີດ
ແລ້ວດັບລັບສິ້ນທົ່ວດິນດານ ພໍເຖິງ
ການສູນຊີວີ ບໍ່ມີຕົວຕົນ ທີ່ເຫຼືອເປັນ
ເງົາຢູ່ກໍ່ມີດີກັບຊົ່ວ ຕ້ອງເບິ່ງເຖິດເກີດ
ມາຕາຍ ຖ້າເກງກົວຈະສຸດສິ້ນຊີວາ.

ຢ້ຽມຢາມບ້ານເກີດທີ່ຈາກມາ

## ບົວບານບ້ານເກີດ ໑໖ ປີ ຈຶ່ງເຫັນບ້ານຫຼັງຈາກພັດພາກຈາກເຈົ້າໄປຫຼາຍປີ


ປຸກເຮືອນສູງ ຊັ້ນລ່າງມີເລົ້າເຂົ້າ


ບາງຫຼັງຄາເຮືອນມຸງດ້ວຍຫຍ້າ


ບ້ານເຮືອນແບບສະບັບເດີມ


ເຈີຍພູແຄມນ້ຳລາຍປູ່ລຽບຕາມຕີນພູ ບ້ານບົ່ວບານ. ບ້ານໂພນ.ບ້ານປາກຫ້ວຍ


ງົວສອງໂຕຜູກໄວ້ແຄມທາງ

ຝົນເລີ້ມຕົກໃນຍາມເດືອນມິຖຸນາທີ່ ໒໒, ປີ ຄ.ສ. ໑໙໙໖ ຂ້ອຍໄດ້ອອກຈາກຣັຖວິສຄອນສິນຊ໌ ເພື່ອຈະເດີນທາງໄປຍັງ ສ.ປ.ປ.ລາວ ເພື່ອຢ້ຽມຢາມບ້ານເກີດຂອງພໍ່ແລະແມ່ຜູ້ບັງເກີດເກົ້າ, ນັບວ່າບຸນວາສນາຫຼາຍທີ່ສຸດ ຂ້ອຍພ້ອມດ້ວຍລູກ ໆ ທັງສອງໄປເຖິງສະນາມບິນວັດໄຕວຽງຈັນ ຊຶ່ງເປັນສນາມບິນແຫ່ງຊາຕໃນດິນແດນແຫ່ງບ້ານເກີດ ຂ້ອຍພ້ອມດ້ວຍລູກທັງສອງກໍ່ໄດ້ພັກນອນຢູ່ບ້ານສີໄຄທີ່ ເມືອງສີໂຄດຕະບອງ ແຂວງວຽງຈັນ ເປັນເວລາເຖິງ (໒) ຄືນກ່ອນຈະຂຶ້ນເຮືອໄປຍັງເມືອງປາກລາຍ ການເດີນທາງດ້ວຍເຮືອໄວກິນເວລາ ໔ ຊົ່ວໂມງເຕັມໆ ຈຶ່ງເຖິງເມືອງດັ່ງກ່າວ. ຫຼັງຈາກນັ້ນແລ້ວກໍ່ໄດ້ຈ້າງຣົດໂດຍສານໄປຍັງບ້ານບົວບານທີ່ພໍ່ແມ່ແລະອ້າຍເອື້ອຍນ້ອງລຸງປ້າຣັບຢູ່ທີ່ນັ້ນຫມົດທຸກຄົນ. ເປັນເວລາຈາກໄປແສນໄກເຖິງ ໑໖ ປີ ອ້າຍຂອງຂ້ອຍຖືກສົ່ງໄປປະຈຳການຢູ່ເມືອງປາກເຊ, ພໍ່ເປັນຕາແສງໃນສມັຍຣັຖບາລເກົ່າເພິ່ນໄດ້ຖືກຄົນບໍ່ດີໂຄ່ນລົ້ມຍຶດອຳນາຈ ຫຼັງຈາກພໍ່ໄດ້ປົດອອກຈາກເປັນຕາແສງ ຂ້ອຍຈຳເປັນໄດ້ເອົາຕົວຫລົບຫນີໄປປະເທສໄທຍ໌ ເພາະຢ້ານບໍ່ປອດພັຍ ບຸນວາສນານຳຈຶ່ງໄດ້ມາຕັ້ງຊີວິດໃຫມ່ຢູ່ໃນສຫະຣັຖດິນແດນແຫ່ງອິສຣະພາບ, ເມື່ອກັບເຖິງຄອບຄົວເຫັນພໍ່ແລະແມ່ມີຫນ້າຊື່ນຕາບານ ເພາະເພິ່ນບໍ່ໄດ້ອົດໄດ້ຢາກ ຂ້ອຍຜູ້ເປັນລູກສາວສົ່ງໃຫ້ເພິ່ນປຸກເຮືອນຫຼັງງາມໆ ອາຫານການກິນແມ່ນບໍ່ອົດບໍ່ຢາກ. ເພິ່ນເຖົ້າແກ່ >>>





ເບິ່ງຊ້າງໃຫ້ເບິ່ງຫາງ



ເບິ່ງນາງໃຫ້ເບິ່ງເຊື້ອຊາດ



ຊ້າງລາກໄມ້ ໃຊ້ເປັນຜົລປະໂຍຊນ໌ ໃຊ້ຕ່າງເຂົ້າໃນຍາມເດືອນ ໑໑-໑໔ ທຸກໆ ປີ



ຊ້າງພາຍລາກໄມ້(ແກ່ໄມ້)

ດວງດາ ຊູວົງສ໌ ຖ່າຍມາບ



ຫຼາຍແລ້ວ ເພິ່ນບອກວ່າ ຜູ້ໂຄ່ນລົ້ມພໍ່ອອກຈາກຕາແສງນັ້ນ ເຂົາໄດ້ຕາຍໄປແລ້ວ ພໍ່ກໍບໍ່ຄິດຈະອຶດສາບັງບຽດໃຜດອກ ເອົາແຕ່ຕາມບຸນຕາມກັມຂອງເຮົາສ້າງມາແຕ່ຊາຕແລ້ວນີ້, ສຸຂພາບແຂງແຮງດີ ມີອາຍຸເຖິງ ໗໔ ປີແລ້ວຍັງແຂງແຮງຢູ່ ຊາຕນີ້ພໍກໍສຸດທີ່ຈະທຳດີຕໍ່ຊາຕບ້ານເມືອງດ້ວຍຄວາມຊື່ສັດ ໂດຍບໍ່ເອົາຂອງເພິ່ນມາເປັນຂອງໂຕ ບໍ່ລັກຂອງຜິດກົດຫມາຍ ສົດຊ່ວຍປະຊາຊົນຕຸ້ມບ້ານຕຸ້ມເມືອງ ຖ້າໃຜຂັດສົນພໍ່ກໍຊ່ວຍມາຕລອດ ອັນຄວາມດີນີ້ຫາກໍໄປໃສບໍ່ຕາຍເປັນຈັກເທື່ອດອກ ◇ ພໍ່ເພິ່ນເວົ້າພ້ອມທັງຕັກເຕືອນຂ້ອຍພ້ອມດ້ວຍລູກຂ້ອຍຫລານຂອງເພິ່ນ.. ຊ້າງພາຍງາງາມໆ ຍັງມີໄວ້ເປັນຂວັນບ້ານຂວັນເຮືອນ ເຊິ່ງເປັນມຸນມັງຂອງພໍ່ແມ່ມີມາຕັ້ງແຕ່ໂບຮານນະການແລ້ວ, ແຕ່ກ່ອນການປ່ຽນແປງການປົກຄອງ ພວກເພິ່ນມີຊ້າງນຳກັນທັງຫມົດ ໑໖ ໂຕ ບາງໂຕກໍຂາຍໄປຍັງປະເທສໄທຍ໌ແລ້ວ ເພາະເພິ່ນບໍ່ມີຜູ້ໃດລ້ຽງຊ້າງໃຫ້ ຂ້ອຍບອກເພິ່ນວ່າ ຖ້າບໍ່ມີໃຜລ້ຽງໃຫ້ກໍຂາຍເອົາເງິນມາໄວ້ຊື້ກິນສາ ພວກລູກໆກໍຢູ່ຫ່າງໄກເສນໄກຄົນລະປະເທສແລ້ວ ເວົ້າສຸດລົງພໍ່ແລະແມ່ກໍມີນ້ຳຕາຍ້ອຍລົງອາບແກ້ມດ້ວຍຄວາມເປັນຫ່ວງພວກລູກຫຼານ»

ຂ້ອຍໄດ້ບອກພໍ່ວ່າ ຖ້າບ້ານເມືອງດີໄປໃນອະນາຄົດ ລູກໄດ້ເຂົ້າຮຽນຈົບມະຫາວິທະຍາໄລແລ້ວແນ່ນອນ ພວກລູກຈະກັບມາສ້າງສາປະເທດຊາດບ້ານເມືອງແນ່ນອນ.

ຄວາມຄິດຂອງຂ້ອຍອາດເປັນພຽງຝັນ ເພາະສະພາບການເມືອງຂອງລາວປັດຈຸບັນຍັງບໍ່ມີທາງຈະເປີດກ້ວາງໃຫ້ມີຫຼາຍພັກເປັນຄູ່ແຂ່ງ ສະແດງບົດບາດຂອງແຕ່ລະພັກຝ່າຍນັ້ນເທື່ອ ທີ່ເວົ້າມານີ້ກໍຄືຢາກໃຫ້ປະເທດຊາດມີສິດທິເສຣີພາບນັ້ນເອງ ທຸກຄົນມີສິດທິຈະປາກເວົ້າຫຼືເຕົ້າໂຮມກັນເປັນກຸ່ມກ້ອນ ແຕ່ບໍ່ໄດ້ໝາຍຄວາມວ່າຈະໃຫ້ເຖິງຍົກກຳລັງໃສ່ກັນແບບສມັຍກ່ອນນັ້ນດອກ... ລົມເປັນເຊີຍໆພັດມາຕາມຮ່ອມຜູໃນບ້ານນິວບານ ໃຈຫວນຄິດເຖິງອະດີດໃນຍາມເປັນເດັກລ້ຽງຄວາຍກາງທົ່ງນາຂອງພໍ່ກາງເດືອນເຈັດ ເຫັນຝູງການົກຍາງ,ແລະນົກອື່ນໆທີ່ມັນບິນແຊວຫາກິນໃນຕາມກາງທົ່ງນາທີ່ເປັນຕາໜ້າອອນຊອນໃນບ້ານອະດີດ ກັບປະຈຸບັນ ມັນຊ່າງເຮັດໃຫ້ແຕກຕ່າງກັນເພາະຊີວິດການເປັນຢູ່ຂອງບ້ານນອກຄ່ອຍໆມີການຂະຫຍາຍການພັທນາອອກ. ທຸກຫຼັງຄາເຮືອນຕ້ອງອາສັຍໂຄມໄຟໄຕ້ດ້ວຍນ້ຳມັນກາສ ຄ່ຳແລ້ວເວລາ ໗ ໂມງແລງແມ່ນງຽບສະງັດ ຍາມເດືອນຈຽງຫຼືເດືອນກິ່ງ ກາງຄ່ຳມາເຫັນບ່າວສາວລົງຂວ່າງ ຜູ້ສາວຕ້ອງເຂັນຝ້າຍຝີງໄຟໃນຍາມກາງຄືນ. ພວກຜູ້ບ່າວຕ້ອງອອກທ່ຽວຫາໂລມສາວ ໂດຽເປົ່າແຄນດີດເຕິ່ງ,ສີຊໍ ສະລັບກັນພາໃຫ້ບ່າວສາວມີຄວາມຮັກໄຄ່ບາງຄູ່ຖ້າເວົ້າຕົກລົງປົງໃຈກັນກໍຊວນກັນໄປນອນໃນຄືນນັ້ນ (ພາສາທ້ອງຖິ່ນວ່າການສ້ອມ) ດຽວນີ້ປະເພນີແບບນີ້ບໍ່ຢາກຄ່ອຍມີ ເພາະອຳນາຈການປົກຄອງບໍ່ອະນຸຍາດໃຫ້. ປະຊາຊົນຊາວບ້ານພາກັນມາຕ້ອນຮັບແບບສະບັບເດີມ ແຕ່ວ່າຕ່າງກ່ວາສະມັຍເກົ່າຫຼາຍເພາະຫຼາຍຄົນພາກັນດື່ມເຫຼົ້າຂາວເມົາໂດຍບໍ່ຮູ້ສຶກວ່າມັນເປັນອັນຕລາຍຕໍ່ຮ່າງກາຍຫຼືສຸຂະພາບແຕ່ຢ່າງໃດເລີຍ. ຍ້ອນວ່າເຂົາບໍ່ຮູ້ເຮົາຈະຕິໃຜບໍ່ໄດ້ ພັດຣັຖເພິ່ນບໍ່ມີນະໂຍບາຍຫ້າມດື່ມເຫຼົ້າຂາວ ຊໍ້າບໍ່ຫນາມຍັງດີໃຈວ່າເຫຼົ້າຂາວລາວມັນມີລົດເດດກ່ວາ ໂວດກາຂອງຣັດເຊັຍ ວ່າຊັ້ນ...

ຕື່ນເຊົ້າມາຜູ້ມັກດື່ມກໍບໍ່ຕ້ອງຫວ່ງນ້ຳຫຍັງ ຂໍແຕ່ໄດ້ເມົາ ຟ້ອນແອະຟ້ອນແອ່ນຕາມຖະໜົນຫົນທາງ ນອນກາງບ້ານປະໃຫ້ໝາເລັຽປາກ ບ່າງເຊໄປເຊມາຕາມພາສາຂອງຄົນເມົາ. ບາງພວກກໍ່ພາກັນມ່ວນຮ້ອງລຳເປົ່າແຄນ ທັງຮ້ອງທັງໂຮ່ໃສ່ຕໍ່ໜ້າວິດໂອ ເພື່ອສົ່ງສຽງໄປເຖິງໝູ່ຄູ່ ຫຼືຍາດຕິພີ່ນ້ອງຜູ້ຢູ່ທາງອະເມຣິກາວ່າ ຖ້າໃຜບໍ່ທັນມາຢາມບ້ານຢ່າຟ້າວຕາຍເດີ ວ່າຊັ້ນ.. ໄດ້ເງິນດອນລາຂອງຈັກກະພັດກໍຮູ້ຖ້າງມ່ວນໄປສິບມື້ເປັນວັນໆຣົຖກະບະຄັນນຶ່ງກຳລັງແລ່ນເຂົ້າມາຕາມຖະໜົນຫລວງຂອງບ້ານຂ້ອຍຂີ້ຝຸ່ນໄງ່ກຸບ ປຽບໄກ່ນ້ອຍຕາຍເປັນສິບໆ ເຂົາບໍ່ໄດ້ສົນເພາະເຂົາມີເງິນຊື້ຣົຖຂັບສົ່ງເພື່ອແອກອ້າງຄົນບ້ານນອກໄກ້ຈະຮອດໃນບ້ານເຂົາຈະຕ້ອງບີບແກຣົຖດັງສະນັ່ນທົ່ວບ້ານ ຝູງເດັກນ້ອຍແລະຜູ້ເຖົ້າບໍ່ເຄີຍເຫັນຣົຖຈັກເທື່ອກໍ່ຟ້າວພາກັນມາຢືນສະລ່ອນເບິ່ງເປັນສົນລະວົນກັນ. ຕາມຄວາມຮູ້ສຶກຂອງຂ້ອຍບໍ່ໄດ້ສະອອນນ່າປານໃດເພາະເຂົາຂາຍໄມ້ຂອງຊາດແລະຂາຍຂອງເຖື່ອນມັນຈຶ່ງລວຍແບບນັ້ນ ຂ້ອຍມາປຽບໃສ່ຣັຖວິສຄອນສິນ ແລ້ວມັນໄກກັນປານຟ້າກັບດິນ.. ແລງມາເຫັນຄວາຍຕອນແລ່ງ, ເປັດໄກ່ຮ້ອງກາງບ້ານແດດອ່ອນລົງ ພໍ່ຕູ້ຖາມຂ້ອຍວ່າ ລູກຢູ່ອະເມຣິກາ ພຸ້ນມີຄົນລາວເຮົາຫລາຍບໍ່? ອາຫານການກິນແບບບ້ານເຮົາເຂົາເອົາມາແຕ່ໃສ? ຂ້ອຍກໍ່ຕອບເພິ່ນດ້ວຍຄວາມຈິງໃຈວ່າ ຄົນລາວມີບໍ່ອັດໄປຕລາດລາວຄືຮ້ານຄ້າຂອງຄົນລາວກໍ່ພົບແຕ່ຄົນລາວປາກພາສາດຽວກັນ ຕ່າງແຕ່ສຽງເໜືອ ສຽງກາງ ສຽງໃຕ້ ທີ່ນັ້ນ. ສ່ວນອາຫານແບບບ້ານເຮົາແມ່ນມີບໍ່ອັດ ທຸກຢ່າງຕ້ອງໄດ້ຊື້ກິນກັນເວົ້າສູ່ຟັງແລ້ວ ພໍ່ຕູ້ກໍ່ຫົວອົກງຕາມພາສາຂອງຄົນເຖົ້າບໍ່ຮູ້ອີຫຍັງຊັ້ນເທາະ.. ອ້າຍຂ້ອຍມາແຕ່ວຽງຈັນ ເພິ່ນພາລູກ ພາເມັຽມາຢາມບ້ານ ເພິ່ນເຮັດວຽກໃຫ້ນາຍພົລແຈ້ງ ໄຊຍະວົງ ເງິນເດືອນພໍກຸ້ມກິນ ເພາະລູກຫຼາຍຄົນວ່າຊັ້ນ ຄິດເສັຽດາຍໄປອະເມຣິກາພ້ອມພວກຂ້ອຍປານນີ້ຄົງຈະມີເງິນດອນລາມາເພິ່ນມາປຸກປ້າວປຸກເຮືອນແລ້ວຂ້ອຍຄິດຜິດໄປແລ້ວວ່າຊັ້ນ. ຂ້ອຍຕອບອ້າຍວ່າຕອນອ້າຍຮັກຊາດວ່າພວກນ້ອງເປັນປະຕິການນັ້ນຄືບໍ່ເວົ້າແບບນີ້ແດ່ ຢ່າວ່າຄິດຜິດເທາະອ້າຍຮັກຊາດກໍ່ຕ້ອງຮັກໃຫ້ສຸດທາງຈົນກ່ວາຊາດຈະເຣີນຄືຄວາມຝັນຂອງອ້າຍນັ້ນ.. ເວົ້າແລ້ວຂ້ອຍຂີ້ຄ້ານຟັງກໍເລີຍລຸກຍ່າງອອກໄປຊານຢືນຊົງຢູ່ບຶດນຶ່ງກໍກັບມາຂໍໂທດນຳອ້າຍ ເພາະວ່າປ້ານພິດຕໍ່ຄຸນິການຂອງພັກ/ຣັຖ ຣະບອບນີ້ບໍ່ມີອ້າຍນີ້ນ້ອງ ອີກປະການນຶ່ງໂຕເອງກໍ່ໄປກັບລູກນ້ອຍງຕາຕ່າງ ຖ້າອຳນາດການປົກຄອງທ້ອງຖິ່ນຄິດຢາກຈະກັກຂັງ ຫລືຈັບເຂົ້າຄຸກແລ້ວໃຜຈະໄປຕໍ່ວ່າຫລືປະກັນເອົາອອກມາໄດ້ ແມ້ແຕ່ສະມັຍພໍ່ເພິ່ນເປັນຕາແສງຍັງຖືກປົດອອກ ອ້າຍຂ້ອຍກໍ່ຊ້ອຍບໍ່ໄດ້ ຂະນາດວ່າເຮັດວຽກເປັນລູກນ້ອງທ່ານນາຍພົລແຈ້ງ ໄຊຍະວົງ ສະມາຊິກກັມມະການສູນກາງພັກປະຊາຊົນປະຕິວັດລາວ ນ້ຳໜ້າຄົນລາວອະເມຣິກັນພັດຖືກຫາກັບເປັນກັມມະກອນໂຮງງານຢູ່ຣັຖ ວິສຄອນສິນສ໌ ທັມມະດາຊື່ງ ເວົ້າແລ້ວກໍພຽງແຕ່ລ້ວນກັບຄົນສຫະຣັຖແລ້ວຈຶ່ງວ່າກັນ./

# ຕະວັນຕົກ ພົບປະ ຕ້ອນຮັບນັກສຶກສາຕະວັນອອກ



ນັກສຶກສາຍີ່ປຸ່ນຢູ່ໃນແຄ໊ມປາສ ຣະດູຮ້ອນປີນີ້ ຈາກເທິງສຸດ ມິກຸມິ ວາຕານູບິ, ກຸມິໂກະ ຄາກາວະ,ຄານະ ອະເບ ແລະ ໂກສິ ທາກິຕະ. ນັກສຶກສາຍິງທັງ ໔ ແມ່ນຈາກປະເທສຍີ່ປຸ່ນ ເພື່ອການສຶກສາໃນສຫະຣັຖ ອະເມຣິກາ

ໃນເມື່ອການະ ອະເບ ແຫ່ງ ຟູກູອິຊິມາ ປະເທສຍີ່ປຸ່ນ ໄດ້ເຫັນພາພຍົນເຣື່ອງ "Home Alone," ນາງມີຄວາມຕະລຶງການຜົລມາແລະການສະແດງດ້ວຍພາບຂອງວັທນະທັມອະເມຣິກັນແລະມີຄວາມຝັນຄິດຢາກຈະມາສຫະຣັຖ. ນາງ ໑໘ ປີ ຄວາມຝັນໄດ້ກັບກາຍມາເປັນຄວາມຈິງພາຍໃນຣະດູຮ້ອນນີ້ ໃນກ່ຣະນີໄດ້ຜ່ານຕາມໂຄງການອະນຸມັດພິເສດຈາກມະຫາວິທະຍາລັຍ ຊັກເກັຕເຣິຕ ເຊິ່ງເປັນມະຫາວິທະຍາລັຍ ກາໂທລິຄຣ໌. ອະເບ ແລະ ພ້ອມດ້ວຍນີ້ນັກສຶກສາ ລວມທັງຫມົດ ໑໓ ຄົນຈາກເມືອງສາກູລາໂນ ເຊໂນ ຄໍເຣັຄຈ໌ ເຊິ່ງເປັນມະຫາວິທະຍາລັຍກາໂທລິຄຣ໌ ຈູເນັຍ ສຳລັບແມ່ຍິງ ຊຶ່ງຫ່າງຈາກໄປພາກເຫນືອຂອງກຸງໂຕກຽວປະມານ ໑໕໐ ມາຍລ໌. ໂຄງການດັ່ງກ່າວໄດ້ສອນພາສາອັງກຣິສ ແລະທາງດ້ານວັທນະທັມອະເມຣິກັນ. ໃນຣະຫວ່າງການຢ້ຽມຢາມເປັນເວລາສອງເດືອນຂອງນັກສຶກສາຍີ່ປຸ່ນ ແລະມະຫາວິທະຍາລັຍສັກເກັຕເຣິທແມ່ນເອື້ອຍຊື່ຂອງມະຫາວິທະຍາລັຍ. ນັກສຶກສາຜູ້ທີ່ມາຢ້ຽມຢາມແມ່ນມີຜູ້ນຳພາໂດຍໂຄງການດ້ານວັທນະທັມແຫ່ງອາເຊໂນ ຣັຖກາລີຟໍເນັຍ. ໂດຍອາສັຍການຢູ່ກິນຮ່ວມກັບຄອບຄົວຄົນອະເມຣິກັນທົ່ວເມືອງເຟັຽຟິວລ໌ເຄົາຕີ. ຂ້ອຍມັກບ່ອນນີ້ ແລະມີຫລາຍສິ່ງຫລາຍຢ່າງທີ່ກ້ວາງໃຫຍ່ໄພສານ ນາງອະເບກ່າວ. ນາງໄດ້ພົບມາເຖິງພາພຍົລທີ່ນາງເບິ່ງໃນໂຮງຫນັງແລະອີກປະການນຶ່ງນາງຍັງໄດ້ຖ່າຍຮູບເອົາຫ້ອງນ້ຳໄວ້ເພື່ອໄປໃຫ້ສະມາຊິກຄອບຄົວເບິ່ງເຊິ່ງພາກັນຢູ່ຫ້ອງເຮືອນຫລັງແຄບໆ. ຂ້ອຍມັກຕົ້ນໄມ້ໃບສີຂຽວແລະຕົ້ນຫຍ້າແລະຕົ້ນຫມາກຄາຍໃນທີ່ນີ້, ອະເບ ກ່າວເພີ່ມເຕີມ! ນາງຜູ້ນຶ່ງມີຄວາມຍິນດີແລະມ່ວນຊື່ນໃນການນຳທ່ຽວແຫ່ງກຸງນິວຢອກເຊິ່ງພາໃຫ້ນາງໄດ້ເບິ່ງທີ່ສະແດງດົນຕີທີ່ໂບດເວຣ໌. ອະເບ ກ່າວວ່າ ຂ້ອຍຢາກກັບມາຢ້ຽມຢາມອະເມຣິກາອີກ ບາງທີຈະໄດ້ແຕ່ງງານແລະໄດ້ທຳງານ." ການສຶກສາໄດ້ຫລາຍຢ່າງ ອະເບແມ່ນຄອບຄົວຄົນອະເມຣິກັນເປັນສະປ໊ອນເຊີຣ໌ ໂຈເຊັພ ແລະ ລູຣາ ບີໂວນາ ແຫ່ງສະຕາຟ໊ອດໄດ້ເວົ້າວ່າ ພວກເຮົາໄດ້ ການາ ພຽງເປັນແຂກນັ້ນໄດ້ຮັບການສຶກສາແລະມີຄວາມຮູ້ດ້ານວັທນະທັມເພື່ອພວກເຂົາແລະເພື່ອລູກໆ ພວກເຮົາມີໃຈຮັກນາງການາຫລາຍແລະບໍ່ຢາກໃຫ້ນາງກັບໄປຄືນຍີ່ປຸ່ນຊ້ຳ ລູຣາ ກ່າວ. ສົມປອງ ວິໄຊຊົນ ລາຍງານຂ່າວ

# ປະກາສເລືອກຕັ້ງເອົາປະທານສະມາຄົມລາວ

ໂດຍ ສາຍຝົນ

ໃນວັນທີ່ ໑ ທັນວາ ໑໙໙໖ ນີ້ ຜູ້ຕາງໜ້າຄະນະກຳມະການກຳກັບການເລືອກຕັ້ງສະມາຄົມລາວປະຈຳຣັຖໂຣດໄອແລັນດ໌ ທ່ານຄຳຈັນທ໌ ຈັນທະຣັງສີ ໄດ້ມີໃບປະກາສອອກສູ່ປະຊາຊົນລາວພາຍໃນຣັຖໃຫ້ຊາບທົ່ວເຖິງກັນວ່າການເລືອກຕັ້ງເອົາປະທານສະມາຄົມລາວປະຈຳຣັຖຈະໄດ້ມີກຳນົດຂຶ້ນໃນວັນທີ່ ໒໙ ເດືອນທັນວາ ໑໙໙໖ ນັ້ນ ທາງສູນກາງກອງບັນນາທິການ ລາວວັນນີ້ ໄດ້ຮັບໃບປະກາສທີ່ແຈ້ງດັ່ງຕໍ່ລົງໄປນີ້: ຮຽນ ທ່ານຄະນະປະທານ:

> ສຫະສະມາຄົມລາວປະຈຳຣັຖໂຣດໄອແລັນດ໌
> ພັຄແນວໂຮມຊາຕລາວ
> ພັຄແນວຮ່ວມພລັງລາວ
> ພັຄລາວກ້າວໜ້າ
> ພັຄລາວເປັນກາງ
> ພັຄລາວໃໝ່ອິສຣະ
> ອົງຄ໌ການລາວພັທນາສາກົລ
> ສະພາການຄ້າລາວ
> ສະພາສັນນິບາດ ລາວເສຣີຊົນ
> ສະມາຄົມຊາວພຸທລາວ
> ສະມາຄົມລາວຄຣິສຕຽນນ໌
> ສະມາຄົມລາວກາໂຕລິຄ໌
> ສະມາຄົມຍິງລາວ
> ສະມາຄົມລາວຮ່ວມສາມັກຄີ
> ສະມາຄົມຄອບຄົວລາວເມືອງວູນຊັອຄເກັຕ
> ສະມາຄົມລາວໂຮມມິຕ
> ສະມາຄົມອຸປຖຳວັດລາວ
> ສະມາຄົມນັກຮົບເກົ່າແນວໂຮມ
> ສະມາຄົມນັກຮຽນ ນັກສຶກສາ ແລະກິລາລາວ

ບັນດາທ່ານປະທານ ແລະຕາງໜ້າເຊື້ອສາຍລາວ ຊາວຈີນ, ຊາວພວນ, ຊາວລື້, ຊາວຂະມຸ ພ້ອມດ້ວຍບັນດາເຖົ້າແກ່ ນ້ອຍໜຸ່ມຍິງສາວ ລາວທຸກທົ່ວໜ້າທີ່ເຄົາຣົບຮັກແພງ, ອີງຕາມປະກາສສະບັບລົງວັນທີ່ ໒໘ ກັນຍາ ໑໙໙໖ ທີ່ໄດ້ເລີ່ມຕົ້ນເປີດຮັບສະມັກມາຕັ້ງແຕ່ ວັນທີ່ ໑ ເດືອນຕຸລາ ໑໙໙໖ ແລະກຳນົດປິດຮັບສມັກລົງ ໃນເວລາ ໑໗: ໐໐ໂມງຂອງມື້ວານນີ້ ຄືວັນທີ່ ໓໐ ພຶສຈິກາ ໑໙໙໖ ແລະຜົລປະກົດກໍ່ໄດ້ຜູ້ສະມັກລົງແຂ່ງຂັນເປັນປະທານສະມາຄົມລາວໃນສົກປີ ໑໙໙໗-໑໙໙໘ ໃນຈຳນວນສອງທ່ານເທົ່ານັ້ນຄື: ເບີ (໑) ທ່ານລົ່ງ ສຸພິດາ ປະທານຄົນປັດຈຸບັນ ເບີ (໒) ທ່ານທອງສາ ຊາຕະກຸນ ສະມາຊິກພັຄແນວໂຮມ ເປັນຜູ້ສະມັກລົງແຂ່ງ. ສ່ວນວັນເວລາ ແລະສະຖານທີ່ປ່ອນບັຕນັ້ນໃນວັນທີ່ ໒໙ ທັນວາ ໑໙໙໖

( December 29, 1996 )

at AmericanLithuanian Club

475 Smith Street

Providence, RI 02908

ໂດຍຈະໄດ້ເລີ່ມປ່ອນບັຕຄັດເລືອກຕັ້ງແຕ່ ເວລາ ໙: ໐໐ ໂມງເຊົ້າ ໄປຈົນຮອດ ໑໔: ໐໐ໂມງແລງ ຄືຖັດຈາກນັ້ນກໍ່ຈະເປັນເວລານັບ ແລະປະກາສຜົລຂອງການຄະແນນ. ◇ ສ່ວນເງື່ອນໄຂອື່ນ ໆ ຂອງຜູ້ທີ່ຈະໄປລົງທະບຽນປ່ອນບັຕໄດ້ນັ້ນ ກໍ່ຈະຕ້ອງເປັນເຊື້ອຊາດແລະສັນຊາດລາວ ໃນນັ້ນແມ່ນຮວມທັງເພດຍິງອື່ນໃດ ທີ່ໄດ້ແຕ່ງງານໂດຍຖືກຕ້ອງຕາມກົດໝາຍ ມີອາຍຸຕັ້ງແຕ່ ໑໘ ປີຂຶ້ນໄປ ແລະເປັນຄົນທີ່ມີຖິ່ນຖານ ຫຼືຢູ່ພາຍໃນຣັຖໂຣດໄອແລັນດ໌ມາກ່ອນ ໂດຍມີຫລັກຖານ ຫຼືເອກສານຢັ້ງຢືນອ້າງອີງ., ສະນັ້ນ ເພື່ອສຸມແນວຄິດຈິດໃຈແຫ່ງຄວາມເປັນຊາຕ ຄວາມສເມີພາບໃນວົງສັງຄົມການຈັດຕັ້ງແລະຄວາມເປັນຣະບຽບຮຽບຮ້ອຍຂອງຮີດຄອງປະເພນີນິຍົມລາວ ຈຶ່ງໃຄ່ຂໍຮຽນເຊີນທຸກໆທ່ານບັນດາການຈັດຕັ້ງແລະເຜົ່າຊົນຄົນລາວດັ່ງທີ່ໄດ້ກ່າວນາມມາຂ້າງຕົ້ນ ສົ່ງຕົວແທນຂອງຕົນອົງການລະສອງທ່ານເພື່ອປະກອບສ່ວນເປັນສະມາຊິກສະພາປະສານງານການຈັດຕັ້ງລາວ "ຊົ່ວຄາວ" Lao Council Coordination ເພື່ອຮ່ວມກັນຮັບຜິດຊອບໃນວາຣະການເລືອກຕັ້ງຄັ້ງສຳຄັນນີ້ໃຫ້ສະອາດສົດໃສ ແລະເປັນຫລັກເຊື່ອຖືຂອງວົງສັງຄົມລາວພາຍໃນຣັຖເອກຣາຊແຫ່ງນີ້. ສຸດທ້າຍນີ້, ຂ້າພະເຈົ້າໃນຖານະທີ່ຖືກມອບໝາຍເປັນຜູ້ເຖົ້າໂຮມຄະນະກັມມະການ "ກຳກັບການເລືອກຕັ້ງ" ຈຶ່ງຂໍຮຽນເຊີນພີ່ນ້ອງຊາວລາວໂຣດໄອແລັນດ໌ ໄປໃຊ້ສິດທິແລະແນວຄິດທີ່ເປັນເອກຣາຊຂອງສ່ວນບຸກຄົນ ໄປປ່ອນບັດຄັດເລືອກເອົາຜູ້ລົງສະມັກແຂ່ງຂັນຕາມນ້ຳນັກສັດທາຂອງຕົນເອງດ້ວຍເທີ້ນ.

ເມືອງໂປຼວິເດັນສ໌ ຣັຖໂຣດໄອແລັນດ໌

ວັນທີ່ ໑ ທັນວາ ຄ.ສ. ໑໙໙໖

ຕາງໜ້າຄະນະກັມມະການກຳກັບການເລືອກຕັ້ງ

— — — — —

ຄຳຈັນທ໌ ຈັນທະຣັງສີ

## ນ້ຳຕົກເນັຍກາຣາ ຣັດນິວຢ໊ອກ ສະຫະຣັດອະເມຣິກາ

1



## ນ້ຳຕົກນະຄອນເພັງພາກໃຕ້ຂອງລາວ

2



# ທ່ຽວຊົມນ້ຳຕົກພາກໃຕ້

ໂດຍ: ບຸນເພົາ ເຫລື້ອມວິໄຊ

ວັນເວລາຜ່ານໄປຫລາຍເດືອນ ຈາກເດືອນເປັນປີ ທີ່ຂ້າພະເຈົ້າຈຳໃຈຈາກພາກບ້ານເກີດເມືອງນອນ ອັນສຸດແສນຮັກແລະຫວງແຫນຂອງຄົນລາວທຸກຄົນ. ຫົນທາງບ້ານນອກບ່ອນເຄີຍຍ່າງໄປໂຮງຮຽນ ໃນຍາມຝົນຕົກເດືອນ ໗-໙ ນັບວ່າທຸລະກັນດານທີ່ສຸດ ຂ້ອຍຕ້ອງອາສັຍທາງເສັ້ນນີ້ເປັນບ່ອນລັດເດີນໄປເພື່ອຫາຮຽນເອົາວິຊາຄວາມຮູ້ ຈົນສາມາສອ່ານອອກຂຽນໄດ້ພາສາລາວເຊິ່ງເປັນພາສາຂອງແມ່ຜູ້ໃຫ້ກຳເນີດຂ້ອຍມາ ໂອພໍ່, ລູກເກີດມາບໍ່ເຫັນໜ້າຈັກວ່າໃບໜ້າຂອງພໍ່ນັ້ນເປັນແບບໃດ ຈັກຂາວ ຫລືດຳ ແມ່ບອກວ່າພໍ່ຂອງເຈົ້າໄດ້ຕາຍໄປຈາກແມ່ຕັ້ງແຕ່ແມ່ຍັງຕັ້ງທ້ອງໄດ້ສອງເດືອນ ແມ່ເປັນຫຍັງບໍ່ແຕ່ງງານໃໝ່ ? **ຂ້ອຍຖາມ** **ແມ່ຕອບວ່າ** ໃນຊີວິດນີ້ແມ່ໄດ້ມີຄວາມຮັກກັບພໍ່ເຈົ້າພຽງຄົນດຽວ ລູກຄືຜູ້ສືບທອດແລະຫົວໃຈອັນສຸດຮັກຂອງແມ່ ເພາະສະນັ້ນແມ່ບໍ່ມີຄວາມຮັກກັບຊາຍໃດອີກ ນອກຈາກພໍ່ຂອງລູກຄົນດຽວ. ຂ້ອຍສຸດທີ່ຮັກແລະຖນຸຖນອມແມ່ ແລະເບິ່ງແຍງແມ່ຕລອດ ຂໍຮັກແລະເບິ່ງແຍງ. ຂ້ອຍຕອບ **ແມ່ເວົ້ານຳຂ້ອຍທີ່** ໄປລູກແມ່ຈະພາໄປເບິ່ງທິວທັດນ້ຳຕົກເຊລະບຳນັ້ນອາຈຈະແຕກຕ່າງກັນກັບນ້ຳຕົກເນັຍກາຣາຟອນ ທີ່ນິວຢອກໄດ ເພາະບ້ານເຮົາເປັນບ່ອນທັມມະຊາຕສວຍງາມ.

ຂ້ອຍຍັງງົງຢູ່ວ່າ ແມ່ຂອງຂ້ອຍບໍ່ເຄີຍໄປທ່ຽວຊົມນ້ຳຕົກເນັຍກາຣາຈັກເທື່ອເປັນຫຍັງເພິ່ນຈຶ່ງຮູ້ຈັກປຽບທຽບໄດ້ ເວົ້າແລ້ວກໍຖາມແມ່ຄືນວ່າ ແມ່ໄດ້ໄປເຫັນນ້ຳຕົກເນັຍກາຣາຍາມໃດຈຶ່ງຮູ້ ? ແມ່ກໍຕອບວ່າ ກະດຽວວ່າພວກລູກໆຝາກວີດີໂອມາໃຫ້ເບິ່ງນັ້ນເດ ! ໂອຊັ້ນເບາະ ? ເວົ້າເຖິງອາດີດແມ່ເພິ່ນຄິດຮອດໃບໜ້າຂອງພໍ່ຂ້ອຍແຕ່ວ່າຈະເຮັດຫຍັງໄດ້ ເພາະເພິ່ນໄດ້ຈາກພວກເຮົາໄປເສິກສົງຄາມຮຸກຮານບ້ານເກີດ ເປັນສິ່ງທີ່ພາໃຫ້ຄອບຄົວແຕກແຍກສານກັດຕານນັບຫລາຍໆພັນຄົນໂຊກດີ ລຸງຜູ້ອ້າຍກົກຂອງພໍ່ເພິ່ນໄດ້ເອົາຂ້ອຍໄປລ້ຽງແຕ່ຍັງນ້ອຍສາມປີເພິ່ນກໍຍັງເບິ່ງແຍງແມ່ທີ່ພາຂ້ອຍມາອາສັຍຢູ່ລຸງແລະປ້າເຖິງ ໑໔ ປີ

>>

ເດືອນກັນຍາ ປີ ໑໙໗໖ ຄອບຄົວລູງແລະປ້າໄດ້ພາຂ້ອຍຂ້າມຂອງໄປຍັງຝັ່ງໄທຍ໌ ເພື່ອໄປລີ້ໄພການເມືອງຢູ່ປະເທສສະຫະຣັຖອະເມຣິກາ ແມ່ເພິ່ນຢູ່ບ້ານເພາະວ່າຖ້າໄປແລ້ວຈະໄປເຮັດຫຍັງເພາະຄວາມຮູ້ຄວາມຫລັກກໍ່ບໍ່ມີເພິ່ນ ຕັ້ງແຕ່ຂ້ອຍຈາກແມ່ໄປເຖິງ ໔໐ ປີ ກັບມາຢາມບ້ານເຫັນຄວາມສວຍງາມຂອງທັມມະຊາຕຍັງຄົງທົນ. ຕ່າງແຕ່ການສຶກສາຂອງເດັກນ້ອຍບໍ່ໄດ້ຮ່ຳຮຽນເຖິງມາຕຖານເພາະຂາດແຄນອຸປກອນການສອນ. ທຸກເຊົ້າຊາວບ້ານຈະອອກໄປທຳສວນແລະຫາປາເພື່ອລ້ຽງຊີພປະຈຳວັນຕາມພາສາຂອງຊົນນະບົດ ແມ່ຂອງຂ້ອຍເພິ່ນຕ້ອງອອກຕລາດຂາຍເຄື່ອງປ່າຂອງດົງທີ່ພວກຊາວເຂົານຳມາຂາຍຕໍ່ໃຫ້ເພິ່ນເພື່ອລົງຂາຍຕາມທ້ອງຕລາດ.ວັນນຶ່ງໆກ່ອນເພິ່ນຈະຂາຍໄດ້ເບື້ອງນຶ່ງຕ້ອງນັ່ງຖ້າຄົນມາຊື້ເກືອບຫມົດມື້ ຂ້ອຍເຫັນເພິ່ນເຮັດວຽກທຸກຍາກຫລາຍທີ່ສຸດຄິດວ່າ ຖ້າເມື່ອໃດຂ້ອຍຮຽນຈົບຈະກັບຄືນມາສ້າງສາເພື່ອພັທນາປະເທສຊາຕໂດຍສະເພາະແມ່ນບ້ານເດີມທີ່ຂ້ອຍເກີດຄືຄວາມງາມຂອງບ້ານແມ່ຜູ້ໃຫ້ກຳເນີດແຫ່ງນີ້. ລາວເປັນປະເທສທີ່ດ້ອຍການພັທນາ ແຕ່ຄົນໃນຊາຕຂາດການສຶກສາສູງ ຫລາຍຄົນໄປອາສັຍຢູ່ປະເທສນອກ ເຫັນຄວາມຈເຣີນຂອງບ້ານເພິ່ນແລ້ວ ຫລາຍຄົນຍັງໃຫ້ຄວາມສົນໃຈຢາກຈະຊ່ອຍຊາຕພັທນາໃຫ້ຈເຣີນຄືກັນກັບປະເທສອື່ນໆໃນໂລກ ຂ້ອຍຄິດວ່າຖ້າຫາກເຮົາຍັງມີຈິດສຳນຶກແລະຢາກຈະຊ່ອຍຊາຕນັ້ນ ມັນມີຫລາຍຫົນທາງທີ່ສາມາສຈະເຮັດໄດ້ບໍ່ແມ່ນແຕ່ຖ້າມັນຈເຣີນແລ້ວຈຶ່ງກັບມາ ຂ້ອຍຢາກເຫັນຄົນລາວຜູ້ມີຄວາມຮູ້ ຢາກເຫັນຜູ້ນຳຣັຖບານລາວປັດຈຸບັນທຳຄວາມເຂົ້າໃຈແລະຊອກຫາຫົນທາງອັນໃດດີຄວນແກ້ໄຂ ຂ້ອຍເວົ້າຕາມພາສາຜູ້ນ້ອຍຊື່ໆດອກ ຖ້າຜິດພາດຂໍໂທດນຳເດີ ! ຂ້ອຍວ່າຈະເຮັດໃບປະກັນຮັບເອົາແມ່ໄປຢູ່ອະເມຣິກາແຕ່ເພິ່ນປະຕິເສດຢ່າງດຽວວ່າ ແມ່ໄປບໍ່ໄດ້ເພາະປະເທສລາວແມ່ນດິນແດນແຫ່ງຄວາມຮັກຂອງແມ່ ຖ້າລູກຫາກຄິດອິດົນແມ່ ແລະອະດີດພໍ່ຂອງລູກແລ້ວ ໃຫ້ກັບມາຊ່ອຍຊາຕບ້ານເມືອງ ເວົ້າແລ້ວແມ່ເພິ່ນກໍ່ນ້ຳຕາໄຫລອອກຈາກເບົ້າຕາຂອງເພິ່ນຢ່າງເປັນຕາຫນ້າສົງສານແທ້ໆ. ເອົາລະສິ່ງທີ່ໄດ້ເວົ້າໄປນີ້ ແມ່ນສ່ວນນຶ່ງໃນຊີວິດຂອງຄອບຄົວຂ້ອຍ ລູງແລະປ້າເພິ່ນໄດ້ມີບຸນຄຸນແສນທີ່ຂ້ອຍແລະແມ່ຈະຫລົງລືມໄດ້ຍາກ ຂ້ອຍຮຽນຈົບໃນປີ ໑໙໙໗ ນີ້ ຄິດວ່າຈະໄດ້ກັບໄປຫາແມ່ໃນບ້ານເກີດເພາະເພິ່ນກໍ່ເຖົ້າແກ່ພໍສົມຄວນແລ້ວ. ຊາຕນີ້ ຂ້ອຍຂໍຊ່ອຍຊາຕ ແລະຊ່ອຍແມ່ໃຫ້ເພິ່ນມີແຕ່ຄວາມສຸຂສະບາຍ ຂ້ອຍກໍ່ດີໃຈ ເມື່ອຂ້ອຍເຖົ້າແກ່ມາກໍ່ຈະໄດ້ເບິ່ງລູກບ້ານຫລານເມືອງຂອງບ້ານທີ່ໃຫ້ກຳເນີດ. ການທ່ຽວຊົມນ້ຳຕົກເຊລະບຳແລະນ້ຳຕົກລະຄອນເພັງແຫ່ງພາກໃຕ້ແມ່ນພາໃຫ້ມີຄວາມມ່ວນຊື່ນຈົນບໍ່ຢາກຈະກັບຄືນສຫະຣັຖ ແຕ່ແລ້ວຍ້ອນການສຶກສາຕ້ອງໃຫ້ຈົບກ່ອນ ກັບໄປລາວກໍ່ຈະມີເຄື່ອງໄມ້ລາຍມື ວິຊາຄວາມຮູ້ຕິດຕົວໄປນຳ ເພື່ອຊ່ອຍພັທນາຊາຕໃຫ້ມັນຈເຣີນ ກ່ອນຈະກັບເຖິງວຽງຈັນ ຕ້ອງໃຊ້ເວລາຫລາຍວັນຈຶ່ງໄດ້ມີໂອກາສທ່ຽວຊົມນະຄອນຫລວງຂອງລາວ ຊີວິດການເປັນຢູ່ຂອງຊາວເມືອງແຕກຕ່າງກັນຫລາຍ ເພາະມັນຢູ່ໃກ້ກັບບ່ອນຕລາດການຄ້າ ຄືພວກຊາວຕ່າງປະເທສຈະນຳເອົາສິນຄ້າມາ ໆ ຊະນິດມາເຜີຍແຜ່ແລະແລກປ່ຽນການຄ້າໃນນະຄອນວຽງຈັນ ຜູ້ໃດມີເງິນເຮັດວຽກຫນ້າທີ່ອັນສຳຄັນ ຫລືພວກເຮັດວຽກນຳຊາວຕ່າງປະເທສກໍ່ໄດ້ຮັບເງິນເດືອນສູງ ຢູ່ຢ່າງສະບາຍ ກິນຢ່າງຟຸ່ມເຟືອຍ. ສິ່ງທີ່ເປັນຫ່ວງທີ່ສຸດແມ່ນ ມີໂຮງຮ້ານກິນດື່ມ ເຫລົ້າຢາທີ່ມີຂອງມຶນເມົາເປັນຕົ້ນແມ່ນເຫລົ້າຂາວຂອງລາວທີ່ມີທາດແຮງສູງດີ ກວ່າເຫລົ້າຂອງຕ່າງປະເທສ. ການທ່ຽວຊົມເບິ່ງນ້ຳງື່ມເຂດຝາຍກັ້ນນ້ຳ. ນ້ຳຕົກຕາດນາຊາຍທອງ ແລະຂຶ້ນໄປທາງວັງວຽງເຫັນຖ້ຳແລະພູຜາເປັນປ່າດົງອັນຫນ້າມະຫັສຈັນແທ້ ໆ. ຫລວງພຣະບາງເປັນນຶ່ງໃນຄວາມງາມທັມຊາຕຂອງເມືອງຊວາໃນອະດີດ ມີຜູ້ເຖົ້າເຄີຍເຫລົ່າສູ່ຟັງວ່າ ກ່ອນປີ ໑໙໗໕ ເມືອງນີ້ ມີພຣະເຈົ້າມະຫາຊີວິດປະທັບຢູ່ໃນພຣະຣາຊວັງຫລວງ ດຽວນີ້ເພິ່ນໄດ້ເອົາສະຖານທີ່ແຫ່ງນີ້ເປັນຫໍພິພິທພັນເກົ່າແກ່ຂອງຊາວຫລວງພຣະບາງ ຂ້ອຍໄດ້ເຂົ້າໄປເບິ່ງເຫັນຮູບພາບແລະສິ່ງຂອງເກົ່າແກ່ຊຶ່ງແມ່ນສີໄມ້ລາຍມືຂອງຄົນລາວໃນສມັຍນັ້ນໄວ້ໃຫ້ພວກລຸ້ນຫລັງໄວ້ເບິ່ງ ເຫັນແລ້ວນັບໄດ້ວ່າເປັນສິ່ງທີ່ຫນ້າອັສຈັນແທ້ໆ. ນາຍຍາມບອກວ່າຫ້າມຖ່າຍຮູບໃນບໍຣິເວລແລະໃນຫ້ອງອັນຂອງມີຄ່ານັ້ນ ຂ້ອຍໄດ້ພັກຢູ່ໃນໂຮງແຮມສົມຕິ ມີຄົນເວົ້າສູ່ຟັງວ່າໂຮງແຮມບ່ອນນີ້ແມ່ນລູກເຂີຍຂອງເຈົ້າຟ້າຊາຍວົງສວ່າງ ອົງມົງກຸດຣາຊກຸມມາລຂອງລາວໃນອະດີດ ຊື່ວ່າ ສົມຕິ ອິນທະວົງສ໌ ເປັນຄົນວຽງຈັນເຂົາກໍ່ເກີດຢູ່ຕ່າງປະເທສແຕ່ກັບຄືນລາວວ່າຊັ້ນ./.

# ຫຼວງພໍ່ຄູນ ຜູ້ມີໃຈບຸນອຸດໜູນສາສນາ

ໂດຍ ທ່ຽງທັມ ຈາຣິໂຄໂຣ




ຫຼວງພໍ່ຄູນ ຜູ້ມີໃຈບຸນ
ອຸດໜູນສາສນາພຸທ

ເປັນທີ່ຊາບກັນດີແລ້ວວ່າ ພຣະອາຈາຣຫຼວງພໍ່ຄູນ ທີ່ໄດ້ສ້າງຊື່ສຽງທາງດ້ານສາສນາພຸທ ໃຫ້ຊາວພຸທພາກັນມີຄວາມເອື້ອເຟື້ອອາຣີຕໍ່ຄົນອື່ນ ດ້ວຍເຫດນີ້ຜູ້ຂຽນຈຶ່ງຢາກຈະມີແນວຄິດອັນໃໝ່ໆ ມາແນະນຳທ່ານຜູ້ຖືສາສນາພຸທນຳກັນ.

## ຄວາມກະຕັນຍູ

ອັນຄວາມກະຕັນຍູກາຕະເວທີຂອງຊາວລາວເຮົານັ້ນ ຖືເປັນປະເພນີມີມາແຕ່ໂບຮານນະການ ເຮົາຈະພົບໄດ້ຈາກຫລັງສີລາຈາລຶກຂອງພຣະພຸທສາສນາ ທີ່ໃຊ້ໃຫ້ເຫັນວ່າ ປະເພນີລາວຖືຄວາມກະຕັນຍູເປັນຫຼັກໃຫຍ່ໃນສມັຍໂບຮານ ຄ້າຍຈະເປັນມໍຣະດົກຕົກທອດເກົ່າແກ່ມາກ່ອນສມັຍພຣະເຈົ້າຟ້າງຸ່ມ ມະຫາຣາຊ ທ້ອນໂຮມລ້ານຊ້າງເອກພາບ ນັ້ນ. ສາສນາພຸທ ເປັນສາສນາປະຈຳຊາຕຂອງລາວແຕ່ນັ້ນມາເຖິງປະຈຸບັນ. ພຣະອົງຄ໌ ມີກະຕັນຍູຕໍ່ປະເທສຊາຕຢ່າງໃຫຍ່ຫຼວງ ຈຶ່ງສາມາສທ້ອນໂຮມດິນແດນຂອງພຣະອົງຄ໌ໃຫ້ເປັນອັນນຶ່ງອັນດຽວກັນ ໃນສມັຍນັ້ນພຣະອົງຄ໌ ເວົ້ານຳບ່າວໄພ່ຣາຊດອນ ແລະທະຫານໆ ກໍ່ເວົ້າອອກກູງ ມຶງງ ພາສາສະບັບເດີມຂອງຊົນຊາຕອ້າຍລາວ. ຄວາມກະຕັນຍູຕໍ່ຊາຕ ຕໍ່ສາສນາ ຕໍ່ສາບົກະຊົລຊາວລາວທັງປວງກໍ່ດີ ແມ່ນມາຈາກດ້ວຍນ້ຳພຣະໄທຍ໌ ຂອງຜູ້ທຣົງຢູ່ໃນຄວາມເມຕຕາທັມທັງນັ້ນ. ຜູ້ຂຽນໄດ້ໄປທັສນະສຶກສາແລະຄົ້ນຄວ້າທາງດ້ານປະວັດສາສທົ່ວເຂດແຄ້ວນເອເຊັຍໂດຍສະເພາະຢ່າງຍິ່ງແມ່ນພາຄອິສານ ຜູ້ເຖົ້າຜູ້ແກ່ແມ່ນພາກັນປາກພາສາດຽວກັນ.-- ບໍ່ພຽງທີ່ນັ້ນພວກຊາວຕ່າງປະເທສໄດ້ເຂົ້າມາໃນແຫລມອິນໂດຈີນ ແລະໄດ້ພົບເຫັນຊາວລາວມີນິສັຍໃຈຄໍຄວາມປະພຶທໃນຄວາມຮູ້ສຶກວ່າ ບຸຕຣ໌ມີຄວາມຮັກໄຄ່ເຄົາຣົພຢູ່ໃນຄວາມໂອວາທຂອງບິດາມານດາສເມີ ເປັນຄົນບອກນອນສອນງ່າຍ ເຊື່ອຖ້ອຍຟັງຄຳທີ່ບິດາມານດາສັ່ງສອນ. ສ່ວນບິດາມານດາກໍ່ວາງຕົນເປັນຄົນສົນທັມ ມີນ້ຳໃຈດີ ມີຄວາມເມຕຕາກະຣຸນາ ໃຫ້ຄວາມອົດຸຕົນອ່ອນໂຍນຕໍ່ບຸຕຣ໌ (ລູກໆ) ບໍ່ຂົ່ມຂູ່ບັງຄັບລູກ ຈົນເກີນໄປ ວາງຕົນໃຫ້ເປັນທີ່ນັບຖື ທຳຕົນເປັນທີ່ເພິ່ງຂອງລູກ ຈະກ່າວຖ້ອຍຄຳອັນໃດກໍ່ລ້ວນແລ້ວແຕ່ມີເຫດຜົລທາງສິລທັມ ສະນັ້ນໂອວາທຂອງພໍ່ແມ່ຜູ້ເປັນບິດາມານດາທົ່ວໄປຂອງຊາວລາວຈຶ່ງມີອະນຸພາພເປັນຄຳປະກາຍສິທ ທີ່ລູກຈະຕ້ອງຮັບຜິດຊອບໃນຄອບຄົວສເມີ ຖ້າລູກໄປກໍ່ເຫດຮ້າຍມີຄະດີອາຈຍາໃດໆເກີດຂຶ້ນໃນແຜ່ນດິນແລ້ວ ຖ້າລູກຫາກຫລົບໜີໄປຢູ່ບ່ອນອື່ນຕາມຈັບບໍ່ໄດ້ ພໍ່ແມ່ກໍ່ມີຄວາມເປັນຫ່ວງແລະຢ້ານຮັບໂທສຕາງ ສ່ວນລູກທີ່ຫລົບໜີໄປແລ້ວຖ້າໄດ້ຍິນຂ່າວເຈົ້າໜ້າທີ່ຊອກນຳຈັບກໍ່ຄິດເປັນຫ່ວງນຳພໍ່ແມ່ ຢ້ານຖືກໂທສຕາງຕົນ ແລ້ວກໍ່ມີຈິດໃຈສົງສາຣ ບໍ່ສາມາຖຈະຫລົບໜີຕໍ່ໄປ ດ້ວຍຄວາມຮັກໄຄ່ເຄົາຣົບນັບຖື ມີຄວາມກະຕັນຍູຕໍ່ພໍ່ແມ່ນັ້ນເອງ. ຄົນຕ່າງປະເທສເມື່ອເຫັນວັທນະທັມປະເພນີຂອງຄົນລາວມີຄວາມກະຕັນຍູກາຕະເວທີ ຕໍ່ພໍ່ແມ່ແລະຜູ້ມີອາຍຸສູງເຊັ່ນ ຄຣູ ແລະອາຈາຣ ຈຶ່ງໄດ້ຂຽນຍົກຍ້ອງວັທນະທັມລາວຢ່າງໜ້າຈັບໃຈ ເມື່ອເຮົາຄົນລາວທີ່ໄດ້ອ່ານໄດ້ຍິນສຽງຍົກຍ້ອງວ່າຄົນລາວມີວັທນະທັມສູງ ມີຄວາມກະຕັນຍູຕໍ່ຜູ້ນຳຂອງຊາຕ, ຜູ້ມີຄວາມໄຝ່ຝັນສ້າງວັດວາອາຣາມທາງດ້ານສາສນາ, ສ້າງພຣະທາຕເຈດີ, ສ້າງຫໍພິພິຕພັນຣ໌ ແລະບ່ອນສຳຄັນອື່ນໆນັ້ນ ຄືຄວາມກະຕັນຍູຕໍ່ຊາຕ, ຕໍ່ສາສນາ , ຕໍ່ພຣະມະຫາກະສັຕ ແລະມີຄວາມເມຕຕາທັມຕໍ່ຊົນຊາວພຸທທັງປວງຄືການສ້າງສາພຸທສາສນາໃຫ້ຈເຣີນຮຸ່ງເຮືອງຄືຫຼວງພໍ່ຄູນຜູ້ໃຈບຸນນີ້./



ນັກຂ່າວເຂົ້າພົບ
ຂໍສຳພາດ ຫຼວງ
ພໍ່ຄູນ ໃຈບຸນແທ້



ຟຸງຊົນຮັບ
ຫຼວງພໍ່



ຂ່າວ

ຫຼວງພໍ່ຄູນກຳລັງຂຽນສະລັກໃສ່ເທິງແຜ່ນທີ່ຜູ້ຄົນໄປຂໍຄວາມກະຣຸນາຈາກພຣະອາຈາຣໃນຜ່ານັດຣ໌.

# ນາຍົກໄທຍ໌ ດີເບັດ ໃນການເລືອກຕັ້ງຜູ້ນຳການເມືອງໃນຍຸດໃໝ່

*Prime Minister Debate on General Election of the Thai Political of the new generation*



ນາຍົກຊວນ ຫຼີກໄພຍ໌

**ຄົນທີ່ເຄີຍເປັນນາຍົກມາແລ້ວ ການທີ່ບໍລິຫານປະເທສຊາດອາຈມີຄວາມຜິດພາດ ແຕ່ສິ່ງໃດຍັງບໍ່ທັນໄດ້ສຳເຣັຈຜົລ ກໍ່ຕ້ອງນຳໄປພັທນາໃໝ່ໃຫ້ດີຂຶ້ນດ້ວຍ ຄົນໃໝ່ຄືຄວາມຫວັງໃໝ່ໃຫ້ຊາດເຈີນ**



ພົລເອກເຊົາວະລິດ ຍົງໃຈຍຸດ

ການເມືອງໄທຍ໌ໄດ້ປ່ຽນແປງຜູ້ນຳທາງການເມືອງ ເຊິ່ງນາຍົກຣັຖມົນຕີຄົນເກົ່າ ບັນຫານ ສິລປະອາຊາ ໄດ້ລາອອກເປັນນາຍົກແລ້ວນັ້ນ ຕອນຕົ້ນທ່ານພົບທາງຕັນ ບໍ່ຍອມລາອອກ ແຕ່ຍຸບສະພາແທນ ແລະປະກາສມີການເລືອກຕັ້ງຣັຖມົນຕີຂ້າງນອກມາຊ່ອຍກູ້ບັນຫາເສຖກິຈ. ທ່ານພົລເອກຊະວາລິດ ຍົງໃຈຍຸດ ຜູ້ສ້າງຄວາມຫວັງຢາກເປັນນາຍົກກໍ່ໄດ້ມີການ ດີເບັດ ກັບ ທ່ານອະດີດນາຍົກຣັຖມົນຕີ ຊວນ ຫລີກໄພຍ໌ ເພື່ອຊິງເອົາຕຳແໜ່ງເປັນນາຍົກຣັຖມົນຕີ ແຫ່ງປະເທສໄທຍ໌ ໃນຂັ້ນຕໍ່ໄປ ຜູ້ສັງເກດການທາງດ້ານການເມືອງຂອງລາວວັນນີ້ໄດ້ໃຫ້ຂໍ້ຄິດເຫັນວ່າ ເຖິງຢ່າງໃດທ່ານພົລເອກຊະວາລິດ ຍົງໃຈຍຸດ ຕ້ອງຊະນະຢ່າງແນ່ນອນ ຄືທ່ານເປັນຫົວໜ້າພັຄຄວາມຫວັງໃໝ່ ໂດຍມີພັຄນຳໄທຍ໌ ແລະພັຄມວນຊົນເປັນຜູ້ໃຫ້ການສະນັບສະໜູນ. ທ່ານບັນຫານ ຊຶ່ງໃນຂະນະນີ້ໄດ້ໝົດສະພາບຂອງການເປັນນາຍົກຣັຖມົນຕີໄປແລ້ວ. ໃນສາຍຕາຂອງມວນຊົນຊາວໄທຍ໌ແລະຊື່ມວນຊົນໄດ້ປະກາສຍຸບສະພາຢ່າງເປັນທາງການເມື່ອວັນສຸກທີ່ ໒໗ ກັນຍາ ແລະເປັນທີ່ແນ່ນອນວ່າການເລືອກຕັ້ງເອົານາຍົກຣັຖມົນຕີຄົນໃໝ່ຕ້ອງດຳເນີນໄປຢ່າງມີປະຊາທິປະໄຕຍ໌ອັນແທ້ຈິງ. ລາວວັນນີ້ໄດ້ສັມພາດນັກການເມືອງເຊິ່ງໃນນາມສະມາຊິກຂອງພັຄຄວາມຫວັງໃໝ່ ຜູ້ກ່ຽວຂໍສງວນຊື່ວ່າ ກ່ອນຈະມີການເລືອກຕັ້ງນັ້ນຄວນຈະເປັນໄປຕາມກົດຫຼັກຣັຖທັມມະນູນຂອງຊາດ ໃຜຈະຍຶດຖືນອກເໜືອຈາກກົດໝາຍບໍ່ໄດ້ ທ່ານພົລເອກຊະວາລິດ ຍົງໃຈຍຸດຄົງຈະໄດ້ຮັບຄະແນນນິຍົມສູງມາກ ເພາະທ່ານເປັນຄົນອາວຸໂສ ແລະຮູ້ຈັກວຽກບ້ານການເມືອງມານານແລ້ວ ອີກປະການນຶ່ງທ່ານເຄີຍໃຫ້ການສະນັບສະໜູນຫລາຍພັຄມາແລ້ວ ທ່ານເປັນຄົນເຫັນແກ່ຊາດບ້ານເມືອງມາກກວ່າອື່ນໃດ ຂໍໃຫ້ທ່ານໄດ້ເຖີ !

**ລາວວັນນີ້ ຖາມ:** ຖ້າທ່ານພົລເອກຊະວາລິດ ຍົງໃຈຍຸດ ໄດ້ເປັນນາຍົກ ການສັມພັນທະໄມຕີ ຣະຫວ່າງລາວ-ໄທຍ໌ ຈະເປັນໄປໃນຮູບໃດ ? ຂໍທ່ານຕອບໄດ້ບໍ່?

**ຄວາມຫວັງໃໝ່:** ຄົງຈະເໝືອນເດີມ ຫລືດີຂຶ້ນກວ່າເກົ່າທີ່ນັ້ນແຫລະເພາະວ່າທຸກວັນນີ້ໄທຍ໌ກໍ່ໃຫ້ການສະນັບສະໜູນລາວມາຕລອດ ເພາະເປັນບ້ານອ້າຍເມືອງນ້ອງກັນທາງທິດທີ່ສຸດກໍຄື ຢາກໃຫ້ລາວມີຫລາຍພັຄການເມືອງເໝືອນໄທຍ໌ ມັນຈຶ່ງມີການຫາສຽງສະໜັບສະໜູນແຕ່ລະພັຄເພື່ອເປັນຜູ້ນຳພາໃນການບໍລິຫານປະເທສຊາດຢ່າງໄທຍ໌ນີ້ເດີ້

**ລາວວັນນີ້ຖາມ:** ການດີເບັດກັນໃນວັນນີ້ທ່ານວ່າໃຜຈະໄດ້ຄະແນນຫລາຍກວ່າ ແລະໃຜຕອບຄຳຖາມໄດ້ດີກວ່າ ? ຂໍໃຫ້ພນະທ່ານໃຫ້ຄວາມເຫັນ

**ຄວາມຫວັງໃໝ່:** ຄິດວ່າທຸກທ່ານຕອບໄດ້ດີ ທ່ານນາຍົກຊວນ ກໍ່ມີອຸດົມການດີ ແຕ່ວ່າທ່ານເຄີຍບໍລິຫານມາແລ້ວ ທຸກຄົນຄົງຈະຄິດຢາກໃຫ້ຄົນໃໝ່ມາເປັນນາຍົກ ຂ້າພະເຈົ້າໃຫ້ຂໍ້ຄິດເຫັນວ່າ ທ່ານພົລເອກ ຊະວາລິດ ຍົງໃຈຍຸດ ຕອບໄດ້ດີ ແລະມີຂໍ້ຄິດແລະນະໂຍບາຍດີຫລາຍສຳລັບການເມືອງໄທຍ໌ໃນຍຸກປະຈຸບັນ ເພາະຈະໄດ້ເປັນມິຕກັບທຸກປະເທສເພື່ອນບ້ານດ້ວຍເຖີ !

**ລາວວັນນີ້:** ພນະທ່ານຄິດບໍ່ວ່າ ນະໂຍບາຍຂອງທ່ານນາຍົກຄົນໃໝ່ ຈະມີນະໂຍບາຍໃນການຕໍ່ສາຍສັມພັນໃຫ້ລາວນອກ/ລາວໃນ ມີການເຈຣະຈາກັນເພື່ອທ້ອນໂຮມຊາດລາວໃຫ້ມີການພັທນາປະເທສຊາດໃນອະນາຄົດ ? ຂໍໃຫ້ຄວາມເຫັນແດ່

**ຄວາມຫວັງໃໝ່:** ເຣື່ອງນີ້ເປັນພາລະຂອງທ່ານນາຍົກຄົນໃໝ່ສຸດແລ້ວແຕ່ເພິ່ນຈະເຫັນສົມຄວນຈະຊ່ວຍໄດ້ໃຫ້ຄວາມຖືກຕ້ອງປອງດອງຊາດໃນລາວຄົງຈະເປັນການດີ ຂ້າພະເຈົ້າກໍ່ຢາກເຫັນຄົນລາວເຂົ້າໃຈກັນດີເພື່ອຊາດບ້ານເມືອງ.

## "ສິ່ງໃດທີ່ເປັນຜົນປະໂຫຍດ ແກ່ຊາດ ພວກເຮົາຕ້ອງປະຕິບັດ"

## (ອັນນີ້ມັນເປັນພາລະໜ້າທີ່ ອັນມີກຽດຂອງພວກເຮົາໝົດທຸກຄົນ.)

ໂດຍ: ສຸລິເດດ ສັມພາດຕໍ່ຂະບວນການກູ້ຊາດ

>ດັ່ງພວກເຮົາຮູ້ນຳກັນຢູ່ແລ້ວຍັງມີຫຼາຍໆຄົນທີ່ບໍ່ຮູ້ຈັກສະພາບການຂອງເມືອງລາວ, ໂດຍສະເພາະຊາວໜຸ່ມ ທີ່ເກີດໃໝ່ໃຫຍ່ລຸນຢູ່ໃນປະເທດທີສາມ.

ສະນັ້ນຖ້າຂເຈົ້າຫາກໄດ້ອ່ານ ແລະໄດ້ຍິນວ່າຢູ່ປະເທດລາວເຮົາຍັງມີການຕໍ່ສູ້ກູ້ຊາດຢູ່. ຂເຈົ້າກໍ່ຄົງຈະສຳນຶກວ່າ ດ້ວຍເຫດຜົນອັນໃດ ? ຈຶ່ງມີການຂັດແຍ້ງກັນລະຫວ່າງຄົນລາວດ້ວຍກັນ.

ເຊີນທ່ານຕິດຕາມການສຳພາດລະຫວ່າງນັກຂ່າວລາວວັນນີ້ ແລະຂະບວນການຕໍ່ສູ້ກູ້ຊາດຂອງພວກເຮົາຕໍ່ໄປ...

**<u>ນັກຂ່າວ</u>**: ພວກທ່ານຕໍ່ສູ້ກູ້ຊາດ ເພື່ອເອກຣາດ ແລະປົດປ່ອຍຊາດມາເປັນເວລາ ໔໐ ກວ່າປີແລ້ວ, ຄິດວ່າຈະຕ້ອງຕໍ່ສູ້ໄປອີກນານພໍປານໃດ ຈຶ່ງຈະສຳເຣັດ ?

**ຕອບ**: ການຕໍ່ສູ້ ກູ້ຊາດ ຂອງພວກເຮົາ ຈະຕ້ອງດຳເນີນໄປຢ່າງລຽນຕິດ, ຖ້າສະໄໝຂອງພວກເຮົາຫາກບໍ່ສຳເຣັດ, ພວກລູກ ພວກຫຼານຂອງເຮົາ ກໍ່ຈະຕ້ອງສືບຕໍ່ ຕໍ່ສູ້ ຕໍ່ໄປ. ເທົ່າທີ່ພວກເຮົາປະຕິບັດກັນມາເຖິງຂນາດນີ້, ກຳລັງຂອງພວກເຮົາກໍ່ໄດ້ເຕີບໃຫຍ່ ຂຍາຍຕົວຂຶ້ນຢູ່ເລື້ອຍໆ. ຈາກຄົນທີ່ບໍ່ເຂົ້າໃຈບັນຫາຂອງຊາດ ກໍ່ຫັນມາສົນໃຈ ວຽກບ້ານການເມືອງເພີ້ມຂຶ້ນ. ການຍາກຈົນຂອງປະເທດກໍ່ຍັງເຮັດໃຫ້ປະຊາຊົນເບື່ອໜ່າຍ ຕໍ່ລະບອບການປົກຄອງຂອງພວກເຂົາ, ຕໍ່ລະບອບພະເດັດການ ຊຶ່ງມີແຕ່ພັກດຽວຜູກຂາດກຳອຳນາດ. ປະຊາຊົນແມ່ນບໍ່ມີສິດມີສຽງ ມີແຕ່ລໍຖ້າຟັງຄຳສັ່ງຈາກພັກ ຈາກລັດເທົ່ານັ້ນ. ປະຊາຊົນຂາດສິດເສຣີພາບ ແລະປະຊາທິປະໄຕ ແລະເຕັມໄປດ້ວຍການນາບຂູ່, ກົດຂີ່, ຂູດຣີດ.

- ດັ່ງນັ້ນ, ການຕໍ່ສູ້ ກູ້ຊາດ ຂອງພວກເຮົາ ມັນເປັນການກະທຳທີ່ຖືກຕ້ອງ ແລະເປັນທັນທີ່ສຸດ. ຖ້າພວກເຮົາ ພາກັນພະຍາຍາມ ປະຕິບັດຢ່າງເອົາຈິງເອົາຈັງ ແລະເສັຍສະຣະເພື່ອຊາດ, ເພື່ອປະຊາຊົນ ຢ່າງແທ້ຈິງ. ວັນໜຶ່ງກໍ່ຈະຕ້ອງມີປະເທດເພື່ອນບ້ານເຂົ້າມາເຫັນໃຈ ແລະໃຫ້ການຊ່ວຍເຫຼືອ ພ້ອມທັງປະເທດມະຫາອຳນາດອີກດ້ວຍ. ເພາະໃຜໆ ກໍ່ມັກ ເສຣີພາບ ແລະປະຊາທິປະໄຕ.

**<u>ນັກຂ່າວ</u>**: ການທີ່ພວກທ່ານ ພະຍາຍາມ ຢາກໃຫ້ມີການເຈຣະຈາ ລະຫວ່າງ ຣັຖບານວຽງຈັນ ແລະ ຂະບວນການກູ້ຊາດ ເພື່ອຮ່ວມກັນສ້າງຊາດ ຢ່າງເປັນເອກພາບ ແລະ



ຄວາມຖືກຕ້ອງປອງດອງກັນນັ້ນ, ບັດນີ້ ຄວາມພະຍາຍາມ ຂອງພວກທ່ານຄືບໜ້າໄປຮອດໃສແລ້ວ ?

**<u>ຕອບ</u>**: ພວກເຮົາພະຍາຍາມຢູ່ທຸກວິທີທາງ ເພື່ອຢາກໃຫ້ຄົນລາວຫັນໜ້າເຂົ້າຫາກັນ, ຕ້ອນໂຮມກັນເຂົ້າໃຫ້ເປັນອັນໜຶ່ງອັນດຽວກັນ ເພື່ອສ້າງສາປະເທດຊາດໃຫ້ຈເຣີນກ້າວໜ້າ. ເຖິງແມ່ນວ່າຍັງມີການສູ້ຮົບຕົບຕີກັນ, ແຕ່ພວກເຮົາບໍ່ໄດ້ຖືວ່າພວກເຂົາເປັນສັດຕູ ເພາະພວກເຮົາລ້ວນແລ້ວແຕ່ເປັນຄົນລາວດຽວກັນ. ພວກເຮົາຕົກເປັນຝ່າຍຮັບກໍ່ຈິງ ແຕ່ບໍ່ເຄີຍເປັນຝ່າຍຮຸກຮານ. ພວກຮຸກຮານ ແມ່ນທະຫານຕ່າງຊາດທີ່ມາຄຸ້ມຄອງແລະຍຶດເອົາເຂດນ້ຳດິນແດນຂອງລາວເຮົາ. ທຸກມື້ນີ້ ພວກເຮົາບໍ່ເຂົ້າໃຈກັນກໍ່ເນື່ອງຈາກວ່າມີຊາວຕ່າງຊາດເປັນຜູ້ບົງຊາຢູ່ເບື້ອງຫຼັງ ແລະບໍ່ໄດ້ເວົ້າໃນພາສາດຽວກັນ. ເຖິງແນວໃດກໍ່ຕາມ, ພວກເຮົາຖືວ່າຜູ້ນຳຝ່າຍພະເດັດການໃນຄາວນີ້ຄົງບໍ່ມີອາຍຸຍືນຍາວຕລອດໄປ. ເມື່ອພວກຜູ້ນຳຄົນໃໝ່ຂຶ້ນມາອາດຈະມີການປ່ຽນແປງນະໂຍບາຍໃໝ່ກໍ່ໄດ້

**<u>ນັກຂ່າວ</u>**: ອົງການປົດປ່ອຍຊາດ ເຄີຍກ່າວວ່າ ພວກທ່ານບໍ່ຈຳເປັນຮຽກຮ້ອງເອກະຣາດ ສະເໜີໄປ ຫາກຣັຖບານວຽງຈັນ ສະເໜີເງື່ອນໄຂ ທີ່ໜ້າເພິ່ງພໍໃຈ. ຢາກຊາບວ່າເງື່ອນໄຂທີ່ພວກທ່ານ ຕ້ອງການນັ້ນຄືແນວໃດ ?

**<u>ຕອບ</u>**: ບັນຫາທີ່ໜຶ່ງ ພວກເຮົາຢາກທວງໃຫ້ກຳລັງທະຫານວຽດນາມຖອນອອກຈາກດິນລາວ ໂດຍບໍ່ມີເງື່ອນໄຂ ແລະບໍ່ໃຫ້ຣັຖບານ ວຽດນາມແຊກແຊງເຂົ້າໃນກິຈການພາຍໃນຂອງລາວ.

ບັນຫາທີ່ ໔ - ທວງໃຫ້ຣັຖບານວຽງຈັນ ເປີດກວ້າງໃນການເລືອກຕັ້ງແບບເສຣີ ໂດຍມີຫຼາຍພັກການເມືອງເຂົ້າຮ່ວມ ຢ່າງນ້ອຍຕ້ອງມີ ສອງພັກ ຄືນະໂຍບາຍ ລາວກ້າວໜ້າ.

ບັນຫາທີ່ ໕- ທວງໃຫ້ຣັຖບານວຽງຈັນ ປົດປ່ອຍນັກໂທດການເມືອງ ແລະຜູ້ຕ້ອງຫາທີ່ຖືກກ່າວໂທດ ໂດຍບໍ່ມີມູນຄວາມຈິງ ໃຫ້ມີອິສຣະ ແລະກາຍມາເປັນພົລເມືອງດີຂອງຊາດຢ່າງມີກຽດ ແລະປາສຈາກການນາບຂູ່ແລະການຢ້ານກົວ. ຖ້າຫາກຣັຖບານ >>

*ວຽງຈັນ ເຮັດໄດ້ຄືແນວນັ້ນ, ການເຈຣະຈາ ຣະວ່າງຄົນລາວດ້ວຍກັນ ກໍ່ຄົງຈະເຂົ້າໃຈກັນດີ ໂດຍບໍ່ຕ້ອງໄດ້ໃຊ້ລ່າມ ແລະໃຊ້ນາຍພາສາ ແລະການຖືກຕ້ອງປອງດອງຊາດ ກໍ່ຈະບັນລຸຜົລສຳເຣັດຢ່າງແນ່ນອນ.*

## *ຢ້ຽມຢາມບ້ານແມ່ ທ່ຽວຊົມບ້ານພໍ່ຜູ້ບັງເກີດເກົ້າ*

*ໂດຍ : ສົມພອນ ຂຸນລ່ວງ*

ຈັນເພັງ ກັບ ຂ້ອຍໄປຢືນລໍ່ຮັບຫີບແລະຫໍ່ສິ່ງຂອງຕ່າງໆ ເມື່ອຢືນຕິດຕົວມາແລ້ວ ຈັນທີກໍ່ບອກພວກຂ້ອຍວ່າ ພວກເຈົ້າຕ້ອງແຈ້ງເຂົ້າຫຼວງພະບາງກັບເຈົ້າໜ້າທີ່ຕຳຣວຈຕາມທັມນຽມເສັຍກ່ອນ. ສິ່ງທີ່ພາໃຫ້ປວດຫົວເກີດຂຶ້ນຕອນນັ້ນຄືວ່າ ພວກເຮົາຫຼຽວຫາໃຜທີ່ຈະກວດກາຄົນແປກໜ້າຕ່າງຖິ່ນຢ່າງຂ້ອຍບໍ່ພົບ. ທັ້ງອາຄານມີຄົນຍ່າງເຂົ້າຍ່າງອອກກັນ. ອີກບໍ່ດົນພໍຄົນເບົາບາງລົງ ເຮົາຈຶ່ງຄົ້ນພົບເຄົາເຕີ ( **Counten**) ທີ່ເພິ່ນວ່າເດັ່ນສງ່າຢູ່ໃນແວວມືດຊຶ່ງມັນບໍ່ໄກຈາກທີ່ພວກເຮົາຮັບກະເປົາແລະສິ່ງຂອງນັ້ນເອງ.

ເຈົ້າໜ້າທີ່ກວດກາເບິ່ງໜັງສືເດີນທາງ(ຜ່ານແດນ) ແລ້ວຕີຕາແຈ້ງເຂົ້າຫຼວງພະບາງໃນເສດກະດາດແຜ່ນເກົ່າໆທີ່ເຮົາໄດ້ຈາກເຈົ້າໜ້າທີ່ກວດກາຄົນເຂົ້າເມືອງປ່ວຽງຈັນ. ມີຄ່າທັມນຽມຕ້ອງຈ່າຍອີກຕ່າງຫາກ ເສັດພິທີແລ້ວເຈົ້າໜ້າທີ່ຜູ້ນັ້ນກໍ່ບອກເປັນພາສາລາວວ່າ ພວກເຈົ້າຕ້ອງໄປແຈ້ງກອງກວດຄົນເຂົ້າເມືອງທີ່ຫຼວງພະບາງອີກເທື່ອໜຶ່ງທີ່ພວກເຮົາບໍ່ໄດ້ຖືວ່າເປັນເຣື່ອງຈິງຈັງ ເພາະວ່າຄິດຢູ່ແລ້ວເມືອງລາວໃນຍຸກສັນຕິພາບ ເນື່ອງຈາກວ່າເຮົາມີຕາຕີປະທັບແຈ້ງເຂົ້າເປັນຫຼັກຖານຮຽບຮ້ອຍແລ້ວ. ບໍ່ແຈ້ງບໍ່ໄດ້ຢູ່ນີ້ມີພວກບໍ່ດີລັກລອດເຂົ້າມາຫຼາຍແລ້ວ ອີກປະການໜຶ່ງພວກເຈົ້າເປັນຄົນອະເມຣິກັນທັງສອງ.

ແທັກຊີສາມລໍ້ທຳໜ້າທີ່ເປັນຜູ້ຮັບຈ້າງພວກເຮົາໄປສົ່ງທີ່ເພິ່ນເອີ້ນວ່າ ແກສຣາວສ໌ ( **Questhouse**) ມີແອຣ໌ເຢັນງອີກນັ້ນແຫລະທີ່ນຳມາໃຊ້ບໍຣິການຂອງບຸນຍົ່ງ ເຈົ້າຂອງກິຈການ ແກສຣາວສ໌ ບ້ານທາດຫຼວງ ໃນຣະວ່າງທາງ ຈັນທີ ໄດ້ບັລະຍາຍບຸກຄລິກລັກສະນະຂອງບຸນຍົ່ງທີ່ເຂົາຮູ້ຈັກໃຫ້ພວກຂ້ອຍຟັງ ຈັນທີ ບອກວ່າ ພວກເຈົ້າຕ້ອງມັກນິສັຍໃຈຄໍໃນການຮັບຕ້ອນບໍຣິການຂອງບຸນຍົ່ງ ເຂົາຍັງບອກໃຫ້ພວກຂ້ອຍຮູ້ວາດພາບວ່າ ບຸນຍົ່ງຈະຕ້ອງເບິ່ງຕາໃສເມື່ອເຫັນສາວງາມງຶດບາງຮ່າງຈ່ອຍສູງພໍປະມານມາແຕ່ຕ່າງປະເທດເອົາໂດລາຕິດຕົວມາໃຊ້ຈ່າຍໃນເມືອງຫຼວງພະບາງ. ເມື່ອເຫັນພວກເຮົາຍ່າງເຂົ້າໄປໃນແກສຣາວສ໌ ຂອງເຂົາແລ້ວຕອນນັ້ນເຮົາຈະເຫັນຮູບຄິວ $ ອັນໝາຍເຖິງ ດອນລາຣ໌ ປາກົດໃນແວວຕາຂອງເຂົາຄ້າຍໆກັບຄິວ... ລະຄອນກະຕູນ ໂດນັນດັກ. ບຸນຍົ່ງ ແກສຣາວສ໌ ເປັນເຮືອນສອງຊັ້ນຮູບຊົງສະໄໝໃໝ່ ດັດແປງເປັນຫ້ອງໄດ້ເກືອບສິບຫ້ອງທັງຊັ້ນລຸ່ມແລະຊັ້ນເທິງ. ບໍຣິເວນດ້ານຫລັງມີການຕໍ່ເຕີມເປັນເຮືອນຊັ້ນດຽວແລະຈັດສັນເປັນຫ້ອງພັກໄດ້ອີກປະມານ ໗ ຫ້ອງ ມີຫ້ອງນ້ຳ ສ້ວມຖ່າຍເປັນສັດສ່ວນພິເສດງາມດີ ບຸນຍົ່ງທັກທາຍກັບພວກຂ້ອຍດ້ວຍພາສາອັງກິດຢ່າງເອົາຈິງເອົາຈັງ ຣີ...... >>

ໃນຍຸກລາວສະໄໝໃໝ່. ສີໜ້າບໍ່ໄດ້ສໍ່ສະແດງອອກແບບກາຕູນເໝືອນທີ່ພວກເຮົາໄດ້ເວົ້າໄປແລ້ວເມີ້ແຕ່ນ້ອຍ. ຄ່າເຊົ່າຫ້ອງກໍ່ມີໃຫ້ເລືອກຫຼາຍລະດັບຣາຄາຕັ້ງແຕ່ຄືນລະ ໗໐໐໐ ກີບ ຕໍ່ຫ້ອງຂຶ້ນໄປ. (ເພິ່ນເກັບເປັນດອນລາ) ແຕ່ເຮົາຕ້ອງເວົ້າເປັນເງິນກີບເພາະພວກເຮົາຄິດວ່າຢູ່ເມືອງລາວຕ້ອງໃຊ້ທະນາບັດລາວເອີ້ນວ່າກີບຊັ້ນເທາະ.

ແນ່ນອນ ຈັນເພັງກັບຂ້ອຍຕ້ອງຈະຕ້ອງເລືອກຫ້ອງຣາຄາຕ່ຳສຸດເພາະເຮົາບໍ່ແນ່ໃຈວ່າເຮົາຈະພັກເຊົ່າຄ້າງຄືນຢູ່ທີ່ຫຼວງພະບາງຈັກວັນຈັກຄືນ.

ຈັນເພັງຈະມີຄວາມສຸຂກັບການມາຢ້ຽມຢາມຫຼວງພະບາງຄັ້ງນີ້ຄືກັນກັບຂ້ອຍ. ຂ້ອຍເອງກໍ່ພໍຈະນຶກວາດພາບການມາຢ້ຽມຢາມແລະຄວາມຮູ້ສຶກພາກພູມໃຈນັ້ນອອກ. ເມື່ອໄດ້ຟັງຈັນເພັງເວົ້າວ່າ ເມື່ອໄດ້ກັບມາບ້ານເກີດເມືອງນອນຂອງພໍ່ແລະຂອງຕົນຫຼັງຈາກຫ່າງໄກໄລຈາກໄປ ໔໐ ກວ່າປີແລ້ວ ເມືອງຫຼວງພະບາງຊຶ່ງເກົ່າແກ່ເຄີຍສັນຍານາມວ່າເມືອງຊຽງດົງຊຽງທອງຫຼືອານາຈັກຊົວ ຍັງຫລົງເຫຼືອຮ່ອງຮອຍຄວາມເກົ່າແກ່ທີ່ເຫຼືອລອດອອກມາຈາກຄາບຂອງຄອມມຸຍນິສ. ຄວາມສງົບເໝືອນຄັ້ງແຮກທີ່ຂ້ອຍເຄີຍມາຮູ້ຈັກບາງສິ່ງບາງຢ່າງປາກົດຂຶ້ນເປັນຂອງແປກຕາໄປແດ່ກໍ່ສືບເນື່ອງມາຈາກຜົລຂອງການທ່ອງທ່ຽວຕົວຢ່າງເຊັ່ນການຄ້າ ບໍຣິສັດທ່ອງທ່ຽວແລະໂຮງແຮມທີ່ພັກເຊົາ. ຂ້ອຍເປັນລູກສາວຜູ້ຖ້ວນສາມຂອງຍາພໍ່ແລະຍາແມ່ ພໍ່ເປັນຄົນຊາວຫຼວງພະບາງ ແມ່ເປັນຄົນເກີດຢູ່ຈຳປາສັກໂດຍກຳເນີດ ລູກເຕົ້າທຸກຄົນໄດ້ເກີດຕ່າງເມືອງເພາະພໍ່ອາຊີບເປັນທະຫານຮັບໃຊ້ຊາດ ຈົນວັນສຸດທ້າຍຂອງບ້ານເມືອງປ່ຽນແປງຈຶ່ງທຳໃຫ້ພໍ່ຕ້ອງໄປເສັຍຊີວິດຢູ່ຊຳເໜືອໃນປີ ໑໙໘໐ ໂດຍບໍ່ຊາບວ່າສາເຫດອັນໃດ. ຂ້ອຍເກີດທີ່ວຽງຈັນແລະໄປໃຫຍ່ຢູ່ຕ່າງປະເທດ

ແກສຣາວສ໌ ຂອງບຸນຍົ່ງຢູ່ບໍ່ໄກຈາກຍ່ານໃຈກາງເມືອງພໍປານໃດພໍຈະເວົ້າໄດ້ວ່າເປັນຈຸດສູນກາງທີ່ຫ່າງຈາກແຄມຂອງ ຕລາດມືດແລະຕລາດເຊົ້າມື້ທຳອິດຂອງຂ້ອຍກັບຈັນເພັງຊຶ່ງມີຈັນທີເອື້ອຍໃຫ່ຍເປັນຜູ້ພາໄປທ່ຽວຊົມທິວທັດວັດວາອາຣາມເທິງວັດພູສີຕັ້ງນອກເໜືອໄປກວ່ານັ້ນສິ່ງທີ່ພາໃຫ້ສອງເອື້ອຍນ້ອງໄດ້ຮູ້ຈັກກັບພະຣາຊວັງຂອງພະເຈົ້າແຜ່ນດິນຜູ້ປະທັບຢູ່ໃນສະໄໝພະອົງຄ໌ຍັງມີພະຊົນຢູ່. ປະຈຸບັນເປັນຫໍພິທພັນເກົ່າແກ່ໄວ້ໃຫ້ລູກໃຫ້ຫຼານໄດ້ເຫັນຄວາມເປັນມາຂອງອານາຈັກຣ໌ລ້ານຊ້າງເຫ່ງນີ້. ວັນເວລານາທີໄດ້ໜີຈາກພວກເຮົາໄປ ຫຼັງຈາກການມາຢ້ຽມຢາມບ້ານເກີດຂອງພໍ່ຜູ້ເພິ່ນຈາກໄປ ຫຼັງຈາກນັ້ນພວກຂ້ອຍຕ້ອງລົງໄປຍັງເມືອງປາກເຊຊຶ່ງເປັນບ່ອນເກີດຂອງແມ່ທີ່ພວກເຮົາເຄີຍເວົ້ານຳແມ່ວ່າ ຖ້າພວກລູກໃຫ່ຍຂຶ້ນມາຢາກໄປຮຽນຕໍ່ຕ່າງປະເທດ ແມ່ບອກວ່າໃຫ້ພວກລູກໆຕ້ອງເອົາໃຈໃສ່ໃນການສຶກສາຮ່ຳຮຽນເພື່ອນຳເອົາຄວາມຮູ້ຄວາມຫຼັກມາພັທນາປະເທດຊາດ ຄວາມຫວັງທີ່ພວກເຮົາໄດ້ຄິດໄວ້ໄດ້ສູນສິ້ນໄປຫຼັງຈາກພໍ່ໝົດບຸນໄປແມ່ເພິ່ນກໍ່ມາເສັຍຊີວິດດ້ວຍໃນກາງປີ ໑໙໙໐. ເຖິງເມືອງປາກເຊ ພວກຂ້ອຍໄດ້ພັກຢູ່ໂຮງແຮມໃຫ່ຍຊຶ່ງເປັນພະຣາຊວັງເກົ່າຂອງເຈົ້າບຸນອູ້ມ ນະຈຳປາສັກຣ໌ ມີຄົນພັກຢູ່ທີ່ນັ້ນ ຖາມເຖິງບ້ານເກົ່າຂອງແມ່ພວກຣັຖບານໄດ້ມອບໃຫ້ຄົນອື່ນໄປແລ້ວບໍ່ກ້າຖາມຫາເລີຍ.

ໃນເມືອງປາກເຊແຫ່ງບ້ານເກີດຂອງແມ່ ມີຝູງຊົນຊາວລາວແລະຕ່າງເຜົ່າພັນ ຕື່ນເຊົ້າມາເຫັນຣົດຖີບຫຼາຍໆຄັນຈອດໄວ້ແຄມຮ້ານກາເຟກິນດື່ມພໍໃຫ້ພວກເຮົາວາດພາບໄດ້ວ່າ ພັກແລະຣັຖ ຢາກໃຫ້ປະຊາຊົນປະຢັດໃຊ້ຣົດເກງເພາະນ້ຳມັນຣາຄາແພງ. ສ່ວນພະນັກງານຂອງພັກແລະຣັຖນັ້ນຕ້ອງໃຊ້ກັນແຕ່ຣົຖໃຫຍ່ຄັນງາມໆເພື່ອແຂກອ້າງຄົນຕ່າງຊາດເຂົ້າມາທ່ຽວເມືອງລາວວ່າ ພວກເພິ່ນບໍ່ໄດ້ນ້ອຍໜ້າໄປກ່ວາປະເທດເພື່ອນບ້ານຊັ້ນເທາະ...

ເອື້ອຍຈັນທີ ບໍ່ໄດ້ລົງໄປນຳພວກຂ້ອຍ ຈັນເພັງເວົ້ານຳຂ້ອຍວ່າເປັນຫຍັງບຸນຍົ່ງຈຶ່ງເວົ້າແຕ່ພາສາອັງກິດນຳພວກເຮົາຕອນຢູ່ເມືອງຫຼວງພະບາງ? ຂ້ອຍຕອບຈັນເພັງວ່າ ເອື້ອຍຈັນທີ ບອກວ່າພວກເຮົາເປັນຄົນຕ່າງປະເທດ ແລະເຂົາຖືກັນແບບນີ້ໃນຍຸມສະໄໝໃໝ່ ຖ້າຜູ້ໃດປາກແຕ່ພາສາອັງກິດນຳແຂກຕ່າງປະເທດ ບໍຣິການດີ ຈະໄດ້ເງິນທິບດີແລະມີເຄດິດດີວ່າຊັ້ນ ຂ້ອຍຖາມຄືນອີກຕື່ມ ເປັນຫຍັງພວກເຮົາເປັນຄົນລາວຄືກັນທັງໆທີ່ພວກເຮົາຍັງຂຽນແລະອ່ານພາສາລາວໄດ້ກັນໝົດທຸກຄົນຄືບໍ່ພັທນາພາສາຊາດຂອງຄົນໃຫ້ຊາວຕ່າງປະເທດວ່າເຮົາມີເອກລັກແລະວັທນະທັມຂອງເຮົາແທ້ ?.. ບໍ່ດີດອກຂ້ອຍວ່າ.. ຈັນເພັງບອກວ່າ ເອື້ອຍຈັນທີ ເວົ້າວ່າ ບຸນຍົ່ງເປັນຄົນໄທ ເຊື້ອສາຍຈີນ ເຮັດແນວໃດເຂົາຈະມານິຍົມພາສາລາວເຮົາ ໂອ !.. ຈັ່ງຊັ້ນບໍ່ຕ້ອງເວົ້າຕໍ່ ຂ້ອຍແຖມມ້ວນທ້າຍ.

ອ້າຍບ່າວຄົນໜຶ່ງຍ່າງເຂົ້າມາຫາພວກຂ້ອຍ ແລ້ວຖາມວ່າ ພວກນ້ອງຄືຈະມາແຕ່ອະເມຣິກາ ແມ່ນບໍ່ ? ແມ່ນແລ້ວ ພວກຂ້ອຍຕອບພ້ອມກັນທັງສອງດ້ວຍຄວາມດີໃຈ ຄິດວ່າຊາຍຄົນນັ້ນຈະພາໄປທ່ຽວຊົມທິວທັດໃນຄວາມສວຍງາມຂອງເມືອງປາກເຊຂອງລາວພາກໃຕ້. ພໍຄວາມເວົ້າສຸດລົງ ຊາຍຄົນນັ້ນບອກພວກຂ້ອຍວ່າ ພວກນ້ອງຕ້ອງໄປແຈ້ງຕຳຣວຈກວດຄົນເຂົ້າເມືອງທີ່ໃນເມືອງປາກເຊອີກ ຖ້າບໍ່ດັ່ງນັ້ນເອົາເງິນມາຜູ້ລະ ໕໐໐ ບາດເງິນໄທ ເວົ້າແລ້ວສັ່ງມາເຮັດໃຫ້ພວກຂ້ອຍສອງເອື້ອຍນ້ອງຕ້ອງພາກັນປວດຫົວອີກຕາມເຄີຍ.. ຈັນເພັງ ຖາມຊາຍຄົນນັ້ນ ເປັນຫຍັງຈຶ່ງໄດ້ຈ່າຍເປັນເງິນບາດ ? ທັ້ງທີ່ພວກເຮົາກະເດີຍວ່າແມ່ນປະເທດລາວ ? ເປັນຫຍັງບໍ່ໃຊ້ເງິນກີບ.. ?

ອ້າຍບ່າວຂາວກົມຄິງອ້ວນນ້ອຍໜຶ່ງກໍ່ຕອບພວກເຮົາວ່າ ຖ້າຈະເອົາເງິນກີບກໍ່ໄດ້ ແຕ່ຢູ່ນີ້ເຂົານິຍົມກັນໃຊ້ແຕ່ເງິນບາດ ຫຼື ເງິນດອນລາເພາະມັນຈຶ່ງໄລ່ງ່າຍກັບຄົນຕ່າງປະເທດ.. ສອງເອື້ອຍນ້ອງບໍ່ຫ່ວງນຳເຣື່ອງເງິນເຣື່ອງຄຳພໍປານໃດ ພຽງແຕ່ຄິດຢາກຖາມຫາຄອບຄົວຂອງອ້າຍເອື້ອຍນ້ອງຂອງແມ່ທີ່ນັ້ນ ແຕ່ແລ້ວຊາຍຄົນນັ້ນບໍ່ໄດ້ສົນນຳການມາຊອກສືບຫາຕົ້ນຕະກຸນຂອງແມ່ແມ່ນຍັງເຫຼືອຫລໍ່ຢູ່ບໍ່ ? ຖ້າບໍ່ເວົ້າເຖິງລັກສະນະຂອງຄົນຫຼືສືບຫາແຕ່ກ່ອນມາຄືຈະບໍ່ມີໃຜຮູ້ ເພາະທຸກຄົນຢູ່ແຖວບ້ານເກົ່າມີແຕ່ຄົນແປກໜ້າ ສຽງປາກໂຫນັ້ງ ໆ ຄືກັນກັບສຽງວຽດ ຜົລສຸດທ້າຍການມາສືບຫາບ້ານເກົ່າຂອງແມ່ທີ່ເມືອງປາກເຊຄັ້ງນີ້ໂດຍບໍ່ໄດ້ເຣື່ອງໄດ້ລາວອີຫຍັງ..

ພວກເຮົາບໍ່ກ້າຈະອອກໄປໃຫ້ໄກຈາກໃນຕົວເມືອງປາກເຊພໍປະມານເພາະຢ້ານເພິ່ນຈະຫາວ່າພວກເຮົາມາສືບສອດແນມຕ່າງໆນາໆຊັ້ນເທາະ ໃນເວລາພັກຢູ່ໂຮງແຮມອາທິດໜຶ່ງ ປະກົດວ່າພວກເຮົາທັງສອງເອື້ອຍນ້ອງໄດ້ທັກທາຍແລະໂອ້ໂລມກັບປະຊາຊົນຫຼາຍຄົນ ສິ່ງສຳຄັນກໍ່ຄື ພວກເຮົາໄດ້ພົບນັກສຶກສາຍິງຜູ້ໜຶ່ງເປັນຄົນມາຈາກອັດະປື ນາງມາສຶກສາຕໍ່ທີ່ວິທະຍາລັຍເມືອງປາກເຊ ນາງເວົ້າເປີດເຜີຍອອກມາຢ່າງບໍ່ຢ້ານບໍ່ກົວຕໍ່ພວກເຮົາວ່າ ພວກຄົນລາວຢູ່ຕ່າງປະເທດກໍ່ມີຄວາມເປັນຫ່ວງນຳຊາດຢູ່ບໍ່ ? ເປັນຫຍັງຈຶ່ງມາປະໃຫ້ຊາດຂອງຕົນເປັນໄປແບບນີ້ ອີກດົນປານໃດຈຶ່ງຈະຫາຍອອກຈາກຄາບໃນລະບອບຄອມມູນິສນີ້ ? ຈັນເພັງ ຖາມຄືນ ນ້ອງໝາຍຄວາມວ່າແນວໃດທີ່ເປັນໄປແບບນີ້ ? ຄວາມຈິງ ພວກເຮົາບໍ່ຮູ້ອີຫຼີ ເພາະພວກເຮົາເປັນເດັກນ້ອຍກໍ່ພາພໍ່ແມ່ກໍ່ພາປະເທດໄປຢູ່ອະເມຣິກາດົນນານແລ້ວ. ນາງບອກພວກເຮົາຕໍ່ພວກພໍ່ຄ້ານາຍທຶນຕ່າງຊາດໄດ້ໃຊ້ດິນລາວເປັນທາງຜ່ານໄປຄ້າຂາຍກັບພວກພໍ່ຄ້າວຽດນາມ ຄືໄທ ບາດກັບມາພັກແຮມຄືນຢູ່ໂຮງແຮມແລ້ວໃຫ້ພວກບໍ່ດີເຫັນແກ່ແຕ່ເງິນ ຫາຊອກຕົວະເອົາຜູ້ຍິງລາວສາວນ້ອຍອາຍຸ ໑໔-໑໕ ປີໄປນອນນຳຢູ່ໂຮງແຮມແບບອອກໜ້າອອກຕາ ເປັນຫຍັງມັນຈຶ່ງເປັນແບບນີ້ ໃຫ້ພວກເອື້ອຍຫາທັນທາງຟ້ອງຕໍ່ອົງການມະນຸສຍະຊົນແດ່ ຖ້າບໍ່ເຮັດດຽວນີ້ ຕໍ່ໄປຈະມີພະຍາດແອດມາແຜ່ພາຍເຕັມເມືອງລາວແລ້ວ. ຈັນເພັງ ແລະຂ້ອຍພໍໄດ້ຍິນດັ່ງກ່າວນັ້ນກໍ່ຢາກຈະເຮັດແນວໃດແນວໜຶ່ງທີ່ສະກັດກັ້ນບໍ່ໃຫ້ພວກໂລເລນຳເອົາໂລກອັນຮ້າຍແຮງມາເຜີຍແຜ່ຕໍ່ຄົນລາວດ້ວຍກັນ ເຖິງແມ່ນວ່າພັກແລະຣັດຈະຖືວ່າພວກເຮົາເປັນຄົນຕ່າງປະເທດກໍ່ຕາມແຕ່ສາຍເລືອດຮັກຊາດຂອງພວກເຮົາຍັງມີທາງດ້ານມະນຸສຍະທັມສູງ.

ໃນຣະຫວ່າງພັກຢູ່ເມືອງປາກເຊນັ້ນ ພວກເຮົາສອງເອື້ອຍນ້ອງໄດ້ຮຽນຮູ້ສະພາບກັບສັງຄົມຂອງຄົນທ້ອງຖິ່ນຫຼາຍພໍສົມຄວນ ຕໍ່ສະພາບດັ່ງກ່າວນັ້ນຄົນລາວສ່ວນຫຼາຍຕ້ອງການຢາກໃຫ້ຄົນລາວຢູ່ຕ່າງປະເທດກັບໄປຊ່ອຍສ້າງສານຳກັນ ນອກຈາກນັ້ນກໍ່ຄືຢາກໃຫ້ມີຫຼາຍພັກການເມືອງ ມີການເລືອກຕັ້ງແບບເສຣີ ມີປະຊາທິປະໄຕຣ໌ໂດຍແທ້ຈິງ. ນາງສາວວັຍໜຸ່ມຄົນນີ້ ຍັງໄດ້ຝາກຄວາມເຖິງຜູ້ທີ່ຍັງບໍ່ສົນໃຈນຳເຣື່ອງບ້ານເຣື່ອງເມືອງວ່າ ເຖິງເວລາແລ້ວພວກລາວທຸກຝ່າຍຄວນຫັນໜ້າຫາກັນ ຢ່າສົງໄສກັນໃນທາງຜິດຖຽງກັນ ພວກລູກຫຼານເກີດໃໝ່ໃຫຍ່ລຸນບໍ່ຮູ້ເຣື່ອງເກົ່າຄາວຫລັງນຳດອກ ໃຜເຮັດດີຫຼືຊົ່ວກໍ່ຕາຍເປັນຄືກັນວ່າຊັ້ນ. ຈັນເພັງ ຊວນຂ້ອຍໜີອອກຈາກເມືອງປາກເຊເພື່ອກັບຄືນວຽງຈັນ ແລະກັບຄືນປະເທດສຫະຣັຖ ພວກເຮົາຈາກວຽກປະງານມາກໍ່ເປັນເວລານານເຖິງ ໔ ອາທິດ ທຸກຢ່າງໄດ້ຮູ້ໄດ້ເຫັນເມືອງລາວໝົດແລ້ວພໍເຂົ້າໃຈແລ້ວວ່າອັນບ້ານເກີດເມືອງນອນຂອງພໍ່ແລະແມ່ຜູ້ບັງເກີດເກົ້ານັ້ນ ພວກເຮົາເຫັນແລ້ວຈຶ່ງຢາກຈະກັບມາຕາຍບ່ອນທີ່ເຄີຍຈາກໄປ ຖ້າຢາກຈະກັບມາຢູ່ດິນລາວຄືນຈະຕ້ອງຕັດສັນຊາດເປັນລາວຄືນຕາມຄວາມບອກເລົ່າໃຫ້ຮູ້ຂອງເຈົ້າໜ້າທີ່ສະຖານທູດລາວປະຈຳຢູ່ກຸງວໍຊິງຕັນ ນະຄອນຫຼວງຂອງສຫະຣັຖ. ສອງເອື້ອຍນ້ອງພວກຂ້ອຍເປັນພະນັກງານຢູ່ທະນາຄານໃຫຍ່ແຫ່ງໜຶ່ງໃນຣັຖ ມິນນີໂຊຕາ ເງິນເດືອນກໍ່ເຫຼືອໃຊ້ເຫຼືອຈ່າຍ ຖ້າກັບໄປລາວຈະມີເງິນເດືອນພໍໃຊ້ບໍ່ອັນນີ້ກໍ່ໜ້າຄິດຄືກັນ ຖ້າຕ້ອງການຊ່ອຍຊາດແທ້ຕ້ອງກັບແນ່..

# H.R.H. Princess Phrathep of Thailand visited Lao PDR

Amone Vongkeo
Report from **Vientiane**



*Princess Phrathep Rattana Souda of Thailand arrived in Vientiane with her entourage on January 21 for a four-day visit to the Lao PDR. The Princess was greeted at Wattay Airport by Minister of Foreign Affairs Somsavath Lengsavath, his wife, and other senior officials of the Lao government.*

*During her stay in Vientiane, Princess paid a courtesy visit to President Nouhak Phoumsavan. She visited the Houaisone,Houai Xua development project, at Km 22 north of Vientiane multicipality, where she saw variuos activities involved in the project, including a cattle breeding project and an irrigation construction site. The Project is a joint development project between the Lao government and the King of Thailand. It serves to promote cattle breeding and agricultural production among people in the rural area.*

*The Princess also visited the Orphanage at Km 67 north of Vientiane mulnicipality, where she officially opened a newly-built kitchen worth 600,000 bath, and released fish fingerlings into a pond. Other activities of the orphanage funded by the Thai Princess included construction of four small weirs on Houai Mark Fai river for use in fish breeding, and expension of areas for vegetable plantation. Princess Phrathep then proceeded to visit Oudomxay and Luang Namtha Provinces, before retuning to Thailand. Addition to this report on January 14 Thailand has handed over a new passenger terminal and control tower at the Luang Phabang Airport. The Minister of foreign Affairs of Thailand, His Excellency Prachuab Chaiyasan, presented the work, valued at 49.31 million bath, to the Minister of Foreign Affairs of Lao PDR, Somsavath Lengsavath. After the handed over ceremony the Thai Foreign Affairs presented one million bath in cash to the Lao Foreign Affairs Minister for the relief of flood victims in central and southern Laos. He also presented 110,000 baht to the governor of Luang Phabang Province for the Fifth National Games to be hosted by Luang Phabang in the month of February 1997. Mr. Prachuab and his official delegation on an official visit at the invitation of his Lao counterpart, Somsavath Lengsavath also during their three day visit delegation were received by President Nouhak Phoumsavan and held talks with his Lao counterpart.*















## FOREIGN MINISTER WELCOMED NEW UNITED NATION SECRETARY GENERAL

*Amone Vongkeo Report from Vientiane*

*Minister of foreign Affairs Somsavath Lengsavath has sent to the new United Nations Secretary General, Excellency Kofi Annan, a message of congratu lations which reads as follows;*

*"Your nomination to this responsible post which we in Laos welcome very much, is a tribute to your great continent, Africa. Aware as we are of your rich diplomatic experiences and skills, I am please confident that you will successfully guide our organization in the pursuit of its noble ideals, as enshrined in the United Nations Charter.*

*Taking this auspicious opportunity, I would like to express to you the sincere thanks of the Lao Government and the people for the importance assis tance provided to us by the United Nation system and also to express the firm belief that the strong relationship existing between the United Nation and the Lao People's Democratic Republic will be developed and further strengthened, in the interests of world peace, international security and cooperation."*

*Excellency Anan, who succeeded Mr. Boutros Boutros Ghali as head of the international body on December 17, 1996, is the seventh Secretary General of the United Nations.*

## LAOS SEEKS UNITED NATION SUPPORT

*Kham Koumphon (Vientiane)*

*Deputy Prime Minister Khamphoui Keoboualapha recently told a visiting United Nation envoy that the Committee for foreign Investment Management and Cooperation has finished putting together a socio-economic strategy leading up to the year 2000, and Laos is now seeking United Nations support.*

*Mr. Boualapha informed the United Nation assistant Administration and Regional Director for Asia and Pacific, Mr. Nay Htan, that human resource development and rural development are the main areas which require support. Mr. Boualapha also provided details about how cooperation projects run by the United Nations Development Program (UNDP) and the Lao Government, from 1992-96, have satisfied the criteria of both sides.*

*Most importantly, these cooperation programmes were said to have met the needs of Laos.*

*After hearing Mr. Bualapha's assesment, Mr. Nay Htun expressed his support for the new str ategy, which will continue these development programmes up to the end of the century.*

*Mr. Nay Htun also met the deputy Prime Minister when he attended a UNDP conference for deputy resident representatives to Asia and Pacific in Vientiane, in late January 1997.*

*Mr. Nay Htun, the United Nation envoy, also met Minister of Foreign Affairs Somsavath Lengsavath. The two men discussed new UNDP programmes to support development efforts in Laos They also talked about the preparation for the sixth rountable meeting on development in Laos, which is scheduled to be held on June 1997 in Geneva.*

## VIETNAMESE VICE PRESIDENT VISITING LAOS

*BY NGUYEN Thi Lan*

*Mrs. Nguyen Thi Binh, the Vice President of Vietnam, arrived in Vientiane on January 23, on an official visit at the invitation of her Lao counterpart, Vice President Sisavath Keobounphanh. The objective of the visit is to further strenthen the traditional relations of friendship between the two brothercountries, special solidarity and all-round cooperation, however, the visit is also designed to give Vietnam an idea of just how Laos is upgrading its economy in the lead up to the 21st century, and the upgrade in Laos-Vietnamese cooperation that will be required to suit this changing situation in Laos.*

*The Vice President of Vietnam and her delaga tion met the Vice President of the Lao PDR and his dele gation on January 23. During the meeting. the two sides exchanged information on development in their respect ive countries.*

*During her six-day visit, Mrs. Nguyen Thi Binh called on President Nouhak Phoumsavan, Party President and Prime Minister Khamtay Siphandone, and toured Champasak and Vientiane Provinces. Vice President Binh and her delegation also visited the Lao-Vietnamese cooperation and aid projects in the two Pro vinces.*

## Economic Minister of German visit Laos

*Kham Koumphon Report*

*On January 20, 1997. a German delegation of six mem bers, headed by Minister for Economic Cooperation and Development Carl-Dieter Spranger, made a two day visit to Lao PDR at the invitation of the Chairman of the State Committee for Planning and Cooperation. Mr. Bouthong Vonglokham.*

*The delegation which included high official, Journalists, special quests from National Assembly, and police met with the directors of the Lao-German Cooperative projects and examined their progress. They went on to visit the Lao-German Technical School in Vientiane which was established in 1964 with German financial assistance and experts to help Lao students to develop their skills in technical field. Germany is a big* >>

*supporter of human resource development in Laos. Every year, the german government grants 10 sholarships to Lao students for a one-year study period in Germany.*

*Relations between Laos and Germany are expending. The German government has had an embassy in Laos since 1958 and have assisted many projects over the years. Assistance is focused in specific fields like rural development environmental protection, human resource development and drug control with projects in the northern provinces of Luang Namtha and Bokeo. in 1995-96, the German government assisted 17 projects worth about DM 20 million in Laos, and there are currently 11 projects underway. Last year, it also donated 5000 tons of rice for flood aid.*

*Assistance comes in two forms: technical and financial. There are now six financially assisted projects which Germany supports. These are: road upgrading projects in Houaphan province, worth DM 15 million; rural communication project worth 14 million; a rural credit service project worth DM 6 million;extension project for Forestry college worth DM 5 million; informal education development project worth DM 5 million; and Luang Prabang Water Supply Project (phase two) worth DM 8 million.*

*On January 21, the visiting Minister of Germany, Mr. Carl-Dieter Spranger, and the Chairman of the State Planning Committee, Mr. Bouathong Vonglokham, signed an agreement to provide DM 10 million in aid to Laos. The money will be used in the construction of a power line from China to Luang Namtha province. With the aid, a power station will also be built. The electricity facility will boost industrial development in the province.*

*During their stay in Lao PDR, the German Minister and his delegation team were received by Mr.Nouhak Phoumsavan, President of Lao PDR, Prime Minister Khamtay Siphandone, Somsavath Lengsavath Minister of Foreign Affairs addition to that the delegation also met with other Lao officials concerned visited cultural sites in Vientiane and Luang Prabang Cities.*

## US AMBASSADOR VISITED PROJECT OPERATION IN HOUAPHAN PROVINCE

*Vixian Bannavong Report from Houaphan*

*US Ambassador to Laos Wendy Chamberlin visited US-Assisted projects in Houaphan and Xiengkhouang on January 9, 1997. She led a US technical-team which inspected road construction projects and two hydropower station being built on the Nam Aed and Nam Peun rivers. During the trip, the US Ambassador also handed over an operation table for a hospital in Xiengkhouang.*

*The main purpose of the visit, though, was to review th ongoing projects which include small irrigation projects, schools, hospitals, the national unexploded ordnance clearing programme(UXO LAO), and others. Since 1989, the United States has also granted US$10 million to Houaphan for its anti-narcotics programme. Between June and August last year, the US also helped renovate the freindship Hospital in Xiengkhouang, at a cost of US$1.3 million and US$2.7 million to the UXO LAO programme. Under this arrangement, US staff work with the Brittish Mines Advisory Group (MAG) in Xiengkhouang and with German team in Houaphan.*

## NEW COUNTER NARCOTICS UNIT OPENS IN SAVANNAKHET

*Saysamone Phongsavan report from Savannakhet*

*A new office for the counter Narcotics Unit was officially opened in Savannakhet on January 28 1997. The opening of the provincial unit for drug control and suppression in dicates the Government's increasing efforts at keeping security and order, by enforcing laws in dealing with drug traders. Present at the opening were the Chairman of the National Committee for Drug Control and Suppression, Deputy Foreign Minister Souban Sarithirath, US Ambassador to Laos Excellency Wendy Chamberlin, Director of Narcotic Affairs Section Albert L. Bryant, and Savannakhet Governor Inpong Khaiyavong.*

*In his opening speech, Mr. Souban said that in the past Savannakhet Province has paid attention to activities in drug control and suppression, which resulted in the ar rested of 34 drug dealers, including five Thais, and the seizure of 370 bars of processed marijuana, weighing 370kg, 170 kg of marijuana leaves in dried form, and 8.5 kg of herion. In addition, more than 250,000 tons of mari juana plants were destroyed. The drug trade and traficking in the province was encouraged by ill-meaning people from abroard who illigally entered the province and provided local people with funds to grow marijuana. Such as the marijuana plantation at Ban Nong Teng in Songkhone district which was funded by a Thai from Mahasalakham province.*

*The opening of the new office was marked by the hand-over of two pick-up cars, four motorbikes, long distance radios, and office equipment which were provided by the US government. The Savannakhet office is the second to be opened following the opening of the one in the municipality of Vientiane. According to the committee, the third provincial-level office will be opened in Bokeo in the first few months of this year.*

*For additional security Lao Today Magazine would like to advised that counter narcotics office should be opened between border-line Laos/Vietnam/Laos/Thailand, Laos/China, Laos/Burma, Laos/Cambodia as well. expending rural development such as healthcare, educational economic development as well as job training including rural financial support drug treatment orientation alcoholism prevention etc.*

*Lao Today would like to see the government of Lao PDR takes more responsibilities throughout the new political and economic reform as soon as possible which were provided the Lao people from overseas and in their motherland to joint freedom and liberty.*

*It is very good positive position that if the Lao PDR leaders did break new ground in opening up the prospect of Lao National cooperation between the twosides oversea and motherland in combating crime and progress in reaching a "degree of reconciliation" with 5 different political groups, many of them engaged in freedom and liberty justice for all of Lao people.*

*The 5 political leaders also decided they needed a vision for the future of their national interested. "We must have evasion, we must have a target. We should work towards something better we think for the Lao people in the 21st century.*

*One leader said I spent all my time emphasizing education quality in all level of our nation, but this kind of political systems it doesn't work because the lack of financial as specially the teachers some time almost four month they can get pay from the government. Lao Progressive Leadership said" We must expending to foreign investors and must provide education, welfare, housing and job training programme to high school graduated and expend college education in overseas such as US and Japan.*

*We will support them rather than control them.*

## LAO SATELLITE, L-STAR 1 LAUNCHING INTO ORBIT IN 1997

*Charuen Thammavong report from Vientiane*

*Arianespace has been chosen as the launcher for the first Lao Satellite, L-Star 1. The luanch is scheduled for late 1997. from the Kourou launching pad in French Guyana.*



*This announcement was made by the General Manager of Arianespace, Mr. Francis Avanzi, during his visit to Laos in late December" Arianespace will stand at your side to turn your ambitious project into an examplary success," said Mr. Avanzi who voiced his pleasure at being in Laos as a messenger from France and Europe to"a friendly nation with which the traditional and historic links are deeply anchored in our hearts".*

*After the Lao government decided to have its own satellite, it signed a joint venture agreement with Asia Broacasting & Communications Network on November 1,1995, thus establishing LaoStar Co Ltd in which the government hold 20 percent of the shares for a period of 30 years. The cost of the program is $500 million L-Star 1 is manufactured by the American Company Space System/Loral. Telesat Canada is responsible for ground monitoring from the station which is in construction next to the Mekong River in Hatxayfong district, 18km south of Vientiane.*

*Arianespace is a European venture in which 53 shareholders and suppliers from 12 countries are represented. Arianespace has become the world leader in space sectors,, encompassing 60 per cent of the Market. Asia has commissioned 20 satellites, of which 14 will be launched by the European company. The company has 46 customers throughout the world and has so far launched 167 telecommunication satellites of which 125 are already in orbit. L-Star 1 will soon join the 150 communications satellites orbiting around the grobe.*



## FRANCE AID IN DEVELOPMENT THE LIVING STANDARDS IN LAOS

*Amone Vongkeo report from Vientiane*

*On December 30, 1996, an agreement to fund two prorjects was signed between the economic Cooperation and Foreign Investment Department and the Caisse Francaise de Development(CF). According to the agreement, France will provide 27.1 million francs to the project for development of the Boloven Plateau, under a five year project, starting from 1996. The project is aimed at raising the living standard of local people, by increasing the productivity of the coffee, bean,fruit and animal husbanry industries.*

## VANGVIENG-KASY ROAD OPENING

*Kham Koumphon*
*Staff writer report from Vangvieng*

*The Road 13 North runing from Vangvieng district through Kasy district, Vientiane province, was opened to the public in mid-January 1997. Work on the highway, 63 km long with double surface treatment, began in March 1992. The first surface is eight metres wide and the second surface six metres wide. The total cost of the construction was some $8 million, in loans provided by the Asian Development Bank.*

*"The new highway would benefit not only the local people in Vangvieng and kasy districts but also significantly contribute to the expension and improvement of transportation and economic development in the country," said the Minister of Communication Phao Bounnaphol at the inaugu ration ceremony opening of the road.*

*Addition to that seven project development in the Northern Provinces has had round-table meeting to discuss the accelerated development on January 20, 1997. This seven project development for 1996-97 was held in Oudomxay province. The conference discus-sed several issues, such as the repair of road 01, 23km long, which links the border between Boten-Oudomxay-Phoulao in Houaphan province, road 2 from Oudomxay to Pakbeng, 144km long, and several other roads in the northern provinces.*

*Participants at the round-table meeting also talked about the construction and repair of irrigation systems, the installation of electricity lines from China to Oudomxay, Luang Namtha and Phongsaly provinces and rural development in the various priority areas in these northern part of the Lao provincials.*

## ANNUAL CONFERENCE ON AGRICULTURE AND FORESTRY 1996-1997

*Somphieng Luvan report from Vientiane*

*The 1996-1997 annual conference of the Ministry of Agriculture and Forestry (MAF) was held in Vientiane from January 21-23,1997 with the participant of more than 120 Heads of Provincial Agriculture and Forestry Departments, private enterprises and other concerned organizations. The aim of the conference was to facilitate an exchange of experience and conclusions that different*

>>

*divisions have gained over the years, in order to provide farmers with the sum of their knowledge on foodstuff production for self-sufficiency and surplus. According to the MAF target, more than 1,818,000 tons of rice will be produced in 1997.It is projected that the rainy season will produce 1,520.000 tons and the dry season 85,000 tons.*

*The conference highlighted the significance of coordination between the central and local levels, the state and people and the divisions concerned, in order to make steps to improve agriculture and forestry pro duction more effectively. The attendants heard a report on last year's achievements and an outline of this year's implementation plans presented by the Minister of Agr iculture and Forestry. They also heard a number of report on agro-forestry activities, presented by delega tes from across the country, including representatives from ministries, state bodies and private sectors.*

*It was noted that last year farmers planted more than 11,850 ha of trees and managed to burn less forest than the year before. in 1995-96, the total rice harvest in Lao PDR was 1,413.500 tons, out of an area of 53,779 ha of paddy. The rainy season produced 1,076.000 tons on 363,133ha, for an everaged 4 tons per ha. In its continual bid to aid farmers feed their animals, the Agriculture Promotion Bank also provided credit to farmers up to 5.7 billion kip.*

## JAPAN HAND-OVER THE BRIDGES ON ROUTE 13 SOUTH OF LAOS

*Somchay Tanaka*

*The project for reconstruction of 11 bridges on National Route 13 South from Ban Lao to Thakhek was completed on month ahead of schedule. It was handed over to the Lao government early February 1997 at the Hinboun Bridge, Khammouane province. This project, financed by the Japanese government, was constructed by the obayashi Corpora tion at a contract value of 1,056,000,000 yen, and was supervised by CPC and Nippon Koei Consultations for an addi tional 76,664,000 yen. In addition, the Lao government paid 14,920,435 kip for the project's management expenses.*

*The bridge construction project on National Route 13 South between Pakkading and Thakhek was implemented under the Ministry of Communication, Transport, Post and Construction.*

*Supported by the government of Japan, this was the second phase of the project to reconstruct bridges on Route 13. In all, 11 old bridges and 9 box culverts. The combined length of two new bridges is 149.6 metres. The crowning jewel of the completed phase, the Hinboun Bridge, was con structed by a composite of steel girders and concrete deck slabs. It is 7m in width, has a bearing capacity of 80 tons,and is installed with a new automated lighting systems. The total length of the 9box culverts is 130.6 metres. They are paved with a double surface treatment, and are constructed with aerosion protection embankments.*

*The first phase of the project, also supported by the Japanese government, was completed in February 1996, and included the construction of 15 new bridges at a total cost of about $13 million. The total cost for the reconstruction of the 26 bridges from Pakkading to Thakhek was about $25 million.*

*In his speech at the Hinboun Bridge inuaguration ceremony, Ambassador Hiroomi Sakai of Japan said: " The government of Japan may extend its support for reconstruction of additional bridges between Thakhek and Pakse. We are also undertaking a detailed design study for the cons truction of a bridge over the Mekong River, in Pakse. This span will be twice the length of the Friendship Bridge between Vientiane, Laos and Nongkhai, Thailand."*

## AROUND THE WORLD IN FIVE MINUTES

*Houmpheng Phanouphol*

***U.S. vetoes U.N. resolution***

*UNITED NATIONS- In a rare break with its closest allies, the United States yesterday vetoed a European-sponsored resolution criticizing Israel's plan to build homes for jews in Arab east Jerosalem. U.S. Ambassador Bill Richardson said that the United States regreted Israel's decision to build the 6,500 unit Har Homa housing complex in parts of east Jerusalem the Palestians want as a future capital. But he said Washington believes the Security Council resolution "would not have helped" the peace process. The vote was 14 to 1 on the solution, France, Sweden and Portugal.*

### Yeltsin chooses reformer

*Reuter*

*MOSCOW - President Boris Yeltsin yesterday named his powerful chief of staff- a free market reformer who is one of Russia's most disliked politicians- to lead the country's new drive for economic reform. Yeltsin's political enemies immediately attacked the reappointment of Anatoly Chubais as deputy prime minister. Chubais held the same title until he was ousted early last year, becoming a scapegoat for the nation's anger over declining wages and rising prices.*

### 8 hurt in Beijing bombing

*via Fax report*

*BEIJING- An explosion on a public bus injured at least eight people in a shopping district yesterday, shaking a capital already jittery over a string of bus bombing in north western China. The cause of yesterday's explosion was not known, but there was little procedent for such an attacked in the Chinese capital. The three bombs last month occurred in the western Xinjiang region, whose large Muslim popu lation wants more autonomy.*

### Ex-Haitian official accused

*MIAMI- The exciled police chief of Haiti's capital was charged yesterday with helping Colombian drug lords smuggle 33 tons of cocaine and heroin into the United States Lt. Col. Michel Francois was taken into custody in Handuras and was to be flown to Miami today.*

# ປະທານາທິບໍດີແຫ່ງປະເທດອິນໂດນີເຊັຍ ເດີນທາງມາຢ້ຽມຢາມລາວຢ່າງເປັນທາງການ

ອານອນ ວົງແກ້ວ ລາຍງານຈາກ





ທີ່ສະໜາມບິນວັດໄຕ ເມືອງສີໂຄດຕະບອງ ແຂວງກຳແພງນະຄອນວຽງຈັນ ຂອງມື້ວານນີ້ ທາງເຈົ້າໜ້າທີ່ຂັ້ນຣັຖມົນຕີວ່າການກະຊວງການຕ່າງປະເທດຂອງ ສ.ປ.ປ.ລາວ ສົມສະຫວາດ ເລັ່ງສວັດ ພ້ອມດ້ວຍຄະນະຈາກກະຊວງດັ່ງກ່າວອອກຕ້ອນຮັບ ທ່ານປະທານາທິບໍດີ ຊູ ຮາໂຕ ແຫ່ງປະເທດສາທາລະນະລັດອິນໂດນີເຊັຍ . ເປັນທີ່ຊາບກັນແລ້ວວ່າ ຣັຖບາລອິນໂດນີເຊັຍບໍ່ວ່າຍາມໃດກໍ່ມີສາຍພົວພັນອັນດີງາມກັບລາວແລະໃຫ້ການຊ່ວຍເຫຼືອຕ່າງໆມາຕລອດ. ຫຼັງຈາກເຖິງສນາມບິນວັດໄຕແລ້ວກໍ່ໄດ້ຂຶ້ນຣົດແຫ່ຂະບວນໄປຍັງສຳນັກງານປະທານປະເທດ. ໂດຍມຸ້ງໜ້າໄປຕາມຖນົນຫຼວງພະບາງໃສ່ຖນົນເສດຖາທິຣາຊ ແລ້ວເຂົ້າເຖິງຫໍຄຳ (ພະຣາຊວັງເກົ່າ) ຊຶ່ງມີທ່ານໜູຮັກ ພູມສະວັນ ປະທານປະເທດແລະພ້ອມດ້ວຍບັນດາຣັຖບານ ຄະນະຜູ້ແທນສະພາແຫ່ງຊາດ ແລະເຈົ້າໜ້າທີ່ປະຈຳກະຊວງຕລອດເຖິງເຈົ້າໜ້າທີ່ຂອງສະຖານທູດອິນໂດນີເຊັຍປະຈຳລາວໄດ້ລໍຄອຍຢູ່ແລ້ວ. ທ່ານໜູຮັກ ພູມສະວັນ ໄດ້ແນະນຳຕົວພ້ອມທັງຄຳນັບທຸງຊາຕຮ້ອງເພງສອງຊາຕ. ເດີນກວດແຖວທະຫານ ຊຶ່ງທ່ານຊູຮາໂຕ ເດີນກ່ອນຢ່າງອົງອາດກ້າຫານແລະຍັງແຂງແຮງດີ, ສ່ວນທ່ານໜູຮັກ ພູມສະວັນ ນັ້ນຕ້ອງໄດ້ຄ່ອຍເດີນຕາມຫຼັງເພາະວ່າເພິ່ນເອງກໍ່ເຖົ້າແກ່ແລ້ວ. ນັບວ່າເປັນນິມິດອັນດີ ຊຶ່ງທ່ານ ຊູຮາໂຕ ຜູ້ນຳອິນໂດນີເຊັຍ ຄົນທຳອິດໄດ້ມາແວ່ຢ້ຽມຢາມປະເທດ ສ.ປ.ປ.ລາວ ອັນເປັນຜົລປະໂຍຊນ໌ຕໍ່ສອງຊາຕ ລາວ/ອິນໂດນີເຊັຍ ແລະສ້າງສາຍພົວພັນອັນດີຕໍ່ກັນທີ່ທັງສອງຜູ້ນຳຈະໄດ້ແລກປ່ຽນຄວາມຄິດຄວາມເຫັນນຳກັນ ເພື່ອຈະນຳພາປະເທດຊາດຂອງລາວເຂົ້າຮ່ວມພາຄີສະມາຊິກສະມາຄົມເອຊຽນໃນຂັ້ນຕໍ່ໄປ ແລະຈະນຳມາຊຶ່ງມີຄວາມອິສຣະພາບ ເສຣີພາບ ປະຊາທິປະໄຕຣ໌ບົນພື້ນຖານຄວາມເປັນປະເທດເອກຣາຊໂດຍສົມບູນໃນອະນາຄົດ ພ້ອມດຽວກັນນັ້ນ ທ່ານຊູຮາໂຕ ຍັງໄດ້ໃຫ້ຄວາມສຳຄັນແກ່ລາວວ່າຈະໃຫ້ມີການຊ່ວຍເຫຼືອການຕ່າງໆທີ່ເຫັນວ່າສົມຄວນແກ່ການພັທນາປະເທດຊາດໂດຍບໍ່ຕ້ອງໄປຜ່ານຍັງປະເທດທີ່ສາມ ຊຶ່ງລາວເປັນປະເທດເສັຽປຽບຍ້ອນບໍ່ມີທາງອອກສູ່ທະເລຄືກັບບັນດາປະເທດເອເຊັຽອື່ນໆ. ຕອນຄ່ຳມີການຈັດງານກິນລ້ຽງຕ້ອນຮັບທ່ານປະທານາທິບໍດີ ແລະທ່ານເອງຍັງໄດ້ຊົມຫໍພິພິທພັນໂບຮານເກົ່າແກ່ຂອງລາວ, ພະທາດຫຼວງ ແລະສະຖານທີ່ສຳຄັນພາຍໃນກຳແພງນະຄອນວຽງຈັນ

## ຊຸນພົລ ຊູຮາໂຕ
## ຜເດັດການທີ່ຍິ່ງໃຫຍ່ ເຄີຍປາບຄອມມຸຍນິສມາແລ້ວ

ໂລກພາຍນອກບໍ່ສູ້ຈະໄດ້ຊາບຄວາມຈິງກັນພໍປະມານ ກ່ຽວກັບການປົກຄອງທີ່ເປັນຜເດັດການໃນອິນໂດນີເຊັຍ ທັງໆປະເທສມີພົລເມືອງເຖິງ ໑໘໗ ລ້ານຄົນ ຊຶ່ງປະກອບດ້ວຍເກາະ ໑໗,໐໐໐ ເກາະ ແລະຈົນກະທັ້ງເຖິງບັດນີ້ກໍ່ປະກົດວ່າ ນາຍພົລເອກ ຊູຮາໂຕ ໄດ້ກຸມອຳນາຈສິທຮ໌ຂາດປົກຄອງປະເທດເຖິງ ໓໐ ປີແລ້ວຍັງບໍ່ມີຝ່າຍຄ້ານຄົນໃດ ຫຼືພັກໃດຈະສາມາຖທ້າທາຍຊຸນພົລຜູ້ນີ້ໄດ້>

ເລີຍ.

ມີເຣື່ອງປະຫລາດເກີດຂຶ້ນໃນປີ ຄ.ສ. ໑໙໗໖ ຊຶ່ງຖືໄດ້ວ່າເປັນຂໍ້ຍົກເວັ້ນໃນບັນດາຜູ້ທ້າທາຍອຳນາຈຂອງນາຍພົລ ຊູຮາໂຕ ກ່າວຄື ທ່ານຊາວິໂຕ ຄາໂຕວິໂບ



ບັນດາຂ້າຣັດຖການກຳລັງລໍຄອຍການຕ້ອນຮັບ ທ່ານ ຊູຮາໂຕ ຈະມາເຖິງ ຫໍຄຳ



ທ່ານ ຫນູຮັກ ພູມສວັນ ກຳລັງອ່ານລາຍງານຮັບຕ້ອນ ຢ່າງມີສຽງສ່ານຮຽງແຈ້ງຊັດດີ !!!

ໂວ ຂ້າຣາຊການກະຊວງກະເສດກອນ ທີ່ບໍ່ມີໃຜຮູ້ຈັກກັນ ໃນວັນຫນຶ່ງທ່ານກໍ່ປະກາດວ່າຕົນເອງເປັນເຈົ້າຊາຍຍຸຕິທັມ ແລ້ວຂຽນຫນັງສືປະນາມການປົກຄອງຂອງຊູຮາໂຕ ວ່າຄໍຣັບຊັນສ໌ ເສື່ອມເສັຽທາງສິລທັມ ແລະບໍ່ຫນ້າເຄົາຣົບນັບຖືດ້ວຍປະການທັງປວງ ຮຽກຮ້ອງໃຫ້ປະທານາທິບໍດີໂອນອຳນາຈມາໃຫ້ຕົນເອງປົກຄອງປະເທດແທນ (ມັນກໍ່ບໍ່ງ່າຍຈັ່ງຊັ້ນ) ກໍ່ຫນ້າຈະເປັນການອວດອ້າງທາງການເມືອງທັມດາໆ ເຣື່ອງຫນຶ່ງ ແຕ່ຈະອວດເຣື່ອງຊາວອິນໂດນີເຊັຍທົ່ວຂວັນບໍ່ອອກ ເພາະມີຄົນສຳຄັນຣະດັບຊາດ ໕ ຄົນລວມທັງ ໂມຮາເມັດຮັດຕາ ຮອງປະທານາທິບໍດີ ສມັຍຊູກາໂນເປັນຜູ້ນຳປະເທສ ກັບຜູ້ນຳກຸ່ມສາສນາຕ່າງໆ ອີກຫລາຍຄົນຮ່ວມລົງນາມໃນຫນັງສືດັ່ງກ່າວດ້ວຍ ສະເພາະຜູ້ນຳຄົນສຳຄັນໆ ທີ່ຮ່ວມ "ເຈົ້າຊາຍຍຸຕິທັມ" ຄາໂຕວິໂລໂວ ຖືກດຳເນີນຄະດີແລະພິພາກສາຈຳຄຸກໃນຂໍ້ຫາວາງແຜນໂຄ່ນລົ້ມປະທານາທິບໍດີ.

ຕໍ່ມາເມື່ອປີ ຄ.ສ ໑໙໘໑ ທ່ານຣູມາດີ ທະນາຍຄວາມຂອງ ເຈົ້າຊາຍຍຸຕິທັມ ໃນການຕໍ່ສູ້ຄະດີໄດ້ກ່າວໃນອຸທອນຂອງຈຳເລີຍວ່າ ຄຳກ່າວປະນາມປະທານາທິບໍດີ ຊູຮາໂຕ ຂອງຈຳເລີຍຖືກຕ້ອງຕາມຄວາມເປັນຈິງທີ່ວ່າ ນາຍພົລຊູຮາໂຕ ມີສ່ວນພົວພັນຢູ່ດ້ວຍກັບການທີ່ນາຍພົລ ໖ ຄົນຂອງອິນໂດນີເຊັຍ ຖືກຄາຕກັມໃນຣະຫວ່າງທີ່ມີຜູ້ພຍາຍາມກໍ່ຣັຖປະຫານ ເມື່ອປີ ຄ.ສ. ໑໙໖໕ ຊຶ່ງຍັງຜົລກໍ່ໃຫ້ ຊູກາໂນ ຕ້ອງພົ້ນຈາກອຳນາຈ ແລະສົ່ງຜົລໃຫ້ນາຍພົລຊູຮາໂຕ ໄດ້ກຸມອຳນາຈສູງສຸດໃນອິນໂດນີເຊັຍຕໍ່ມາ. ນາຍຣູມາດີ ທະນາຍຄວາມອ້າງຄຳເວົ້າຂອງພັນເອກອັບດູລ ລາຕີຟ ຜູ້ນຳຄົນຫນຶ່ງທີ່ພຍາຍາມກໍ່ການຣັຖປະຫານຄັ້ງນັ້ນ ຊຶ່ງຢືນຢັນວ່າ ເຂົາທຳໄປຕາມຄຳສັ່ງຂອງນາຍພົລ ຊູຮາໂຕ ຊຶ່ງຂນະນັ້ນເປັນຜູ້ສັ່ງກອງທະຫານກອງບັນຊາການຍຸທການ



ອິນໂດນີເຊັຍ/ລາວ ກໍ່ເປັນເຄືອຍາດກັບມາແຕ່ໂບຮານນະການ ເຮົາສອງປະເທສຄວນຮັກສາໄວ້ໃຫ້ຍືນຍົງຕລອດໄປຊົ່ວນິຣັນດອນ

ຍົກຈອກເພື່ອສັມພັນທະມິດໄມຕຣີ



ເຄື່ອນເຂົ້າ ຍາກາຕາ ທຳການຂ້າຄອມມຸຍນິສ ເປັນການໃຫຍ່ ພາຍຫລັງເຫດການຄັ້ງນີ້ ນາຍພັນເອກ ອັບດູລລາຕີຟ ຖືກພິພາກສາຈຳຄຸກຕລອດຊີວິດ ສຳຫລັບນາຍຣູມາດີ ທະນາຍຄວາມຖືກຈັບກຸມເພາະເຣື່ອງນີ້ໃນເດືອນເມສາ ປີ ຄ.ສ. ໑໙໘໑ ໃນຂໍ້ຫາຫມິ່ນປະມາດປະທານາທິບໍດີ (ເຊີນອ່ານຕໍ່ສະບັບຫນ້າ)


ຊາວຫຼວງພະບາງຍັງຮັກສາວັທນະທັມ
ແລະປະເພນີໄວ້ໃຫ້ໝັ້ນຍືນ



ພຼະຣາຊວັງເກົ່າຂອງສະເດັດເຈົ້າບຸນອູ້ມ ນະຈຳປາສັກດ໌